| ກຸ່ມວິຊາ ວິທີສອນ | ສາຍສ້າງຄູປະຖົມລະບົບ 4 ປີ |
| --- | --- |

# ການສອນພາສາລາວ 2 ລະບົບ 12+4 ສາຍຄູປະຖົມ ປີ 2






ສົກປີ 2022

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

໑໑໑໑໑໒໒໒໒

ວິທະຍາໄລຄູສາລະວັນ
ສະພາວິທະຍາສາດ

ເລກທີ...13.....ສພ.ວສ

# ໃບຮັບຮອງ

## ອະນຸມັດຜ່ານການຮັບຮອງການຮຽບຮຽງປຶ້ມພາກວິຊາຄູປະຖົມ

- **ອີງຕາມ:** ຂໍ້ຕົກລົງວ່າດ້ວຍການຈັດຕັ້ງການເຄື່ອນໄຫວກິດຈະກຳສະພາວິທະຍາສາດຂອງວິທະຍາໄລຄູສາລະວັນປະຈຳສົກຮຽນ 2021 – 2022.

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກຳມະການເຫັນວ່າປຶ້ມຮຽບຮຽງປຶ້ມມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳນົດ ແລະ ສະພາວິທະຍາສາດຈຶ່ງໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ - ການສອນໃນວິທະຍາໄລຄູສາລະວັນ.

| ຄະນະກຳມະການກວດສອບ | ລາຍເຊັນ |
|---|---|
| ທ່ານ ອຈ ປທ ແສນຮັກ ບຸນມີ | ........ ແສນຮັກ ບຸນມີ Sanhack BOUNMY |
| ທ່ານຊອ ປອ ສົມບູນ ຊາມີນຕີ | ........................ |

ທີ່, ສາລະວັນ, ວັນທີ ..4./..1./.2023

ປະທານສະພາວິທະຍາສາດ

ອ.ຈ ນ. ສົມປອງ ແສນທະວີສຸກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ooooooooo

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

# ໃບຮັບຮອງການກວດແກ້ບົດຮຽບຮຽງປຶ້ມ ວິຊາ ວິທີສິດສອນພາສາລາວ 2

**ຊື່ຫົວຂໍ້** : ວິທີສິດສອນພາສາລາວ 2

**ຫ້ອງການ**: ຄູອະນຸບານ-ປະຖົມ

**ຜູ້ຮຽບຮຽງປຶ້ມ**

ທ່ານ ອຈ ບ. ຄໍາສະຫວັນ ຈັນສີບະວົງ

ຄະນະກໍາມະການກວດແກ້ບົດ — **ລາຍເຊັນ**

ທ່ານ ຊອ ປທ ບ. ບົວສະຫວັນ ທອມສີສົມບັດ ..............................

ທ່ານ ພູວົງ ຄໍາມະນີວົງ ..............................

ທ່ານ ສຸລິໄຊ ສີຜາລາດ ..............................

ທີ່, ສາລະວັນ, ວັນທີ 2/1/2023.

**ຫົວໜ້າຫ້ອງການສາຍ**

ແສນຮັກ ບຸນມີ

Sanhack BOUNMY

# ການສອນພາສາລາວ2

| ສາຍຄູປະຖົມ ລະບົບ 4 ປີ | ປີທີ 2 | ພາກຮຽນ 2 |
|---|---|---|

ຮຽບຮຽງໂດຍ:
ອາຈານ ນາງ ຄຳສະຫວັນ ຈັນສີຍະວົງ
ກວດແກ້ໂດຍ:
ຊອ ປທ ນາງ ບົວສະຫວັນ ທອມສີສີມບັດ
ທ່ານ ພູວົງ ຄຳມະນີວົງ
ທ່ານ ສຸລິໄຊ  ສີຜາລາດ

**ຄຳນຳ**

ເອກະສານຫຼັກສູດ ແລະ ການສອນພາສາລາວ1ເຫຼັ້ມນີ້ໄດ້ຮຽບຮຽງຂຶ້ນມາເຊິ່ງມີຈຸດປະສົງເພື່ອໃຫ້ນັກສຶກສາຄູທີ່ຮຽນຈົບອອກໄປສາມາດນຳໃຊ້ວິທີສອນຂຽນແບບຕ່າງໆໄປສອນຢູ່ຊັ້ນປະຖົມໄດ້, ແຕ່ງບົດສອນ, ຜະລິດສື່ການສອນ, ນຳໃຊ້ສື່ການສອນ ແລະ ສອນຕົວຈິງໃນຊັ້ນປະຖົມໄດ້ ແລະ ນຳໃຊ້ເຂົ້າໃນການຮຽນ-ການສອນກັບນັກຮຽນຄູສາຍຄູປະຖົມລະບົບ 12 + 4 ປີທີ 2 ພາກຮຽນທີ 2, ເນື້ອໃນທີ່ບັນຈຸເຂົ້າໃນວິຊານີ້ນັກສຶກສາຄູຈະໄດ້ຮຽນຮູ້ກ່ຽວກັບ: ວິທີສອນຂຽນ ( ວິທີສອນພາສາລາວໃຫ້ເດັກຊົນເຜົ່າ), ການແຕ່ງບົດສອນທັກສະຂຽນ, ຜະລິດສື່ການສອນ ແລະ ເຝິກສອນຕົວຈິງ.

ເພື່ອເຮັດໃຫ້ການຮຽນ-ການສອນມີເນື້ອໃນນັບມື້ນັບອຸດົມສົມບູນ, ມີຊີວິດຊີວາ, ທັນສະພາບ ແລະ ແທດເໝາະກັບຄວາມກ້າວໜ້າທາງດ້ານວິທະຍາສາດ, ວິທະຍາການ ເຊິ່ງ ນັບມື້ນັບມີການຂະຫຍາຍຕົວນັ້ນ, ມັນຮຽກຮ້ອງໃຫ້ຄູອາຈານຜູ້ນຳໃຊ້ເອກະສານເຫຼັ້ມນີ້ ມີຫົວຄິດປະດິດສ້າງ ແລະ ຄົ້ນຄວ້າປັບເນື້ອໃນຄວາມຮູ້ຕ່າງໆລວມທັງປັບກິດຈະກຳການຮຽນ-ການສອນໃຫ້ສອດຄ່ອງກັບລະດັບຄວາມຮູ້ ແລະ ຄວາມຮຽກຮ້ອງຕ້ອງການຂອງການສ້າງຄູໃນໄລຍະໃໝ່ ແລະ ແທດເໝາະກັບສະພາບຕົວຈິງຂອງທ້ອງຖິ່ນ.

ເນື້ອໃນທັງໝົດທີ່ຮິບໂຮມມານີ້ກໍ່ເພື່ອເປັນຄູ່ມືໃນການຈັດການຮຽນ-ການສອນໃນການນຳໃຊ້ຕົວຈິງ, ເອກະສານເຫຼັ້ມນີ້ອາດຈະມີຂໍ້ຂາດຕົກບົກພ່ອງບາງປະການເນື່ອງມາຈາກຫຼາຍສາເຫດລວມທັງການເຂົ້າໜ້າ ແລະ ຈັດພິມຕ່າງໆ. ແຕ່ກໍ່ເຊື່ອແນ່ວ່າບັນດາຄູ - ອາຈານ ແລະ ນັກຮຽນຄູຄົງໃຫ້ຄວາມຮ່ວມມືຊ່ວຍແນະນຳແນວທາງເພື່ອປັບປຸງໃຫ້ປຶ້ມເຫຼັ້ມນີ້ສົມບູນ ເພື່ອສາມາດນຳຊ້ຢ່າງມີຄຸນຄ່າ ແລະ ມີປະໂຫຍດເຂົ້າໃນການຮຽນ-ການສອນຂອງຕົນ.

ອາຈານ ນາງ ຄຳສະຫວັນ ຈັນສີຍະວົງ

## ສາລະບານ


ບົດທີ1 ການສອນຂຽນແບບຕ່າງໆໃນຊັ້ນປະຖົມສຶກສາ ........ 1
1. ການສອນຂຽນເລືອກຄຳສັບຕື່ມໃສ່ບ່ອນຫວ່າງ ........ 1
2. ການສອນຂຽນໃຊ້ຄຳສັບແຕ່ງໃສ່ປະໂຫຍກ ........ 2
3. ການສອນຂຽນຕອບຄຳຖາມ ........ 2
ບົດທີ1ການສອນຂຽນແບບຕ່າງໆໃນຊັ້ນປະຖົມສຶກສາ( ຕໍ່) ........ 4
4. ການສອນຂຽນເລົ່າເລື່ອງຕາມຮູບແຕ້ມ ........ 4
5. ການສອນຂຽນເລົ່າເລື່ອງຄືນເຫດການ ........ 5
ບົດທີ1ການສອນຂຽນແບບຕ່າງໆໃນຊັ້ນປະຖົມສຶກສາ( ຕໍ່ ) ........ 7
6. ແຕ່ງບົດສອນ, ວິເຄາະບົດສອນ, ສອນທົດລອງ ........ 7
ບົດທີ 2ການສອນຂຽນປະເພດບົດພັນລະນາ ........ 14
1. ການສອນຂຽນບົດພັນລະນາຄົນ ........ 14
2. ການສອນຂຽນບົດພັນລະນາສັດ ........ 16
3. ການສອນຂຽນບົດພັນລະນາວັດຖຸ ........ 19
ບົດທີ2 ( ຕໍ່ ) ການສອນຂຽນປະເພດບົດພັນລະນາ ........ 22
4.ການສອນຂຽນບົດພັນລະນາພາບ ........ 22
5.ແຕ່ງບົດສອນ, ວິເຄາະບົດສອນ, ສອນທົດລອງ ........ 24
ບົດທີ3 ການສອນຂຽນບົດປະເພດຕ່າງໆ ........ 27
1. ການສອນຂຽນຄຳຮ້ອງ ........ 27
2. ການສອນຂຽນໃບສະເໜີ ........ 29
ບົດທີ 3 ( ຕໍ່ ) ການສອນຂຽນບົດປະເພດແບບຕ່າງໆ ........ 31
3. ການສອນຂຽນຈົດໝາຍ ........ 31
4. ການສອນຂຽນບົດບັນທຶກ ........ 37
ບົດທີ 3 ( ຕໍ່ ) ການສອນຂຽນບົດປະເພດແບບຕ່າງໆ ........ 39
5. ການສອນຂຽນບົດລາຍງານ ........ 39
6. ການສອນຂຽນປະກາດ ........ 42
ບົດທີ3 ( ຕໍ່ ) ການສອນຂຽນບົດປະເພດແບບຕ່າງໆ ........ 45
7. ການສອນຂຽນຄຳຂວັນ ........ 45
8. ການສອນຂຽນໂຄສະນາ ........ 45
ບົດທີ3 ( ຕໍ່ ) ການສອນຂຽນບົດປະເພດແບບຕ່າງໆ ........ 47
9.ການສອນຂຽນຂ່າວ ........ 47
10. ແຕ່ງບົດສອນ, ວິເຄາະບົດສອນ ........ 47
ບົດທີ 4 ການສອນຂຽນນິທານ ........ 55
1. ການສອນຂຽນນິທານຄືນຈາກການຟັງ ........ 55

2. ການສອນຂຽນເລື່ອງຕາມຈິນຕະນາການ.......................................................56
ບົດທີ 4 ( ຕໍ່) ການສອນຂຽນນິທານ.......................................................57
3. ການສອນຂຽນກາບກອນ.......................................................57
4. ແຕ່ງບົດສອນ, ວິເຄາະບົດສອນ.......................................................60
ບົດທີ5 ການສອນພາສາລາວສຳລັບນັກຮຽນຊົນເຜົ່າ.......................................................62
1.ການສອນແບບເນັ້ນການຟັງ-ການເວົ້າ.......................................................62
2. ການສອນແບບເນັ້ນການເຄື່ອນໄຫວ.......................................................62
ບົດທີ5 ( ຕໍ່ ) ການສອນພາສາລາວສຳລັບນັກຮຽນຊົນເຜົ່າ.......................................................64
3.ການສອນແບບເນັ້ນການສື່ສານ.......................................................64
4. ແຕ່ງບົດສອນ, ວິເຄາະບົດສອນ.......................................................68
ເອກະສານອ້າງອີງ....................................................... 132

# ບົດທີ1
# ການສອນຂຽນແບບຕ່າງໆໃນຊັ້ນປະຖົມສຶກສາ

## 1.ການສອນຂຽນເລືອກຄຳສັບຕື່ມໃສ່ບ່ອນຫວ່າງ

ເພື່ອເຮັດໃຫ້ນັກຮຽນສາມາດໃຊ້ຄຳສັບໄດ້ຢ່າງຊັດເຈນ, ເພື່ອເປັນການທົບທວນຄືນຄວາມຮູ້ທີ່ໄດ້ຮຽນມາໃນວິຊາຫັດອ່ານ. ເພື່ອເຮັດໃຫ້ນັກຮຽນມີຄວາມຊຳນິຊຳນານໃນການແຕ່ງປະໂຫຍກເຂົ້າໃນບົດຫັດແຕ່ງໃຫ້ນັກຮຽນສາມາດຮຽບຮຽງຄຳສັບຢູ່ບ່ອນເປົ່າຫວ່າງໄດ້. ຄຳສັບທີ່ນັກຮຽນຊອກມາຕື່ມໃສ່ຄູຄວນຈັດຄຳສັບທີ່ຈະຕື່ມນັ້ນໄວ້ທາງຂ້າງ, ເບື້ອງເທິງ ຫຼື ເບື້ອງລຸ່ມ ແຕ່ບໍ່ໃຫ້ຮຽງຕາມລຳດັບຄວາມຕ້ອງການທີ່ຈະຕື່ມເຊັ່ນ: ສົມຈິດ, ທາງ, ເລີຍ, ໜ່ອຍໜຶ່ງ, ແຄມ, ຈັບເອົາ, ຄວາມ.

ຕົວຢ່າງ: ຄຳສັບ

**ໜ່ອຍໜຶ່ງ** | **ແຄມ** | **ສົມຈິດ** | **ຈັບເອົາ**

**ທາງ** | **ເລີຍ** | **ຄວາມ**

ມື້ໜຶ່ງ.....................ຍ່າງຕາມ............ສົມຈິດ............ເຫັນກະເປົາເງິນ.................
ຕົກເຮ່ຍຢູ່..................ທາງສົມຈິດ.....................ກະເປົາດ້ວຍ...................ຕື່ນເຕັ້ນ.

- ຄູພານັກຮຽນຫຼິ້ນເກມ: " ຕື່ມຄຳໃສ່ບ່ອນຫວ່າງ ".

ເກມຕື່ມຄຳໃສ່ບ່ອນຫວ່າງ

ຈຸດປະສົງ:

- ເພື່ອໃຫ້ນັກຮຽນສາມາດຕື່ມຄຳໃສ່ປະໂຫຍກໄດ້.
- ຝຶກທັກສະການອ່ານ ແລະ ການຂຽນ.

ອຸປະກອນ: ເຈ້ຍແຂງ, ບິກເຝີດ, ເຈ້ຍໂລນຽວທີ່ຄູຂຽນຂໍ້ຄວາມໃສ່.

ວິທີເຮັດ:

- ຄູຂຽນຂໍ້ຄວາມທີ່ຕ້ອງການໃຫ້ນັກຮຽນຝຶກໃສ່ເຈ້ຍແຜ່ນພູມ.
- ຄູຂຽນຂໍ້ຄວາມໃສ່ເຈ້ຍໂລນຽວໃຫ້ຄົບຕາມຈຳນວນກຸ່ມທີ່ຈະແບ່ງ.

ຕົວຢ່າງ:

- ແຕ່ກີ້ແຕ່ກ່ອນ...................ຜູ້ໜຶ່ງເມຍຂອງລາວໄດ້....................ຈາກໄປຫຼາຍປີແລ້ວ.
- ຫຼັງຈາກພໍ່ຕາຍແລ້ວ.............ຜູ້ນ້ອງກໍດຳລົງ....................ຢູ່ດ້ວຍຄວາມລຳບາກ.
- ຢູ່ມາມື້ໜຶ່ງ.....................ສອງອ້າຍນ້ອງ.................ໄປຊຸດຫາ.......... ແລະ ..........
- ສອງອ້າຍນ້ອງ.............ເທົ່າໃດກໍບໍ່ເຫັນ. ທັງສອງຈຶ່ງພາກັນກັບ..............................

ດ້ວຍຄວາມຜິດຫວັງ.

ວິທີຫຼິ້ນ

- ແບ່ງນັກຮຽນອອກເປັນກຸ່ມ.
- ເອົາແຜ່ນພູມຂໍ້ຄວາມໄປຕິດໃສ່ກະດານ ຫຼື ຄູກະຈາຍໃສ່ກະດານກໍ່ໄດ້ ແລ້ວແຕ່ຄວາມເໝາະສົມ.

- ຢາຍເຈ້ຍຂໍ້ຄວາມທີ່ຄູກຽມໄວ້ໃຫ້ແຕ່ລະກຸ່ມ ກຸ່ມລະ 1 ໃບ.
- ໃຫ້ສະມາຊິກໃນກຸ່ມຊ່ວຍກັນຕື່ມຄຳໃສ່ຂໍ້ຄວາມນັ້ນ.
- ເມື່ອທຸກກຸ່ມແລ້ວສົ່ງໃຫ້ຄູ.
- ຄູ ແລະ ນັກຮຽນພ້ອມກັນກວດໃນກະດານ.
- ໃຫ້ຕາງໜ້າກຸ່ມອອກມາອ່ານແຂ່ງຂັ້ນກັນ.
- ຄູໃຫ້ຄະແນນການອ່ານ ແລະ ການຕື່ມຄຳຂອງແຕ່ລະກຸ່ມ.

ການວັດ ແລະ ປະເມີນຜົນ

- ສັງເກດການອ່ານ ແລະ ການຕື່ມຄຳໃສ່ບ່ອນວ່າງຂອງນັກຮຽນ.

## 2. ການສອນຂຽນໃຊ້ຄຳສັບແຕ່ງໃສ່ປະໂຫຍກ

ການເອົາຄຳແຕ່ງເປັນປະໂຫຍກແມ່ນການເອົາຄຳສັບໄປໃຊ້ໃນປະໂຫຍກໃຫ້ໄດ້ຄວາມໝາຍ, ເປັນການທວນຄືນຄວາມຮູ້ທີ່ໄດ້ຮຽນມາໃນພາກອ່ານ, ເຮັດໃຫ້ນັກຮຽນສາມາດໃຊ້ຄຳສັບໄດ້ຖືກຕ້ອງ, ຄຳສັບທີ່ເອົາມາຂຽນແມ່ນຄຳທີ່ໄດ້ຮຽນມາແລ້ວ.

ຕົວຢ່າງ: ບົດທີ 14 ຕື່ນເດີກລຸກເຊົ້າ ( ປ3 )

1. ຄູຂຽນຄຳນາມທີ່ຈະໃຫ້ນັກຮຽນແຕ່ງເປັນປະໂຫຍກໃສ່ກະດານດັ່ງນີ້:
   ໄກ່: ເຮືອນຂ້ອຍມີໄກ່ຜູ້ໂອກ 2 ໂຕ.
   ໄຫ: ..........................................
   ໂອ...........................................
   ຊາມ:.......................................
   ຈອກ:......................................
   ນໍ້າ:.............................................
   ຈານ:.............................................
2. ຄູໃຫ້ນັກຮຽນສັບປ່ຽນກັນອອກໄປແຕ່ງໃສ່ກະດານ.
3. ຄູໃຫ້ນັກຮຽນກ່າຍປະໂຫຍກໃສ່ປື້ມຂອງໃຜມັນ.
4. ຄູຕິດຕາມຊ່ວຍເຫຼືອນັກຮຽນທີ່ເຮັດບໍ່ໄດ້.
5. ຄູສະຫຼຸບຄືນ ແລະ ໃຫ້ຄະແນນການແຕ່ງປະໂຫຍກຂອງນັກຮຽນ.

❖ ການວັດ ແລະ ປະເມີນຜົນ

- ຄວາມຖືກຕ້ອງຂອງການແຕ່ງປະໂຫຍກ.

## 3. ການສອນຂຽນຕອບຄຳຖາມ

ການຕັ້ງຄຳຖາມຂອງຄູແມ່ນອີງໃສ່ບົດອ່ານຂອງນັກຮຽນບໍ່ຄວນຕັ້ງຄຳຖາມຍາກໂພດຈະເຮັດໃຫ້ນັກຮຽນຄົ້ນຄິດບໍ່ທັນ, ຄວນຕັ້ງຄຳຖາມໃຫ້ເໝາະສົມກັບລະດັບຄວາມສາມາດຂອງນັກຮຽນ.ການຕັ້ງຄຳຖາມຄູບໍ່ຄວນອີງໃສ່ຄຳຖາມທີ່ມີຢູ່ໃນປື້ມແບບຮຽນຕາຍຕົວ. ຄູອາດຈະໃຊ້ຄຳຖາມທີ່ພົວພັນກັບບັນຫາອື່ນເຊັ່ນ: ສິ່ງແວດລ້ອມ, ບົດບາດຍິງ - ຊາຍ, ສິ່ງເສບຕິດ  ແລະ ຊີວິດປະຈຳວັນ.

ຕົວຢ່າງ: ຄຳຖາມ

1. ການຮັກສາອະນາໄມໂຮງຮຽນ ແລະ ຫ້ອງຮຽນຄວນເຮັດແນວໃດ?

2. ໃນຄອບຄົວຂອງນັກຮຽນເອງມີໃຜແດ່?

ຕອບ: - ໝັ່ນປັດກວາດ, ບໍ່ຖິ້ມນໍ້າລາຍໃສ່ຫ້ອງຮຽນ, ບໍ່ຖິ້ມເຈ້ຍ ແລະຖົງຢາງຊະຊາຍ.

- ພໍ່, ແມ່, ເອື້ອຍ, ອ້າຍ, ນ້ອງ...

# ບົດທີ1

# ການສອນຂຽນແບບຕ່າງໆໃນຊັ້ນປະຖົມສຶກສາ( ຕໍ່)

## 4. ການສອນຂຽນເລົ່າເລື່ອງຕາມຮູບແຕ້ມ

ການຂຽນເລົ່າເລື່ອງຕາມຮູບແຕ້ມແມ່ນບາດກ້າວທໍາອິດທີ່ນັກຮຽນຈະສາມາດຈື່ຕົວລະຄອນຕາມຮູບພາບ ແລ້ວເລົ່າຕາມຮູບພາບໄດ້. ຄູຕ້ອງແນະນໍາໃຫ້ນັກຮຽນຢ່າງລະອຽດວ່າການຂຽນເລື່ອງເປັນການຂຽນສິ່ງທີ່ເຫັນໃນຮູບວ່າແມ່ນໃຜ? ເຮັດຫຍັງ? ມີຫຍັງແດ່? ມັນເປັນແນວໃດ?.



ຕົວຢ່າງ: ບົດທີ 58 ຊົມທໍາມະຊາດຍາມແລງ ( ປ3 )

1. ຄູສົນທະນາກ່ຽວກັບຮູບ ບົດທີ 58.
2. ຄູໃຫ້ນັກຮຽນຂຽນຕາມຄວາມເຂົ້າໃຈທີ່ເຫັນຢູ່ໃນຮູບ.
3. ໃຫ້ນັກຮຽນເອົາໄປຂຽນຢູ່ເຮືອນໃຜມັນ.
4. ວັນຕໍ່ມາຄູເກັບບົດຂຽນຂອງນັກຮຽນມາກວດ ແລະ ໃຫ້ຄະແນນ.
5. ຄູສົ່ງບົດຂຽນເລື່ອງຄືນໃຫ້ນັກຮຽນແຕ່ລະຄົນ.
6. ຄູໃຫ້ນັກຮຽນອ່ານບົດທີ່ໄດ້ຄະແນນດີໃຫ້ໝູ່ຟັງ.
7. ຄູຍ້ອງຍໍຜູ້ທີ່ຂຽນໄດ້ດີ ແລະ ແນະນໍາໃຫ້ນັກຮຽນຜູ້ທີ່ຮຽນຜູ້ທີ່ຂຽນບໍ່ທັນໄດ້ດີ.

- ການວັດ ແລະ ປະເມີນຜົນ

ກວດຄືນຄວາມຖືກຕ້ອງຂອງການແຕ່ງເປັນຂໍ້ຄວາມຕໍ່ເນື່ອງ

ເກມແຕ້ມຮູບປະກອບເລື່ອງ.

ຈຸດປະສົງ: ເພື່ອໃຫ້ນັກຮຽນ

- ຝຶກທັກສະການຂຽນເລື່ອງ.
- ຝຶກການແຕ້ມຮູບປະກອບເລື່ອງ.

ອຸປະກອນ: ເຈ້ຍໂລນຽວ, ບິກ ຫຼື ສໍດໍາ

ວິທີຫຼິ້ນ:

- ຄູຢາຍເຈ້ຍໂລນຽວໃຫ້ນັກຮຽນຜູ້ລະ 1 ໃບ ແຕ່ລະຄົນໃຫ້ຂຽນຊື່ໃສ່.

- ຄູເລົ່າເລື່ອງໃຫ້ນັກຮຽນຟັງ( ບໍ່ໃຫ້ຍາວຫຼາຍ ) ເມື່ອເລົ່າຈົບແລ້ວໃຫ້ນັກຮຽນຂຽນເລື່ອງທີ່ໄດ້ຟັງຄູເລົ່າໃສ່ເຈ້ຍໂລນຽວພ້ອມທັງແຕ້ມຮູບປະກອບຈາກນັ້ນເອົາໄປສົ່ງຄູ.

- ຄູກວດ, ດັດແປງຄຳຜິດແລ້ວໃຫ້ຄະແນນ.

- ຄູເລືອກເອົາບົດຮຽນທີ່ດີເດັ່ນໄປຕິດໃວ້ກະດານຂາວພ້ອມທັງແຕ້ມຮູບປະກອບຈາກນັ້ນເບິ່ງຕໍ່ໄປ.

ການວັດ ແລະ ປະເມີນຜົນ

- ສັງເກດຈາກການຂຽນເລື່ອງຄືນຂອງນັກຮຽນ

- ການແຕ້ມຮູບປະກອບເລື່ອງຂອງນັກຮຽນ.

ຂໍ້ແນະນຳ:

- ຄູອາດຈະເອົາເລື່ອງສັດລ້ຽງບາງຊະນິດເຊັ່ນ: ຮູບຮ່າງລັກສະນະຂອງສັດ, ຄຸນປະໂຫຍດຂອງມັນອາຫານທີ່ໃຫ້ສັດກິນ ແລະ ອື່ນໆ.

## 5. ການສອນຂຽນເລົ່າເລື່ອງຄືນເຫດການ

ເຫດການທີ່ຈະນຳມາເລົ່າຕ້ອງງ່າຍ, ມີຂໍ້ປີກຍ່ອຍໜ້ອຍທີ່ສຸດອາດຈະຍົກເຫດການທີ່ເກີດຂຶ້ນຢູ່ໃນຄອບ, ໂຮງຮຽນ, ສັງຄົມ ຫຼື ສະພາບແວດລ້ອມ ( ວົງແຄບ )





**ລັກສະນະຂອງບົດເລົ່າເລື່ອງຄືນເຫດການ**

1. ເລົ່າເຫດການແມ່ນຮູບການຂອງເລົ່າເລື່ອງ ເພາະມັນລ້ອນແຕ່ເອົາກິດຈະການທີ່ເກີດຂຶ້ນເປັນຈຸດໜັກ ການເລົ່າເຫດການຕ່າງກັບການເລົ່າເລື່ອງບາງຂໍ້ດັ່ງນີ້:

- ສິ່ງທີ່ເກີດຂຶ້ນໃນບົດແຕ່ງ ເລົ່າເຫດການຕ້ອງເປັນເຫດທີ່ເກີດຂຶ້ນໃໝ່, ມີລັກສະນະຂ່າວສານ ທີ່ທຸກຄົນພວມເອົາໃຈໃສ່. ກົງກັນຂ້າມ, ສິ່ງທີ່ເກີດຂຶ້ນໃນປະເພດເລົ່າເລື່ອງ ອາດຈະເປນສິ່ງທີ່ເກີດຂຶ້ນດົນນານແລ້ວ, ບາງເທື່ອເປັນເວລາແຕ່ຮ້ອຍປີຜ່ານມາ.

- ສິ່ງທີ່ເກີດຂຶ້ນໃນບົດແຕ່ງ ເລົ່າເຫດການຕ້ອງຮັບປະກັນໃຫ້ຖືກຄວາມຈິງຢ່າງຄົບຖ້ວນ. ສ່ວນສິ່ງທີ່ເກີດຂຶ້ນໃນບົດຫັດແຕ່ງ ເລົ່າເລື່ອງບາງເທື່ອມີຄວາມຈິງສ່ວນໜຶ່ງ ( ເລື່ອງມ່ວນ, ເລື່ອງປະດິດ)ບາງເທື່ອແມ່ນຜູ້ແຕ່ງປະດິດຄິດສ້າງຂຶ້ນ( ເລື່ອງນິທານ, ນິຍາຍ, ປະຕິພານ)

- ບົດແຕ່ງເລົ່າເຫດການ ແມ່ນເລົ່າໃນໄລຍະເວລາ ທີ່ເລື່ອງເກີດຂຶ້ນສັ້ນໆເຊັ່ນ: ເວລາລວມມິດຕິງ, ການອອກແຮງງານ. ກົງກັນຂ້າມ, ການແຕ່ງເລົ່າເລື່ອງແມ່ນເລົ່າໃນໄລຍະເວລາທີ່ເກີດຂຶ້ນຍືດເຍື້ອ, ເປັນເດືອນ, ເປັນປີ , ເປັນສິບໆປີ ຫຼື ຊົ່ວອາຍຸຄົນ.

ເພາະລັກສະນະຂອງການແຕ່ງປະເພດເລົ່າເລື່ອງຄືນເຫດການແມ່ນລັກສະນສະເໜີຂ່າວ, ຜູ້ເລົ່າແມ່ນມູນເຫດແຫ່ງຄວາມຈິງ, ຕ້ອງໄດ້ຮູ້, ໄດ້ເຫັນ, ໄດ້ຟັງ ແລະ ໄດ້ຮ່ວມຢູ່ໃນສະພາບນັ້ນ. ແຕ່ການເລົ່າເລື່ອງບໍ່ຈຳເປັນຈະຕ້ອງຄືດັ່ງກ່າວຂ້າງເທິງນັ້ນ, ຜູ້ແຕ່ງພຽງແຕ່ໄດ້ຟັງຜູ້ອື່ນເລົ່າ ຫຼື ໄດ້ອ່ານກໍ່ສາມາດແຕ່ງບົດເລົ່າຄືນໄດ້.

2.ເລົ່າເຫດການແມ່ນແຕກຕ່າງດ້ານພື້ນຖານ ກັບປະເດັນການພັນລະນາ.

- ພັນລະນາແມ່ນການວາດພາບຄົນ, ສັດ ແລະ ພາບໃດໜຶ່ງໃນຊີວິດ, ໃນການພັນລະນານັ້ນຜູ້ແຕ່ງຕ້ອງຍົກໃຫ້ເຫັນຮູບພາບພາຍນອກຂອງຄົນ ແລະ ພາບນັ້ນ. ກົງກັນຂ້າມ, ການແຕ່ງບົດເລົ່າເຫດການແມ່ນເລົ່າເຫດການຂອງເລື່ອງທີ່ເກີດຂຶ້ນເປັນສຳຄັນ, ແຕ່ຕ້ອງແຕ່ງເຂົ້າເລິກເຖິງເນື້ອໃນຂອງເຫດການທີ່ເກີດຂຶ້ນນັ້ນອີກດ້ວຍ.

- ນອກຈາກການແຕກຕ່າງພື້ນຖານ ກັບປະເພດບົດພັນລະນາແນວນັ້ນແລ້ວ, ໄລຍະເວລາທີ່ເຫດການເກີດຂຶ້ນນັ້ນ ປະເພດແຕ່ງບົດພັນລະນາກໍ່ສັ້ນກວ່າສິ່ງທີ່ເກີດຂຶ້ນ ໃນການແຕ່ງເລົ່າເຫດການ. ບົດພັນລະນາພຽງແຕ່ວາດພາບໃດໜຶ່ງ ຫຼື ສ່ວນໃດໜຶ່ງຂອງສິ່ງທີ່ເກີດຂຶ້ນ. ກົງກັນຂ້າມ, ການແຕ່ງເລົ່າເຫດການຕ້ອງແຕ່ງແຕ່ສິ່ງທີ່ເກີດຂຶ້ນຈົນເຖິງເວລາສິ້ນສຸດ. ຕົວຢ່າງ: ຕ້ອນເຊົ້າຂອງມື້ວັນຈັນທ້າວຄຳສີຍ່າງໄປໂຮງຮຽນກັບໝູ່ດ້ວຍຄວາມເບີກບານມ່ວນຊື່ນບັງເອີ້ນເກີດມີລົມແຮງຝົນຕົກລົງມາ ທ້າວຄຳສີ ບໍ່ໄດ້ເອົາຄັນຮົ່ມໄປນຳລາວເລີຍຂໍເຂົ້າຊຸ້ມຄັນຮົ່ມນຳໝູ່, ແຕ່ຄັນຮົ່ມໜ້ອຍໂພດເຄື່ອງນຸ່ງ, ຖົງປຶ້ມຂອງທ້າວຄຳສີປຽກ ເວລານັ່ງຮຽນໃນຫ້ອງລາວກໍ່ບໍ່ສະບາຍໃຈ.

ວິທີແຕ່ງປະເພດເລົ່າເລື່ອງຄືນເຫດການ

1. ຕ້ອງກຳເຫດການ ຫຼື ສິ່ງທີ່ເກີດຂຶ້ນໃຫ້ໄດ້ຢ່າງຄົບຖ້ວນ.

ຢາກແຕ່ງບົດເລົ່າເລື່ອງຄືນເຫດການໄດ້ດີ, ຜູ້ແຕ່ງຕ້ອງກຳສິ່ງທີ່ເກີດຂຶ້ນນັ້ນໃຫ້ໄດ້ຢ່າງຄົບຖ້ວນ. ຖ້າຢາກກຳສິ່ງທີ່ເກີດຂຶ້ນໄດ້ຢ່າງຄົບຖ້ວນ, ຜູ້ແຕ່ງຈະຕ້ອງໄດ້ເຫັນເຫດການທີ່ເກີດຂຶ້ນນັ້ນແຕ່ຕົ້ນຮອດປາຍ ກັບຕາ ແລະຈື່ຢ່າງຄັກແນ່.

2.ໃນການເລົ່າເລື່ອງຄືນເຫດການ, ສິ່ງທີ່ເກີດຂຶ້ນຈະຕ້ອງມີຕົວຈິງ.

ດັ່ງທີ່ສະເໜີມາແລ້ວ, ການເລົ່າເລື່ອງຄືນເຫດການເປັນການເລົ່າຄືນສິ່ງທີ່ເກີດຂຶ້ນ ເຊິ່ງທຸກຄົນພວມສົນໃຈນັ້ນ. ເພາະວ່າຄົນທັງຫຼາຍຢາກຮູ້ຢາກຟັງສິ່ງທີ່ເກີດຂຶ້ນນັ້ນວ່າເປັນແນວໃດ? ຜົນຂອງມັນເປັນແນວໃດ? ໃນເວລານັ້ນຜູ້ຂຽນກຳສິ່ງທີ່ເກີດຂຶ້ນໄດ້ຢ່າງຄົບຖ້ວນ, ແຕ່ພັດໄປເລົ່າເຫດການຜິດກໍ່ບໍ່ຖືກຕ້ອງ.

3. ແຕ່ງບົດເລົ່າເລື່ອງຄືນເຫດການຕ້ອງເອົາໃຈໃສ່ການພັນລະນາ ແລະ ສອດຄວາມຮູ້ສຶກເຂົ້າໃນບົດແຕ່ງ.

ຖ້າວ່າການເລົ່າເລື່ອງຄືນເຫດການ ພຽງແຕ່ເລົ່າສິ່ງທີ່ເກີດຂຶ້ນແຕ່ຕົ້ນຮອດປາຍຄືກັນກັບລາຍງານໃບໜຶ່ງເທົ່ານັ້ນ, ບົດແຕ່ງກໍຈະຈືດຈາງບໍ່ມີຊີວິດຊີວາ. ຖ້າຢາກໃຫ້ອ່ານນຶກເຫັນສິ່ງທີ່ເກີດຂຶ້ນ ມີຄວາມສຳນຶກ ແລະ ຄວາມຮູ້ສຶກຄືຜູ້ແຕ່ງ, ການຂຽນຄວນເອົາໃຈໃສ່ການພັນລະນາຮູບພາບ ແລະ ສອດຄວາມຮູ້ສຶກ, ຄວາມສຳນຶກຂອງຕົນເອງ ແລະ ຂອງບຸກຄົນໃນເຫດການເຂົ້າກັບບົດແຕ່ງ. ຖ້າຢາກເຮັດດັ່ງນັ້ນ, ເນື້ອໃນໃຈຄວາມຂອງບົດຈະຕ້ອງມີຮູບພາບທີ່ມີຊີວິດຊີວາເດັ່ນຂຶ້ນ.

4.ເລົ່າເລື່ອງຄືນເຫດການຕ້ອງມີຈຸດໜັກ.

ສິ່ງທີ່ເກີດຂຶ້ນແຕ່ຕົ້ນຮອດດປາຍກໍມີຫຼາຍຢ່າງທີ່ສຳຄັນ ແລະ ຫຼາຍຢ່າງທີ່ເປັນມະຍົກມະຍ່ອຍ. ຖ້າເລົ່າໃຫ້ລະອຽດໝົດທຸກກໍລະນີ, ບົດແຕ່ງນັ້ນຈະບໍ່ມີຈຸດໜັກ. ດັ່ງນັ້ນ ຜູ້ຂຽນຕ້ອງຄັດເລືອກຈຸດໜັກ ແລະ ສ່ວນທີ່ຈຳເປັນ, ສ່ວນໃດທີ່ບໍ່ຈຳເປັນກໍ່ບໍ່ຕ້ອງຂຽນ, ແຕ່ສ່ວນທີ່ສຳຄັນຕ້ອງເລົ່າໃຫ້ຄັກແນ່.

# ບົດທີ1

# ການສອນຮຽນແບບຕ່າງໆໃນຊັ້ນປະຖົມສຶກສາ( ຕໍ່ )

## 6. ແຕ່ງບົດສອນ, ວິເຄາະບົດສອນ, ສອນທົດລອງ

### 1. ການແຕ່ງບົດສອນ

ການແຕ່ງບົດສອນເປັນແຜນການສອນທີ່ຄູຮຽນຂຶ້ນເພື່ອເປັນການກະກຽມວ່າໃນການສອນແຕ່ລະຄາບ ຫຼື ແຕ່ລະຄັ້ງຈະສອນຫຍັງ, ສອນຄືແນວໃດ, ສອນເພື່ອຫຍັງ, ຈະໃຫ້ນັກຮຽນເຮັດກິດຈະກຳຫຍັງ ແລະ ຈະປະເມີນຜົນການຮຽນ-ການສອນດ້ວຍວິທີໃດ.

### 2.ຄຸນປະໂຫຍດຂອງການແຕ່ງບົດສອນ

- ຊ່ວຍໃຫ້ການສອນຂອງຄູດຳເນີນໄປໄດ້ສະດວກເປັນລະບົບ ແລະ ບັນລຸຕາມຄວາມມຸ່ງໝາຍ
- ຊ່ວຍໃຫ້ຄູເກີດຄວາມເຊື່ອໝັ້ນໃນຕົນເອງເວລາສອນ
- ຊ່ວຍຄູທີ່ສອນແທນໄດ້ຮູ້ວ່ານັກຮຽນຮຽນໄປຮອດໃສ, ຈະສອນແນວໃດ.
- ຊ່ວຍເປັນແນວທາງການສອນບໍ່ໃຫ້ລືມ ແລະ ຝຶກທັກສະ.
- ຊ່ວຍໃຫ້ຄູສາມາດເພີ່ມຕື່ມເນື້ອໃນທີ່ກ່ຽວຂ້ອງກັບທ້ອງຖິ່ນເຊັ່ນ ຄຳເວົ້າທ້ອງຖິ່ນ ແລະ ອື່ນໆ.
- ຊ່ວຍໃຫ້ຄູສາມາດກຽມຜະລິດສື່ການສອນໄວ້ລ່ວງໜ້າ

### 3.ໂຄງປະກອບຂອງການແຕ່ງບົດສອນ

1. ຈຸດປະສົງ

ຈຸດປະສົງຄືສິ່ງທີ່ຕ້ອງການໃຫ້ນັກຮຽນໄດ້ຮັບ ຫຼື ເຮັດໄດ້ສ່ວນໃຫຍ່ມີລັກສະນະເປັນພຶດຕິກຳ. ນອກຈາກນັ້ນຈຸດປະສົງຍັງເປັນແນວທາງສຳລັບການປະເມີນຜົນການຮຽນ-ການສອນອີກດ້ວຍ.

ຈຸດປະສົງແຕ່ລະບົດຕ້ອງປະກອບດ້ວຍ:

- ດ້ານຄວາມຮູ້ນບົດນັ້ນເຮົາຕ້ອງໃຫ້ນັກຮຽນຮູ້ ແລະ ເຂົ້າໃຈຫຍັງແດ່?
- ດ້ານທັດສະນະຄະຕິໃນບົດນັ້ນຕ້ອງສຶກສາໃຫ້ນັກຮຽນເປັນຄົນແນວໃດ?ປະພຶດຕົນແນວໃດເພື່ອໃຫ້ຖືກກັບສະພາບຕົວຈິງຂອງສັງຄົມ.
- ດ້ານທັກສະ ໃຫ້ນັກຮຽນມີຄວາມຊຳນິຊຳນານດ້ານໃດ? ເຮັດຫຍັງໄດ້?

2.ເນື້ອໃນ

ເນື້ອໃນສຳຄັນຂອງບົດທີ່ນັກຮຽນຈະຕ້ອງໄດ້ຮຽນ, ໄດ້ຮູ້ ແລະ ເຂົ້າໃຈໂດຍຈັດລຳດັບຈາກງ່າຍໄປຫາຍາກຈັດໃຫ້ເໝາະສົມກັບເວລາ, ໄວຂອງນັກຮຽນໂດຍອີງໃສ່ສິ່ງແວດລ້ອມ ແລະ ຊີວິດປະຈຳວັນ.

3.ກິດຈະກຳການຮຽນ-ການສອນ

ແມ່ນວິທີດຳເນີນການສອນຂອງຄູທີ່ຈະດຳເນີນຂັ້ນຕອນຕ່າງໆໃນການສອນ ການດຳເນີນກິດຈະກຳ ການຮຽນ - ການສອນຂອງຄູ ກໍເພື່ອຈະເຮັດໃຫ້ນັກຮຽນ ໄດ້ເຮັດກິດຈະກຳໃຫ້ບັນລຸຕາມຈຸດປະສົງທີ່ກຳນົດໄວ້ນັ້ນເອງ. ໃນປັດຈຸບັນຫຼັກສູດມຸ່ງໃຫ້ຜູ້ຮຽນຮູ້ຄິດ, ຮູ້ທຳ ແລະ ຮູ້ແກ້ໄຂບັນຫາ, ຈິ່ງຈຳເປັນທີ່ຄູທຸກຄົນຈະຕ້ອງສອນວິທີການຄິດ, ວິທີການກະທຳ, ວິທີການແກ້ໄຂບັນຫາໃນການເຮັດວຽກຢ່າງສະຫຼາດ ແລະ ຮູ້ຂັ້ນຕອນ( ຮູ້ຢ່າງຄ່ອງແຄ້ວ) ເພື່ອຜູ້ຮຽນຈະໄດ້ພັດທະນາຕົນເອງຢ່າງຮອບດ້ານ (ດ້ານຄວາມຮູ້, ດ້ານທັດສະນະຄະຕິ ແລະ ດ້ານຄວາມສາມາດ )ສິ່ງສຳຄັນກໍຈະໄດ້ຄວາມຮູ້ຕິດຕົວໄປເພື່ອນຳໃຊ້ໃຫ້ເກີດປະໂຫຍດໃນອະນາຄົດ.

ໃນການຂຽນກິດຈະກຳການຮຽນ - ການສອນນັ້ນ, ຕ້ອງເອົາໃຈໃສ່ສະເໝີວ່າຄວນເປັນກິດຈະກຳຂອງນັກຮຽນໃຫ້ຫຼາຍໆບໍ່ແມ່ນກິດຈະກຳຂອງຄູ ດັ່ງນັ້ນ, ການກຳນົດກິດຈະກຳລົງໄປຕ້ອງພິຈາລະນາໃຫ້ດີຄວນໃຫ້ນັກຮຽນໄດ້ເຮັດກິດຈະກຳເຫຼົ່ານັ້ນ ຕ້ອງເລີ່ມຈາກນັກຮຽນ ໃຫ້ນັກຮຽນ ແລະ ເພື່ອນັກຮຽນ

ສໍາລັບການຈັດກິດຈະກໍາການຮຽນ-ການສອນເຮົາອາດປະຕິບັດຕາມຂັ້ນຕອນດັ່ງຕໍ່ໄປນີ້:

- ຂັ້ນນໍາ

ຈະນໍາເຂົ້າສູ່ບົດຮຽນໄດ້ແນວໃດ?ຈະທົບທວນສິ່ງທີ່ໄດ້ຮຽນມາຄືແນວໃດ? ຫຼື ບໍ່ດັ່ງນັ້ນກໍອາດຈະເຮັດກິດຈະກໍາໃດໜຶ່ງ ຫຼື ຫຼິ້ນເກມຕ່າງໆ.

- ຂັ້ນສອນ

ຈະມີຂັ້ນຕອນການສອນໂດຍລະອຽດແນວໃດ?ພະຍາຍາມນໍາໃຊ້ວິທີສອນແບບດາວ 5 ແຈເຊັ່ນ:

- ການສອນໂດຍການໃຊ້ກິດຈະກໍາ.
- ການສອນໂດຍການຕັ້ງຄໍາຖາມ.
- ການສອນໂດຍການສື່ການສອນ.
- ການສອນໂດຍການຈັດນັກຮຽນເປັນກຸ່ມ.
- ການສອນຕິດພັນກັບຊີວິດປະຈໍາວັນ.

- ຂັ້ນສະຫຼຸບ

ຈະສະຫຼຸບບົດຮຽນຢ່າງໃດ? ພະຍາຍາມໃຫ້ນັກຮຽນເປັນຜູ້ສະຫຼຸບເອງ ໂດຍແມ່ນຄູເປັນຜູ້ແນະນໍາຕື່ມ. ນອກຈາກນີ້ຄວນສະເໜີບັນຫາທີ່ຈະຮຽນໃນມື້ຕໍ່ໄປໃຫ້ນັກຮຽນຄິດ ແລະ ກຽມໄວ້ລ່ວງໜ້າດ້ວຍ.

- ຂັ້ນວັດຜົນ

ການສອນຂອງຄູນັ້ນຈໍາເປັນຕ້ອງມີການວັດຜົນເພາະຈະໄດ້ຮູ້ວ່າ ການສອນຂອງຄູປະສົບຜົນສໍາເລັດຕາມຈຸດປະສົງທີ່ວາງໄວ້ ຫຼື ບໍ່. ດັ່ງນັ້ນ ການກໍານົດວິທີວັດໄດ້ຮັບຜົນນັ້ນຕ້ອງຊັດເຈນຂໍ້ສໍາຄັນຄື ຈະຕ້ອງສໍາພັນກັບຈຸດປະສົງ ແລະ ກິດຈະກໍາ ການຮຽນ - ການສອນດ້ວຍ. ວິທີວັດໂດຍທົ່ວໄປມີຄື ການຊັກຖາມ, ການທົດສອບ , ການເຮັດບົດເຝິກຫັດ, ການສັງເກດ.

4.ສື່ການສອນ ( ອຸປະກອນ )

ສື່ການສອນທີ່ຈະນໍາມາໃຊ້ຕ້ອງຖືກກັບເນື້ອໃນວິຊາ ຫຼື ເນື້ອໃນບົດສອນຈະໃຊ້ສື່ຫຍັງກໍຕ້ອງກະກຽມໃຫ້ພ້ອມ ແລະ ທົດລອງໃຊ້ເສຍກ່ອນ ເພາະສື່ການສອນຈະຊ່ວຍໃຫ້ການສອນຂອງຄູເປັນໄປດ້ວຍດີ. ຄູຈໍາເປັນຕ້ອງຂຽນລົງໃນບົດສອນ ແລະ ລະບຸຊື່ຂອງສື່ໃຫ້ຊັດເຈນເຊັ່ນ: ຕາຕະລາງ, ແຜ່ນພູມ, ບັດຄໍາ, ຮູບພາບ, ໜັງສືພິມ ແລະ ອື່ນໆ.

5.ເວລາ

ການໃຊ້ເວລາສໍາລັບບົດສອນບົດໜຶ່ງຕ້ອງຂຶ້ນກັບເວລາສອນຂອງແຕ່ລະບົດເຊັ່ນ: ບົດໜຶ່ງອາດໃຊ້ເວລາ 45 ນາທີ ຫຼື ຫຼາຍກວ່ານັ້ນ. ຄູທີ່ສອນຄວນແບ່ງເວລາໃຫ້ເໝາະສົມໂດຍສະເພາະກິດຈະກໍາ ການຮຽນ - ການສອນ ມີ  4 ຂັ້ນຕອນຄື ຂັນນໍາ, ຂັ້ນສອນ, ຂັ້ນສະຫຼຸບ ແລະ ຂັ້ນວັດຜົນຈະໃຊ້ເວລາເທົ່າໃດ? ໃນເວລາສອນ.

6.ປະເມີນຜົນ

ສ່ວນຫຼາຍແມ່ນໃຊ້ການສັງເກດໂດຍການສັງເກດຂອງຄູເປັນຜູ້ປະຕິບັດເອງ ທີ່ອາໄສປະສາດສໍາຜັດຕາເບິ່ງ , ຫູຟັງ. ສິ່ງທີ່ຄູຕ້ອງສັງເກດຄື: ພຶດຕິກໍາ ແລະ ຜົນງານຂອງນັກຮຽນໄດ້ແກ່ຄວາມສົນໃຈໃນການຮຽນ, ຄວາມຮັບຜິດຊອບຕໍ່ວຽກງານທີ່ມອບໝາຍໃຫ້, ການຮ່ວມມືໃນການເຮັດວຽກເປັນກຸ່ມ, ການແຕ້ມຮູບ ແລະ ອື່ນໆ.

❖ ຮ່າງຂຽນບົດສອນ

**ຕົວຢ່າງ1**

ບົດສອນ

ວິຊາ: ພາສາລາວ ຊັ້ນປ3

ບົດທີ ............ ໃຊ້ເວລາສອນ ຊົ່ວໂມງ

ຫົວບົດ....... ວັນທີສອນ .............

1. ຈຸດປະສົງ

- ..............................
- ...................................

2. ເນື້ອໃນ

   -.................................................

3. ສື່ການສອນ

   -....................................................

4. ປະເມີນຜົນ

   ............................................................................................

5. ກິດຈະກຳການຮຽນ-ການສອນ

- ຂັ້ນນຳເຂົ້າສູ່ບົດຮຽນ
    - ................................................................................
    - .................................................................................

  ❖ ທວນຄືນບົດຮຽນເກົ່າ

  ❖ ລ້ຽວເຂົ້າສູ່ບົດຮຽນໃໝ່

- ຂັ້ນດຳເນີນການສອນ

  .........................................................................................

  ........................................................................................

- **ຂັ້ນສະຫຼູບ**

  ...............................................................................

- **ຂັ້ນວັດຜົນ**

  ........................................................................................

- **ມອບວຽກບ້ານ ແລະ ຕັກເຕືອນ**

  .....................................................................................

ວັນທີ...................................... ວັນທີ…........................

ຜູ້ອຳນວຍການໂຮງຮຽນ ຄູປະຈຳວິຊາ

**ຕົວຢ່າງ 2**

ບົດສອນ

ວິຊາ............................ ຊັ້ນ.......................

ບົດທີ................... ວັນທີ...................

ຫົວບົດ.................... ເວລາ.............................

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນ-ການສອນ | ອຸປະກອນ | ເວລາ | ປະເມີນຜົນ |
|---|---|---|---|---|---|
| | | ຂັ້ນນຳ.............................<br><br>ຂັ້ນສອນ.........................<br><br>ຂັ້ນສະຫຼຸບ........................<br><br>ຂັ້ນວັດຜົນ...................... | | | |

ວັນທີ....................................... ວັນທີ…........................
ຜູ້ອຳນວຍການໂຮງຮຽນ ຄູປະຈຳວິຊາ

**ຕົວຢ່າງ 3**

**ບົດສອນ**

ວິຊາ: ພາສາລາວ ຊັ້ນຮຽນ....................

ບົດທີ ...... ເວລາ ............ ນາທີ

ຫົວບົດ.........................

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນ-ການສອນ | | ເວລາ | ສື່ການສອນ | ປະເມີນຜົນ |
|---|---|---|---|---|---|---|
| | | ກິດຈະກຳຄູ | ກິດຈະກຳນັກຮຽນ | | | |
| | | • **ຂັ້ນນຳ:** | | | | |
| | | • **ຂັ້ນສອນ** | | | | |
| | | • **ຂັ້ນສະຫຼຸບ** | | | | |
| | | • **ຂັ້ນວັດຜົນ**<br>➢ **ຕັກເຕືອນ -ມອບວຽກບ້ານ** | | | | |

ວັນທີ....................................... ວັນທີ………………………

ຜູ້ອຳນວຍການໂຮງຮຽນ ຄູປະຈຳວິຊາ

ບົດສອນ

ວິຊາ: ພາສາລາວ ຊັ້ນປ3

ບົດທີ 58 (ຕໍ່) ໃຊ້ເວລາສອນ 1 ຊົ່ວໂມງ

ຫົວບົດ: ຊົມທຳມະຊາດຍາມແລງ ວັນທີສອນ .............

1.ຈຸດປະສົງ

- ໃຫ້ນັກຮຽນສາມາດຂຽນເລື່ອງກ່ຽວກັບຮູບ ແລະ ໃສ່ຊື່ເລື່ອງໄດ້ຢ່າງຖືກຕ້ອງ

2.ເນື້ອໃນ

- ເວົ້າເຖິງການຊົມທຳມະຊາດຍາມແລງພວກເຮົາຈະເຫັນສັດປ່າພາກັນກິນຫຍ້າຢູ່ທົ່ງ ແລະ ກິນນ້ຳຢູ່ໜອງໃກ້ຕີນພູ.

3.ສື່ການສອນ

- ຮູບພາບກ່ຽວກັບທິວທັດທຳມະຊາດ, ພູຜາປ່າດົງ, ທົ່ງນາ, ຕາເວັນໄກ້ຈະລັບຂອບຟ້າ ແລະ ອື່ນໆ.

4.ປະເມີນຜົນ

- ກວດການຂຽນເລື່ອງຕາມຮູບພາບ ແລະ ໃສ່ຊື່ເລື່ອງ

5.ກິດຈະກາການຮຽນ-ການສອນ

- ຂັ້ນນຳເຂົ້າສູ່ບົດຮຽນ

- ກວດກາຈຳນວນພົນ
- ກວດກາຄວາມເປັນລະບຽບຂອງຫ້ອງຮຽນ

❖ ທວນຄືນບົດຮຽນເກົ່າ

- ຄູຕັ້ງຄຳຖາມ:
  1. ເນື້ອໃນກາບກອນແຖວທີ1- 4 ເວົ້າເຖິງຫຍັງ?
- ນັກຮຽນຕອບ: ເວົ້າເຖິງຕາເວັນໃກ້ຈະລັບຂອບຟ້າພວກເຮົາພາກັນໄປທ່ຽວຫຼິ້ນ

- ຂັ້ນດຳເນີນການສອນ

- ຄູຕ້ອງແນະນຳໃຫ້ນັກຮຽນຢ່າງລະອຽດວ່າການຂຽນເລື່ອງຕາມຮູບພາບເປັນການຂຽນສິ່ງທີ່ເຫັນໃນພາບວ່າແມ່ນໃຜ? ເຮັດຫຍັງ? ມີຫຍັງແດ່? ມັນເປັນແນວໃດ?
- ຄູສົນທະນາກ່ຽວກັບຮູບບົດທີ58
- ຄູໃຫ້ນັກຮຽນຂຽນຕາມຄວາມເຂົ້າໃຈທີ່ເຫັນໃນຮູບພາບເປັນລາຍບຸກຄົນ
- ຄູແນະນຳໃຫ້ນັກຮຽນຂຽນຊື່ເລື່ອງ
- ຄູຕິດຕາມການຂຽນຂອງນັກຮຽນ
- ພາຍຫຼັງນັກຮຽນຂຽນແລ້ວຄູກວດຄືນ

- ຄູໃຫ້ນັກຮຽນອ່ານບົດທີ່ຂຽນໄດ້ດີໃຫ່ໝູ່ຟັງ
- ຄູຊົມເຊີຍຜູ້ທີ່ຂຽນໄດ້ດີ ແລະ ແນະນຳຜູ້ທີ່ຂຽນບໍ່ທັນໄດ້ດີ

- **ຂັ້ນສະຫຼູບ**

- ຄູສະຫຼູບຄືນກ່ຽວກັບຄວາມຖືກຕ້ອງຂອງການແຕ່ງເປັນຂໍ້ຄວາມທີ່ຕໍ່ເນື່ອງ ແລະ ການໃສ່ຊື່ເລື່ອງ

- **ຂັ້ນວັດຜົນ**

- ຄູຕັ້ງຄຳຖາມ:
  1. ບົດເລື່ອງມີຊື່ວ່າແນວໃດ?
- ນັກຮຽນຕອບ

- **ມອບວຽກບ້ານ ແລະ ຕັກເຕືອນ**

- ຄູໃຫ້ນັກຮຽນເອົາໄປຂຽນຢູ່ເຮືອນໃຜລາວ
- ຄູເກັບບົດມາກວດແລ້ວໃຫ້ຄະແນນ

# ບົດທີ 2
# ການສອນຂຽນປະເພດບົດພັນລະນາ

## 1. ການສອນຂຽນບົດພັນລະນາຄົນ

### 1.1 ຄວາມໝາຍ ແລະ ຄວາມສຳຄັນຂອງບົດພັນລະນາຄົນ

ບົດພັນລະນາຄົນແມ່ນບົດພັນລະນາປະເພດໜຶ່ງ ເຊິ່ງເລີ່ມຈາກການພັນລະນາຮູບຮ່າງ, ລັກສະນະ, ນິດໄສໃຈຄໍ, ຄວາມຮູ້ສຶກນຶກຄິດ ແລະ ການກະທຳ.ພາກສ່ວນດັ່ງກ່າວນີ້ມີການພົວພັນກັນຢ່າງສະນິດແໜ້ນເພາະວ່ານິດໄສໃຈຄໍ ແລະ ຄວາມຮູ້ສຶກນຶກຄິດສະແດງອອກໂດຍຮູບຮ່າງ ແລະ ການກະທຳ, ແຕ່ສ່ວນຫຼາຍຈະສະແດງອອກໂດຍຜ່ານການກະທຳເປັນຕົ້ນຕໍ. ການພັນລະນາຄົນປະກອບດ້ວຍ 3 ພາກສ່ວນ ຄື: ພັນລະນາຮູບຮ່າງພາຍນອກ, ພັນລະນານິດໄສໃຈຄໍ ແລະ ຄວາມຮູ້ສຶກ, ພັນລະນາການເຄື່ອນໄຫວ.

### 1.2 ຂອບເຂດເນື້ອໃນການສອນຂຽນບົດພັນລະນາຄົນ

- ຄວາມໝາຍ ແລະ ຄວາມສຳຄັນຂອງການຂຽນບົດພັນລະນາຄົນ
- ເນື້ອໃນການສອນຂຽນບົດພັນລະນາ
- ໂຄງຮ່າງການຂຽນບົດພັນລະນາ
- ບົດຕົວຢ່າງການພັນລະນາຄົນ

### 1.3 ເນື້ອໃນການສອນຂຽນບົດພັນລະນາຄົນ

**ກ. ການສອນຂຽນບົດພັນລະນາຄົນ**

ການສອນຂຽນບົດພັນລະນາຄົນແມ່ນການສອນທີ່ຊ່ວຍໃຫ້ນັກຮຽນສາມາດຂຽນໂດຍພັນລະນາເຖິງຮູບຮ່າງ ກິລິຍາທ່າທາງ, ການເຄື່ອນໄຫວໄປມາ, ຈຸດພິເສດ, ນິໄສໃຈຄໍ ແລະ ອື່ນໆຂອງບຸກຄົນທີ່ຈະພັນລະນາ. ໝາຍຄວາມວ່າໃນເວລາສອນບົດດັ່ງກ່າວຄູຄວນເນັ້ນໜັກໃຫ້ນັກຮຽນເອົາໃຈໃສ່ 3 ພາກສ່ວນຄື: ພັນລະນາຮູບຮ່າງພາຍນອກ, ພັນລະນານິດໄສໃຈຄໍ ແລະ ຄວາມຮູ້ສຶກ, ພັນລະນາການເຄື່ອນໄຫວ.

**ຂັ້ນຕອນໃນການສອນຂຽນປະເພດຕ່າງໆສ່ວນຫຼາຍຄູໄດ້ປະຕິບັດດັ່ງນີ້:**

- ສົນທະນາ: ຮູບຮ່າງ, ລັກສະນະ, ສີສັນ, ໂຄງຮ່າງຂອງການຂຽນເພື່ອໃຫ້ນັກຮຽນເກີດມີຄວາມຄິດສ້າງສັນ, ພັດທະນາທາງພາສາ ແລະ ດ້ານອື່ນໆ.
- ແນະນຳ: ການປະຕິບັດປະກອບກັບການຍົກຕົວຢ່າງເພື່ອຊ່ວຍໃຫ້ນັກຮຽນເຂົ້າໃຈຕໍ່ຫຼັກການໃນການຂຽນ ແລະ ປະຕິບັດກິດຈະກຳ
- ປະຕິບັດຕົວຈິງ: ການຂຽນ, ການພັນລະນາເພື່ອໃຫ້ເກີດພື້ນຖານທາງດ້ານການຂຽນເລື່ອງຕ່າງໆ
- ສະຫຼຸບ: ກ່ຽວກັບສິ່ງທີ່ໄດ້ປະຕິບັດມາ, ຈັດຜົນງານເຂົ້າມຸມຕ່າງໆ ຫຼື ໃຫ້ໂອກາດນັກຮຽນໄດ້ລາຍງານຜົນງານຂອງນັກຮຽນ.

ໃນການສອນຂຽນສາມາດແຊກຄວາມຮູ້ທີ່ໄດ້ຮຽນມາຈາກວິຊາອື່ນເຂົ້າມາປະກອບຕາມຄວາມເໝາະສົມເພື່ອໃຫ້ນັກຮຽນໄດ້ເຝິກນຳໃຊ້ຄວາມຮູ້ ແລະ ທັກສະເຫຼົ່ານັ້ນເຊັ່ນ: ພາຍຫຼັງທີ່ນັກຮຽນຂຽນສຳເລັດແລ້ວຄູອາດຈະໃຫ້ນັກຮຽນຂຶ້ນລາຍງານກ່ຽວກັບການຂຽນບົດປະເພດນັ້ນເປັນກຸ່ມ ຫຼື ເປັນບຸກຄົນໂດຍອີງຕາມກິດຈະກຳທີ່ຄູມອບໝາຍໃຫ້ຫຼັງຈາກນັ້ນຄູນຳເອົາຜົນງານຂອງນັກຮຽນມາໄວ້ມຸມພາສາລາວ ແລະ ແນະນຳໃຫ້ນັກຮຽນອ່ານ. ການປະຕິບັດເຊັ່ນນີ້:ກໍເພື່ອແລກປ່ຽນຄວາມຄິດເຫັນໃນດ້ານການນຳໃຊ້ຫຼັກການຂຽນ, ການໃຊ້ພາສາ, ສັບສຳນວນ, ຄຳປຽບທຽບເຂົ້າໃນການຂຽນບົດປະເພດຕ່າງໆ.

**ຂ. ໂຄງຮ່າງການພັນລະນາຄົນ**

**ພາກເປີດເລື່ອງ**

- ແນະນຳ: ຜູ້ນັ້ນຢູ່ໃສ? ອາຊີບຫຍັງ?

**ພາກເດີນເລື່ອງ**

- ພັນລະນາໂດຍທົ່ວໄປ: ອາຍຸເທົ່າໃດ ? ກ່າວເຖິງລັກສະນະ, ຈຸດພິເສດຂອງຄົນຜູ້ນັ້ນເຊັ່ນ: ສູງ, ຕ່ຳ, ພໍປານກາງ, ມີສຸຂະພາບແຂງແຮງ ແລະ ອື່ນໆ.

- ຮູບຊົງ, ຜົມ, ດັງ, ຕາ, ສົບ, ຄໍ້ວ, ຫູ, ເລົາຄີງ, ແຂນຂາ, ຜິວ, ສີໜ້າ, ການນຸ່ງຖື, ກິລິຍາ, ທ່າທີ, ການໄປມາ ແລະ ຈຸດອື່ນໆ.

**ພາກສະຫຼຸບເລື່ອງ**

- ສະແດງຄວາມຮູ້ສຶກຂອງຕົນຕໍ່ກັບຄົນຜູ້ນັ້ນ
- ບົດຮຽນທີ່ໄດ້ມາຈາກຄົນຜູ້ນັ້ນມີອັນໃດແດ່?



ແບບໂຄງຮ່າງບົດພັນລະນາຄົນ

ຫົວບົດ: ຈົ່ງພັນລະນາຮູບຊົງຂອງເພື່ອນຜູ້ໜຶ່ງທີ່ຢູ່ຫ້ອງດຽວກັນ

ກ. ເປີດຫົວເລື່ອງ

- ແນະນຳເພື່ອນຜູ້ນັ້ນ ( ຮຽນຫ້ອງດຽວກັນ) ຮຽນນຳກັນທຸກມື້ ດັ່ງອ້າຍນ້ອງເກີດຮ່ວມອຸທອນ

ຂ. ເດີນເລື່ອງ

- ພັນລະນາໂດຍທົ່ວໄປ, ອາຍຸເທົ່າໃດ? ໃຫຍ່ນ້ອຍປານໃດ? ( ກ່າວເຖິງລັກສະນະພິເສດຂອງຄົນຜູ້ນັ້ນ ເຊັ່ນ: ຄົນສູງໂຢກເຢກ, ຕ່ຳອໍ້ປໍ້າ ຫຼື ບໍ່ຕ່ຳບໍ່ສູງ, ພໍປານກາງ, ຮ່າງກາຍແຂງແຮງ...)
- ຮູບຊົງ, ຜົມ, ດັງ, ເລົາຄີງ, ແຂນຂາເປັນແນວໃດ?

( ກ່າວເຖິງແຕ່ຈຸດແຕກຕ່າງກັນຈາກໝູ່ຄົນອື່ນເຊັ່ນ: ຜິວໜັງດຳໝາກຫວ້າ, ແຂນຂາສ້ອຍ ແລະ ລີບ)

- ການນຸ່ງຖື ແບບເບົາບາງບໍາຍຸ່ມຍ່າມສະອາດດີ. ຕາມປົກກະຕິ ເມື່ອນັ່ງໃນຫ້ອງຮຽນລາວເຄີຍນຸ່ງໂສ້ງ, ເສື້ອສີໃດ?
- ການເວົ້າຈາທ່າທີ ການເຄື່ອນໄຫວໄປມາດ ກິລິຍາທ່າທາງ, ເມື່ອນັ່ງໃນຫ້ອງຮຽນ ແລະ ອອກຫຼິ້ນເຫັນລາວເປັນຄົນແນວໃດ? ໃບໜ້າຊື່ນບານ

ຄ. ສະຫຼຸບ

- ຮັກແພງເພື່ອນຫຼາຍ, ຖ້າຫ່າງເຫີນແມ່ນຄິດຮອດ, ຢາກໃກ້ຊິດເພື່ອນເລື້ອຍໆໄດ້ບົດຮຽນຫຍັງແດ່ນຳເພື່ອນ.

ກິດຈະກຳ

- ຄູເອົາຮູບພາບຫັດກາຍຍະບໍລິຫານມາໃຫ້ນັກຮຽນພັນລະນາຮ່າງກາຍເລົ່າຄືງຂອງຄົນຜູ້ນັ້ນ.
- ໃຫ້ນັກຮຽນພັນລະນາຄົນໃດຄົນໜຶ່ງໃນຫ້ອງຂອງຕົນ
- ໃຫ້ນັກຮຽນພັນລະນາຄົນອອກຈາກຫ້ອງຮຽນ( ໃຜ, ລັກສະນະ, ວຸດທິ, ວຽກງານ, ອຸປະນິດໄສສັງຄົມ ສັງລວມວ່າເປັນຄົນໜ້ານັບຖື ຫຼື ບໍ່ຢ່າງໃດ.

❖ **ບົດຕົວຢ່າງ ບົດພັນລະນາຄົນ" ປູ່ຂອງຂ້ອຍ "**

ປູ່ຂອງຂ້ອຍຊື່ຈັນໂທ. ປູ່ຈັນໂທເປັນພໍ່ຂອງພໍ່ຂ້ອຍ. ປີນີ້ປູ່ມີອາຍຸເຈັດສິບປີພໍດີ, ເພິ່ນເປັນຄົນກັບບ້ານຂອງພວກເຮົານີ້ເອງ.

ປູ່ຈັນໂທມີອາຍຸຫຼາຍແລ້ວ, ແຕ່ເນື້ອໜັງຂອງເພິ່ນບໍ່ທັນຮ່ຽວປານໃດເວລາເພິ່ນຍິ້ມ ແລະ ຫົວກໍ່ບໍ່ເຫັນຮອຍຮ່ຽວຕາມແກ້ມສອງຂ້າງ ຫຼື ຫາງຕາ, ແຂ້ວກໍຍັງແໜ້ນໜາດີບໍ່ທັນຫຼຸ່ອນອອກຈັກເຫຼັ້ມ, ຕາຍັງແຈ້ງ ແລະ ເຫັນຮຸ່ງດີ, ຫູສອງເບື້ອງຍັງຟັງໄດ້ດີປົກກະຕິ, ຕ່າງແຕ່ວ່າຜົມຂອງເພິ່ນແຊມເປັນສີຂາວດອກເລົາ. ເບິ່ງແລ້ວສຸຂະພາບຂອງເພິ່ນຍັງແຂງແຮງດີ. ເຖິງວ່າເພິ່ນຈະມີອາຍຸສູງກໍຕາມ ເພິ່ນຍັງເປັນຄົນມັກຊອກຮູ້ຮ່ຳຮຽນ ແລະ ມັກຊ່ວຍເຫຼືອຄົນອື່ນ. ປູ່ຈັນໂທເປັນຄົນໃຈດີ ດັ່ງນັ້ນ ເວລາມີຜູ້ມາຖາມເຖິງປະຫວັດຄວາມເປັນມາຂອງທ້ອງຖິ່ນ ແລະ ຮີດຄອງປະເພນີຊາວບ້ານຈຶ່ງຍົກໃຫ້ປູ່ຈັນໂທເປັນຜູ້ຮັບຜິດຊອບ.

ຂ້ອຍດີໃຈຫຼາຍທີ່ເຫັນສຸຂະພາບຂອງປູ່ຈັນໂທແຂງແຮງ. ປູ່ຈະເລົ່ານິທານສູ່ພວກຂ້ອຍຟັງເລື້ອຍໆ. ຂ້ອຍຮັກ ແລະ ຈະເບິ່ງແຍງເພິ່ນໃຫ້ດີທີ່ສຸດ, ຂໍໃຫ້ເພິ່ນຢູ່ນຳພວກເຮົາຢ່າງຍືນຍາວ.

## 2. ການສອນຂຽນບົດພັນລະນາສັດ

### 2.1 ຄວາມໝາຍຂອງບົດພັນລະນາສັດ

ບົດພັນລະນາສັດແມ່ນບົດພັນລະນາປະເພດໜຶ່ງເຊິ່ງເອົາສັດປະເພດໃດປະເພດໜຶ່ງຕາມຈຸດປະສົງມາເປັນເປົ້າໝາຍໃຫ້ແກ່ການພັນລະນາເຊັ່ນ: ຄວາຍໂຕໜຶ່ງ, ໝູໂຕໜຶ່ງ, ໄກ່ຜູ້ຕົວໜຶ່ງ, ແມວໂຕໜຶ່ງ...ເຫຼົ່ານີ້ເປັນຕົ້ນ.

### 2.2 ຂອບເຂດເນື້ອໃນການສອນຂຽນບົດພັນລະນາສັດ

- ຄວາມໝາຍຂອງບົດພັນລະນາສັດ
- ເນື້ອໃນການສອນຂຽນບົດພັນລະນາ
- ໂຄງຮ່າງການພັນລະນາ
- ບົດຕົວຢ່າງພັນລະນາສັດ
- ຂໍ້ແນະນຳກ່ຽວກັບການສອນຂຽນບົດພັນລະນາສັດ

### 3.3 ເນື້ອໃນການສອນຂຽນບົດພັນລະນາສັດ

#### 1. ການສອນຂຽນບົດພັນລະນາສັດ

ໃນເວລາສອນບົດດັ່ງກ່າວຄູອາດຈະເລືອກເອົາບາງກິດຈະກຳດັ່ງນີ້:

- ຄູເອົາຮູບພາບທີ່ຈະພັນລະນາຂຶ້ນມາສົນທະນານຳນັກຮຽນໂດຍອີງໃສ່ໂຄງຮ່າງຂອງການຂຽນບົດພັນລະນາໄປຕາມແຕ່ລະພາກສ່ວນພ້ອມທັງຍົກຕົວຢ່າງໄປພ້ອມໃຫ້ລະອຽດ.
- ຈັດນັກຮຽນເປັນກຸ່ມເພື່ອສົນທະນາກ່ຽວກັບຄວາມໝາຍ ຄວາມສຳຄັນ ແລະ ໂຄງຮ່າງການຂຽນບົດພັນລະນາ.
- ຖ້າມີເງື່ອນໄຂຄູອາດຈະນຳພານັກຮຽນໄປເບິ່ງສັດຕົວຈິງທີ່ຈະໃຫ້ນັກຮຽນພັນລະນາຍິ່ງເປັນການດີ.

- ຄູອ່ານບົດແບບຢ່າງໃຫ້ນັກຮຽນຟັງ
- ຄູເອົາຫົວບົດການຂຽນບົດພັນລະນາສັດໃຫ້ນັກຮຽນຂຽນເປັນກຸ່ມ
- ໃຫ້ແຕ່ລະກຸ່ມອ່ານບົດຂອງຕົນເອງແລ້ວປະກອບຄຳເຫັນໃສ່ບົດດັ່ງກ່າວ
- ຄູເອົາຫົວບົດໃຫ້ນັກຮຽນເຝິກຂຽນດ້ວຍຕົນເອງແລ້ວສົ່ງໃຫ້ຄູກວດໃຫ້ຄະແນນ

**2. ໂຄງຮ່າງບົດພັນລະນາ**

- **ພາກເປີດຫົວເລື່ອງ**
  - ແນະນຳກ່ຽວກັບສັດທີ່ຈະພັນລະນາ, ມັນຢູ່ໃສ? ຕົນໂຕຂອງມັນເປັນແນວໃດ?
  - ແຈ້ງເປົ້າໝາຍວ່າຈະພັນລະນາສັດປະເພດໃດ? ( ຈະພັນລະນາແມວໂຕໜຶ່ງ )
  - ແມວໂຕນີ້ໄດ້ມາຈາກໃສ? ໃຜເອົາໃຫ້?
- **ພາກເດີນເລື່ອງ**
  - ພັນລະນາໂດຍທົ່ວໄປ: ສັດໂຕນີ້ໃຫຍ່ ຫຼື ນ້ອຍແນວໃດ? ມີລັກສະນະພິເສດເຊິ່ງແຕກຕ່າງກັບສັດໂຕອື່ນໆທີ່ແມ່ນປະເພດດຽວກັນກັບມັນແນວໃດ?
  - ອະໄວຍະວະຕ່າງໆເຊັ່ນ: ຫົວ, ຫາງ, ຂົນ, ຕາ, ເລົາຄີງ...ເປັນແນວໃດ?
  - ຮູບຮ່າງ ແລະ ສີສັນຂອງສັດເປັນແນວໃດ?
  - ນິໄສໃຈຄໍ, ອາດຊີງ, ການໄປ, ການມາ, ການນອນ, ການດຳລົງຊີວິດ ແລະ ການຫາກິນຂອງມັນເປັນແນວໃດ?
- **ພາກສະຫຼຸບເລື່ອງ**
  - ເວົ້າຄຸນປະໂຫຍດ ແລະ ໂທດຂອງສັດທີ່ມີຕໍ່ຄົນເຮົາ
  - ສະແດງຄວາມຮູ້ສຶກຂອງຕົນຕໍ່ສັດ




ແບບຢ່າງໂຄງຮ່າງບົດພັນລະນາສັດ

ຫົວບົດ: ພວກນ້ອງຈົ່ງພັນລະນາໄກ່ຜູ້ໂຕໜຶ່ງໃນຝູງໄກ່ນັ້ນເບິ່ງ

ກ. ເປີດຫົວເລື່ອງ

- ແນະນຳໄກ່ຜູ້, ມັນຢືນຢູ່ກາງໝູ່ຕົນໂຕໃຫຍ່, ມີລັກສະນະຄືແນວໃດ?

ຂ. ເດີນເລື່ອງ

- ພັນລະນາໂດຍທົ່ວໄປ ໄກ່ຜູ້ໂອກໂຕນີ້ໃຫຍ່ ຫຼື ນ້ອຍແນວໃດທີ່ເປັນລັກສະນະພິເສດເຊິ່ງມັນແຕກຕ່າງກັບໄກ່ຜູ້ໂອກຕົວອື່ນ?

- ອະໄວຍະວະຕ່າງໆ ຫົວ, ຫອນ, ສີບ, ( ຮູບຮ່າງສີສັນ). ເລົ່າຄີງ, ປີກ, ຂົນ, ຫາງ, ຕີນ, ເດືອຍມັນເປັນແນວໃດ?

- ນິດໄສ ແລະ  ການເຄື່ອນໄຫວຂີງຂັງ, ອາດຊີງ, ມັນຂັນ, ມັນຕີບປີກ, ການຫາກິນຂອງມັນ.

ຄ. ສະຫຼຸບ

- ສະແດງຄວາມຮູ້ສືກຂອງຕົນຕໍ່ຄຸນປະໂຫຍດຂອງໄກ່ຜູ້ໂອກເປັນຕົ້ນແມ່ນໄກ່ຂັນຍາມຕອນຂ້ອນແຈ້ງເພື່ອປຸກໃຫ້ຄົນຕື່ນ, ໃຫ້ຮູ້ຈັກເວລາ ແລະ ຄວນເອົາໃຈໃສ່ລ້ຽງເກືອມັນຄືແນວໃດ?

**ບົດຕົວຢ່າງ ພັນລະນາ “ ແມວສີມົ່ນ ”**

ໃນເຮືອນຂອງຂ້ອຍມີແມວເຖິກສີມົ່ນໂຕໜຶ່ງ ເຊິ່ງຂ້ອຍຂໍເອົານຳປ້າມາລ້ຽງຕັ້ງແຕ່ຄາວມັນຫາກໍ່ປະນົມ. ແມວໂຕນີເປັນແມວທີ່ຄຳຮູ້ ແລະ ໜ້າຮັກ, ມັນມີຂົນເປັນສີຂາວເຫຼື້ອມຄືໄໝ ແລະ ຂົນເປັນສີຂີ້ເທົ່າປົນກັນຢ່າງລະອຽດອ່ອນເລີຍກາຍເປັນສີມົ່ນຄືກັບຜ້າຂົນສັດ. ຍ້ອນແນວນັ້ນຈິ່ງໃສ່ຊື່ຂອງແມວໂຕນີ້ວ່າແມວສີມົ່ນ.

ແມວສີມົ່ນໂຕນີ້ພື້ນທ້ອງຂອງມັນເປັນສີຂາວ ຖ້າຫາກເບິ່ງໄກໆສີມົ່ນຄືບໍ່ສະອາດ ເພາະເປັນສີມືດໆອາດໃດອາດໜຶ່ງ, ແຕ່ຄວາມຈິງແລ້ວຂົນຂອງມັນສະອາດເມື່ອເຮົາເອົາມືລູບເບິ່ງຈິ່ງຮູ້ວ່າມັນສະອາດຈົນມື່ນລືດໆຄືກັບເອົາມືລູບຜ້າໄໝຮູບຮ່າງຂອງແມວໂຕນີ້ກໍຄືກັບແມວທົ່ວໆໄປ ມັນບໍ່ມີຮີມສົບແຕ່ມັນມີດັງແດງ ງາມເປັນຕາໜ້າຮັກ, ຕາທັງຄູ່ຂອງມັນມົນມົ້ງກົ້ງ ແລະ ມີແກ້ວຕາໃສໆຄືກັບໝາກປັດຕ້ອງແສງຕາເວັນ, ຢູ່ກ້ອງຮູດັງ ແລະ ກ້ອງຄາງມີໜວດຫ່າງໆ ແລະ ແຂງໆ, ຮ່າງຄີງຂອງມັນຕຸ້ຍ, ເລັບຕີນຂອງມັນແຫຼມແຕ່ສະອາດດີ. ຍາມກາງເວັນແມວໂຕນີ້ມັກນອນ ແລະ ສົ່ງສຽງຫາຍໃຈດັງຫືດໆຫາດໆ ເມື່ອຮອດຍາມກາງຄືນມັນຊ້ຳພັດບໍ່ນອນ ເພາະວ່າມັນແມ່ນຍາມອອກຫາກິນຂອງມັນ. ແຕ່ລະມື້ຄໍ່າໆມາມັນກໍ່ຄ່ອຍຈອບຢ່ອງແຢັງຢ່າງໄປຕາມເງົາມືດ ເພື່ອອອກໄປຈອບຈັບໜູມາເປັນອາຫານ. ຍ້ອນສີຂອງແມວໂຕນີ້ມັນມືດໆຈິ່ງເຮັດໃຫ້ມັນຮັກສາໂຕບໍ່ໃຫ້ໜູເຫັນມັນກ່ອນ. ຕາມປົກກະຕິເມື່ອມັນຫີວມັນມັກຈະຮ້ອງບອກເປັນສຽງຕິດໆກັນວ່າແມວ! ແມວ ! ເພື່ອເປັນການບອກໃຫ້ເຈົ້າຂອງເອົາອາຫານມາໃຫ້ມັນກິນ. ເວລາເຈົ້າຂອງກິນເຂົ້າ ບາງຄັ້ງມັນກໍ່ນັ່ງເບິ່ງ, ບາງຄັ້ງກໍ່ນອນເບິ່ງ. ມັນບໍ່ມາວິນວາຍ ຫຼືປີນຂຶ້ນພາເຂົ້າ, ບໍ່ລັກກິນຊີ້ນ, ປາ ຄືກັບແມວໂຕອື່ນໆ. ຍາມມັນກິນກໍ່ກິນແບບງຽບໆ. ແຕ່ລະມື້ຂ້ອຍມັກຈະເອົາເຂົ້າປົນກັບປາທູ, ປົນກັບຊີ້ນໃຫ້ມັນກິນເປັນສ່ວນຫຼາຍ ຫຼື ມີບາງມື້ກໍ່ເອົາກະດູກທີ່ຍັງມີຊີ້ນຕິດໃຫ້ມັນແທ້ນກິນ. ຫຼັງຈາກກິນອີ່ມແລ້ວມັນກໍ່ເອົາຕີນທັງສອງເບື້ອງປ່ຽນກັນລູບໆ ຖູໆປາກ ແລະ ໜວດໃຫ້ສະອາດຢູ່ສະເໝີ.

ແມວສີມົ່ນຂອງຂ້ອຍມີທ່າທາງອາດຫານ ແລະ ໃຈດີ, ຖ້າມີໜູມາກັດເຄື່ອງ ຫຼື ກັດຖົງເຂົ້າຢູ່ບ່ອນໃດມັນກໍ່ອອກໄປຈອບເບິ່ງ ເມື່ອມີໂອກາດ ມັນກໍຄຸບເອົາໜູຈົນໄດ້. ສະນັ້ນ, ໃນເຮືອນ ແລະ ເລົ້າເຂົ້າຂອງພວກຂ້ອຍຈິ່ງບໍ່ມີໜູມາກັດສິ່ງຂອງຕ່າງໆ, ຍ້ອນແນວນັ້ນຄົນໃນເຮືອນຂອງຂອ້ຍກໍຄືເຮືອນໃກ້ຄຽງໃຜໆກໍຮັກແພງແມວສີມົ່ນທີ່ສະຫຼາດ ແລະ ໜ້າຮັກໂຕນີ້ແທ້.

ຕົວຢ່າງ: ຝູງເປັດເທດນ້ອຍ

ຝູງເປັດເທດນ້ອຍຫາກໍ່ແຕກຈາກປົ້ມາໄດ້ສາມມື້ແລ້ວ, ມັນໃຫຍ່ກວ່າໄຂ່ໜ້ອຍໜຶ່ງທໍ່ນັ້ນ.

ພວກມັນມີຂົນສີເຫຼືອງອ່ອນເຫຼື້ອມເປັນຕາຮັກຄືສີໄໝອ່ອນທີ່ຫາກໍ່ສາວອອກມາຈາກຝັກຫຼອກ. ອັນທີ່ງາມທີ່ສຸດແມ່ນຕາທັງຄູ ແລະ ສົບຂອງມັນ. ໜ່ວຍຕາທໍ່ເມັດໝາກປັດ, ດຳເຫຼື້ອມສີນິນ. ຍາມໃດກໍ່ເຫຼື້ອມຍິບຍັບເຫຼືອດໄປເຫຼືອດມາຄືຈັ່ງມີນ້ຳ, ເຮັດໃຫ້ການເຄື່ອນໄຫວຂອງເຈ້ຍຕາເປັນສີມັວໆ. ສົບນ້ອຍໆອັນໜຶ່ງສີຟ້າອ່ອນທໍ່ນີ້ວມືເດັກນ້ອຍຫາກໍ່ເກີດໃໝ່ໆເຊິ່ງມີຂໍ້ສັ້ນໆຢູ່ທາງປາຍ. ຫົວນ້ອຍໆສີເຫຼືອງອ່ອນ, ຕີນທັງຄູ່ແດງສີຊົມພູຍ່າງເຕາະແຕະໄປມາເປັນຕາຮັກ. ພວກມັນຮ້ອງຈິບໆຄ່ອຍໆແລ່ນອ້ອມຕີນແມ່.

ອີ່ນາຍແມ່ເປັດເທດເຊີ້ຊ້າຄືຄົນເສຍຈິດ, ຍາມໃດກໍ່ຄືຈັ່ງເມົາມົວຄິດເຖິງເລື່ອງໃດເລື່ອໜຶ່ງຢູ່ຊື່ໃດພຸ້ນ. ຄອນໆລາວຮ້ອງຮາບ! ຮາບ! ແຫບສົບໃສ່ກາງໜູ່ລູກ ແລະ ແກວ່ງຫາງດີກໆວິທີບົວລະບັດລູກຂອງນາງເກີນວ່າຈ້າ.

**3. ຂໍ້ແນະນຳກ່ຽວກັບການສອນບົດພັນລະນາສັດ**

ຢາກຂຽນບົດພັນລະນາສັດໃຫ້ໄດ້ດີ, ກ່ອນອື່ນໝົດເຮົາຕ້ອງພັນລະນາລວມໆ ແລ້ວຈິ່ງພັນລະນາເຖິງຈຸດປີກຍ່ອຍແຕ່ກໍບໍ່ຈຳເປັນຕ້ອງພັນລະນາຕາມລຳດັບແຕ່ຫົວເຖິງຕີນສະເໝີໄປ. ເຮົາອາດຈະເອົາໃຈໃສ່ແຕ່ສິ່ງທີ່ຕ້ອງການເທົ່ານັ້ນ, ສ່ວນໃດທີ່ເດັ່ນກວ່າໝູ່ຕ້ອງພັນລະນາກ່ອນ ແລະ ພັນລະນາໃຫ້ລະອຽດ, ສ່ວນໃດທີ່ບໍ່ເປັນພິເສດກໍ່ອາດຈະປະປ່ອຍໄປກໍ່ໄດ້.

- ສັງເກດຮູບຮ່າງລັກສະນະຂອງສັດໂຕນັ້ນໃຫ້ຄັກແນ່
- ພັນລະນາຮູບຂອງສັດຈິ່ງໄປພັນລະນາສິ່ງທີ່ປີກຍ່ອຍ
- ຕ້ອງປະຕິບັດຕາມຂັ້ນຕອນຂອງການແຕ່ງບົດພັນລະນາ ຄືຕ້ອເລີ່ມຈາກເປີດຫົວເລື່ອງ, ເດີນເລື່ອງ ແລະ ສະຫຼູບເລື່ອງ.
- ຄວນມີສິລະປະໃນການໃຊ້ສັບ ແລະ ສຳນວນ
- ຄວນພັນລະນານິໄສໃຈຄໍຂອງສັດໃຫ້ຖືກຕ້ອງຕາມຄວາມເປັນຈິງຂອງມັນ

- **ຕົວຢ່າງ:** ການໃຊ້ສັບສຳນວນເພື່ອພັນລະນາ ແລະ ປຽບທຽບ
    - ໂຕມັນໃຫຍ່ກວ່າ, ນ້ອຍກວ່າເສືອ, ເຫງັນ, ແລະ ອື່ໆ ເທົ່າໃດ
    - ຂົນຂອງມັນເປັນສີມົ່ນ ແລະ ເຫຼືອມຄືສີໄໝນ້ຳເງິນ
    - ໜ່ວຍຕາທັງດຳເຫຼືອມ
    - ເລື່ອນໄປເລື່ອນມາຄືຈັ່ງມີນ້ຳ
    - ເວລາມັນຮ້ອງມັກຮ້ອງວ່າ ແມວ! ແມວ !

## 3. ການສອນຂຽນບົດພັນລະນາວັດຖຸ

### 3.1 ຄວາມໝາຍຂອງບົດພັນລະນາວັດຖຸ

ບົດພັນລະນາວັດຖຸແມ່ນບົດພັນລະນາປະເພດໜຶ່ງ ເຊິ່ງເອົາຊື່ວັດຖຸປະເພດໃດປະເພດໜຶ່ງຕາມຈຸດປະສົງມາເປັນຫົວຂໍ້ພັນລະນາເຊັ່ນ: ປາກກາ, ສໍດຳ, ໂຕະ, ຕັ່ງ, ຫ້ອງຮຽນ, ເຮືອນ..........

### 3.2 ຂອບເຂດເນື້ອໃນການສອນຂຽນບົດພັນລະນາວັດຖຸ

- ຄວາມໝາຍຂອງບົດພັນລະນາວັດຖຸ
- ເນື້ອໃນການສອນຂຽນບົດພັນລະນາວັດຖຸ
- ໂຄງຮ່າງການພັນລະນາວັດຖຸ

### 3.3 ເນື້ອໃນໃນການສອນຂຽນບົດພັນລະນາວັດຖຸ

**1. ການສອນຂຽນບົດພັນລະນາວັດຖຸ**

ໃນເວລາສອນບົດດັ່ງກ່າວຄູອາດຈະເລືອກເອົາບາງກິດຈະກຳດັ່ງນີ້

- ຄູເອົາວັດຖຸ ຫຼື ນຳພານັກຮຽນອອກໄປສັງເກດເບິ່ງວັດຖຸທີ່ຈະໃຫ້ນັກຮຽນພັນລະນາ ເພື່ອໃຫ້ນັກຮຽນໄດ້ສັງເກດພາກສ່ວນຈ່າງໆຂອງວັດຖຸ
- ຄູສົນທະນານຳນັກຮຽນໂດຍອີງໃສ່ໂຄງຮ່າງຂອງການຂຽນບົດພັນລະນາໄປຕາມແຕ່ລະພາກສ່ວນພ້ອມທັງຍົກຕົວຢ່າງໄປພ້ອມໃຫ້ລະອຽດ

- ຈັດນັກຮຽນເປັນກຸ່ມເພື່ອສົນທະນາກ່ຽວກັບຄວາມໝາຍຄວາມສຳຄັນ ແລະ ໂຄງຮ່າງການຂຽນບົດພັນລະນາວັດຖຸ
- ຄູເອົາຫົວບົດການຂຽນບົດພັນລະນາວັດຖຸໃຫ້ນັກຮຽນຂຽນເປັນກຸ່ມ
- ໃຫ້ແຕ່ລະກຸ່ມອ່ານບົດຂອງກຸ່ມຕົນເອງ ແລ້ວປະກອບຄຳຄິດເຫັນໃສ່ບົດດັ່ງກ່າວ
- ຄູເອົາຫົວບົດໃຫ້ນັກຮຽນເຝິກຂຽນດ້ວຍຕົນເອງແລ້ວສົ່ງໃຫ້ຄູກວດໃຫ້ຄະແນນ

**2. ໂຄງຮ່າງການຂຽນບົດພັນລະນາວັດຖຸ**

**ກ. ພາກເປີດເລື່ອງ**

- ບອກຊື່ວັດຖຸ, ໄດ້ມາຈາກໃສ, ໃຜເອົາໃຫ້

**ຂ. ພາກເດີນເລື່ອງ**

- ຮູບຮ່າງລັກສະນະ, ສີສັນ, ຂະໜາດ ແລະ ສ່ວນປະກອບອື່ນໆຂອງວັດຖຸທີ່ເຮົາຈະພັນລະນາ

**ຄ. ພາກສະຫຼຸບ**

- ເວົ້າເຖິງຄຸນປະໂຫຍດ, ການບົວລະບັດສິ່ງດັ່ງກ່າວ






ແບບໂຄງຮ່າງບົດພັນລະນາວັດຖຸສິ່ງຂອງ

ຫົວບົດ( ພັນລະນາໝອກຫົວໜຶ່ງ )

ກ. ເປີດຫົວເລື່ອງ

- ແນະນຳໝອກຫົວນັ້ນ ( ຊື້ມາແຕ່ໃສ, ເວລາໃດ)

ຂ. ເນື້ອເລື່ອງ

- ກ່າວທົ່ວໄປ, ໝອກແພ, ໝອກໃບລານ ຫຼື ວ່າໝອກຊະນິດໃດ? ໝອກແຫງບ...ສີຫຍັງ?
- ພັນລະນາພາກສ່ວນຕ່າງໆພາຍນອກເຊັ່ນ ຕົວໝອກ, ຈອມ, ແຂບ, ສາຍ...

( ຈົ່ງເອົາໃຈໃສ່ກ່າວເຖິງບັນດາຈຸດແຕກຕ່າງກັບໝອກຫົວອື່ນແນວໃດ).

ຄ. ສະຫຼຸບ

- ຄວາມນຶກຄິດ, ຄຸນປະໂຫຍດຂອງມັນມີຫຍັງແດ່?ມີວິທີຖະໜອມຮັກສາເພື່ອໃຊ້ມັນໃຫ້ໄດ້ຍາວນານ

ກິດຈະກຳ:

- ໃຫ້ນັກຮຽນສ້າງໂຄງຮ່າງພັນລະນາປຶ້ມຫົວໃໝ່ແລ້ວອອກມາລາຍງານຕໍ່ໜ້າໝູ່
- ພັນລະນາກະດານດຳທີ່ຢູ່ໃນຫ້ອງຮຽນ( ຂຽນໃສ່ປຶ້ມແລ້ວຄູກວດ)
- ຄູດັດແປງການໃຊ້ສັບ, ສຳນວນການເວົ້າ

- ຄູນຳເອົາຮູບພາບໃດໜຶ່ງມາໃຫ້ນັກຮຽນພັນລະນາປາກເປົ່າ.

ຕົວຢ່າງ: ສໍດຳເສັນໃໝ່

ເຂົ້າພາກຮຽນໃໝ່ໄດ້ຫຼາຍວັນແລ້ວ, ແຕ່ຍັງບໍ່ທັນມີສໍດຳ. ມີຄູໃຫ້ພວກນ້ອງຫັດແຕ້ມ, ນ້ອງບໍ່ມີສໍດຳຈັ່ງແມ່ນໃຈບໍ່ດີ. ມື້ລຸນມາແມ່ຂອງນ້ອງໄຕະຫຼາດ, ນ້ອງໄດ້ສັ່ງເພິ່ນຊື້ສໍດຳເສັ້ນໜຶ່ງ.

ຕອນທ່ຽງມືນັ້ນ, ນ້ອງກໍມີສໍດຳເສັ້ນໜຶ່ງ. ລວງຍາວປະມານຄືບໜຶ່ງ, ຮູບຮ່າງຂອງມັນນ້ອຍກວ່າລຳທຽນຈັກໜ້ອຍ. ສົ້ນໜຶ່ງມີຢາງລຶບສີແດງ ຢູ່ໃນຂອບອາລູມີນີໂອມສີເງິນ, ສີມັນຂຽວເຂັ້ມ, ເຄິ່ງກາງມີຕົວເລກ 777 ແລະ ຕົວໜັງສືສີເຫຼືອງເຫຼືອມ, ຫຼຽວເບິ່ງຈັ່ງແມ່ນງາມຕາແທ້. ນ້ອງປິ່ນສົ້ນໜຶ່ງມາເບິ່ງກໍ່ເຫັນໄສ້ດຳປີ້ໆ ຢູ່ໃນໃຈກາງຂອງສໍ. ນ້ອງແຍງໄປແຍງມາຫຼາຍເທື່ອ, ກິ່ນຫອມຂອງໄມ້ກໍ່ຍັງບໍ່ທັນຈາງຫາຍ. ນ້ອງເອົາມີດຄົມມາແຫຼມສໍ, ມືໜຶ່ງຈັບສໍດຳ, ມືໜຶ່ງຈັບມີດແລ້ວຄ່ອຍໆເນັ້ນໃສ່ໄມ້, ຄົມມີດແຫຼມເຂົ້າຈ້າວໆ, ກີບໄມ້ສະເດັນລິງ, ໄສ້ສໍດຳພົ້ນອອກ, ກິ່ນຫອມກຸ້ມຂຶ້ນສູ່ດັງ, ນ້ອງເຫຼົາໃຫ້ມັນກ້ຽງ ແລະ ແຫຼມດີ.

ແຕ່ນັ້ນມາ, ສໍດຳກໍ່ກັບກາຍເປັນເພື່ອນສະໜິດສະໜົມຂອງຂ້ອຍ. ເວລາຂີດຂຽນ ຫຼື ແຕ້ມ, ນ້ອງບໍ່ກັງວົນລໍຖ້າຢືມນຳໝູ່ອີກ. ສິ່ງທີ່ສະດວກທີ່ສຸດແມ່ນເວລາແຕ້ມ ຫຼື ຂຽນຖ້າເປື້ອນ ຫຼື ຜິດກໍ່ມີຢາງລຶບ, ນ້ອງກໍລຶບເລີຍ.

ຕົວຢ່າງ: ກະດານດຳ

ເຂົ້າພາກຮຽນໃໝ່, ຄະນະຮັບຜິດຊອບໂຮງຮຽນໄດ້ມອບກະດານດຳໃຫ້ຫ້ອງຂອງນ້ອງແຜ່ນໜຶ່ງງາມທີ່ສຸດ.ມີທຳອິດທີ່ໄດ້ຮັບກະດານໃໝ່, ຜູ້ໃດກໍດີໃຈ ແລະ ຫ້າວຫັນ, ນັກຮຽນທັງສອງຫ້ອງຫຸ້ມເຂົ້າມາເບິ່ງ. ເພື່ອນຂອງນ້ອງບາງຄົນຕວງວ່າລວງກວ້າງຂອງກະດານຍາວເຈັດຄືບ, ລວງຍາວປະມານສິບຄືບ. ມີບາງຄົນເວົ້າລື່ນກວ່ານັ້ນອີກ. ພວກນ້ອງຖຽງກັນໄປຖຽງກັນມາດ ຍັງບໍ່ທັນຮູ້ວ່າໃຜຖືກໃຜຜິດ, ບັງເອີນຄູປ່າງເຂົ້າມາແລ້ວບອກວ່າ " ລວງກວ້າງແທກໄດ້ໜຶ່ງເມັດ, ລວງຍາວແທກໄດ້ໜຶ່ງເມັດເຄິ່ງພຸ້ນໃດ່ພວກນ້ອງ "ເມື່ອໄດ້ຍິນຄູເວົ້າຈັ່ງຊັ້ນ, ການຖຽງກັນຈຶ່ງເຊົາລົງ. ພວກນ້ອງແມ່ຍິງທີ່ຢືນຢູ່ຂ້າງນັ້ນ, ແນມເບິ່ງໜ້າກັນແລ້ວຫົວຢອກເຢີ້ຍກັນຄືກາ.

ນ້ອງເມົາແຕ່ຢືນເບິ່ງກະດານ, ມັນເຫຼື້ອມຍິບຍັບ, ຫຼຽວເບິ່ງແຕ່ໄກຄືແຜ່ນກຳມະຍີ່ດຳ, ຊ່າງໄມ້ໄດ້ໃຊ້ເວລາຫຼາຍເພື່ອໄສໄມ້ໃຫ້ມັນກ້ຽງໝື່ນດີ. ເທິງກະດານດຳມີຕະປູໃຫຍ່ສອງດອກ, ຢູ່ລຸ່ມມີຕະປູໃຫຍ່ດອກໜຶ່ງເພື່ອຕອກກະດານຕິດໃສ່ຝາໃຫ້ແໜ້ນ. ແຈກະດານເບື້ອງຂວາມີບ່ອນໃສ່ສໍຂາວ, ຈັ່ງແມ່ນສະດວກແທ້ ກະດານຫ້ອງນ້ອງເຮັດດ້ວຍໄມ້ສີ່ແແຜ່ນຕໍ່ເຂົ້າກັນແຕ່ຊ່າງຜູ້ມີສີມືດີ ໄດ້ທາສີໃຫ້ມັນເຫຼືອມຍິບໆ. ຖ້າໃຜຫາກສັງເກດເບິ່ງຄັນແນ່ແລ້ວຈຶ່ງຈະເຫັນຮອຍແປ້ນຕໍ່ກັນ.

ໂອ! ເປັນຕາຮັກແທ້, ເພາະວ່າແຕ່ລະມື້ຄູໄດ້ຂຽນບົດຮຽນໃສ່ກະດານເພື່ອສິດສອນພວກນ້ອງ. ຍ້ອນກະດານແຜ່ນນີ້, ພວກນ້ອງໄດ້ຮໍ່າຮຽນກ້າວໜ້າ. ທຸກມື້ພວກນ້ອງໄດ້ແບ່ງປັນໜ້າທີ່ກັນເຊັດຖູກະດານ. ຍ້ອນນໍ້າໃຈຂະຫຍັນໝັ່ນພຽນ ແລະ ຮັກສາຂອງສ່ວນລວມ, ກະດານໃນຫ້ອງຂອງພວກນ້ອງຍາມໃດກໍ່ໃໝ່ຢູ່ສະເໝີ.

# ບົດທີ2 ( ຕໍ່ )

# ການສອນຂຽນປະເພດບົດພັນລະນາ

## 4.ການສອນຂຽນບົດພັນລະນາພາບ

ພັນລະນາພາບ ແມ່ນການກ່າວໃຫ້ເຫັນທັດສະນີຍະພາບ ແລະ ທັງປະກົດການອັນໃດອັນໜຶ່ງ ເຊິ່ງມັນມີການພົວພັນກັບການເຄື່ອນໄຫວຂອງມະນຸດ. ເວົ້າລວມແລ້ວ, ການພັນລະນາພາບເປັນສິ່ງສຳຄັນອັນໜຶ່ງໃນການຂະຫຍາຍເນື້ອໃນຂອງບົດພັນລະນາ, ດ້ວຍເຫດວ່າມັນຈະຊ່ວຍຍົກຄວາມໝາຍຂອງບົດແຕ່ງ, ເພື່ອດຶງດູດແນວຄິດຈິດໃຈຂອງມະນຸດໃຫ້ສູງຂຶ້ນ.

ວິທີພັນລະນາພາບມີຄືດັ່ງນີ້:

- ກ່ອນພັນລະນາພາບຕ້ອງກຳນົດເນື້ອໃນໃຈຄວາມ ແລະ ຄວາມຮູ້ສຶກຂອງບົດເຊັ່ນ ພາບນັ້ນມ່ວນ ຫຼື ໂສກເສົ້າມັນມີການເຄື່ອນໄຫວ ຫຼື ສະຫງັດ, ເວລາແຕ່ງຕ້ອງໃຊ້ຮູບພາບໃຫ້ເໝາະສົມກັບຄວາມຮູ້ສຶກລວມ. ຕ້ອງແຕ່ງພາບໃຫ້ຖືກຕາມກະລະ, ຕາມລະດູການເພາະຮູບພາບມີການປ່ຽນແປງຕາມກະລະ ແລະ ລະດູການ ເຊັ່ນ: ຍາມຝົນ, ຍາມແດດ, ຍາມເຊົ້າ, ຍາມແລງ...

ຕົວຢ່າງ: ພາບຍາມແລງ, ຕາເວັນພວມຊິຕົກ, ແຕ່ນັກປະພັນສອງຄົນມີວິທີພັນລະນາແຕກຕ່າງກັນດັ່ງນີ້:

" ຄ້າຍແລງລົງຄ້ອຍໆ, ຄວາມເຢັນຜ່ານເຂົ້າມາຢ່າງຊ້າໆ. ດວງຕາເວັ້ນພວມຊິຕົກ, ແສງແດດຍັງຄ້າງໄວ້ນັ້ນສ່ອງລັດສະໝີໂຮຍຮວາຍສູ່ຍອດຫຍ້າອ່ອນ ເທິງເນີນພູ, ສາຍລົມເຢັນຍາມແລງພັດວີ່ໆ. ດວງເດືອນຮູບກ່ຽວຄ່ອຍໆເຄື່ອນລັບລີ້ບັງໜູ່ເມກຂາວສີເງິນທີ່ເລື່ອນລອຍຄືຍັງໜ້າອ້າຍບໍ່ທັນກ້າໂຜ່ໜ້າອອກ ".

" ດວງຕາເວັນເໝືອນຖືກສາຍພູທາງທິດຕາເວັ້ນຕົກມ້າວຈ່ອງລົງເຊື່ອງໄວ້ໃນຟາກພູ. ເງົາມືດໄດ້ປົກຄຸມກວາດໄປຢ່າງໄວວາ ".

ເຫັນວ່າຜູ້ປະພັນທີໜຶ່ງ ພັນລະນາເວລາຜ່ານໄປຊ້າໆ. ຜູ້ທີສອງພັນລະນາຢ່າງໄວວາ. ເປັນຫຍັງຈຶ່ງເປັນຈັ່ງຊັ້ນ? ເນື່ອງຈາກວ່າຜູ້ປະພັນທີ່ສອງນັ້ນໄດ້ສອດຄວາມຮູ້ສຶກຂອງຕົນເຂົ້າໃນການພັນລະນາ. ວິທີພັນລະນາຂອງຜູ້ທີໜຶ່ງແມ່ນພັນລະນາຕາມທັດສະນາການຂອງບຸກຄົນທີ່ມີອາລົມເບີກບານ, ສ່ວງອົກ, ສ່ວງໃຈໃນເມື່ອເຮັດວຽກງານສຳເລັດໃນມື້ໜຶ່ງແລ້ວ. ວິທີພັນລະນາຜູ້ທີສອງແມ່ນພັນລະນາຕາມທັດສະນາການ ແລະ ຄວາມຮູ້ສຶກຂອງບຸກຄົນຜູ້ເຮັດວຽກທີ່ຍັງຄ້າງຄາ. ໃນວິທີພັນລະນາທັງສອງຂ້າງເທິງນັ້ນພວກເຮົາເຫັນວ່າມັນມີຊີວິດຊີວາ ແລະ ເໝາະສົມກັບເນື້ອໃນໃຈຄວາມຂອງແຕ່ລະບົດ, ແຕ່ລະກໍລະນີ.

- ຕ້ອງໃຊ້ຮູບພາບຕົວຈິງບົດພັນລະນາຈະດູດດຶງໃຈຄົນໄດ້ຍ້ອນວ່າເນື້ອໃນຂອງບົດໄດ້ຜ່ານຮູບພາບຕົວທີ່ເປັນຈິງ ແລະ ມີຊີວິດຊີວາ.ໃນບົດແຕ່ງພັນລະນາພາບນັ້ນຜູ້ແຕ່ງກໍ່ຕ້ອງຮູ້ຈັກໃຊ້ຄຳສັບທີ່ສາມາດສະແດງອອກດ້ວຍຮູບ, ສຽງຮູ້ຈັກປຽບທຽບ ແລະ ປ່ຽນແປງພາບຄື: ສັດ, ສິ່ງຂອງ...ມີຊີວິດຄືກັນ.

- ຖ້າຢາກຮຽນຮູ້ຄືດັ່ງກ່າວມານັ້ນນັກຮຽນຕ້ອງດຸໝັ່ນອ່ານປຶ້ມ, ຟັງຜູ້ອື່ນເລົ່າເລື່ອງ ແລະ ຊອກຮູ້ນຳຊີວິດຕົວຈິງອີກດ້ວຍ.

ການພັນລະນາພາບລວມມີ 3 ປະເພດຄື:

1. ການພັນລະນາທັດສະນີຍະພາບ

- ພາບທຳມະຊາດດອກໄມ້, ພູຜາປ່າດົງ, ແມ່ນ້ຳລຳເຊ...
- ທັດສະນີຍະພາບໂດຍຄົນສ້າງຂຶ້ນ, ໂຮງຮຽນ, ຮ້ານຄ້າ, ຕະຫຼາດ...

2. ການພັນລະນາພາບຊີວິດປະຈຳວັນ

- ການກ່ຽວເຂົ້າໃນຕອນໜຶ່ງ, ການອອກແຮງງານເພີ່ມພູນລວມໝູ່, ການຊຸມນຸມມິດຕຶງ...

3. ການພັນລະນາປະກົດການທຳມະຊາດ

- ຮ່າຝົນ, ລົມພະຍຸ, ຕາເວັ້ນຂຶ້ນ, ລະດູ, ລະດູໜາວ, ໃນຕອນເຊົ້າມື້ໜຶ່ງ, ຍາມຄ່ຳ.

ລະດັບຄາດໝາຍທົ່ວໄປແມ່ນ: ເຖິງວ່າຈະພັນລະນາປະເພດໃດກໍຕາມ, ການເຄື່ອນໄຫວຂອງຄົນກັບທັດສະນີຍະພາບຈະແຍກຈາກກັນບໍ່ໄດ້ເປັນອັນຂາດ. ຖ້າຍາກແຍກອອກຈາກກັນ, ພາບນັ້ນອາດຈະຂາດຄວາມມີຊີວິດຊີວາເຊັ່ນ: ພັນລະນາສວນດອກໄມ້ອັນສວຍງາມແຕ່ຂາດຮ່ອງຮອຍຄົນ, ພາບທຳມະຊາດນັ້ນກໍ່ບໍ່ມີໃຜຊົມ. ພັນລະນາໂຮງຮຽນແຫ່ງໜຶ່ງແຕ່ຂາດການເຄື່ອນໄຫວຂອງນັກຮຽນ, ທັດສະນີຍະພາບຂອງໂຮງຮຽນນັ້ນຈະບໍ່ມີຊີວິດຊີວາເລີຍ. ເຖິງວ່າຈະພັນລະນາປະກົດການທຳມະຊາດກໍ່ຈິງ, ຫາກຂາດການກ່າວເຖິງຄົນແມ່ນບໍ່ໄດ້. ກົງກັນຂ້າມ, ເມື່ອພັນລະນາການໂຮມຕະຫຼາດນອກຈາກເວົ້າເຖິງຜູ້ຊື້ຜູ້ຂາຍແລ້ວ ຍັງຕ້ອງການກ່າວເຖິງສິ່ງແວດລ້ອມອ້ອມແອ້ມຄື: ກົກໄມ້, ເດີ່ນ, ຮ້ານຂາຍເຄື່ອງ, ອາກາດ...ນັ້ນຕື່ມອີກ.

ການພັນລະນາແຕ່ລະປະເພດມີຈຸດປະສົງ ແລະ ຄາດໝາຍສຳຄັນແຕກຕ່າງກັນລະລະອຽດດັ່ງນີ້:

- ພັນລະນາທັດສະນີຍະພາບ ແມ່ນກ່າວເຖິງເລື່ອງທຳມະຊາດເປັນຈຸດໜັກ.
- ພັນລະນາປະກົດການແຫ່ງຄວາມເປັນໄປຂອງທຳມະຊາດກໍ່ກ່າວທຳມະຊາດເປັນຈຸດໜັກ( ກຳເນີດ, ຄວາມຜັນແປ ແລະ ຜົນສະທ້ອນຂອງປະກົດການນັ້ນ).
- ການພັນລະນາພາບຊີວິດປະຈຳວັນແມ່ນກ່າວການເຄື່ອນໄຫຂອງຄົນເປັນຈຸດໜັກ.

ຂໍ້ຄວນເອົາໃຈໃສ່: ແຕ່ເມື່ອຫົວຂໍ້ວ່າ: ພັນລະນາທົ່ງນາໃນລະດູເກັບກ່ຽວ ແມ່ນຕ້ອງພັນລະນາທັງທຳມະຊາດ ແລະ ການເຄື່ອນໄຫວຂອງຄົນພ້ອມໆກັນ.

ໂຄງຮ່າງ ບົດພັນລະນາພາບທຳມະຊາດ

ຫົວບົດ: ປ່າໄມ້

**ກ. ເປີດຫົວເລື່ອງ**

- ທີ່ຕັ້ງຂອງປ່າໄມ້

**ຂ. ເດີນເລື່ອງ**

- ແຕ່ງພາບລວມ.
- ຄຸນປະໂຫຍດ ແລະ ການນຳໃຊ້ໄມ້.
- ຜົນສະທ້ອນໃນການທຳລາຍປ່າ.
- ການຂະຫຍາຍ - ປູກໄມ້ທົດແທນ.

**ຄ. ສະຫຼຸບເລື່ອງ**

- ປ່າໄມ້ມີຄຸນປະໂຫຍດແນວໃດ? ທຸກໆຊີວິດ ຫຼື ຕໍ່ຄົນ ແລະ ສັດ.
- ຕ້ອງປົວລະບັດຮັກສາປ່າໄມ້ແນວໃດ?





แบบโครงร่างบิดพันละนาทำมะชาด

หัวบิด: มื้อานนี้ฟ้าแดด, เถิงตอนท่ຽງ, ฝົນเລີຍຕົກ.

( พอกน้องจิ่งพันละนาช่าฝົນນັ້ນ)

ກ. ເປີດຫົວເລື່ອງ

- ພາບ ແລະ ໄລຍະເວລາທີ່ເກີດຂຶ້ນຂອງປະກົດການທຳມະຊາດ, ຫ່າຝົນຕົກລົງໃນເວລາໃດ?ທຸກຄົນພວມເຮັດຫຍັງ?

ຂ. ເນື້ອໃນ

- ສິ່ງສັນຍານໃຫ້ຮູ້ປະກົດການທຳມະຊາດ, ສະພາບທ້ອງຟ້າໃນເວລາຝົນຕົກ, ອາກາດອົບເອົ້າ, ລົມພັດ...

- ການປ່ຽນແປງຂອງທຳມະຊາດຝົນເລີ່ມຕົກ. ຝົນຫ່າໃຫຍ່, ຝົນຄ່ອຍເອື້ອນ, ຝົນເອື້ອນແທ້.

- ຜົນສະທ້ອນຂອງປະກົດການທຳມະຊາດ, ຫ່າຝົນມີຜົນສະທ້ອນແນວໃດຕໍ່ສິ່ງທີ່ມີຊີວິດ...

ຄ. ສະຫຼຸບ

- ສະແດງຄວາມຮູ້ສຶກ, ຫ່າຝົນມີປະໂຫຍດແນວໃດຕໍ່ຄົນ ແລະ ສັດ, ຫຼັງຈາກທີ່ອາກາດອົບເອົ້າ, ຢູ່ຍາກ...

ສະ◌່ງທີ່ຄວນເອົາໃຈໃສ່

ພັນລະນາປະກົດການທຳມະຊາດ, ຄວນເອົາໃຈໃສ່ພາບທຳມະຊາດ, ການເຄື່ອນໄຫວຂອງຄົນ ແລະ ສັດໃນພາບເຫຼົ່ານັ້ນ.

ກິດຈະກຳ

- ຄູໃຫ້ນັກຮຽນພັນລະນາພາບຍາມແລງໃນໂຮງຮຽນ

- ໃຫ້ນັກຮຽນແຕ້ມພາບການອອກແຮງງານເພີ່ມພູນຜະລິດຜົນຂອງຫ້ອງແລ້ວພັນລະນາພາບເຫຼົ່ານັ້ນ

- ໃຫ້ນັກຮຽນພັນລະນາທິວທັດທຳມະຊາດໃນຍາມເຊົ້າຂອງທົ່ງນາໃນລະດູເກັບກ່ຽວ

- ໃຫ້ນັກຮຽນພັນລະນາເລື່ອງບຸນບັ້ງໄຟ ( ເວົ້າເຖິງມູນເຫດເລື່ອງນີ້, ວັນເວລາ ແລະ ສະຖານທີ່ຕັ້ງ, ວິທີການເຮັດບຸນປະເພດນີ້, ຄວາມດີໃຈ ແລະ ຄວາມຕື່ນເຕັ້ນກ່ຽວກັບງານບຸນນີ້).

## 5.ແຕ່ງບົດສອນ, ວິເຄາະບົດສອນ, ສອນທົດລອງ

**1. ບົດສອນຕົວຢ່າງ**

ບົດສອນ

ວິຊາ: ຫັດແຕ່ງ ຊັ້ນປ4

ບົດທີ 1 ໃຊ້ເວລາສອນ 1 ຊົ່ວໂມງ

ຫົວບົດ: ບົດພັນລະນາວັດຖຸ ວັນທີສອນ .............

1.ຈຸດປະສົງ

- ໃຫ້ນັກຮຽນສາມາດຈຳແນກວັດຖຸທີ່ມີລັກສະນະແຕກຕ່າງກັນ
- ສາມາດສ້າງໂຄງຮ່າງຂຽນບົດພັນລະນາສັດໄດ້
- ສາມາດຂຽນບົດພັນລະນາວັດຖຸໄດ້

2. ເນື້ອໃນ

- ໂຄງຮ່າງຂອງການຂຽນບົດພັນລະນາວັດຖຸ ມີ 3 ພາກສ່ວນຄື: ເປີດເລື່ອງ, ເດີນເລື່ອງ, ສະຫຼຸບເລື່ອງ.

3.ສື່ການສອນ

- ປຶ້ມແບບຮຽນພາສາລາວຊັ້ນປ 4
- ວັດຖຸຈິງ, ປຶ້ມອ່ານ, ບິກ, ສໍດຳ, ປຶ້ມຂຽນ, ກະດານ.

4.ປະເມີນຜົນ

- ສັງເກດການຕອບຄຳຖາມ
- ສັງເກດການຂຽນບົດຂອງນັກຮຽນ
- ສັງເກດການອ່ານບົດຂອງນັກຮຽນ

5.ກິດຈະກາການຮຽນ-ການສອນ

- ຂັ້ນນຳເຂົ້າສູ່ບົດຮຽນ

- ກວດກາຈຳນວນພົນ

    - ທວນຄືນບົດຮຽນເກົ່າ
    - ລ້ຽວເຂົ້າສູ່ບົດຮຽນໃໝ່

- ໃຫ້ນັກຮຽນອອກມາແຂ່ງຂັນກັນໃສ່ຊື່ວັດຖຸສິ່ງຂອງທີ່ໃຊ້ປະຈຳວັນໃຫ້ໄດ້ຜູ້ລະ 10 ຊະນິດ( 1-2 ຄົນ)
- ໃຫ້ນັກຮຽນໜຶ່ງຄົນເວົ້າເຖິງຮູບຮ່າງ, ລັກສະນະຂອງວັດຖຸນັ້ນ.
- ຄູຖາມນັກຮຽນຄືນວ່າສິ່ງທີ່ເວົ້າເຖິງຮູບຮ່າງ, ລັກສະນະຂອງວັດຖຸແມ່ນເຮົາກຳລັງເວົ້າກ່ຽວກັບຫຍັງ?

- ຂັ້ນດຳເນີນການສອນ

- ຄູຖາມນັກຮຽນວ່າກ່ອນຈະແຕ່ງບົດພັນລະນາໄດ້ດີເຮົາຕ້ອງເຮັດຫຍັງກ່ອນ?
- ສ້າງໂຄງຮ່າງ ( ນັກຮຽນຕອບ)
- ໂຄງຮ່າງບົດພັນລະນາມີຈັກພາກສ່ວນ? ຄືພາກສ່ວນໃດແດ່?
- ມີ 3 ພາກສ່ວນຄື: ເປີດເລື່ອງ, ເດີນເລື່ອງ, ສະຫຼຸບເລື່ອງ ( ນັກຮຽນຕອບ)
- ຄູແບ່ງນັກຮຽນອອກເປັນ 5 ກຸ່ມ

- ຄູໃຫ້ນັກຮຽນແຕ່ລະກຸ່ມຊອກວັດຖຸຕົວຈິງທີ່ມີຢູ່ໃນຫ້ອງຮຽນ ກຸ່ມລະໜຶ່ງຊະນິດ ( ຖ້ານັກຮຽນຊອກບໍ່ໄດ້ແມ່ນຄູເປັນຜູ້ເອົາໃຫ້)
- ໃຫ້ນັກຮຽນສັງເກດເບິ່ງຮູບຮ່າງ, ລັກສະນະ, ຂະໜາດ, ສີສັນຂອງວັດຖຸທີ່ກຸ່ມຕົນເລືອກໄດ້.
- ໃຫ້ແຕ່ລະກຸ່ມສ້າງໂຄງຮ່າງຂຽນບົດພັນລະນາວັດຖຸນັ້ນ.
- ຄູເອົາໂຄງຮ່າງໄປຕິດໃສ່ກະດານແລ້ວໃຫ້ນັກຮຽນສົມທຽບໃສ່ໂຄງຮ່າງຂອງກຸ່ມຕົນເອງ
- ໃຫ້ແຕ່ລະກຸ່ມຂຽນບົດຕົວຈິງ

- **ຂັ້ນສະຫຼຸບ**

- ຄູ ແລະ ນັກຮຽນພາກັນສະຫຼຸບ
- ຄູແນະນຳເພີ່ມຕື່ມບາງຈຸດກ່ຽວການຂຽນບົດພັນລະນາວັດຖຸ

- **ຂັ້ນວັດຜົນ**

- ຕາງໜ້າກຸ່ມຂຶ້ນອ່ານບົດສູ່ໝູ່ຟັງ

- **ມອບວຽກບ້ານ ແລະ ຕັກເຕືອນ**

- ຄູໃຫ້ນັກຮຽນແຕ່ລະຄົນຂຽນບົດພັນລະນາວັດຖຸສິ່ງໃຫ້ຄູໃນຊົ່ວໂມງໜ້າ

# ບົດທີ3

# ການສອນຂຽນບົດປະເພດຕ່າງໆ

## 1. ການສອນຂຽນຄໍາຮ້ອງ

### 1.1 ຄວາມໝາຍຂອງຄໍາຮ້ອງ

ຄໍາຮ້ອງແມ່ນໜັງສືຮ້ອງຂໍໃຫ້ແກ້ໄຂບັນຫາໃດໜຶ່ງຂອງບຸກຄົນ ຫຼື ກົມກອງທີ່ຍື່ນເຖິງຜູ້ມີໜ້າທີ່ຮັບຜິດຊອບ ແລະ ມີສິດແກ້ໄຂຄໍາຮ້ອງດັ່ງກ່າວເຊັ່ນ: ຄໍາຮ້ອງຂໍເຂົ້າຮຽນ, ຄໍາຮ້ອງຂໍເຂົ້າເຮັດວຽກ, ຄໍາຮ້ອງຂໍຮຽນຕໍ່...

### 1.2 ຂອບເຂດເນື້ອໃນການສອນຂຽນຄໍາຮ້ອງ

- ຄວາມໝາຍຂອງຄໍາຮ້ອງ
- ເນື້ອໃນການສອນຂຽນຄໍາຮ້ອງ
- ໂຄງຮ່າງລວມການຂຽນຄໍາຮ້ອງທົ່ວໄປ

### 1.3 ເນື້ອໃນການສອນຂຽນຄໍາຮ້ອງ

ກ. ຂໍ້ແນະນໍາໃນການສອນຂຽນຄໍາຮ້ອງ

ໃນເວລາສອນບົດດັ່ງກ່າວຄູອາດຈະເລືອກເອົາບາງກິດຈະກໍາດັ່ງນີ້:

- ຈັດນັກຮຽນເປັນກຸ່ມເພື່ອສົນທະນາກ່ຽວກັບຄວາມໝາຍ ແລະ ໂຄງຮ່າງການຂຽນຄໍາຮ້ອງ
- ຄູອ່ານບົດແບບຢ່າງໃຫ້ນັກຮຽນຟັງ
- ຄູເອົາຫົວບົດການຂຽນຄໍາຮ້ອງໃຫ້ນັກຮຽນຂຽນເປັນກຸ່ມ
- ໃຫ້ແຕ່ລະກຸ່ມອ່ານບົດຂອງກຸ່ມຕົນເອງແລ້ວປະກອບຄໍາເຫັນໃສ່ບົດດັ່ງກ່າວ
- ຄູເອົາຫົວບົດໃຫ້ນັກຮຽນເຝິກຂຽນດ້ວຍຕົນເອງແລ້ວສົ່ງໃຫ້ຄູກວດໃຫ້ຄະແນນ

**ຂ. ໂຄງຮ່າງລວມການຂຽນຄໍາຮ້ອງທົ່ວໄປ**

❖ **ພາກຕົ້ນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

................0000..........

ໃບຄໍາຮ້ອງ

ຮຽນ: ......................................................................

( ໂດຍຜ່ານ.......................................)

❖ **ພາກແນະນໍາຕົນເອງ**

ຂ້ານ້ອຍ / ຂ້າພະເຈົ້າທ້າວ / ນາງ ( ຊື່ ແລະ ນາມສະກຸນ)...............................................

ເກີດວັນທີ...........ເດືອນ........ປີ.............ບ້ານເກີດ........................ເມືອງ..................

ແຂວງ...........................ບ້ານຢູ່ປັດຈຸບັນ......................ມືອງ.................ແຂວງ.........

❖ **ພາກເນື້ອໃນຄໍາຮ້ອງ**

ຈຸດປະສົງ.........................................................................................................

ເມື່ອໄດ້...........................................................ຂ້ານ້ອຍປະຕິຍານວ່າ:

1.......................................................................................

2.......................................................................................

3...........................................................................

ຫວັງຢ່າງຍິ່ງວ່າຄະນະ...........................................ຄົງພິຈາລະນາຕາມທາງຄວນດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ

❖ **ພາກທ້າຍ**

ທີ່.................ວັນທີ..........ເດືອນ...........ປີ.........

ລາຍເຊັນຜູ້ຢັ້ງຢືນ ລາຍເຊັນຜູ້ຮ້ອງຂໍ

( ຊື່ ແລະ ນາມສະກຸນ )...........

ກິດຈະກຳ: ວິທີສອນຂຽນຄຳຮ້ອງ

ອຸປະກອນ: ໂຄງຮ່າງຄຳຮ້ອງ, ບົດຕົວຢ່າງ, ເຈ້ຍລາມ

ວິທີດຳເນີນກິດຈະກຳ:

- ຄູແບ່ງນັກຮຽນອອກເປັນກຸ່ມ.
- ຄູໃຫ້ນັກຮຽນແຕ່ລະກຸ່ມຄົ້ນຄວ້າວິທີແຕ່ງແລ້ວໃຫ້ຕາງໜ້າຂຶ້ນລາຍງານ
- ຄູເອົາບົດຕົວຢ່າງມາຫ້ນັກຮຽນເບິ່ງແລ້ວຊ່ວຍກັນພິຈາລະນາເຖິງວິທີການຂຽນ
- ຄູສົມມຸດເຫດການແລ້ວໃຫ້ນັກຮຽນຊ່ວຍກັນຂຽນໃສ່ກະດານ ຫຼື ເຈ້ຍໂດຍຄູເປັນຜູ້ຊ່ວຍເຫຼືອ
- ຄູໃຫ້ນັກຮຽນຂຽນຕົວຈິງເຊັ່ນ: ຄູເອົາແບບທີ່ພິມເປັນຮ່າງມາໃຫ້ນັກຮຽນຂຽນຂໍ້ຄວາມສ່, ຄູແນະນຳເພີ່ມ
- ຄູ ແລະ ນັກຮຽນສະຫຼຸບ

ເວລາສອນ, ຄູພະຍາຍາມເອົາບົດຄຳຮ້ອງທີ່ແຕ່ງສົມບູນແລ້ວ( ໃຊ້ໄດ້ແລ້ວ ) ມາອ່ານໃຫ້ນັກຮຽນຟັງ ແລະ ສົມທົບກັບທິດສະດີ ( ຄຳຮ້ອງແມ່ນຫຍັງ). ຈາກນັ້ນ, ຈຶ່ງແນະນຳກໍລະນີຕ່າງໆ ທີ່ຕ້ອງການໃຊ້ຄຳຮ້ອງຄື ຂໍເຂົ້າການຈັດຕັ້ງເຍົາວະຊົນ, ຂໍເຂົ້າໂຮງຮຽນ, ຂໍລາພັກ. ຄູຕ້ອງແນະນຳນັກຮຽນໃຫ້ຮູ້ແຕ່ລະພາກສ່ວນໃຫ້ລະອຽດ, ອັນໃດຂຽນກ່ອນ, ອັນໃດຂຽນຫຼັງ ແລະ ຕ້ອງຝຶກແອບໃຫ້ນັກຮຽນຂຍນຄຳຮ້ອງໃນຫຼາຍກໍລະນີ ຫຼື ຫຼາຍເຫດຜົນຂໍຮ້ອງ, ນັກຮຽນຈຶ່ງສາມາດເປັນເຈົ້າການໃນການຂຽນ.

ຕົວຢ່າງ: ຄຳຮ້ອງຂໍສະໝັກເປັນສະມາຊິກເຍົາວະຊົນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຮຽນ: ຄະນະຮັບຜິດຊອບໜ່ວຍເຍົາວະຊົນ 2 ທັນວາ

( ໂດຍຜ່ານການຈັດຕັ້ງທີ່ກ່ຽວຂ້ອງ)

ເລື່ອງ: ຂໍສະໝັກເຂົ້າເປັນສະມາຊິກອົງການຈັດຕັ້ງເຍົາວະຊົນ 2 ທັນວາ

ນ້ອງຊື່ ທ້າວ ສີຈັນ ສີສົມບັດ ອາຍຸ 12 ປີ ໜ້າທີ່ຮັບຜິດຊອບ ເປັນນັກຮຽນຢູ່ໂຮງຮຽນປະຖົມສາທິດ.

ຂໍຖືເປັນກຽດຮຽນມາຍັງທ່ານ ຄະນະຮັບຜິດຊອບໜ່ວຍເຍົາວະຊົນ 2 ທັນວາ ເພື່ອຂໍສະໝັກເຂົ້າເປັນສະມາຊິກເຍົາວະຊົນ 2 ທັນວາ ເພາະອົງການຈັດຕັ້ງເຍົາວະຊົນ 2 ທັນວາແມ່ນອົງການຈັດຕັ້ງໜຶ່ງທີ່ມີຖານະບົດບາດໃນການສ້າງສາພັດທະນາປະເທດຊາດ, ເຮັດໃຫ້ເຍົາວະຊົນໄດ້ຝຶກຝົນຕົນເອງໃຫ້ກາຍເປັນຄົນຮູ້ຜູ້ດີ, ເປັນນັກຮຽນເກັ່ງ, ມີຄວາມສາມັກຄີກັນດີ, ເປັນລູກຮັກຫຼານແພງຂອງປະຊາຊົນ ແລະ ເປັນໜໍ່ແໜງທີ່ດີຂອງປະເທດຊາດ.

ເມື່ອນ້ອງຫາກໄດ້ເຂົ້າເປັນສະມາຊິກເຍົາວະຊົນແລ້ວຂໍປະຕິຍານຕົນວ່າ:

- ຈະຕັ້ງໜ້າຝຶກຝົນຕົນເອງໃຫ້ເປັນເຍົາວະຊົນທີ່ດີ.
- ຈະປະຕິບັດຄຳສັ່ງ, ກົດລະບຽບຂອງໜ່ວຍເຍົາວະຊົນວາງອອກໃຫ້ເຂັ້ມງວດ.

- ຖ້ານ້ອງຫາກທໍາຜິດຂໍໃຫ້ໝ່ອຍຈິ່ງຕັກເຕືອນ ແລະ ສັ່ງສອນໃນທາງທີ່ຄວນດ້ວຍ.

ຮຽນມາດ້ວຍຄວາມນັບຖື.

ທີ່ປະຖົມສາທິດ, ວັນທີ 5 ເດືອນ ທັນວາ ປີ 2019

ຜູ້ຮ້ອງຂໍ

ທ້າວ ສີຈັນ ສີສົມບັດ

ຕົວຢ່າງ: ຄໍາຮ້ອງຂໍເຂົ້າຮຽນຕໍ່

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຮຽນ: ຄະນະອໍານວຍການໂຮງຮຽນມັດທະຍົມສາທິດ

( ໂດຍຜ່ານການຈັດຕັ້ງທີ່ກ່ຽວຂ້ອງ)

ເລື່ອງ: ຂໍສະໝັກເຂົ້າຮຽນຕໍ່ຊັ້ນມັດທະຍົມສຶກສາຕອນຕົ້ນ

ນ້ອງຊື່ ນາງສົມພອນ ອາຍຸ 13 ປີ, ໜ້າທີ່ຮັບຜິດຊອບເປັນນັກຮຽນ ສັງກັດຢູ່ໂຮງຮຽນປະຖົມສາທິດ.

ມີຈຸດປະສົງ ຂໍສະໝັກເຂົ້າຮຽນຕໍ່ຊັ້ນມ1 ຂອງໂຮງຮຽນຊັ້ນມັດທະຍົມສາທິດ

ເມື່ອນ້ອງຫາກໄດ້ເຂົ້າຮຽນແລ້ວ ນ້ອງຈະຂໍປະຕິບັດຕາມກົດລະບຽບ ຂອງໂຮງຮຽນຢ່າງເຂັ້ມງວດ ແລະ ຈະເປັນແບບຢ່າງໃຫ້ແກ່ໝູ່ຄູ່.

ດັ່ງນັ້ນ,ນ້ອງຈຶ່ງໄດ້ຂຽນຄໍາຮ້ອງສະບັບນີ້ມາຮຽນຕໍ່ທ່ານ. ຫວັງວ່າທ່ານຈະໄດ້ຄົ້ນຄວ້າ ແລະ ພິຈາລະນາຕາມທາງຄວນດ້ວຍ

ຮຽນມາດ້ວຍຄວາມນັບຖື

ທີ່ ປະຖົມສາທິດ, ວັນທີ1 ເດືອນກໍລະກົດ ປີ 2019

ຜູ້ຮ້ອງຂໍ

ນ. ສົມພອນ

ເອກະສານທີ່ຕິດຄັດມາພ້ອມນີ້:

1. ໃບຢັ້ງຢືນທີ່ຢູ່ 1 ສະບັບ
2. ໃບຮັບປະກັນ 1 ສະບັບ
3. ໃບຢັ້ງຢືນການສຶກສາ 1 ສະບັບ
4. ໃບຊີວະປະຫວັດຫຍໍ້ 1 ສະບັບ
5. ປຶ້ມຕິດຕາມການຮຽນ 1 ສະບັບ

## 2. ການສອນຂຽນໃບສະເໜີ

ໃບສະເໜີແມ່ນໜັງສືຂອງອົງການຈັດຕັ້ງທີ່ໃຊ້ພົວພັນວຽກງານນໍາພາກສ່ວນທີ່ກ່ຽວຂ້ອງ ຫຼື ຂັ້ນເທິງທີ່ມີສິດແກ້ໄຂຄໍາສະເໜີດັ່ງກ່າວ ເຊັ່ນ ສະເໜີພົວພັນງຽກງານລະຫວ່າງອົງການຈັດຕັ້ງດ້ວຍກັນ, ສະເໜີອະນຸມັດຈາກຂັ້ນເທິງ ແລະ ອື່ນໆ.

- ສິ່ງທີ່ຄວນເອົາໃຈໃສ່ໃນໃບສະເໜີ
  - ການຂຽນເນື້ອໃນຂອງໜັງສືຕ້ອງຈະແຈ້ງ, ກະທັດຮັດ.ຖ້າມີເອກະສານທີ່ຈໍາເປັນຕ້ອງຕິດຄືດພ້ອມຢ່າງຄົບຖ້ວນ.
  - ໃຊ້ຄໍາສຸພາບ

- ໃບສະເໜີຕ້ອງຜ່ານຄໍາເຫັນ ແລະ ລາຍເຊັນຂອງພາກສ່ວນທີ່ກ່ຽວຂ້ອງຢ່າງຄົບຖ້ວນ.

ກິດຈະກໍາ: ວິທີສອນຂຽນໃບສະເໜີ

ອຸປະກອນ: ບົດຕົວຢ່າງ, ໂຄງຮ່າງໃບສະເໜີ, ເຈ້ຍລາມ

ວິທີດໍາເນີນກິດຈະກໍາ

- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ
- ຄູໃຫ້ນັກຮຽນແຕ່ລະກຸ່ມຄົ້ນຄວ້າ, ສົນທະນາກ່ຽວກັບໂຄງຮ່າງການຂຽນໃບສະເໜີ
- ຄູຢາຍບົດຕົວຢ່າງໃຫ້ແຕ່ລະກຸ່ມສຶກສາ, ຄົ້ນຄວ້າກ່ຽວກັບວິທີການສອນ
- ຄູໃຫ້ນັກຮຽນແຕ່ລະກຸ່ມເລືອກເອົາຫົວຂໍ້ຕາມໃຈ ກຸ່ມລະ 1 ຫົວຂໍ້. ຄູໃຫ້ນັກຮຽນປະຕິບັດຂຽນໃບສະເໜີຕົວຈິງ.

  **ຕົວຢ່າງ:**

  ຮຽນ: ທ່ານຄະນະອໍານວຍການໂຮງຮຽນ.

  ເລື່ອງ: ຂໍອະນຸມັດຄະນະແຕ່ງຕັ້ງຄະນະຫ້ອງຊຸດໃໝ່.

- ອີງຕາມແຜນການປັບປຸງການຈັດຕັ້ງຂອງແຕ່ລະຫ້ອງປະຈໍາສົກຮຽນ 2017 – 2018 ຂອງໂຮງຮຽນ.
- ອີງຕາມຜົນການຄັດເລືອກຄະນະຫ້ອງຊຸດໃໝ່ ເພື່ອເຮັດໃຫ້ການປະຕິບັດວຽກງານ ກໍ່ຄືການຮໍ່າຮຽນຂອງຫ້ອງໄດ້ຮັບຜົນດີກວ່າປີຜ່ານມາ.

ຂ້ານ້ອຍຫົວໜ້າຄະນະຫ້ອງ ປ. 5 ( ກ ) ຂໍສະເໜີມາຍັງທ່ານເພື່ອອະນຸມັດແຕ່ງຕັ້ງຄະນະຫ້ອງຊຸດໃໝ່ ເຊິ່ງມີລາຍຊື່ ແລະ ຜົນການຄັດເລືອກຄັດຕິດມາພ້ອມນີ້.

ຫວັງວ່າທ່ານຈະພິຈາລະນາແກ້ໄຂຄໍາສະເໜີນີ້ຕາມທາງຄວນດ້ວຍ.

ຮຽນມາດ້ວຍຄວາມນັບຖື.

ຫ້ອງ ປ. 5 ວັນທີ 4 / 9 / 2017

ຄໍາເຫັນ ແລະ ລາຍເຊັນຄູປະຈໍາຫ້ອງ ຫົວໜ້າຫ້ອງ

# ບົດທີ 3 ( ຕໍ່ )
# ການສອນຂຽນບົດປະເພດແບບຕ່າງໆ

## 3. ການສອນຂຽນຈົດໝາຍ

### ກ. ຄວາມໝາຍຂອງຈົດໝາຍ

ຈົດໝາຍແມ່ນເຄື່ອງມືສື່ສານສຳຄັນປະເພດໜຶ່ງໃຊ້ເພື່ອຕິດຕໍ່ພົວພັນລະຫວ່າງບຸກຄົນກັບຄົນ, ກົມກອງກັບກົມກອງ ຫຼື ລະຫວ່າງບຸກຄົນກັບກົມກອງ. ເຖິງວ່າບຸກຄົນ ຫຼື ໜ່ວຍງານຫ່າງໄກກັນປານໃດກໍສາມາດໃຊ້ຈົດໝາຍສົ່ງຂ່າວຄາວ ແລະ ແຈ້ງຄວາມປະສົງໄດ້ຕາມຄວາມຕ້ອງການໂດຍຝາກຜ່ານທາງລະບົບໄປຊະນີ ຫຼື ບຸກຄົນ.

**ຄວາມສຳຄັນຂອງການຂຽນຈົດໝາຍ**

ການຂຽນຈົດໝາຍມີຄວາມສຳຄັນຕໍ່ຄົນຢ່າງຫຼວງຫຼາຍ, ເປັນພາຫະນະໃນການສື່ສານຄວາມໝາຍໃນການພົວພັນເຊິ່ງກັນ ແລະ ກັນ ເພາະຕ້ອງໃຊ້ຢູ່ສະເໝີໃນຊີວິດປະຈຳວັນ, ນັບແຕ່ການຂຽນຈົດໝາຍລາພັກ, ຈົດໝາຍເຖິງເພື່ອນ ຫຼື ເຖິງພໍ່ແມ່, ພີ່ນ້ອງ. ການຂຽນຈົດໝາຍບໍ່ແມ່ນສົ່ງໄປມາສະເພາະໃນປະເທດເທົ່ານັ້ນແຕ່ກໍ່ຍັງສາມາດສົ່ງໄປຕ່າງປະເທດ ເຖິງບຸກຄົນທີ່ເຮົາຕ້ອງການຂຽນເຖິງອີກ. ການຂຽນຈົດໝາຍຈຶ່ງມີຄວາມສຳຄັນຫຼາຍຂຶ້ນ, ຄູຕ້ອງແນະນຳນັກຮຽນໃຫ້ຂຍນຖືກຕາມແບບ ຫຼື ຕາມຫຼັກການສາກົນອີກດ້ວຍ. ສະນັ້ນ, ໃນເວລາຂຽນຕ້ອງສະແດງຄວາມຮູ້ສຶກນຶກຄິດຢ່າງເປີດເຜີຍ, ຈິງໃຈ, ມີຄວາມເຄົາລົບນັບຖືເຊິ່ງກັນ ແລະ ກັນ. ຈົດໝາຍແຕ່ລະສະບັບຕ້ອງແນໃສ່ບັນຫາໃດບັນຫາໜຶ່ງເປັນຈຸດໃຈກາງ, ເຮັດແນວນັ້ນຜູ້ອ່ານ ຫຼື ຜູ້ຮັບຈົດໝາຍຈຶ່ງເຫັນໄດ້ຈຸດປະສົງຕົ້ນຕໍເຊິ່ງຜູ້ຂຽນຢາກເວົ້າເຖິງຈົດໝາຍ ນອກຈາກຈະເປັນເຄື່ອງມືສື່ສານຂອງຄົນເຮົາ, ເປັນເຄື່ອງສະແດງຄວາມຮູ້, ຄວາມເຂົ້າໃຈ, ຄວາມຮູ້ສຶກນຶກຄິດແລ້ວ ຈົດໝາຍຍັງສະແດງເຖິງອຸປະນິດໄສແບບຕ່າງໆໃນການເຮັດວຽກຂອງຜູ້ຂຽນອີກດ້ວຍເພາະຈົດໝາຍເປັນການສະແດງອອກສ່ວນຕົວ. ສະນັ້ນ, ຜູ້ຂຽນຈຶ່ງຕ້ອງລະມັດລະວັງໃນການໃຊ້ພາສາການຮັກສາຄວາມສະອຽດຮຽບຮ້ອຍ ເພື່ອສະແດງອຸປະນິດໄສຂອງຄົນເຮົາ ແລະ ຍັງເປັນການສະແດງເຖິງຄວາມມີມາລະຍາດທີ່ດີຮູ້ຈັກເຄົາລົບເກງໃຈ ແລະ ໃຫ້ກຽດຜູ້ຮັບຈົດໝາຍອີກດ້ວຍ.

### ຂ. ຫຼັກການຂຽນຈົດໝາຍ

- ຂຽນຄຳຂຶ້ນຕົ້ນ ແລະ ຄຳລົງທ້າຍໃຫ້ເໝາະສົມກັບຖານະຂອງຜູ້ຮັບໃນໂອກາດຕ່າງໆ.
- ຂຽນໄດ້ເນື້ອໃນຄວາມສຳຄັນ ແລະ ກະທັດຮັດ.
- ໃຊ້ພາສາສຸພາບ, ຖືກຕ້ອງ ແລະ ເໝາະສົມ.
- ຂຽນໃຫ້ສະອາດຮຽບຮ້ອຍ.
- ຂຽນໃຫ້ຖືກຕາມຮູບແບບຂອງການຂຽນຈົດໝາຍ.
- ຈ່າໜ້າຊອງຈົດໝາຍ ( ສະຫຼັກຫຼັງຊອງຈົດໝາຍ ) ໃຫ້ຖືກຕ້ອງ ແລະ ຈະແຈ້ງດີ.
- ບໍ່ຄວນໃຊ້ນ້ຳເມິກສີແດງ.

### ຄ. ປະເພດຂອງຈົດໝາຍ

ຈົດໝາຍມີຫຼາຍປະເພດບາງຄົນອາດຈະແບ່ງຕາມຮູບແບບ ບາງຄົນອາດຈະແບ່ງຕາມຈຸດປະສົງຂອງການຂຽນ ແລະ ເນື້ອໃນຕົ້ນຕໍ. ແຕ່ໃນທີ່ນີ້ຈະສະເໜີພຽງ 2 ປະເພດຄື: ຈົດໝາຍສ່ວນຕົວ ແລະ ຈົດໝາຍທາງການ.

- **ຈົດໝາຍສ່ວນຕົວ**

ຈົດໝານສ່ວນຕົວແມ່ນຈົດໝາຍທີ່ຂຽນເຖິງຜູ້ທີ່ເຮົາສະໜິດ ເຊັ່ນ ພໍ່, ແມ່, ອ້າຍ, ເອື້ອຍ, ນ້ອງ, ປູ່, ຍ່າ, ຕາຍາຍ ( ພໍ່ຕູ້, ແມ່ຕູ້ ), ເພື່ອນມິດ, ຄົນຮັກ ( ຊູ້ ), ຜົວ, ເມຍເປັນຕົ້ນ.

- **ຈົດໝາຍທາງການ ຫຼື ໜັງສືທາງລັດຖະການ**

ຈົດໝາຍທາງການແມ່ນເອກະສານທາງລັດຖະການ ເຊັ່ນ ໜັງສືຕິດຕໍ່ລະຫວ່າງ ທາງລັດຖະການດ້ວຍກັນ, ໜັງສືທາງລັດຖະການເຖິງໜ່ວຍງານ, ກົມກອງອື່ນທີ່ບໍ່ແມ່ນລັດຖະການ, ໜັງສືປະຊາຊົນເຖິງລັດຖະການເພື່ອແຈ້ງຈຸດປະສົງຢ່າງໜຶ່ງກໍຕ້ອງຂຽນຕາມຮ່າງຂອງລັດຖະການ.

**ງ. ສ່ວນປະກອບຂອງຈົດໝາຍ**

ຈົດໝາຍປະເພດໃດລ້ວນແຕ່ມີສ່ວນປະກອບຕ່າງໆລຸ່ມນີ້:

- ທີ່ຢູ່ຂອງຜູ້ຂຽນຈົດໝາຍ.
- ວັນທີ, ເດືອນ, ປີທີ່ຂຽນຈົດໝາຍ.
- ຄຳຂຶ້ນຕົ້ນຂອງຈົດໝາຍ.
- ຄຳລົງທ້າຍຂອງຈົດໝາຍ.
- ຊື່ຜູ້ຂຽນຈົດໝາຍ.

ຖ້າເປັນຈົດໝາຍທາງການຕ້ອງມີເລກທີ, ຂົດທັບກົມກອງ ແລະ ປີ, ກາປະທັບ, ລາຍເຊັນ ແລະ ຊື່.

**ຈ. ຮູບແບບການຂຽນຈົດໝາຍ**

❖ **ຮູບແບບຂອງການຂຽນຈົດໝາຍສ່ວນຕົວ**

**ຮູບແບບທີ 1**

1. ສະຖານທີ່ຂຽນຈົດໝາຍ.........................................
2. ວັນທີ, ເດືອນ, ປີ...............................................
3. ຄຳຂຶ້ນຕົ້ນ..................................
4. ເນື້ອໃນຂອງຈົດໝາຍ

....................................................................................................................
....................................................................................................................
..................

5. ຄຳລົງທ້າຍ....................................................
6. ຊື່ ແລະ ລາຍເຊັນຜູ້ຂຽນ.............................

**ຮູບແບບທີ 2**

1. ຄຳຂຶ້ນຕົ້ນ.................................
2. ເນື້ອໃນຂອງຈົດໝາຍ

....................................................................................................................
....................................................................................................................
..................

3. ຄຳລົງທ້າຍ.....................................................
4. ສະຖານທີ່ຂຽນຈົດໝາຍ......................
5. ຊື່ ແລະ ລາຍເຊັນຜູ້ຂຽນ............................

- **ຮູບແບບການຂຽນຈົດໝາຍທາງການ**
- **ຮູບແບບທີ 1**

1. ຄຳຂວັນ...............................................

..........................................................

2. ຊື່ສຳນັກງານ............................................... 3. ເລກທີ............./ ປີ

..........................................................

4.ຮຽນ ຫຼື ເຖິງ................................

5. ເລື່ອງ.......................................................

6. ອ້າງອີງ ( ອີງຕາມ )................................

7. ເນື້ອໃນ............................................................................

..........................................................................................

8. ສະຫຼຸບ..........................................................................................

9. ຕິດຄັດມາພ້ອມນີ້:

.......................................................

........................................

10. ຄຳລົງທ້າຍ......................................................

11. ວັນທີ, ເດືອນ, ປີ...................................................

12. ຕຳແໜ່ງ..............................................

13. ລາຍເຊັນ..........................................

14. ຊື່ ແລະ ນາມສະກຸນ...............................................

**ຮູບແບບທີ 2**

1. ກາຊາດ ຫຼື ເຄື່ອງໝາຍ............................................

2. ຄຳຂວັນ.............................................

3.ຊື່ສຳນັກງານ...............................................

4. ເລກໂທລະສັບ...................................

5. ເລກທີ..................................

6. ຄຳຂຶ້ນຕົ້ນ...............................

7. ເນື້ອໃນ.................................

8. ຄຳລົງທ້າຍ......................................................

9. ວັນທີ, ເດືອນ, ປີ................................................

10. ຕຳແໜ່ງ..............................................

11. ລາຍເຊັນ..........................................

12. ຊື່ ແລະ ນາມສະກຸນ...........................................

**ຕົວຢ່າງ ການຈ່າໜ້າຊອງຈົດໝາຍສ່ວນຕົວ**

ຈາກ.................................

( ຊື່, ນາມສະກຸນ ແລະ ທີ່ຢູ່ຂອງຜູ້ຝາກ)

ສະແຕມ

ສົ່ງ:

.........................................

( ຊື່, ນາມສະກຸນ ແລະ ທີ່ຢູ່ຂອງຜູ້ຮັບ)

( ດ້ານໜ້າ )



( ດ້ານຫຼັງ )

ຮູບທີ ການຈ່າໜ້າຊອງຈົດໝາຍ

ຕົວຢ່າງ ການຈ່າໜ້າຊອງຈົດໝາຍທາງການ

ຈາກ.................................

( ຊື່, ນາມສະກຸນ ແລະ ທີ່ຢູ່ຜູ້ຝາກ ຫຼື ສຳນັກງານ)

ສະແຕມ

ສົ່ງ:...............................

( ຊື່, ນາມສະກຸນ ແລະ ທີ່ຢູ່ຂອງຜູ້ຮັບ)

...............................




ດ້ານຫຼັງ )

ຮູບທີ ການຈ່າໜ້າຊອງຈົດໝາຍທາງການ

ໝາຍເຫດ: ຊື່, ທີ່ຢູ່, ເລກໂທລະສັບຂອງສຳນັກງານ ( ບາງທີໄດ້ພິມໄວ້ຢູ່ຊອງຈົດໝາຍແລ້ວ)

ຕາຕະລາງ ຕົວຢ່າງຄຳຂຶ້ນຕົ້ນ, ຄຳລົງທ້າຍ ແລະ ຄຳແທນນາມ ໃນຈົດໝາຍປະເພດຕ່າງໆ

| ຜູ້ຮັບຈົດໝາຍ | ຄຳຂຶ້ນຕົ້ນ | ຄຳລົງທ້າຍ | ຄຳແທນນາມ |
|---|---|---|---|
| ພໍ່, ແມ່, ອ້າຍ, ເອື້ອຍ, ປູ່, ຍ່າ, ພໍ່ເຖົ້າ, ແມ່ເຖົ້າ | ............ທີ່ເຄົາລົບ ( ຊື່ຜູ້ຮັບ ) .......... ທີ່ເຄົາລົບນັບຖື ຢ່າງສູງ ( ຊື່ຜູ້ຮັບ ) | ດ້ວຍຄວາມນັບຖືຢ່າງ ສູງ | ຜູ້ຂຽນ: ລູກ, ນ້ອງ, ຫຼານ ຜູ້ຮັບ: ພໍ່, ແມ່, ອ້າຍ, ເອື້ອຍ, ປູ່, ຍ່າ, ພໍ່ເຖົ້າ, ແມ່ເຖົ້າ. |
| ຍາດພີ່ນ້ອງທີ່ມີອາຍຸ ຫຼາຍ ຫຼື ຖານະສູງ | ..........ທີ່ເຄົາລົບ ...........ທີ່ເຄົາລົບ | ດ້ວຍຄວາມເຄົາລົບ / ນັບຖື | ຜູ້ຂຽນ: ຫຼານ, ຂ້ານ້ອຍ, ນ້ອງ... ຜູ້ຮັບ: ພໍ່, ແມ່, ອ້າຍ, ເອື້ອຍ, ປູ່, ຍ່າ, ພໍ່ເຖົ້າ, ແມ່ເຖົ້າ. |
| ຜູ້ສະໜິດສະໜົມກັນ, ຖານະເທົ່າກັນ ຫຼື ຕ່ຳ ກວ່າ | ..........ທີ່ຮັກ .........ທີ່ຮັກແພງ ...........ທີ່ຄິດຮອດ | ດ້ວຍຄວາມຮັກແພງ ດ້ວຍຄວາມຮັກ ແລະ ຄິດເຖິງສະເໝີ ດ້ວຍຄວາມເປັນຫ່ວງ ດ້ວຍຄວາມຄິດເຖິງ | ຜູ້ຂຽນ: ເຮົາ, ອ້າຍ, ນ້ອງ, ເອື້ອຍ ຜູ້ຮັບ: ໂຕ, ສ່ຽວ, ເພື່ອນ, ນ້ອງ, ເອື້ອຍ... |
| ບຸກຄົນທີ່ມີຖານະສູງ ກວ່າ | ຮຽນ............ທີ່ນັບຖື ຮຽນ...........ທີ່ເຄົາລົບ | ຮຽນມາດ້ວຍຄວາມ ນັບຖືຢ່າງສູງ ດ້ວຍຄວາມຄິດເຖິງ | ຜູ້ຂຽນ: ຂ້າພະເຈົ້າ, ຂ້ານ້ອຍ. ຜູ້ຮັບ: ທ່ານ, ພະນະທ່ານ |
| ບຸກຄົນທົ່ວໄປ | ເຖິງ......... ຊື່.....ທີ່ ຮັກແພງ ທີ່ນັບຖື ທີ່ຮັກແພງ ແລະ ນັບຖື | ດ້ວຍຄວາມຮັກແພງ ດ້ວຍຄວາມນັບຖື ດ້ວຍຄວາມຮັກແພງ ແລະ ນັບຖື | ຜູ້ຂຽນ: ຂ້ອຍ, ຂ້າພະເຈົ້າ , ເຮົາ... ຜູ້ຮັບ: ຫຼານ, ປ້າ, ລຸງ... |

ບົດຕົວຢ່າງ: ຈົດໝາຍເຖິງເພື່ອນ

ຄຳມ່ວນວັນທີ 15 ເດືອນ ທັນວາ 2016

ເຖິງເພື່ອນທີ່ຄິດຮອດ ແລະ ຄິດເຖິງ

ມື້ນີ້ນັບວ່າເປັນໂອກາດດີທີ່ເຮົາໄດ້ມີເວລາຂຽນ ຈ.ມ ມາຫາເພື່ອນ ເພາະນັບແຕ່ເຮົາໄດ້ຍ້າຍຈາກວຽງຈັນມາຢູ່ນຳພໍ່, ແມ່ກໍ່ບໍ່ໄດ້ຂຽນ ຈ.ມ ມາຢາມຈັກເທື່ອ. ເປັນແນວໃດເພື່ອນຍັງສະບາຍດີຕາມເຄີຍຢູ່ບໍ ? ພ້ອມດ້ວຍວຽກງານທຸກຢ່າງ. ສ່ວນເຮົາເອງກໍ່ສະບາຍດີ ພ້ອມການຮຽນ, ດຽວນີ້ເຮົາກໍ່ໄດ້ຮຽນຢູ່ຊັ້ນປ.4ຂອງໂຮງຮຽນປະຖົມຢູ່ກັບບ້ານ.

ໂຮງຮຽນແຫ່ງນີ້ມີນັກຮຽນປະມານ 200 ຄົນ ຄູແ່ລະຄົນຕັ້ງໃຈສິດສອນດີ, ບາງຄັ້ງເພິ່ນກໍ່ພາພວກເຮົາອ່ານ, ຂຽນ ແລະ ຮຽນນຳກັນເປັນຈຸ. ບາງຄັ້ງກໍຮ່ວມກັນສະແດງລະຄອນ ຕາມເນື້ອໃນຂອງບົດຮຽນ. ເຮົາເອງກໍ່ໄດ້ເອົາໃຈໃສ່ຮ່ຳຮຽນຈົນສຸດຄວາມສາມາດ. ບ່ອນໃດບໍ່ເຂົ້າໃຈເຮົາກໍ່ຖາມເພື່ອນ ຫຼື ຄູປະຈຳຫ້ອງເພິ່ນໄດ້ອະທິບາຍໃຫ້ເຮົາຟັງຈົນເຂົ້າໃຈ. ການສອບເສັງພາກຮຽນທີໜຶ່ງປີນີ້ ເຮົາກໍ່ໄດ້ຄະແນນສະເລ່ຍເກົ້າຈຸດປາຍ. ມື້ສະຫຼຸບພາກຮຽນ, ເພິ່ນກໍ່ໄດ້ມອບຂອງຂັວນ ແລະ ຍ້ອງຍໍວ່າເຮົາເປັນນັກຮຽນດີເດັ່ນຮອບດ້ານ.

ເພື່ອນເອີຍ ເຮົາຈະພະຍາຍາມເອົາໃຈໃສ່ຕໍ່ການຮ່ຳຮຽນ, ແລະ ຟັງຄຳສັ່ງສອນຂອງຄູ, ພໍ່ ແລະ ແມ່. ສ້າງຄວາມຮັກແພງກັບໝູ່ເພື່ອນໃຫ້ໄດ້ດີຕະຫຼອດໄປ ຕາມທີ່ເຮົາເວົ້າກັບເພື່ອນໃນຜ່ານມາ. ໂອກາດໜ້າຖ້າມີເວລາເຮົາຈະຂຽນ ຈ.ມ ມາຢາມອີກເດີ.

ສຸດທ້າຍນີ້ ເຮົາຂໍອວຍພອນໃຫ້ເພື່ອນຈົ່ງມີສຸຂະພາບແຂງແຮງ ແລະ ປະສົບຜົນສຳເລັດໃນດ້ານການຮ່ຳຮຽນ.

ດ້ວຍຄວາມຮັກແພງ ຄິດຮອດ ແລະ ຄິດເຖິງ
ຈາກເພື່ອນ ກັນລະຍາ ມະເຊບັ້ງໄພ

ຕົວຢ່າງ: ຈົດໝາຍຖາມຂ່າວຄາວ

ໂຮງຮຽນປະຖົມເຈົ້າອະນຸວົງວຽງຈັນ
ວັນທີ15 ກັນຍາ 1997

ໄກສອນເພື່ອນທີ່ຄິດເຖິງ

ກ່ອນອື່ນ, ເຮົາຫວັງວ່າເພື່ອນຄົງຈະສະບາຍດີ, ສ່ວນເຮົາເອງແມ່ນສະບາຍດີຕາມເດີມ. ແຕ່ກໍຍັງຄິດເຖິງເພື່ອນສະເໝີ.

ດົນສົມຄວນທີ່ພວກເຮົາໄດ້ຈາກກັນ, ແຕ່ເຮົາເອງບໍ່ໄດ້ຮັບຂ່າວຂອງເພື່ອນເລີຍ. ເພື່ອນຄົງຈະຫຍຸ້ງຍາກນຳການຮຽນຫຼາຍເນາະ. ເປັນແນວໃດເພື່ອນຍ້າຍມາຮຽນຢູ່ແຂວງຊຽງຂວາງເມືອງແຫ່ງແຜ່ນດິນຄຳນີ້ຄົງຈະມີຄວາມເບີກບານມ່ວນຊື່ນກັບທຳມະຊາດອັນສວຍສົດງົດງາມ. ມີອັນໃດແປກໃໝ່ໃຫ້ເພື່ອນເລົ່າໃຫ້ເຮົາຟັງນຳແດ່.

ສ່ວນທາງໂຮງຮຽນປະຖົມເຈົ້າອະນຸ ທິວທັດທຳມະຊາດກໍຍັງຄືເກົ່າ. ສ່ວນທາງການສຶກສາຮ່ຳຮຽນໄດ້ມີການພັດທະນາຂຶ້ນໄປເລື້ອຍໆໂດຍສະເພາະມື້ໄຂສົກຮຽນໃໝ່ ແລະ ວັນທີ 1 ເດືອນຫົກ ທາງໂຮງຮຽນໄດ້ສະຫຼອງກັນຢ່າງຟົດຟື້ນເຊັ່ນ: ແຂ່ງຂັນສິລະປະ, ກິລາ ແລະ ກິດຈະກຳຕ່າງໆ. ເວົ້າເຖິງທາງດ້ານການຮຽນ-ການສອນກໍ່ໄດ້ມີວິທີການໃໝ່ໆ ເພາະຄູເພິ່ນໄດ້ເອົາໃຈໃສ່ໃຫ້ນັກຮຽນເຮັດກິດຈະກຳ. ຈຸດປະສົງແມ່ນແນໃສ່ໃຫ້ນັກຮຽນມີຄວາມສາມາດກ້າສະແດງອອກ, ມີຫົວຄິດປະດິດສ້າງ, ພວກເຮົາພາກັນແຂ່ງຂັນກັນຮຽນເພື່ອໃຫ້ໄດ້ຄະແນນດີ. ເມື່ອເວົ້າມາຮອດຕອນນີ້ເຮົາຄິດຮອດເພື່ອນຫຼາຍທີ່ສຸດ, ແຕ່ເພື່ອນຮຽນຢູ່ພີ້ກໍ່ແຂ່ງຂັນກັນຢູ່ບໍ, ເອົາດີໆໄດ໋, ເອີ! ມາຮອດນີ້ເຮົາຂໍເລົ່າໃຫ້ໂຕຟັງພຽງເທົ່ານີ້ໂອກາດໜ້າຈິ່ງລົມກັນໃໝ່.

ດ້ວຍຄວາມຄິດຮອດ ແລະ ຄິດເຖິງເພື່ອນ.
ແສງເດືອນ

## 4. ການສອນຂຽນບົດບັນທຶກ

### 4.1 ຄວາມໝາຍຂອງບົດບັນທຶກ

ບົດບັນທຶກແມ່ນບົດແຕ່ງປະເພດໜຶ່ງ ເຊິ່ງໃຊ້ສຳລັບບັນທຶກວຽກງານ ຫຼື ເຫດການຕ່າງໆໃນຊີວິດປະຈຳວັນ, ບັນທຶກການເຄື່ອນໄຫວຂອງບຸກຄົນ ຫຼື ເຫດການທາງປະຫວັດສາດ ແລະ ອື່ນໆ.

### 4.2 ຂອບເຂດເນື້ອໃນການສອນຂຽນບົດບັນທຶກ

- ຄວາມໝາຍຂອງບົດບັນທຶກ
- ເນື້ອໃນການສອນຂຽນບົດບັນທຶກ
- ໂຄງຮ່າງການຂຽນບົດບັນທຶກ

### 4.3 ເນື້ອໃນການສອນບົດບັນທຶກ

ກ. ປະເພດຂອງບົດບັນທຶກ

- ບົດບັນທຶກປະຈຳວັນ
- ບົດບັນທຶກທວນຄືນ
- ບົດບັນທຶກກອງປະຊຸມ

ຂ. ຂໍ້ແນະນຳໃນການສອນຂຽນບົດບັນທຶກ

ໃນເວລາສອນບົດດັ່ງກ່າວຄູອາດຈະເລືອກເອົາບາງກິດຈະກຳດັ່ງກ່າວ:

- ຈັດນັກຮຽນເປັນກຸ່ມເພື່ອສົນທະນາກັບຄວາມໝາຍ ແລະ ໂຄງຮ່າງການຂຽນບົດບັນທຶກ
- ຄູອ່ານບົດແບບຢ່າງບົດບັນທຶກໃດໜຶ່ງໃຫ້ນັກຮຽນຟັງ ຫຼື ໃຫ້ນັກຮຽນອ່ານເປັນກຸ່ມກໍໄດ້
- ຄູເອົາຫົວບົດການຂຽນບົດບັນທຶກໃດໜຶ່ງໃຫ້ນັກຮຽນເຝິກຂຽນເປັນກຸ່ມ
- ໃຫ້ແຕ່ລະກຸ່ມຂອງກຸ່ມຕົນເອງແລ້ວປະກອບຄຳເຫັນໃສ່ບົດດັ່ງກ່າວ
- ຄູເອົາຫົວບົດໃຫ້ນັກຮຽນເຝິກຂຽນດ້ວຍຕົນເອງແລ້ວສົ່ງໃຫ້ຄູກວດໃຫ້ຄະແນນ

ຄ. ໂຄງຮ່າງການຂຽນບົດບັນທຶກກອງປະຊຸມ

1. ພາກພິທີການ

- ຄຳຂວັນຂອງຊາດ
- ຊື່ກອງປະຊຸມ
- ເວລາ ແລະ ສະຖານທີ່ຈັດກອງປະຊຸມ
- ຈຳນວນພົນເຂົ້າຮ່ວມ
- ຈຸດປະສົງການປະຊຸມ
- ຊື່ປະທານ ແລະ ເລຂາກອງປະຊຸມ

2. ພາກເນື້ອໃນ

- ບັນຫາທີ່ນຳມາເຜີຍແຜ່
- ບັນຫາທີ່ປຶກສາຫາລື, ມະຕິກອງປະຊຸມ
- ເວລາອັດກອງປະຊຸມ

3. ພາກສະເໜີ

- ບັນຫາທີ່ຕ້ອງການສະເໜີຂັ້ນເທິງພິຈາລະນາ
- ຖອດຖອນບົດຮຽນ

ຜູ້ບັນທຶກ / ເລຂານຸການ

........................
ຊື່ແລະ ນາມສະກຸນ

ກິດຈະກໍາ: ວິທີສອນຂຽນບົດບັນທຶກ

ອຸປະກອນ: ບົດຕົວຢ່າງ, ຮ່າງການຂຽນບົດບັນທຶກ, ເຈ້ຍລາມ

ວິທີດໍາເນີນກິດຈະກໍາ:

- ແບ່ງນັກຮຽນອອກເປັນກຸ່ມ
- ໃຫ້ແຕ່ລະກຸ່ມຄົ້ນຄວ້າວິທີແຕ່ງແບບຕ່າງໆຂອງການຂຽນບົດບັນທຶກ, ໃຫ້ຜູ້ຕ່າງໜ້າກຸ່ມຂຶ້ນລາຍງານ, ໃຫ້ຜູ້ອື່ນປະກອບຄໍາເຫັນແລ້ວຄູຈຶ່ງສະຫຼຸບ
- ຄູເອົາບົດຕົວຢ່າງການຂຽນບົດບັນທຶກມາໃຫ້ນັກຮຽນອ່ານແລ້ວໃຫ້ນັກຮຽນຊ່ວຍກັນພິຈາລະນາເຖິງວິທີຂຽນ ແລະ ສະຫຼຸບເປັນຂໍ້ສັງເກດ ເພື່ອໃຫ້ນັກຮຽນໄດ້ຂຽນດ້ວຍຕົນເອງ
- ຄູສົມມຸດເຫດການແລ້ວໃຫ້ນັກຮຽນຊ່ວຍກັນຂຽນໃສ່ກະດານ ຫຼື ເຈ້ຍໂດຍທີ່ຄູເປັນຜູ້ຊ່ວຍເຫຼືອ
- ຄູໃຫ້ນັກຮຽນຂຽນຕົວຈິງເຊັ່ນ ຄູເອົາແບບທີ່ພິມໃສ່ເປັນຮ່າງ ຫຼື ຟອມແລ້ວໃຫ້ນັກຮຽນຂຽນຂໍ້ຄວາມໃສ່
- ຄູໃຫ້ນັກຮຽນແຕ່ລະກຸ່ມຂຶ້ນອ່ານສູ່ໝູ່ຟັງ
- ຄູ ແລະ ນັກຮຽນສະຫຼຸບ

# ບົດທີ 3 ( ຕໍ່ )
# ການສອນຂຽນບົດປະເພດແບບຕ່າງໆ

## 5. ການສອນຂຽນບົດລາຍງານ

### 5.1 ຄວາມໝາຍຂອງບົດລາຍງານ

ບົດລາຍງານແມ່ນການສະເໜີຜົນຂອງວຽກງານດ້ວຍປາກເປົ່າ ຫຼື ດ້ວຍການຂຽນ ເພື່ອລາຍງານຕໍ່ຄູປະຈຳຫ້ອງ ຫຼື ຜູ້ອຳນວຍການເຊັ່ນ: ການເຮັດກິດຈະກຳຄົ້ນຄວ້າເປັນກຸ່ມ, ກອງປະຊຸມປະຈຳເດືອນ, ການໄປທັດສະນະສຶກສາ, ການອອກແຮງງານ ແລະ ອື່ນໆ.

### 5.2 ຂອບເຂດເນື້ອໃນຂອງການສອນຂຽນບົດລາຍງານ

- ຄວາມໝາຍຂອງບົດລາຍງານ
- ເນື້ອໃນການສອນຂຽນບົດລາຍງານ
- ໂຄງຮ່າງການຂຽນບົດລາຍງານ

### 5.3 ເນື້ອໃນການສອນຂຽນບົດລາຍງານ

- ເນື້ອໃນການສອນຂຽນບົດລາຍງານ

ການລາຍງານທົ່ວໄປມີ 2 ແບບຄື:

**ກ. ລາຍງານແບບສາມັນ**

ລາຍງານສາມັນແມ່ນການລາຍງານປະຈຳອາທິດ, ປະຈຳເດືອນ, ພາກຮຽນ... ເຊິ່ງຈະຕ້ອງໄດ້ລາຍງານເປັນຈຳ.

**ຂ. ລາຍງານວິສາມັນ**

ລາຍງານວິສາມັນບໍ່ແມ່ນລາຍງານແບບປະຈຳເຊັ່ນ: ເມື່ອມີສະພາບຜິດປົກກະຕິ ຫຼື ມີເຫດການໃດໜຶ່ງເກີດຂຶ້ນກະທັນຫັນຈຳເປັນຕ້ອງໄດ້ລາຍງານໃຫ້ຂັ້ນເທິງຮັບຮູ້ ແລະ ພິຈາລະນາໂດຍດ່ວນເພື່ອແກ້ໄຂໃຫ້ທັນເວລາ.

ຂັ້ນຕອນການຂຽນບົດລາຍງານ

ການຂຽນບົດລາຍງານ, ຜົນງານຄວນດຳເນີນຕາມຂັ້ນຕອນດັ່ງນີ້:

- ບັນທຶກ ແລະ ເກັບກຳຮອບຮວມຂໍ້ມູນກ່ຽວກັບຜົນງານ ຫຼື ສິ່ງທີ່ຈະລາຍງານເຊັ່ນ: ສະຖິຕິ, ຈຳນວນຜົນງານ...
- ອ່ານຂໍ້ມູນຕ່າງໆທີ່ເກັບໄວ້ອີກເທື່ອໜຶ່ງ
- ສ້າງໂຄງຮ່າງຂອງບົດລາຍງານໂດຍຫຍໍ້ໄວ້ກ່ອນ, ຈັດລຽງລຳດັບຂອງຫົວຂໍ້ທີ່ຈະລາຍງານວ່າອັນໃດຄວນລາຍງານກ່ອນ ອັນໃດຄວນລາຍງານຕາມຫຼັງ.
- ລົງມືຂຽນລາຍງານຕາມໂຄງຮ່າງ ແລະ ແບບຂອງບົດລາຍງານ
- ອ່ານບົດລາຍງານຄືນອີກຄັ້ງໜຶ່ງກ່ອນຈະສົ່ງ

**ສິ່ງທີ່ຄວນເອົາໃຈໃສ່ໃນການຂຽນບົດລາຍງານ**

ການຂຽນບົດລາຍງານຕ້ອງໃຫ້ຖືກຮູບແບບ, ຂໍ້ຄວາມກະທັດຮັດ, ຈະແຈ້ງ ເພື່ອເຮັດໃຫ້ຜູ້ອ່ານ, ຜູ້ຟັງເຂົ້າໃຈເນື້ອໃນທີ່ຕ້ອງການລາຍງານ.

**ຄຳແນະນຳໃນການຂຽນບົດລາຍງານ**

ການຂຽນບົດລາຍງານເປັນເລື່ອງທີ່ສຳຄັນ ແລະ ໃຊ້ຢ່າງກວ້າງຂວາງ, ຍ້ອນແນວນັ້ນພາສາທີ່ໃຊ້ໃນບົດລາຍງານຄວນມີລັກສະນະຮຽບຮຽງກົງໄປກົງມາ, ສື່ຄວາມໝາຍແຈ່ມແຈ້ງ, ບໍ່ສະແດງອາລົມໃດໆໃນຂໍ້ຂຽນ,

ໂດຍສະເພາະຂຽນບົດລາຍງານວິຊາການຄວນໃຊ້ຖ້ອຍຄຳທີ່ຖືກຕາມຫຼັກພາສາທາງລັດຖະການນອກຈາກນີ້ ຄວນເລືອກປະໂຫຍກສັ້ນເພື່ອຈະຂຽນ ແລະ ອ່ານເຂົ້າໃຈງ່າຍ. ທຸກປະໂຫຍກຄວນມີໃຈຄວາມສົມບູນ, ມີ ຈັງຫວະວັກຕອນໃຫ້ຖືກຕ້ອງ, ຮຽງລຳດັບປະໂຫຍກໄປຕາມຄວາມຮູ້ ແລະ ຄວາມຄິດຢ່າງເປັນລະບຽບຮຽບ ຮ້ອຍໄວ້ໃນໂຄງເລື່ອງ, ການສະເໜີເນື້ອຫາສາລະນອກຈາກຈະແບ່ງເປັນຕອນ, ເປັນຂໍ້ແລ້ວຄວນໃຫ້ມີຫຍໍ້ໜ້າ, ເພາະວ່າ ການຫຍໍ້ໜ້າເປັນສິ່ງທີ່ຊ່ວຍໃຫ້ເຂົ້າໃຈຂໍ້ຄວາມແຕ່ລະຕອນຊັດເຈນຂຶ້ນຕື່ມ. ຫຍໍ້ໜ້າໜຶ່ງໆມີຄວາມສຳ ຄັນພຽງແຕ່ເປັນບັນຫາດຽວ ແລະ ທຸກໆຫຍໍ້ໜ້າຄວນຮຽງລຳດັບໃຫ້ຕໍ່ເນື່ອງ.

ກິດຈະກຳການສອນຂຽນບົດລາຍງານ

ການສອນຂຽນບົດລາຍງານມີຫຼາຍວິທີແລ້ວແຕ່ຄູຈະເລືອກໃຊ້

- ຄູນຳເອົາຕົວຢ່າງບົດລາຍງານແບບຕ່າງໆ ມາໃຫ້ນັກຮຽນເບິ່ງ ແລ້ວໃຫ້ນັກຮຽນຊ່ວຍກັນພິຈາລະນາເຖິງ ວິທີຂຽນ ແລະ ສະຫຼຸບເປັນຂໍ້ສັງເກດເພື່ອໃຫ້ນັກຮຽນໄປກຽມຂຽນດ້ວຍຕົນເອງ.
- ຄູສົມມຸດເຫດການ ຫຼື ກຳນົດຫົວຂໍ້ແລ້ວໃຫ້ນັກຮຽນຊ່ວຍກັນຂຽນໃສ່ກະດານ ຫຼື ເຈ້ຍໂດຍຄູເປັນຜູ້ ຊ່ວຍເຫຼືອເລີ່ມແຕ່ງ່າຍໄປຫາຍາກເຊັ່ນ ລາຍງານການປະຊຸມ, ລາຍງານການເຮັດອະນາໄມໂຮງຮຽນ, ລາຍງານ ການໄປທັດສະນະສຶກສາ ແລະ ອື່ນໆ.
- ຄູໃຫ້ນັກຮຽນຝຶກຂຽນຕົວຈິງເຊັ່ນ ນຳເອົາແບບບົດລາຍງານທີ່ພິມເປັນຮ່າງ ຫຼື ຟອມມາໃຫ້ນັກຮຽນ ຂຽນຂໍ້ຄວາມຕື່ມໃສ່.
- ຈັດອະພິປາຍກຸ່ມຍ່ອຍ, ໃຫ້ນັກຮຽນອະພິປາຍສະແດງຄວາມຄິດເຫັນກ່ຽວກັບຄວາມສຳຄັນ, ປະໂຫຍກຂອງການລາຍງານທີ່ຖືກຕ້ອງ.
- ໃຫ້ນັກຮຽນຮອບຮວມບົດລາຍງານຕ່າງໆອາດຈະຊອກທີ່ຫໍສະໝຸດ, ຫ້ອງການ, ວິທະຍຸ, ໂທລະສັບ... ນຳມາສະເໜີໃຫ້ທຸກຄົນໃນຫ້ອງເບິ່ງແລ້ວພ້ອມກັນພິຈາລະນາເຖິງວິທີຂຽນ, ຮູບແບບ ແລະ ພາສາທີ່ໃຊ້ຂຽນ ບົດລາຍງານນັ້ນໆ.
- ຄູນຳເອົາຕົວຢ່າງບົດລາຍງານມາໃຫ້ນັກຮຽນອ່ານອອກສຽງໃຫ້ທຸກຄົນໃນຫ້ອງຟັງແລ້ວຊ່ວຍກັນ ພິຈາລະນາສ່ວນປະກອບ ແລະ ລັກສະນະຂອງບົດລາຍງານ.

- ໂຄງຮ່າງການຂຽນລາຍງານ

ກ. ພາກຕົ້ນ

- ຄຳຂວັນ
- ລາຍງານເລື່ອງຫຍັງ ?
- ໜ້າທີ່ຂອງຜູ້ລາຍງານ
- ລາຍງານເຖິງໃຜ ?

ຂ. ພາກເນື້ອໃນ

ໃຫ້ລາຍງານລະອຽດຕາມລຳດັບເຫດການ ຫຼື ວຽກທີ່ໄດ້ປະຕິບັດ ແລະ ຜົນສຳເລັດຕົວຈິງ

- ຈຸດດີ, ຈຸດອ່ອນ, ສາເຫດ, ບົດຮຽນທີ່ຖອດຖອນໄດ້
- ຂໍ້ສະເໜີ ( ຖ້າມີ )

ຄ. ພາກສຸດທ້າຍ

- ສະຖານທີ່, ວັນ, ເດືອນ, ປີລາຍງານ
- ຊື່ ແລະ ລາຍເຊັນຜູ້ລາຍງານ

ຕົວຢ່າງ: ຮ່າງການຂຽນລາຍງານການປະຊຸມ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

00000000

ລາຍງານການປະຊຸມ

- ຊື່ຂອງກອງປະຊຸມ.....................................
- ຄັ້ງວັນທີ..............ເດືອນ............ປີ.............
- ສະຖານທີ່ປະຊຸມ.......................................

ຜູ້ມາປະຊຸມ 1. ............................................................
( ຊື່ ແລະ ນາມສະກຸນ, ຕຳແໜ່ງ ແລະ ໜ້າທີ່ຮັບຜິດຊອບ )
2.............................................................

ຜູ້ບໍ່ມາປະຊຸມ 1.............................................................
( ຊື່ ແລະ ນາມສະກຸນ, ຕຳແໜ່ງ ແລະ ໜ້າທີ່ຮັບຜິດຊອບ )
2..............................................................

ເປີດກອງປະຊຸມເວລາ............................................

- ເນື້ອໃນກອງປະຊຸມ:

ວາລະທີ 1.......................................................

ວາລະທີ 2.3.4.............................................................

ມະຕິກອງປະຊຸມ.............................................................

ອັດກອງປະຊຸມເວລາ.......................................................

| ປະທານກອງປະຊຸມ | ຜູ້ລາຍງານ |
|---|---|
| ............................ | ............................. |
| ຊື່ ແລະ ນາມສະກຸນ | ຊື່ ແລະ ນາມສະກຸນ |

**ບົດຕົວຢ່າງ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ບົດລາຍງານກ່ຽວກັບການປູກຕົ້ນໄມ້**

**ຮຽນ:** ຄູປະຈຳຫ້ອງ ປ. 5 ກ

**ເລື່ອງ:** ການປູກຕົ້ນໄມ້ອ້ອມໂຮງຮຽນ

ອີງຕາມຄຳສັ່ງແນະນຳຂອງຜູ້ອຳນວຍການກ່ຽວກັບການຈັດຕັ້ງການປູກຕົ້ນໄມ້ອ້ອມໂຮງຮຽນ.

**ຈຸດປະສົງ:** ເພື່ອເຮັດໃຫ້ເດີ່ນໂຮງຮຽນມີຕົ້ນໄມ້ທີ່ໃຫ້ຮົ່ມເຢັນ.

ພວກຂ້ານ້ອຍໄດ້ຈັດຕັ້ງການປູກຕົ້ນໄມ້ດ້ວຍຄວາມເອົາໃຈໃສ່ຢ່າງພ້ອມພຽງເປັນທີ່ຮຽບຮ້ອຍແລ້ວ ແລະ ເຫັນວ່າທຸກຄົນໄດ້ຕັ້ງໜ້າຊ່ວຍເຫຼືອກັນ ແລະ ກັນຢ່າງດີ.

ຂ້ານ້ອຍຂໍລາຍງານວ່າຜ່ານການປູກຕົ້ນໄມ້ເຫັນວ່າໄດ້ຮັບຜົນ ແລະ ສະເໜີໃຫ້ຄູປະຈຳຫ້ອງແນະນຳວິທີໃນການບົວລະບັດໃນຂັ້ນຕໍ່ໄປ

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ວັນທີ 9 / 3 / 2016

ຜູ້ລາຍງານ

ນາງ ກ

## 6. ການສອນຂຽນປະກາດ

### 6.1 ຄວາມສຳຄັນຂອງການປະກາດ

ການປະກາດແມ່ນເຮັດໃຫ້ສາທາລະນະຊົນຮູ້ກ່ຽວກັບເລື່ອງໃດ ເລື່ອງໜຶ່ງໂດຍອາໄສສື່ມວນຊົນຊະນິດໃດຊະນິດໜຶ່ງເປັນເຄື່ອງມືສື່ສານ ເຊັ່ນ ປະກາດທາງວິທະຍຸ, ໂທລະທັດ, ໜັງສືພິມ, ປ້າຍປະກາດໃນທີ່ສາທາລະນະລັດ ແລະ ອື່ນໆ. ການປະກາດນັ້ນບາງເທື່ອກໍເປັນພຽງແຕ່ແຈ້ງໃຫ້ຮູ້ຈັກ ແລະ ປະຕິບັດຕາມ.

### 6.2 ປະເພດຂອງປະກາດ

ປະກາດມີ 2 ປະເພດຄື ປະກາດທົ່ວໄປ ແລະ ປະກາດທາງລັດຖະການ.

ປະກາດທົ່ວໄປ ເຊັ່ນ ປະກາດຮັບສະໝັກງານ, ປະກາດເຊີນທ່ຽວງານບຸນ, ປະກາດຫາຂອງຕົກເຮ່ຍເສຍຫາຍ, ປະກາດຂາຍສິນຄ້າ...

ປະກາດທາງລັດຖະການ ເຊັ່ນ ປະກາດແຂ່ງຂັນເສັງນັກຮຽນເກັ່ງ, ປະກາດຂອງກະຊວງສາທານະສຸກກ່ຽວກັບການປ້ອງກັນພະຍາດໄຂ້ເລືອດອອກ...

ກ.ຫຼັກການຂຽນປະກາດທົ່ວໄປ

ການຂຽນປະກາດທົ່ວໄປແມ່ນການຂຽນປະກາດທີ່ບໍ່ໄດ້ຈຳກັດ, ສ່ວນປະກາດແນ່ນອນຄວນປະຕິບັດຕາມຫຼັກການດັ່ງລຸ່ມນີ້:

- ບອກຈຸດປະສົງ ຫຼື ຄວາມຕ້ອງການໃນການປະກາດໃຫ້ຈະແຈ້ງ.
- ບອກລາຍລະອຽດຕາມສົມຄວນ.
- ໃຊ້ຄຳສັບສະເພາະເຈາະຈົງ, ປະໂຫຍກສັ້ນ, ເຂົ້າໃຈງ່າຍ ແລະ ໜ້າສົນໃຈແກ່ຜູ້ອ່ານ.

ຂ. ຫຼັກການຂຽນປະກາດທາງລັດຖະການ

ປະກາດທາງລັດຖະການແມ່ນການປະກາດຂອງອົງການໃດໜຶ່ງເຊິ່ງມີສ່ວນປະກອບດັ່ງນີ:

- ຊື່ອົງການ ຫຼື ໜ່ວຍງານທີ່ອອກປະກາດ.
- ເລື່ອງທີ່ປະກາດ.
- ເນື້ອຄວາມທີ່ປະກາດ.

- ເຫດຜົນ ຫຼື ຄວາມເປັນມາ.
- ຈຸດປະສົງຕົ້ນຕໍ.
- ລາຍລະອຽດ.
- ເງື່ອນໄຂ ແລະ ຂັ້ນຕອນປະຕິບັດຕ່າງໆ.

ກິດຈະກຳ: ວິທີສອນຂຽນປະກາດ

ອຸປະກອນ: ໜັງສືພິມ, ວາລະສານ, ໃບປະກາດແຈ້ງການ, ບົດປະກາດປະເພດຕ່າງໆ

ວິທີດຳເນີນກິດຈະກຳ:

- ຄູ ແລະ ນັກຮຽນສົນທະນາກ່ຽວກັບຄວາມສຳຄັນຂອງປະກາດ
- ຄູແບ່ງນັກຮຽນອອກເປັນກຸ່ມເພື່ອເຮັດກິດຈະກຳດັ່ງນີ້:
- ຄູນຳເອົາປະກາດ ຫຼື ແຈ້ງການຕ່າງໆມາໃຫ້ນັກຮຽນອ່ານ( ແຕ່ຄູຕ້ອງຕັດຫົວຂໍ້ອອກກ່ອນແລ້ວໃຫ້ນັກຮຽນຕັ້ງຊື່ ຫຼື ຫົວຂໍ້ຂອງປະກາດນັ້ນ.
- ຄູນຳເອົາປະກາດ ຫຼື ແຈ້ງການທາງລັດຖະການມາໃຫ້ນັກຮຽນອ່ານແລ້ວໃຫ້ນັກຮຽນແຍກປະກາດນັ້ນອອກເປັນແຕ່ລະພາກສ່ວນ.
- ຕາງໜ້າແຕ່ລະກຸ່ມຂຶ້ນລາຍງານ
- ຄູ ແລະ ນັກຮຽນຊ່ວຍກັນອະພິປາຍເຖິງວິທີການຂຽນປະກາດ
- ແຕ່ລະກຸ່ມແຂ່ງຂັນກັນຂຽນປະກາດຕາມຫົວຂໍ້ທີ່ກຸ່ມເລືອກ
- ຕາງໜ້າແຕ່ລະກຸ່ມອອກອ່ານໃຫ້ໝູ່ຟັງ
- ກຸ່ມອື່ນປະກອບຄຳເຫັນເພີ່ມເຕີມ
- ຄູ ແລະ ນັກຮຽນສະຫຼຸບ
- ຄູເກັບປຶດຂອງນັກຮຽນແຕ່ລະກຸ່ມໄປກວດ ຈາກນັ້ນຄູເອົາໄປຕິດໄວ້ໃນຫ້ອງຮຽນ ເພື່ອໃຫ້ນັກຮຽນອ່ານ

ຕົວຢ່າງ ຮ່າງແບບປະກາດທາງລັດຖະການ

ປະກາດ ຫຼື ແຈ້ງການ

ເລກທີ (ຖ້າມີ)

ເຖິງ:..............................................................................

ເລື່ອງ:..............................................................................

( ເຫດຜົນໃນການອອກປະກາດ ແລະ ຂໍ້ຄວາມທີ່ສິ່ງໃຫ້ປະຕິບັດ ຫຼື ວ່າເນື້ອໃນຕ່າງໆຂອງປະກາດ)...........................................................................................

ທີ່..................ວັນທີ.........ເດືອນ............ປີ...........

ຕຳແໜ່ງ ຫຼື ຊື່ສະຖາບັນທີ່ປະກາດ.

ລາຍເຊັນ

ຊື່ເຕັມ

ຕົວຢ່າງ  ປະກາດທາງລັດຖະການ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເລກທີ 43 ສປປ

ລັດຖະດຳລັດ

ຂອງປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກ່ຽວກັບການກຳນົດວັນເລືອກຕັ້ງ

ສະມາຊິກສະພາແຫ່ງຊາດ ຊຸດທີ IV

- ອີງຕາມລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມາດຕາ 53. ຂໍ້2;

- ອີງຕາມມາດຕາ 27 ຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ.
- ອີງຕາມມະຕິຕົກລົງຂອງຄະນະປະຈໍາສະພາແຫ່ງຊາດ ສະບັບເລກທີ 09 ລົງວັນທີ 6 ສິງຫາ 1997ວ່າດ້ວຍການກໍານົດເວລາເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ IV.
- ອີງຕາມການສະເໜີຂອງຄະນະປະຈໍາສະພາແຫ່ງຊາດ ສະບັບເລກທີ 21/ ຄປຈ ລົງວັນທີ 6 ສິງຫາ 1997 ກ່ຽວກັບການອອກລັດຖະດໍາລັດ ວ່າດ້ວຍການນົດວັນເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ IV .

ປະທານປະເທດ

ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດໍາລັດ

ມາດຕາ1: ປະກາດກໍານົດເອົາ ວັນອາທິດ ວັນທີ 21 ທັນວາ 1997 ເປັນວັນເລືອກຕັ້ງສະມາຊິກ ສະພາແຫ່ງຊາດຊຸດທີ IV.

ມາດຕາ2: ລັດຖະດໍາລັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 08 ສິງຫາ 1997.

ປະທານປະເທດ

ໜູຮັກພູມສະຫວັນ

# ບົດທີ3 ( ຕໍ່ )

# ການສອນຂຽນບົດປະເພດແບບຕ່າງໆ

## 7. ການສອນຂຽນຄຳຂວັນ

ການຂຽນຄຳຂວັນມີລັກສະນະດັ່ງນີ້

- ເປັນຄຳ ຫຼື ຂໍ້ຄວາມທີ່ສັ້ນ, ກະທັດຮັດໄດ້ໃຈຄວາມ
- ເປັນຖ້ອຍຄຳທີ່ເຫັນ ຫຼື ໄດ້ຟັງສາມາດຈື່ຈຳໄດ້ງ່າຍ
- ເປັນຂໍ້ຄວາມທີ່ບໍ່ຍາວເກີນໄປ ຫຼື ໃຊ້ຄຳຟຸມເຟືອຍເກີນຄວາມຈຳເປັນ
- ໃຊ້ຄຳດຶງດູດຈິດໃຈ, ຊັກຈູງໃຈຍາກຮູ້ຍາກເຫັນ ຫຼື ຍາກລອງ
- ໃຊ້ຄຳທີ່ມີສຳຜັດສະຫຼະ ຫຼື ສຳຜັດອັກສອນເພາະຈະຊ່ວຍໃຫ້ຈື່ຈຳໄດ້ງ່າຍ
- ບໍ່ໃຊ້ຄຳສັບທີ່ຍາກຫຼື ສັບວິຊາການທີ່ມີຄວາມໝາຍສະເພາະຢ່າງທີ່ບໍ່ສາມາດເຂົ້າໃຈໄດ້ຢ່າງກວ້າງຂວາງ
- ໃຊ້ຄຳ ຫຼື ຂໍ້ຄວາມທີ່ມີຄວາມແປກໃໝ່ກະຕຸ້ນຄວາມຮູ້ສຶກ
- ການສະກົດຄຳໄດ້ຖືກຕ້ອງຕາມຫຼັກໄວຍາກອນ

## 8. ການສອນຂຽນໂຄສະນາ

ການຂຽນໂຄສະນາ ໝາຍເຖິງການສະເໜີຂ່າວສານ ຫຼື ແຈ້ງຂ່າວສານໃຫ້ບຸກຄົນທີ່ເປັນກຸ່ມເປົ້າໝາຍຮັບຮູ້ກ່ຽວກັບສິນຄ້າ, ການບໍລິການ ຫຼື ແນວຄິດໂດຍເຈົ້າຂອງສິນຄ້າຫຼື ຜູ້ອຸປະຖຳທີ່ເປີດເຜີຍຕົວເອງຊັດເຈນ, ມີການຈ່າຍເງິນເປັນຄ່າໃຊ້ສື່ ແລະ ເປັນການນຳສະເໜີຂໍ້ມູນຂ່າວສານທີ່ບໍ່ໄດ້ໃຊ້ບຸກຄົນເຂົ້າໄປຕິດຕໍ່ໂດຍກົງ.

ການຂຽນໂຄສະນາມີຄວາມສຳຄັນ

- ເປັນເຄື່ອງມືໃນການຕິດຕໍ່ສື່ສານ
- ຊ່ວຍພັດທະນາລະບົບເສດຖະກິດໃນປະເທດ
- ຊ່ວຍຍົກລະດັບມາດຕະຖານການຄອງຊີບຂອງຄົນໃນສັງຄົມ
- ເກີດການແຂ່ງຂັນລະຫວ່າງທຸລະກິດຕ່າງໆ






- ຈຸດປະສົງຂອງການຂຽນໂຄສະນາ

1. ການຂຽນໂຄສະນາເພື່ອໃຫ້ຄວາມຮູ້, ຄວາມເຂົ້າໃຈ

- ການໂຄສະນາໃຫ້ຄວາມຮູ້ ກ່ຽວກັບປະເພດຂອງສິນຄ້າ ແລະ ບໍລິການເຊັ່ນ: ສິນຄ້າກະສິກຳ ແລະ ອຸດສາຫະກຳ

- ການໂຄສະນາໃຫ້ຄວາມຮູ້ ກ່ຽວກັບຄວາມສຳຄັນຂອງສິນຄ້າ ແລະ ບໍລິການໂດຍສະເພາະສິນຄ້າທີ່ມີຄວາມສຳຄັນຕໍ່ການດຳລົງຊີວິດຂອງມະນຸດເຊັ່ນ:

- ອາຫານ, ຢາຮັກສາໂລກ

- ການໂຄສະນາໃຫ້ຄວາມຮູ້ ກ່ຽວກັບປະໂຫຍດຂອງສິນຄ້າ ແລະ ການບໍລິການເຊັ່ນ: ການໂຄສະນາຄຸນສົມບັດຂອງຢາຮັກສາໂລກ

- ການໂຄສະນາໃຫ້ຄວາມຮູ້ຄວາມເຂົ້າໃຈ ກ່ຽວກັບແນວຄິດໃໝ່ຂອງການໂຄສະນາກ່ຽວກັບສິນຄ້າ ແລະ ບໍລິການໂດຍໃຊ້ສື່ໂຄສະນາແບບໃໝ່, ການໃຊ້ຄວາມຄິດສ້າງສັນ, ຕະຫຼອດຈົນການເຮັດໃຫ້ຜູ້ບໍລິໂພກໄດ້ມີສ່ວນຮ່ວມໃນການໂຄສະນາ.

- ການໂຄສະນາໃຫ້ຄວາມຮູ້ຄວາມເຂົ້າໃຈ ກ່ຽວກັບຂະບວນການຜະລິດສິນຄ້ານັບຕັ້ງແຕ່ເລີ່ມຕົ້ນຈົນສຳເລັດເປັນສິນຄ້າສຳເລັດຮູບ.

2. ການຂຽນໂຄສະນາເພື່ອໃຫ້ຂ່າວສານ

- ຂ່າວສານການຕະຫຼາດເປັນການໃຫ້ຂໍ້ມູນກ່ຽວກັບສະພາບເຫດການຂອງການຕະຫຼາດ

# ບົດທີ3 ( ຕໍ່ )

# ການສອນຂຽນບົດປະເພດແບບຕ່າງໆ

## 9.ການສອນຂຽນຂ່າວ

### 9.1 ຄວາມໝາຍຂອງຂ່າວ

ຂ່າວໝາຍເຖິງຄໍາລາຍງານເຫດການ ທີ່ເກີດຂຶ້ນຢູ່ບ່ອນໃດບ່ອນໜຶ່ງອອກໄປ ໃຫ້ຜູ້ທີ່ຢູ່ບ່ອນອື່ນຮັບຮູ້ນໍາ.

### 9.2 ການຂຽນຂ່າວ

ແມ່ນການຂຽນຮຽບຮຽງຄືນກ່ຽວກັບຂໍ້ຄວາມ ທີ່ບັນທຶກເຫດການໃດໜຶ່ງທີ່ເກີດຂຶ້ນໂດຍຜູ້ຂຽນໄດ້ແຊກຄໍາຄິດຄໍາເຫັນບາງຢ່າງຂອງຕົນເຂົ້ານໍາ.

ເລື່ອງທີ່ນໍາມາຂຽນເປັນຂ່າວໄດ້ແກ່: ນະໂຍບາຍ, ກິດຈະກໍາ, ຜົນການດໍາເນີນງານ, ການປະຕິບັດໂຄງການ, ເຫດການທີ່ໜ້າສົນໃຈເຊິ່ງມີຈຸດປະສົງສ້າງຄວາມຮູ້, ຄວາມນິຍົມ ຫຼື ປ້ອງກັນແກ້ໄຂຄວາມເຂົ້າໃຈຜິດນັ້ນເອງ.

## 10. ແຕ່ງບົດສອນ, ວິເຄາະບົດສອນ

ບົດສອນ

ວິຊາ: ພາສາລາວ ຊັ້ນປ5

ບົດທີ 1 ໃຊ້ເວລາສອນ 2 ຊົ່ວໂມງ

ຫົວບົດ: ແຫຼ່ງທ່ອງທ່ຽວໃນປະເທດລາວ

1.ຈຸດປະສົງ

- ເພື່ອໃຫ້ນັກຮຽນບອກໄດ້ພາກສ່ວນຕ່າງໆຂອງບົດລາຍງານ
- ໃຫ້ນັກຮຽນຂຽນບົດລາຍງານຖືກຕ້ອງຕາມໂຄງຮ່າງ

2.ເນື້ອໃນ

- ໂຄງຮ່າງຂອງການບົດລາຍງານ.

3.ສື່ການສອນ

- ປຶ້ມແບບຮຽນພາສາລາວຊັ້ນປ 5
- ໂຄງຮ່າງບົດລາຍງານ
- ບົດຕົວຢ່າງ

4.ປະເມີນຜົນ

- ສັງເກດການຕອບຄໍາຖາມ
- ສັງເກດການຂຽນບົດຂອງນັກຮຽນ
- ສັງເກດການອ່ານບົດຂອງນັກຮຽນ

5.ກິດຈະກໍາການຮຽນ-ການສອນ

- ຂັ້ນນໍາ

- ຄູທໍາຄວາມເຄົາລົບນັກຮຽນ
-ຄູກວດກາຈໍານວນພົນເຕັມ...........ຄົນຂາດ........ຄົນ
- ສະເໜີຊື່ ແລະ ຈຸດພິເສດຖ້າເປັນຄູໃໝ່

- ສະເໜີແຂກເຂົ້າຮ່ວມ (ຖ້າມີ)

+ທວນຄືນບົດຮຽນເກົ່າ

ຄູຕັ້ງຄຳຖາມ:

1.ບົດລາຍງານແມ່ນບົດແນວໃດ?

- ຄູແນະນຳໃຫ້ນັກຮຽນຕອບ
- ຄູສະຫຼຸບຄຳຕອບຂອງນັກຮຽນ
- ຄູຍ້ອງຍໍຜູ້ທີ່ຕອບຖືກແນະນຳຜູ້ທີ່ຕອບຜິດ

+ລ້ຽວເຂົ້າສູ່ບົດຮຽນໃໝ່

- ຄູຍົກຮູບພາບວັດພູຈຳປາສັກໃຫ້ນັກຮຽນສັງເກດ
- ຄູຖາມນັກຮຽນຮູບນີ້ແມ່ນຮູບຫຍັງ?ເພິ່ນໃຊ້ໄວ້ເຮັດຫຍັງ?
- ຄູສະຫຼຸບຄຳຕອບຂອງນັກຮຽນ

+ຂັ້ນສອນ

- ຄູແບ່ງກະດານອອກເປັນສອງສ່ວນເທົ່າກັນ
- ຄູຂຽນຫົວບົດໃໝ່ໃສ່ກະດານ

• ກິດຈະກຳທີ1 ທັດແຕ່ງ

- ຄູແນະນຳນັກຮຽນອ່ານໂຄງຮ່າງການຂຽນບົດລາຍງານໃນປຶ້ມແບບຮຽນ
- ຄູອະທິບາຍ ແລະ ຍົກຕົວຢ່າງປະກອບໃນການລາຍງານ

✚ ຄູຕັ້ງຄຳຖາມ

- ຄູແນະນຳນັກຮຽນຄົ້ນຄວ້າ

1. ບົດລາຍງານປະກອບມີຈັກພາກສ່ວນ?
2. ພາກສ່ວນຕົ້ນປະກອບມີຫຍັງແດ່?
3. ພາກສ່ວນເນື້ອໃນປະກອບມີຫຍັງແດ່?
4. ພາກສ່ວນທ້າຍປະກອບມີຫຍັງ?

- ຄູແນະນຳນັກຮຽນຄົ້ນຄວ້າເນື້ອໃນບົດຮຽນ
- ຄູແນະນຳໃຫ້ນັກຮຽນຕອບ ໂດຍເລັງໃສ່ນັກຮຽນກຸ່ມເປົ້າໝາຍ
- ຄູສະຫຼຸບຄຳຕອບຂອງນັກຮຽນແຕ່ລະຄົນ
- ຄູແນະນຳໃຫ້ນັກຮຽນຈົດໃສ່ປຶ້ມແບບຮຽນໃຜລາວ

• ກິດຈະກຳທີ2 ເຝິກຂຽນບົດລາຍງານຕົວຈິງ

- ຄູຕິດໂຄງຮ່າງການຂຽນບົດລາຍງນໃສ່ກະດານ
- ຄູອະທິບາຍໂຄງຮ່າງຂຽນບົດລາຍງານ
- ຄູນຳເອົາບົດຕົວຢ່າງມາໃຫ້ນັກຮຽນສັງເກດ
- ຄູສະຫຼຸບຄືນ
- ແບ່ງນັກຮຽນອອກເປັນ 4 ກຸ່ມ
- ກຸ່ມລະ 4 –5ຄົນ
- ຄູແບ່ງຄຳຖາມໃຫ້ນັກຮຽນຄົ້ນຄວ້າ
- ຄູແນະນຳນັກຮຽນຂຽນຕາມບົດລາຍງານ

+ ກຸ່ມທີ1 ຈົ່ງຂຽນບົດລາຍງານການອະນາໄມຫ້ອງຮຽນ
+ ກຸ່ມທີ2 ຈົ່ງຂຽນບົດລາຍງານການອະນາໄມຫ້ອງຮຽນ
+ ກຸ່ມທີ3 ຈົ່ງຂຽນບົດລາຍງານການອະນາໄມຫ້ອງຮຽນ
+ ກຸ່ມທີ4 ຈົ່ງຂຽນບົດລາຍງານການອະນາໄມຫ້ອງຮຽນ
- ຄູຕິດຕາມຊ່ວຍເຫຼືອ
- ແນະນາໃຫ້ນັກຮຽນຕາງໜ້າກຸ່ມອອກມາຜ່ານໃຫ້ກຸ່ມອື່ນຟັງ ໂດຍເນັ້ນໃສ່ນັກຮຽນກຸ່ມເປົ້າໝາຍ
- ຄູສະຫຼຸບການຂຽນຂອງນັກຮຽນ
- ຄູແນະນຳຄືນ ແລະ ແນະນຳໃຫ້ນັກຮຽນການໃສ່ປຶ້ມຂຽນໃຜລາວ
- ເຝິກຂຽນເປັນລາຍບຸກຄົນ ເນັ້ນນັກຮຽນຜູ້ທີ່ຮຽນອ່ອນ
- ຄູຢາຍໂຄງຮ່າງການຂຽນບົດລາຍງານໃຫ້ນັກຮຽນ
- ຄູແນະນຳໃຫ້ນັກຮຽນຂຽນບົດຕາມໂຄງຮ່າງ
- ຄູກຳນົດຫົວຂໍ້ໃຫ້: ການຂຽນບົດລາຍງານກ່ຽວກັບການອະນາໄມຫ້ອງຮຽນ
- ຄູນຳເອົາບົດຂຽນມາກວດ
- ຄູໃຫ້ຄະແນນ
- ແນະນຳຄືນບ່ອນທີ່ນັກຮຽນຂຽນຜິດ
+ ຂັ້ນສະຫຼຸບ
- ຄູສະຫຼຸບຄືນກ່ຽວກັບໂຄງຮ່າງການຂຽນບົດລາຍງານ
- ຄູແນະນຳໃຫ້ນັກຮຽນບັນທຶກໃສ່ປຶ້ມຂຽນໃຜລາວ
+ ຂັ້ນວັດຜົນ
- ທົດສອບດ້ວຍການຂຽນບົດລາຍງານເປັນລາຍບຸກຄົນຕາມໂຄງຮ່າງ
+ ມອບວຽກບ້ານ - ຕັກເຕືອນ
- ອ່ານຄືນບົດຮຽນທີ່ຮຽນຜ່ານມາ
- ຊ່ວຍວຽກພໍ່ແມ່

ວັນທີ........................................... ວັນທີ.............................

ຜູ້ອຳນວຍການ ຄູປະຈຳລາຍວິຊາ

ບົດສອນ

ວິຊາພາສາລາວ ຊັ້ນປ4

ບົດທີ: 61 ເວລາ 3 ຊົ່ວໂມງ

ຫົວບົດ: ຈົດໝາຍເຖິງເພື່ອນ

ຈຸດປະສົງ

- ໃຫ້ນັກຮຽນຕອບຄຳຖາມຕາມຮູບພາບໄດ້
- ເພື່ອໃຫ້ນັກຮຽນເກັບກຳເນື້ອໃນໃຈຄວາມຂອງບົດໄດ້
- ໃຫ້ນັກຮຽນບອກໄດ້ເນື້ອໃນຂອງຈົດໝາຍ
- ໃຫ້ນັກຮຽນຂຽນຈົດໝາຍໄດ້ຖືກຕ້ອງຕາມໂຄງຮ່າ

ເນື້ອໃນ

- ໂຄງຮ່າງການຂຽນຈົດໝາຍມີພາກສ່ວນຕົ້ນ,ພາກສ່ວນເນື້ອໃນ, ພາກສ່ວນສະຫຼຸບ
ການສື່ສານ

- ຮູບຊອງຈົດໝາຍ, ຮູບຄົນນັ່ງຂຽນໜັງສື, ບັດຄຳສັບ, ໂຄງຮ່າງການຂຽນຈົດໝາຍ, ບົດຕົວຢ່າງ
ປະເມີນຜົນ

- ສັງເກດຈາກການຕອບຄຳຖາມ ຂອງນັກຮຽນ
- ສັງເກດຈາກບົດຂຽນຕົວຈິງ
- ສັງເກດຈາກຄວາມສົນໃຈຂອງນັກຮຽນ

ກິດຈະກຳການຮຽນ - ການສອນ

+ ຂັ້ນສອນ:

- ຄູທຳຄວາມເຄົາລົບນັກຮຽນ
- ຄູກວດກາຈຳນວນພົນເຕັມ...ຄົນຂາດຂອງນັກຮຽນ, ຂາດ...ຄົນ.
- ສະເໜີແຂກເຂົ້າຮ່ວມ( ຖ້າມີ )

+ ທວນຄືນບົດຮຽນເກົ່າ:ຄູຕັ້ງຄຳຖາມ

1.ເພິ່ນຈັດບຸນປີໃໝ່ລາວຂຶ້ນເດືອນໃດ?

- ສະຫຼຸບຄຳຕອບຂອງນັກຮຽນ ( ຖືກຄູຍ້ອງຍໍ - ຜິດຄູແນະນຳ )

+ ລ້ຽວເຂົ້າສູ່ບົດຮຽນໃໝ່:

- ຄູຍົກຮູບພາບຊອງຈົດໝາຍໃຫ້ນັກຮຽນສັງເກດ
- ຄູຖາມນັກຮຽນວ່ານີ້ແມ່ນຫຍັງ?
- ຄູສະຫຼຸບຄຳຕອບຂອງນັກຮຽນ
- ຊົ່ວໂມງນີ້ຄູພາພວກຫຼານຮຽນກ່ຽວກັບຈົດໝາຍເຖິງເພື່ອນ

+ ຂັ້ນສອນ:

- ຄູແບ່ງກະດານອອກເປັນສອງສ່ວນເທົ່າກັນ
- ຄູຂຽນຫົວບົດໃສ່ກະດານ.

**<u>ກິດຈະກຳ</u>: 1 ສົນທະນາກ່ຽວກັບຮູບພາບ**

- ໃນການສົນທະນາຄູໄດ້ເລັງໃສ່ນັກຮຽນກຸ່ມເປົ້າໝາຍໃຫ້ມີສ່ວນຮ່ວມຫຼາຍ
- ຄູຍົກຮູບພາບໃຫ້ນັກຮຽນສັງເກດ
- ຄູຖາມນັກຮຽນວ່າ:

1.ຄົນກຳລັງເຮັດຫຍັງ?

2. ໃນຮູບນັ້ນມີຫຍັງແດ່?

- ຄູສະຫຼຸບຄືນຕໍ່ກັບຄຳຕອບ( ຖືກຄູຍ້ອງຍໍ - ຜິດຄູແນະນຳ )

**ກິດຈະກຳທີ2 ພາກອ່ານ**

- ຄູແນະນຳນັກຮຽນອ່ານເນື້ອໃນບົດຮຽນບົດທີ 61
- ຄູໃຫ້ນັກຮຽນເວົ້າຄືນກ່ຽວກັບເນື້ອໃນຕົ້ນຕໍຂອງເລື່ອງ ໂດຍເລັ່ງໃສ່ນັກຮຽນກຸ່ມເປົ້າໝາຍ
- ຄູອະທິບາຍຄຳສັບທີ່ນັກຮຽນບໍ່ເຂົ້າໃຈ
- ພາຍຫຼັງທີ່ນັກຮຽນອ່ານເນື້ອໃນແລ້ວ

ຕັ້ງຄຳຖາມ:

1.ໃຜເປັນຜູ້ຂຽນຈົດໝາຍ?

2.ຜູ້ຮັບຈົດໝາຍນີ້ແມ່ນໃຜ?

3.ເປັນຫຍັງລາວຈຶ່ງຂຽນຈ . ມ ແລະ ເນື້ອໃນ ຈ. ມເວົ້າເຖິງຫຍັງ?

- ຄູອແນະນຳໃຫ້ນັກຮຽນຕອບໂດຍເລັງໃສ່ນັກຮຽນກຸ່ມເປົ້າໝາຍ
- ຄູສະຫຼຸບຄຳຕອບຂອງນັກຮຽນ
- ຕອບຖືກຄູຍ້ອງຍໍ, ຜິດແນະນຳຕື່ມ
- ຄູແນະນຳນັກຮຽນຂຽນເນື້ອໃນບົດຮຽນໃສ່ປື້ມຂຽນຂອງໃຜລາວ

**ກິດຈະກຳທີ3 ພາກເຝິກຂຽນຕົວຈິງ**

- ຄູອະທິບາຍເຖິງຄວາມໝາຍຂອງຈົດໝາຍ
- ຄູນຳເອົາໂຄງຮ່າງຈົດໝາຍຕິດໃສ່ກະດານ
- ຄູອະທິບາຍໄປແຕ່ລະພາກສ່ວນຄື: ພາກສ່ວນຕົ້ນ,ພາກສ່ວນເນື້ອໃນ, ພາກສ່ວນສະຫຼຸບ

ຄູຕັ້ງຄຳຖາມ:

1. ຈົດໝາຍປະກອບມີຈັກພາກສ່ວນ?

- ຄູສະຫຼຸບຄຳຕອງຂອງນັກຮຽນ
- ນັກຮຽນຕອບຖືກຍ້ອງຍໍ, ຜິດແນະນຳຕື່ມ
- ຄູນຳເອົາຈົດໝາຍຕົວຢ່າງມາໃຫ້ນັກຮຽນອ່ານເພື່ອໃຫ້ນັກຮຽນວິເຄາະໃນແຕ່ລະພາກສ່ວນ

**+ ເຝິກຂຽນຕົວຈິງ ໃນຄັ້ງທີ1**

- ຄູໃຫ້ນັກຮຽນຂຽນຈົດໝາຍເປັນລາຍບຸກຄົນໂດຍຄູໄດ້ກຳນົດຫົວຂໍ້ໃຫ້ຄື: ຂຽນຈົດໝາຍຫາເພື່ອນ
- ຄູຕິດຕາມແນະນຳການຂຽນຕົວຈິງ
- ຄູນຳເອົາບົດຂຽນມາກວດຄືນ
- ຄູໃຫ້ນັກຮຽນກຸ່ມເປົ້າໝາຍອ່ານສູ່ໝູ່ຟັງໃນຫ້ອງ
- ຄູໄດ້ໝາຍບ່ອນທີ່ນັກຮຽນຂຽນຜິດ
- ຄູສະຫຼຸບຄືນຜົນການຂຽນຂອງນັກຮຽນ

**+ ເຝິກຂຽນຕົວຈິງ ໃນຄັ້ງທີ2**

- ຄູໃຫ້ນັກຮຽນຂຽນຈົດໝາຍເປັນລາຍບຸກຄົນໂດຍຄູໄດ້ກຳນົດຫົວຂໍ້ໃຫ້ຄື: ຂຽນຈົດໝາຍຫາເພື່ອນ
- ຄູຕິດຕາມແນະນຳການຂຽນຕົວຈິງ
- ຄູນຳເອົາບົດຂຽນມາກວດຄືນ
- ຄູໄດ້ໝາຍບ່ອນທີ່ນັກຮຽນຂຽນຜິດ

**+ເຝິກຂຽນຕົວຈິງ ໃນຄັ້ງທີ3**

- ຄູໃຫ້ນັກຮຽນຂຽນຈົດໝາຍເປັນລາຍບຸກຄົນໂດຍຄູໄດ້ກຳນົດຫົວຂໍ້ໃຫ້ຄື: ຂຽນຈົດໝາຍຫາເພື່ອນ
- ຄູຕິດຕາມແນະນຳການຂຽນຕົວຈິງ
- ຄູນຳເອົາບົດຂຽນມາກວດຄືນ
- ຄູໄດ້ໝາຍບ່ອນທີ່ນັກຮຽນຂຽນຜິດ ແລະ ໃຊ້ຄຳສັບທີ່ຍັງບໍ່ທັນເໝາະສົມ
- ໃຫ້ນັກຮຽນກຸ່ມເປົ້າໝາຍອອກມາອ່ານບົດຂຽນຂອງຕົນ
- ຄູສະຫຼຸບບົດຂຽນຂອງນັກຮຽນ

+ **<u>ສະຫຼຸບ</u>**:

- ຄູ ແລະ ນັກຮຽນພ້ອມກັນສະຫຼຸບບົດຮຽນທີ່ຜ່ານ ມາ
- ຄູແນະນຳໃຫ້ນັກຮຽນຈົດເອົາບົດຮຽນໃສ່ປຶ້ມຂຽນ

**<u>ວັດຜົນ</u>**:

- ຄູໃຫ້ນັກຮຽນກຸ່ມເປົ້າໝາຍອະທິບາຍຄືນໂຄງຮ່າງການຂຽນຈົດໝາຍ
- ຄູສະຫຼຸບຄືນ

**ບົດສອນ**

ວິຊາ: ພາສາລາວ ຊັ້ນຮຽນ: ປ5

ບົດທີ 49 ( ຕໍ່) ເວລາ 90 ນາທີ

ຫົວບົດ: ຄຳຮ້ອງ

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນ-ການສອນ | | ເວລາ | ສື່ການສອນ | ປະເມີນຜົນ |
|---|---|---|---|---|---|---|
| | | ກິດຈະກຳຄູ | ກິດຈະກຳນັກຮຽນ | | | |
| | ຕອບ: | ຂັ້ນນຳ:<br>- ຄູທຳຄວາມເຄົາລົບນັກຮຽນ<br>-ຄູກວດກາຈຳນວນພົນເຕັມ .........ຄົນ,ຍິງ........ຄົນ, ຂາດ....ຄົນ<br>• ທວນຄືນບົດຮຽນເກົ່າຄຳຖາມ<br>1.ຂັ້ນຕອນການຂຽນຄຳຮ້ອງມີຂັ້ນຕອນໃດແດ່?<br>-ຄູສະຫຼຸບຄືນຄຳຕອບນັກຮຽນ | - ນັກຮຽນທຳຄວາມເຄົາລົບຄູ<br>- ນັກຮຽນລາຍງານຄົນຂາດ<br>- ນັກຮຽນຕອບ | 10 ນາທີ | ບັດຄຳຖາມ | ສັງເກດການຕອບຄຳຖາມຂອງນັກຮຽນ |
| ນັກຮຽນສາມາດຂຽນຄຳຮ້ອງຕາມໂຄງຮ່າງ | ບົດທີ 49 ( ຕໍ່) ຄຳຮ້ອງ | ຂັ້ນສອນ<br>-ຄູແບ່ງກະດານອອກເປັນ 2 ສ່ວນ<br>-ຄູຂຽນຫົວບົດໃສ່ກະດານ<br>**ກິດຈະກຳທີ 1 ເຝິກການຂຽນຄຳຮ້ອງຕົວຈິງໂດຍເນັ້ນໃສ່ນັກຮຽນກຸ່ມເປົ້າໝາຍ** | -ນັກຮຽນບັນທຶກ<br>-ນັກຮຽນສັງເກດບົດຄຳຮ້ອງຕົວຢ່າງພ້ອມທັງອ່ານຄຳຮ້ອງ | 50 ນາທີ | ບົດຕົວຢ່ | ສັງເກດຈາກຄວາມເອົາໃຈໃ |

| | | | | | | |
|---|---|---|---|---|---|---|
| ຖືກຕ້ອງ ແລະ ນໍາໃຊ້ໄດ້ໃນຊີວິດປະຈໍາວັນ | ຫົວຂໍ້ການຂຽນຄໍາຮ້ອງ:ຂໍຮຽນຕໍ່ທີ່ຊັ້ນມັດທະຍົມຕອນຕົ້ນ | -ຄູຕິດຄໍາຮ້ອງຕົວຢ່າງໃສກະດານ ແລະ ແນະນໍາໃຫ້ນັກຮຽນອ່ານບົດຕົວຢ່າງ<br>-ຄູຕິດຕາມການອ່ານຂອງນັກຮຽນແຕ່ລະຄົນ<br>-ຄູໄດ້ກໍານົດຫົວຂໍ້ການຂຽນຄາຮ້ອງຄື: ຂໍຮຽນຕໍ່ທີ່ຊັ້ນມັດທະຍົມຕອນຕົ້ນ<br>-ຄູໃຫ້ນັກຮຽນຂຽນເປັນລາຍບຸກຄົນ<br>-ຄູຢາຍແບບເຝິກໂຄງຮ່າງການຂຽນຄໍາຮ້ອງໃຫ້ນັກຮຽນ<br>-ຄູແນະນໍາໃຫ້ນັກຮຽນຂຽນຄໍາຮ້ອງຕາມໂຄງຮ່າງ<br>-ຄູຕິດຕາມແນະນໍາຊ່ວຍເຫຼືອນັກຮຽນໂດຍເລັງໃສ່ກຸ່ມເປົ້າໝາຍ<br>-ຄູກວດບົດກວດກາຂອງນັກຮຽນພ້ອມທັງໃຫ້ຄະແນນ<br>-ພ້ອມທັງໝາຍບອກບ່ອນທີ່ນັກຮຽນຂຽນຜິດ | -ນັກຮຽນຟັງການແນະນໍາຈາກຄູ<br>-ນັກຮຽນຂຽນຄໍາຮ້ອງຕົວຈິງເປັນລາຍບຸກຄົນ | | ງຄໍາຮ້ອງ<br>ແບບເຝິກຂຽນຄໍາຮ້ອງ | ສ່ຂອງນັກຮຽນ<br>ສັງເກດຈາກບົດຂຽນຕົວຈິງຂອງນັກຮຽນ |
| | | • **ຂັ້ນສະຫຼຸບ**<br>-ຄູ ແລະ ນັກຮຽນພ້ອມກັນສະຫຼຸບຄືນເນື້ອໃນບົດຮຽນກ່ຽວກັບຂັ້ນຕອນການຂຽນຄໍາຮ້ອງ.<br>-ໃຫ້ນັກຮຽນກຸ່ມເປົ້າໝາຍເວົ້າຄືນກ່ຽວກັບຂັ້ນຕອນການຂຽນຄໍາຮ້ອງ<br>-ຄູຖາມຄວາມຂ້ອງໃຈຂອງນັກຮຽນ ( ຖ້າມີ )ຄູໃຫ້ນັກຮຽນຈົດເອົາເນື້ອໃສ່ປຶ້ມຂອງໃຜລາວ | -ນັກຮຽນບັນທຶກ<br>-ນັກຮຽນເວົ້າຄືນກ່ຽວກັບຂັ້ນຕອນການຂຽນຄໍາຮ້ອງ | 5 ນາທີ | | -ສັງເກດຈາກຄວາມເຂົ້າໃຈຂອງນັກຮຽນ |
| | | • **ຂັ້ນວັດຜົນ**<br>- ຄູທົດສອບນັກຮຽນ | | | | |

| | | | | | | |
|---|---|---|---|---|---|---|
| | | - ໃຫ້ນັກຮຽນຂຽນຄຳຮ້ອງຕົວຈິງຕາມໂຄງຮ່າງໂດຍທີ່ຄູກຳນົດຫົວຂໍ້ໃຫ້: ຂໍຮຽນຕໍ່ທີ່ຊັ້ນມັດທະຍົມຕອນຕົ້ນ<br>-ນຳເອົາບົດທົດສອບມາກວດພ້ອມໃຫ້ຄະແນນ ແລະ ແນະນຳຄືນບ່ອນນັກຮຽນຂຽນຄຳສັບຍັງບໍ່ທັນຖືກຕ້ອງ, ເໝາະສົມ.<br>➢ **<u>ຕັກເຕືອນ -ມອບວຽກບ້ານ</u>**<br>- ພວກນ້ອງພະຍາຍາມຮ່ຳຮຽນຕື່ມ ແລະ ຟັງຄຳອະທິບາຍຂອງຄູໃນເວລາຮຽນ.<br>- ເວລາພວກນ້ອງເມືອເຮືອນຄວນເບິ່ງບົດຮຽນຕື່ມອີກ ແລະ ຊ່ວຍເຫຼືອວຽກພໍ່ແມ່. | -ນັກຮຽນຂຽນຄຳຮ້ອງຕົວຈິງ | 25 ນາທີ | | -ສັງເກດຈາກບົດຂຽນຕົວຈິງຂອງນັກຮຽນ |

ວັນທີ........................................ ວັນທີ…..................................

ຜູ້ອຳນວຍການໂຮງຮຽນ ຄູປະຈຳວິຊາ

# ບົດທີ 4
# ການສອນຂຽນນິທານ

## 1. ການສອນຂຽນນິທານຄືນຈາກການຟັງ

### 1.1 ຄວາມໝາຍຂອງນິທານພື້ນເມືອງ

ນິທານພື້ນເມືອງແມ່ນພາກສ່ວນໜຶ່ງຂອງວັນນະຄະດີພື້ນເມືອງລາວເຮົາ, ເປັນມູນມໍລະດົກອັນລໍ້າຄ່າທາງດ້ານວັດທະນະທໍາຂອງຊາດ, ມັນໄດ້ເວົ້າເຖິງຮ່ອງຮອຍ ແລະ ຮູບການອັນແຈ່ມໃສຂອງການຕໍ່ສູ້ຕາມທໍາມະຊາດ ແລະ ການຕໍ່ສູ້ທາງດ້ານສັງຄົມຂອງປູ່ຍ່າຕາຍາຍຂອງພວກເຮົາທີ່ໄດ້ແຕ່ງຂຶ້ນ ແລະ ເລົ່າເລື່ອງເຫຼົ່ານັ້ນປາກຕໍ່ປາກສືບທອດກັນມາແຕ່ອະດີດຈົນຮອດປັດຈຸບັນ.

ເນື້ອໃນຕົ້ນຕໍຂອງນິທານສ່ອງແສງເຖິງການຕໍ່ສູ້ຊົ້ນຊັ້ນ ແລະ ບັນຫາສັງຄົມອື່ນໆເຊັ່ນປະຫວັດສາດ, ການດໍາລົງຊີວິດ ແລະ ຄວາມປາຖະໜາຂອງປະຊາຊົນ. ຕົງລະຄອນຂອງນິທານແມ່ນຄົນ, ສັດສາວາສິ່ງ ແລະ ອື່ນໆທີ່ມີລັກສະນະເພີນຈິດເຫຼືອເຊື່ອ.

### 1.2 ຈຸດພິເສດຂອງນິທານ

ນິທານພື້ນເມືອງເຖິງແມ່ນວ່າຈະມີເນື້ອໃນສັດຈະທັດຢູ່ກໍ່ຕາມຄົນເຮົາບໍ່ອາດຈະເຊື່ອວ່າບົດເລື່ອງນັ້ນເປັນຄວາມຈິງໄດ້, ພຽງແຕ່ສ່ອງແສງເຖິງຄວາມເປັນຈິງດ້ວຍຮູບການ ສິລະປະວັນນະຄະດີເພື່ອເປັນການຊຸກຍູ້ປຸກລະດົມກໍາລັງໃຈໃຫ້ແກ່ຄົນເຮົາເທົ່ານັ້ນ.

ນິທານຍັງອະທິບາຍກົກເຄົ້າການກໍາເນີດ ຂອງຮ່ອງຮອຍຂອງປະກົດການ ທໍາມະຊາດໃນທ້ອງຖິ່ນຕ່າງໆເພື່ອສ່ອງແສງເຖິງບັນຫາສັງຄົມເຊັ່ນ ການຕໍ່ສູ້ເພື່ອລົບລ້າງຄວາມອາຄາດບາດໝາງລະຫວ່າງບັນດາເຜົ່າ ກໍຄືກຸ່ມຄົນ ແລະ ຊົ້ນຊັ້ນຕ່າງໆ. ການຕໍ່ສູ້ຕ້ານກັບສິ່ງທີ່ໄຮ້ມະນຸດສະທໍາ, ການຕໍ່ສູ້ເພື່ອຄວາມຮັກອັນສິດໃສບໍລິສຸດ ແລະ ອື່ນໆ.

### 1.3 ເນື້ອໃນຂອງນິທານ

ນິທານມີເນື້ອໃນສ່ອງແສງເຖິງຮ່ອງຮອຍປະຫວັດສາດ ແລະ ປາກົດການທໍາມະຊາດອັນສວຍສົດງົດງາມ ແລະ ອຸດົມຮັ່ງມີຂອງປະເທດຊາດ, ທ້ອງຖິ່ນ ແລະ ບ້ານເກີດເມືອງນອນ.

### 1.4 ສິລະປະຂອງນິທານ

ນິທານແມ່ນເລື່ອງເລົ່າປະເພດໜຶ່ງ ທີ່ມີລັກລະນະພິເສດທາງດ້ານເນືອໃນ ແລະ ຮູບການນິທານເປັນບົດເລື່ອງຍາວ ແຕ່ເລົ່າງ່າຍ ແລະ ຈື່ງ່າຍ, ນິທານ ຍັງມີຮູບການສິລະປະລົ້ມຄົນ, ເວົ້າໂຍກເຢາະເຢີຍ, ສຽດສີເພື່ອເປັນຜົນດີໃນການຍົກເນື້ອໃນແນວຄິດຂອງບົດເລື່ອງໃຫ້ສູງຂຶ້ນ.

### 1.5 ການຟັງນິທານ

ການຟັງນິທານເປັນທັກສະທີ່ຈໍາເປັນໃນການສະແຫວງຫາຄວາມຮູ້ ແລະ ຄຸນປະໂຫຍດຕໍ່ການດໍາລົງຊີວິດປະຈໍາວັນຢ່າງຍິ່ງ.

### 1.6 ຫຼັກສໍາຄັນໃນການສອນຟັງນິທານ

- ຕ້ອງສອນໃຫ້ນັກຮຽນເຂົ້າໃຈເຖິງຈຸດປະສົງຂອງການຟັງນິທານແຕ່ລະປະເພດ, ແຕ່ລະຢ່າງເມື່ອຟັງນິທານແລ້ວຈະຕ້ອງເຂົ້າໃຈເນື້ອໃນ, ຈື່ຕົວລະຄອນຂອງບົດນັ້ນໆໃຫ້ໄດ້.

- ການສອນຟັງນິທານຕ້ອງຮູ້ໃສ່ຊື່ເລື່ອງຕ່າງໆເຊັ່ນ ນິທານສັດ, ເທບນິຍາຍ, ພື້ນສືບ.

- ການສອນຟັງນິທານແມ່ນການສົ່ງເສີມໃຫ້ເດັກນ້ອຍຮູ້ການຊ່ວຍເຫຼືອຕົນເອງໃຫ້ຫຼາຍທີ່ສຸດ ແລະ ຄົ້ນຄວ້າຂຽນ ແລະ ເລົ່າບົດນິທານໄດ້.

- ການສອນຟັງນິທານຕ້ອງໃຫ້ພົວພັນກັບທັກສະອື່ນໆ. ຟັງນິທານແລ້ວ ສະຫຼຸບຄືນໄດ້ ແລະ ສາມາດເລົ່ານິທານໃຫ້ຜູ້ອື່ນຟັງໄດ້.

- ການສອນຟັງນິທານ ຕ້ອງສຶກສາອົບຮົມໃຫ້ນັກຮຽນມີມາລະຍາດທີ່ດີໃນການຟັງນະທານ.

## 2. ການສອນຂຽນເລື່ອງຕາມຈິນຕະນາການ

ເປັນການຂຽນເລື່ອງທີ່ມີຕົວລະຄອນ, ຂອບເຂດບັນຫາດ ແກ້ໄຂບັນຫາ ແລະ ມີຄະຕິເຕືອນໃຈໂຄງຮ່າງຂອງບົດຂຽນແບບຈິນຕະນາການ ຫຼື ນິທານປະກອບດ້ວຍ:

- ການເປີດຫົວເລື່ອງ ( ສະເໜີພາບລວມຂອງເລື່ອງ)
- ການເດີນເລື່ອງ ( ສະເໜີເຫດການຂອງເລື່ອງຕາມລຳດັບເຊັ່ນ: ຂອດບັນຫາ ແລະ ແກ້ໄຂບັນຫາ)
- ການສະຫຼຸບເລື່ອງ( ສິ່ງທີ່ຮຽນຮູ້ຈາກບົດເລື່ອງ ແລະ ສະແດງທັດສະນະຕໍ່ບົດຂຽນ)

# ບົດທີ 4 ( ຕໍ່)
# ການສອນຂຽນນິທານ

## 3. ການສອນຂຽນກາບກອນ

3.1 ຄວາມໝາຍຂອງກາບກອນ

ກາບກອນໝາຍເຖິງຄຳເວົ້າ ທີ່ຈັດເປັນລະບຽບ ແລະ ມີຖ້ອຍຄຳເກາະກ່າຍກັນ, ຄ່ອງກັນໂດຍມີການກຳນົດຄຳເອກ, ຄຳໂທໃຫ້ເປັນຈັງຫວະທຳນອງທີ່ມ່ວນອ່ອນຊອນ, ມີການສຳຜັດເນື້ອງສຽງລະຫວ່າງຄຳຕ່າງໆເພິ່ນໃຊ້ກາບກອນສຳລັບອ່ານ, ຂັບລຳ ຫຼື ເວົ້າຕໍ່ແຍກັນລະຫວ່າງບ່າວສາວ.

3.2 ປະເພດກາບກອນ

ກາບກອນມີຫຼາຍປະເພດຄື: ກາບ, ກອນ, ໂຄງ ແລະ ສານ ເຊິ່ງແຕ່ລະປະເພດມີຫຼາຍຮູບແບບຕ່າງກັນ, ເຊິ່ງຕໍ່ໄປນີ້ຈະຍົກຕົວຢ່າງໃຫ້ເບິ່ງສະເພາະແຕ່ກາບ ແລະ ກອນເທົ່ານັ້ນ.

**ກ. ກາບ** “ ກາບ ” ແມ່ນກອນປະເພດໜຶ່ງເຊິ່ງມີການສຳຜັດຊ້ອນຕໍ່ກັນໄປເລື້ອຍໆ ແຕ່ຕົ້ນຈົນບົດ. ລັກສະນະສຳຜັດຂອງກາບວັກໜຶ່ງຈະມີ 7 ຄຳ, ຕອນໜ້າມີ 3 ຄຳ ແລະ ຕອນຫຼັງມີ 4 ຄຳໂດຍບໍ່ໄດ້ກຳນົດເປັນບົດ, ບາດຄືກາບກອນອື່ນ. ເພິ່ນມັກໃຊ້ກາບສຳລັບກອນອ່ານ, ກອນເຊີ້ງໃນບຸນປະເພນີຕ່າງໆເຊັ່ນ: ( ເຊີ້ງບຸນຊ່ວງເຮືອ, ບຸນບັ້ງໄຟ ແລະ ອື່ນໆ ).

ຕົວຢ່າງ: ກາບປູ່ສອນຫຼານ

| | |
|---|---|
| ຝູງລູກຫຼານ | ຈື່ຈຳເອົາໄວ້ |
| ໃຜຈື່ໄດ້ | ເມືອໜ້າຍ່ອມຍິນ |
| ຫຼົວ ແລະ ຟືນ | ຢ່າເອົາຮອງນັ່ງ |
| ເຊື້ອນັ່ງຕ່ຳ | ຢ່າໄດ້ນັ່ງສູງ |
| ເຊື້ອລຸງຕາ | ໃຫ້ຢ່າປານແກ້ວ |
| ປູ່ສັງແລ້ວ | ຫຼານຫຼ້າຈື່ຈຳ <… > |

**ຂ. ກອນ** “ ກອນ ” ແມ່ນບົດປະເພດໜຶ່ງທີ່ມີການສຳຜັດເກາະກ່າຍກັນເປັນແຖວຄືດັ່ງກອນເຮືອນ. ລັກສະນະຂອງກອນ ໃນວັກໜຶ່ງຈະມີ 7 ຄຳ, 9 ຄຳ, 11 ຄຳ ຫຼື 15 ຄຳ. ກອນຍັງມີຄຳບຸບພະບົດຕື່ມເຂົ້າຂ້າງໜ້າ ແລະ ຄຳສ້ອຍຕື່ມເຂົ້າຂ້າງຫຼັງ.

- ກອນມີຫຼາຍຊະນິດມີຫຼາຍຊະນິດຄື: ກອນອ່ານ, ກອນຜະຫຍາ, ກອນລຳ ແລະ ກອນຮ່າຍ.

1. ກອນອ່ານ

ກອນອ່ານແມ່ນ ແມ່ນກອນທີ່ໃຊ້ສຳລັບອ່ານ ໂດຍບໍ່ໄດ້ຈຳແນກຄວາມສັ້ນ ຫຼື ຄວາມຍາວຂອງບົດ ແລະຈຳພວກຄຳກອນເລື່ອງ ສັງສິນໄຊ, ກາລະເກດ, ພະເຫດສັນດອນ, ຈຳປາ 4 ຕົ້ນ ແລະ ເລື່ອງອື່ນໆກໍຈັດຢູ່ໃນຊະນິດກອນອ່ານເຊັ່ນດຽວກັນ.

ຕົວຢ່າງ ຄຳກອນເລື່ອງ “ ພະເວດສັນດອນ ”

" ບັ້ນກຸມມານ "

| | |
|---|---|
| ເມື່ອນັ້ນພານມະໂນເຖົ້າ | ຫົນະຊິນໃຈບາບ |
| ມັນໄດ້ສອງອ່ອນນ້ອຍ | ຫົວຍຸ້ມອຸ່ນໃຈ |
| ອັນວ່າສອງກະສັດນ້ອຍ | ກຸມມານນ້ອງພີ່ |
| ໜີບໍ່ໄດ້ | ລັງລ້າວບໍ່ຍາກໄປ |
| ພານກໍຫາເຄືອໄມ້ | ພັນທະນັງຄຽນຜູກ |
| ມັດແຂນລູກພະເຈົ້າ | ສອງນ້ອຍໜໍ່ອິນ |
| ເຄືອເຂົາໝັ້ນ | ສອງຄົນຂັນໂຮບ |
| ມັນກໍຫັກຟົດໄມ້ | ຕີຂ້ຽນແກ່ດິ່ງແທ້ແລ້ວ <…> |

**ຄ. ໂຄງ**

" ໂຄງ " ແມ່ນແມ່ນກອນປະເພດໜຶ່ງ ທີ່ມີການເນື່ອງສຽງກັນ ເປັນດັ່ງໂຄງກະດູກ ຫຼື ໂຄງຮ່າງເຮືອນທີ່ຫາກໍ່ປຸກໃໝ່, ຄຳໂຄງຂອງລາວມີຫຼາຍແບບ ເຊິ່ງກຳນົດຕາມຊື່ເອີ້ນຕາມຈຳນວນຄຳທີ່ປະກອບໃນວັກໜຶ່ງໄດ້ແກ່ ໂຄງສອງ, ໂຄງສາມ, ໂຄງສີ່, ໂຄງຫ້າ ແລະ ໂຄງຫົກ.

- **ໂຄງສອງ**

ຕົວຢ່າງ: " ໂຄງໂສກຕົວເພິ່ງ "

| | |
|---|---|
| ໂງ່ນງົກ | ( ຊ້າງ ) |
| ຫົກກວຽນ | ( ງົວ ) |
| ຫຽນແອ່ນ | ( ຖຸດ ) |
| ແບນໂຕ | ( ແມວ ) |
| ໂສພາບ | ( ລາຊະສີ ) |
| ນາບຟານ | (ເສືອ ) |
| ຫານນໍ້າ | ( ນາກ ) |
| ຊໍ້າໂກນ | ( ໝູ ) |

- **ໂຄງສາມ**

ໂຄງສາມ ແມ່ນໂຄງວັກໜຶ່ງມີ ສາມຄຳ

ຕອຢ່າງ: " ໂຄກໂສກກອງ "

ສີ ສົມ ຊື່ນ

ຮື່ນ ເມືອງ ພົນ

ສົມ ຢູ່ ສ້າງ

ມ້າງ ສັງ ໂຄ

ໂພ ທິ ສັດ

ວັດ ພະ ເຈົ້າ

ເຕົ້າໂຮມພົນ ( ຄົນ )

- **ໂຄງສີ່**

ໂຄງສີ່ແມ່ນໂຄງທີ່ມີ ສີ່ບາດຄຳໃນບາດໜຶ່ງ.

ຕົວຢ່າງ: ໂຄງສີ່ສໍາລັບໂສກຂ້ອງ

| | |
|---|---|
| ໄປເປົ່າ | ມາແປນ |
| ກົກແຂນ | ຈີນເຕື່ອຍ |
| ເມື່ອຍຖອກ | ເມື່ອຍຜອງ |
| ຢ່າຄອງ | ກິນເກັດ |
| ເກັບເຫັດ | ເກັບຫອຍ |
| ກາງອຍ | ປາຍຊານ |
| ມີກບ່ານ | ຂຽງຫຍໍ້ |
| ບໍ່ພໍ້ | ຈັກໂຕ |

- ໂຄງຫ້າ

ຕົວຢ່າງ: ໂຄງຫ້າໃຊ້ສໍາລັບໂສກຫູ້ກຄີນ ແມ່ນເຄື່ອງມືສໍາລັບຫາກິນຊະນິດໜຶ່ງ

| | |
|---|---|
| ຫ້າງແຮວຖືກ | ຕີນສານ |
| ບໍ່ນານຂາດ | ເປັນບົ້ນ |
| ຖືກຄັນຢຽບ | ລິງດິນ |
| ນົກພາບິນ | ສູ່ໄມ້ |
| ໄດ້ສີມດັ່ງ | ໃຈປອງ |
| ມີໃຈຫອງ | ຢາກເຂົ້າ |
| ບໍ່ຕອ້ງເຝົ້າ | ມານເລີງ |

- ໂຄງຫົກ
- ຕົວຢ່າງໂຄງຫົກໃຊ້ສໍາລັບມີປູກພຶດພັນ

| | | | |
|---|---|---|---|
| ທົດ | ເປັນຣາກເຫງົ້າ | ຫົວດີ | |
| ຈັນ | ເຄືອຍາວຣີ | | ບໍ່ມົ້ວ |
| ຄານ | ມີພົ້ວ | | ໝາກດົກດີ |
| ພຸດ | ມີມາລາ | ບໍ່ເສີາງ | |
| ພະຫັດ | ໝາກແຕ່ເຄົ້າ | | ເຖີງປາຍ |
| ສຸກ | ເປືອກໝາຫຼາຍ | ສຸກຍິ່ງ | |
| ເສົາ | ມີການກິ່ງ | | ລໍາງາມ |

ງ. ສານ

ສານມີຄວາມໝາຍວ່າ ຈົດໝາຍ ຫຼື ໜັງສືທີ່ຄົນບູຮານ ແລະ ຄົນສະໄໝປັດຈຸບັນໃສ່ໃບລານ ຫຼື ເຈ້ຍ ເພື່ອຕິດຕໍ່ພົວພັນເຖີງກັນ ແລະ ກັນ, ຈະເປັນຄວາມຮັກລະຫວ່າງບ່າວສາວ.ການພົວພັນການເມືອງ ຂອງອາດນາເຈົ້ານາຍ ກໍເອີ້ນວ່າ“ ສານ ” ຫຼື ໜັງສືໄດ້ເຊັ່ນກັນ ເຊັ່ນ ໜັງສືສານລຶບພະສູນ, ສານອ່ອຍພອນ ແລະ ອື່ນໆ.

ຕົວຢ່າງ: ສານນີ້ຂຽນທີ່ເຄຫາຫ້ອງເຮືອນແພງຟາກໄມ້ໄຜ່ ໃຈກະສັນໝ່ອມນ້ອງນາງຫູ້າຜູ້ຢູ່ໄກເປັນຈັ່ງໃດນໍແກ້ວ ສາຍສະໝອນນ້ອງພີ່ມີຄວາມສຸກຢູ່ແລ້ວສະບາຍບ້າງຢູ່ ຫຼື ຄືວ່າຕົນຕົວອ້າຍຊາຍພອຍບໍ່ມີຄູ່ຢູ່ໄປແຕ່ລະມື້ຄິດເຖີງນ້ອງຜູ້ດຽວດັ່ງນັ້ນ, ພີ່ຈິ່ງອົດບໍ່ໄດ້ກອຍກ່າວກອນສານລະບາຍຄວາມໃນໃຈສູ້ອະນົງນາງຫູ້າຫາພວງມະໄລຍອດສະຫງ່າ.

## 4. ແຕ່ງບົດສອນ, ວິເຄາະບົດສອນ

ບົດສອນ

ວິຊາ: ພາສາລາວ ຊັ້ນປ5

ບົດທີ 11 (ຕໍ່) ໃຊ້ເວລາສອນ 2 ຊົ່ວໂມງ

ຫົວບົດ: ເສດຖີສອນກ້ອຍ

1.ຈຸດປະສົງ

- ເພື່ອໃຫ້ນັກຮຽນສາມາດຂຽນນິທານຄືນຈາກການຟັງໄດ້

2.ເນື້ອໃນ

ເວົ້າເຖິງຄຳສັ່ງສອນຂອງພໍ່ເຖົ້າທີ່ມີຕໍ່ລູກເຂີຍ ໃນການໃຊ້ສະຕິປັນຍາຢ່າງຮອບຄອບເພື່ອປະກອບອາຊີບໃຫ້ໝັ້ນຄົງ.

3.ສື່ການສອນ

- ປື້ມແບບຮຽນພາສາລາວຊັ້ນປ 5
- ບົດເລື່ອງ

4.ປະເມີນຜົນ

- ສັງເກດການຂຽນບົດຂອງນັກຮຽນ
- ສັງເກດການອ່ານບົດຂອງນັກຮຽນ

5.ກິດຈະກຳການຮຽນ-ການສອນ

- ຂັ້ນນຳ

- ຄູທຳຄວາມເຄົາລົບນັກຮຽນ

-ຄູກວດກາຈຳນວນພົນເຕັມ...........ຄົນຂາດ........ຄົນ

- ສະເໜີຊື່ ແລະ ຈຸດພິເສດຖ້າເປັນຄູໃໝ່

- ສະເໜີແຂກເຂົ້າຮ່ວມ (ຖ້າມີ)

+ທວນຄືນບົດຮຽນເກົ່າ

1. ໂຄງສ້າງຂອງບົດເລື່ອງມີຈັກພາກສ່ວນ?

- ມີ 3 ພາກສ່ວນຄື: ເປີດເລື່ອງ, ເດີນເລື່ອງ, ສະຫຼຸບເລື່ອງ

- ຂັ້ນສອນ

- ຄູຂຽນຫົວບົດໃສ່ກະດານ

- ຄູອະທິບາຍການຟັງ, ການຂຽນນິທານປາກເປົ່າ, ຄວາມໝາຍ, ຈຸດພິເສດ, ເນື້ອໃນ ແລະ ສິລະປະຂອງນິທານພື້ນເມືອງໃຫ້ນັກຮຽນຟັງ.

- ຄູແບ່ງນັກຮຍນອອກເປັນກຸ່ມ

ຄູເລົ່ານິທານເລື່ອງ: ເສດຖີສອນກ້ອຍໃຫ້ນັກຮຽນຟັງພ້ອມທັງອະທິບາຍວ່ານເລື່ອງນີ້ເວົ້າເຖິງຄຳສັ່ງສອນຂອງພໍ່ເຖົ້າທີ່ມີຕໍ່ລູກເຂີຍ ໃນການໃຊ້ສະຕິປັນຍາຢ່າງຮອບຄອບເພື່ອປະກອບອາຊີບໃຫ້ໝັ້ນຄົງ.

- ຄູໃຫ້ຕາງໜ້າແຕ່ລະກຸ່ມຂຶ້ນເລົ່ານິທານປາກເປົ່າຕາມທີ່ໄດ້ຟັງຈາກຄູເລົ່າ.
- ຄູໃຫ້ກຸ່ມອື່ນປະກອບຄຳຄິດຄຳເຫັນເພີ່ມເຕີມ.
- ຄູໃຫ້ນັກຮຽນແຕ່ລະກຸ່ມຂຽນຄືນນິທານປາກເປົ່າເລື່ອງໃດເລື່ອງໜຶ່ງທີ່ເຄີຍໄດ້ຟັງຈາກຄູດ ພໍ່ແມ່ ຫຼື

ຄົນອື່ນໆ...ເລົ່າສູ່ຟັງກຸ່ມລະໜຶ່ງເລື່ອງ.

- ຄູໃຫ້ນັກຮຽນແຕ່ລະກຸ່ມຂຶ້ນເລົ່ານິທານທີ່ກຸ່ມົນເອງຂຽນ. ຄູແນະນຳເພີ່ມເຕີມ.
- ຄູ ແລະ ນັກຮຽນສະຫຼຸບຄືນ.
- ຄູເກັບນິທານແຕ່ລະກຸ່ມໄປກວດ ແລ້ວເອົາໄປຕິດໄວ້ຕາມຫ້ອງຮຽນ ເພື່ອໃຫ້ນັກຮຽນໄດ້ອ່ານໝົດທຸກຄົນ.

- ຂັ້ນສະຫຼຸບ

- ຄູສະຫຼຸບຄືນຈາການເລົ່ານິທານ ແລະ ການຂຽນຂອງນັກຮຽນແຕ່ລະກຸ່ມ

- ຂັ້ນວັດຜົນ

- ຄູໃຫ້ນັກຮຽນ1 ຄົນອອກມາເລົ່ານິທານຄືນ

- ຕັກເຕືອນມອບວຽກບ້ານ

- ໃຫ້ນັກຮຽນຂຽນນິທານຜູ້ລະ 1 ເລື່ອງທີ່ໄດ້ຟັງຈາກຄົນອື່ນ

ວັນທີ............................................ ວັນທີ..............................

ຜູ້ອຳນວຍການ ຄູປະຈຳລາຍວິຊາ

# ບົດທີ5
# ການສອນພາສາລາວສຳລັບນັກຮຽນຊົນເຜົ່າ

## 1.ການສອນແບບເນັ້ນການຟັງ-ການເວົ້າ

- **ຈຸດປະສົງ** ໃຫ້ນັກຮຽນສາມາດ

- ບອກເນື້ອໃນຂອງບົດເພງໄດ້ ແລະ ມີຄວາມເບີກບານມ່ວນຊື່ນໃນເວລາຮຽນ
- ສາມາດຮ້ອງເພງນຳຄູໄດ້

ບົດເພງ: ພົບກັນ

ພົບກັນ ວັນນີ້ສຸກໃຈ
ສະບາຍດີ ຫຼືບອກມາ
ຫາກເຈົ້າ ຫາ່ວມເຫງົາອຸລາ
ຮ້ອງເພງດີກວ່າ ວັນນີ້ສຸກໃຈ (ຊໍ້າ)

- **ເນື້ອໃນ**

- ເພງ: ພົບກັນ

- **ອຸປະກອນ**

- ເຈ້ຍບົດເພງ: ພົບກັນ

ພົບກັນ ວັນນີ້ສຸກໃຈ
ສະບາຍດີ ຫຼືບອກມາ
ຫາກເຈົ້າ ຫາ່ວມເຫງົາອຸລາ
ຮ້ອງເພງດີກວ່າ ວັນນີ້ສຸກໃຈ (ຊໍ້າ)

- **ກິດຈະກຳການຮຽນ-ການສອນ**

- ຄູຂຽນຫົວບົດໃສ່ກະດານ
- ຄູເອົາເຈ້ຍບົດເພງຕິດໃສ່ກະດານ ຫຼື ຂຽນໃສ່ກະດານ
- ຄູສາທິດການຮ້ອງເພງໃຫ້ນັກຮຽນຟັງຈົນເຂົ້າໃຈຈັງຫວະທຳນອງເປັນຢ່າງດີ
- ຄູພານັກຮຽນສ້າງບັນຍາກາດດ້ວຍການຮ້ອງເພງ: ພົບກັນ ພ້ອມກັນໝົດຫ້ອງ
- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ
- ຄູໃຫ້ເດັກແຕ່ລະກຸ່ມພັດປ່ຽນກັນອອກມາຮ້ອງເພງ
- ຄູ ແລະ ເດັກຮ້ອງນຳກັນໝົດຫ້ອງ.

## 2. ການສອນແບບເນັ້ນການເຄື່ອນໄຫວ

- **ຈຸດປະສົງ** ໃຫ້ນັກຮຽນສາມາດ

- ຟັງ, ເວົ້າ ແລະ ເຂົ້າໃຈຄຳສັບໄດ້ຢ່າງຖືກຕ້ອງ
- ປະຕິບັດຕາມຄຳສັ່ງຂອງຄູໄດ້ຢ່າງຖືກຕ້ອງ

- **ເນື້ອໃນ**

- ຄຳສັບທີ່ເປັນຄຳສັ່ງ: ຢືນຂຶ້ນ, ນັ່ງລົງ, ຍ່າງໄປ, ຍ່າງມາ, ຢຸດ...

- **ອຸປະກອນ**

- ຕັ່ງ

- **ກິດຈະກໍາການຮຽນ-ການສອນ**

- ຄູທັກທາຍເດັກ ແລະ ສ້າງບັນຍາກາດດ້ວຍການຮ້ອງເພງ: "ໂຮງຮຽນ" ລວມກັນໝົດຫ້ອງ
- ຄູສາທິດການຢືນ, ການນັ່ງ, ການຍ່າງ, ການຢຸດໃຫ້ນັກຮຽນເບິ່ງກ່ອນ
- ຄູເວົ້າຄໍາສັບຢືນຂຶ້ນ, ນັ່ງລົງ, ຍ່າງໄປ, ຍ່າງມາ, ຢຸດ.
- ຄູ ແລະ ເດັກພ້ອມກັນປະຕິບັດ (ທັງເວົ້າທັງເຮັດ)
- ຄູໃຫ້ເດັກໝົດທຸກຄົນຢືນຂຶ້ນ ແລ້ວປະຕິບັດຕາມຄໍາສັ່ງຂອງຄູປະມານ 2-3 ເທື່ອ
- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ
- ຄູໃຫ້ແຕ່ລະກຸ່ມພັດປ່ຽນກັນປະຕິບັດຄໍາສັ່ງຂອງຄູ
- ຄູໃຫ້ເດັກປະຕິບັດຄໍາສັ່ງເທື່ອລະ 2 ຄົນ/ ເທື່ອລະ1 ຄົນ/ ໝົດຫ້ອງ.
- ຄູແນະນໍານັກຮຽນບາງບາງກຸ່ມທີ່ເຮັດບໍ່ທັນໄດ້ດີ, ຍ້ອງຍໍຊົມກຸ່ມທີ່ເຮັດໄດ້ດີ

# ບົດທີ5 ( ຕໍ່ )
# ການສອນພາສາລາວສຳລັບນັກຮຽນຊົນເຜົ່າ

## 3.ການສອນແບບເນັ້ນການສື່ສານ

ການສອນແບບນີ້ຈະເນັ້ນການພົວພັນເຊິ່ງກັນ ແລະ ກັນລະຫວ່າງນັກຮຽນດ້ວຍກັນສິ່ງສຳຄັນໃນນີ ຄູຕ້ອງໃຫ້ໂອກາດນັກຮຽນໄດ້ຄົ້ນຄິດ ແລະ ໃຊ້ຄວາມພະຍາຍາມຂອງຕົນ ເພື່ອສື່ຄວາມໝາຍທີ່ຕົນຕ້ອງການໃຫ້ຜູ້ອື່ນເຂົ້າໃຈໂດຍຜ່ານສຽງ ( ການຟັງ, ການເວົ້າ), ຕົວອັກສອນ( ການອ່ານ, ການຂຽນ)ແລ້ວໃຊ້ທ່າທາງ, ການໃຫ້ນັກຮຽນກ້າລອງຜິດລອງຖືກໃນເວລາປະຕິບັດກິດຈະກຳທາງພາສາ. ຄູຕ້ອງແນະນຳຊ່ວຍເຫຼືອ ແລະ ລະດົມກຳລັງໃຈ.

ເພື່ອສ້າງເງື່ອນໄຂໃຫ້ນັກຮຽນໄດ້ສະແດງຕົນໃນການໃຊ້ພາສາຄູຕ້ອງຈັດການຮຽນເປັນກຸ່ມເພື່ອອ່ານນຳກັນ, ຂຽນນຳກັນ, ກຽມຕອບ ແລະ ສະເໜີຄວາມຄິດຄວາມເຫັນນຳກັນກ່ຽວກັບເລື່ອງໃດເລື່ອງໜຶ່ງທີ່ຕົນໄດ້ອ່ານ

- **ຈຸດປະສົງ** ໃຫ້ນັກຮຽນສາມາດ

- ທັກທາຍ ແລະ ແນະນຳຕົນເອງໄດ້

- **ເນື້ອໃນ**

- ທັກທາຍ ແລະ ແນະນຳຕົນເອງ

- **ອຸປະກອນ**

- ຮູບພາບ, ຕຸກກະຕາມື

- **ກິດຈະກຳການຮຽນ-ການສອນ**

1)ຄູໃຊ້ຕຸກກະຕາມືສຸບໃສ່ມືພ້ອມທັງເວົ້າບົດສົນທະນາສະແດງທ່າທາງປະກອບເຊັ່ນ:

- ສະບາຍດີ ສະບາຍດີ
- ຂ້ອຍຊື່ນາງມີ
- ຂ້ອນເປັນຊົນເຜົ່າກຶມມຸ
- ຂ້ອຍຊື່ທ້າວຢ່າງວື
- ຂ້ອຍເປັນຊົນເຜົ່າມົ້ງ

2) ຄູພານັກຮຽນເວົ້າລົ້ມຄືນໄປລົ້ມຄືນມາຫຼາຍເທື່ອ

3) ຄູໃຫ້ນັກຮຽນແຕ່ລະຄົນໃຊ້ຕຸກກະຕາມືສຸບໃສ່ມື ພ້ອມທັງເວົ້າບົດສົນທະນາສະແດງທ່າ ທາງປະກອບໄປພ້ອມ.

4) ຄູຈັດນັກສຶກສາເປັນຄູແລ້ວໃຫ້ແຕ່ລະຄູ່ສົນທະນາກັນ ດັ່ງຕົວຢ່າງລຸ່ມນີ້

| | |
|---|---|
| ທ້າວ ຢາງວື | ສະບາຍດີ |
| ນາງ ມີ | ສະບາຍດີ |
| ທ້າວ ຢາງວື | ຂ້ອຍຊື່ ທ້າວ ຢ່າງວື ແລະ ເຈົ້າເດຊື່ຫຍັງ |
| ນາງ ມີ | ຂ້ອຍຊື່ ນາງ ມີ ເຈົ້າເປັນຄົນຊົນເຜົ່າໃດ? |
| ທ້າວ ຢ່າງວື | ຂ້ອຍເປັນຄົນຊົນເຜົ່າມົ້ງ ແລະ ເຈົ້າເດເປັນຄົນຊົນເຜົ່າໃດ? |
| ນາງ ມີ | ຂ້ອຍເປັນຄົນຊົນເຜົ່າກຶມມຸ. |

**ໝາຍເຫດ:** ໃນບົດນີ້ນັກສຶກສາຄູໄດ້ຮຽນຮູ້ຄວາມສຳຄັນຂອງການສອນພາສາລາວໃຫ້ເດັກຊົນເຜົ່າ ຄວາກໃນການຮຽນພາສາລາວຂອງເດັກຊົນເຜົ່າ ແລະ ຂັ້ນຕອນການຮຽນພາສາລາວ. ເພື່ອແນໃສ່ໃຫ້ນັກສຶກສາມີຄວາມຮູ້ຄວາມເຂົ້າໃຈຕໍ່ການສອນແບບເນັ້ນການຟັງ-ເວົ້າ, ເນັ້ນການເຄື່ອນໄຫວ ແລະ ເນັ້ນການສື່ສານ.

## • ກິດຈະກຳເພີ່ມເຕີມ

**ກິດຈະກຳ 1: ສົນທະນາຮູບພາບໃຫຍ່**

- ຄູເອົາຮູບພາບ ມ້າ ແລະ ຮູບພາບນົກ ແຜ່ນໃຫຍ່ ຕິດ ຫຼື ຕັ້ງທາງໜ້າກະດານ
- ຄູຖາມນັກຮຽນໝົດຫ້ອງວ່າ: ໃນຮູບນີ້ພວກນ້ອງເຫັນຫຍັງແດ່? (ເຫັນມ້າ, ນົກ, ຕົກແຕນ, ກົກໄມ້, ໃບຫຍ້າ.

• ສົນທະນາຮູບມ້າ

1) ຮູບຮ່າງຂອງໂຕມ້າປະກອບມີຫຍັງແດ່? (ມີເລົາຄີງ, ມີຂາ, ມີຫາງ, ມີຫົວ, ມີຫູ, ມີຕາ, ມີຮູດັງ, ມີຂົນຍາວ…)

2) ມ້າກຳລັງເຮັດຫຍັງ? ມ້າມີຈັກຂາ ນັບພ້ອມກັນເບິ່ງ 1, 2, 3, 4 ເກັ່ງຫຼາຍ.

3) ມ້າເຄື່ອນໄຫວໄປມາດ້ວຍວິທີໃດ? (ຍ່າງ, ແລ່ນ, ດ້ວຍຂາ…)

4) ມ້າກິນຫຍັງເປັນອາຫານ? (ກິນຫຍ້າ, ໃບໄມ້ບາງຊະນິດ, ໝາກໄມ້ບາງຊະນິດ…)

5) ເພິ່ນລ້ຽງມ້າໄວ້ເຮັດຫຍັງ? (ໄວ້ເບິ່ງ, ໄວ້ຂີ່, ໄວ້ກິນຊີ້ນ, ໄວ້ຂາຍ, ໄວ້ລາກແກ່…)

6) ໂຕມ້າບ້ານໃຜມີແດ່? ຍົກມືຂຶ້ນເບິ່ງ...ເກັ່ງຫຼາຍ, ມ້າບ້ານນ້ອງຄືຮູບນີ້ບໍ່? ມັນເປັນແນວໃດ? ເວົ້າໃຫ້ໝູ່ຟັງເບິ່ງ?...ຫຼານລ້ຽງໄວ້ເຮັດຫຍັງ?...

• ສົນທະນາຮູບນົກ

1) ຮູບຮ່າງຂອງໂຕນົກປະກອບມີຫຍັງແດ່? (ມີຫົວ, ມີປີກ, ມີຫາງ, ມີຂົນ, ມີສົບ, ມີຕາ, ມີຂົນຍາວ…)

2) ນົກກຳລັງເຮັດຫຍັງ? ມີຈັກຂາ ນັບພ້ອມກັນເບິ່ງ 1, 2, ເກັ່ງຫຼາຍ.

3) ນົກເຄື່ອນໄຫວໄປມາດ້ວຍວິທີໃດ? (ຍ່າງ, ແລ່ນ, ບິນ…)

4) ນົກອາໄສຢູ່ໃສ? ກິນຫຍັງເປັນອາຫານ? (ປ່າ, ກິນຫຍ້າ, ໃບໄມ້ບາງຊະນິດ, ໝາກໄມ້ບາງຊະນິດ…)

5) ເພິ່ນລ້ຽງນົກໄວ້ເຮັດຫຍັງ? (ໄວ້ເບິ່ງ, ໄວ້ເປັນອາຫານ, ໄວ້ຂາຍ, ໄວ້ຂັນ…)

6) ບ້ານພວກນ້ອງມີນົກຫຍັງແດ່? (ນົກອ້ຽງ, ນົກຈອກ, ນົກເຂົາ, ນົກາງແກ…)

7) ໃຜເຄີຍລ້ຽງນົກແດ່? ລ້ຽງໄວເຮັດຫຍັງ? ລ້ຽງແນວໃດ? ເອົາຫຍັງເກືອມັນແດ່?...

8) ມ້າກັບນົກເຈົ້າຢາກລ້ຽງຫຍັງ? ເປັນຫຍັງຈິ່ງຢາກລ້ຽງ…? ຄູຖາມຜູ້ຕໍ່ໄປເຈົ້າເດ ຢາກລ້ຽງຫຍັງ? ເປັນຫຍັງຈຶ່ງຢາກລ້ຽງ…?...

**ກິດຈະກຳ 2: ສົນທະນາຮູບພາບນ້ອຍ (ແມວ)**

- ຄູເອົາຮູບພາບ ມ້າ ແຕ່ລະຮູບຕັ້ງທາງໜ້າກະດານ
- ຄູຖາມນັກຮຽນໝົດຫ້ອງວ່າ: ໃນຮູບນີ້ແມວກຳລັງເຮັດຫຍັງ? ຄູຖາມ ແລະ ສົນທະນາໄປແຕ່ລະຮູບ.

**ກິດຈະກຳ 3: ປະຕິບັດຕາມຄູ**

- ຄູເຮັດໃຫ້ເບິ່ງ: ຄູເວົ້າ: ລຸກຂຶ້ນ(ຮ່າງກາຍລຸກຂຶ້ນ), ນັ່ງລົງ(ຮ່າງກາຍນັ່ງລົງ), ນອນ(ຄູນອນ).
- ຄູ-ນັກຮຽນເຮັດນຳກັນ ຄູເວົ້າ: ລຸກຂຶ້ນ(ຄູ-ນັກຮຽນລຸກຂຶ້ນ), ນັ່ງລົງ(ຄູ-ນັກຮຽນນັ່ງລົງ), ນອນ(ຄູ-ນັກຮຽນນອນ).
- ນັກຮຽນເຮັດ: ຄູເວົ້າ: ລຸກຂຶ້ນ(ນັກຮຽນລຸກຂຶ້ນ), ນັ່ງລົງ(ນັກຮຽນນັ່ງລົງ), ນອນ(ນັກຮຽນນອນ), ຄູເວົ້າສະຫຼັບໄປສະຫຼັບມາໃຫ້ນັກຮຽນປະຕິບັດ.

**ກິດຈະກຳ 4: ເລືອກຮູບ ແລະ ແອບເວົ້າເປັນປະໂຫຍກ**

• <u>ເລືອກຮູບ</u>

- ຄູເອົາຮູບຫຼາຍໆແຜ່ນວາງໄວ້ທາງໜ້າກະດານ ຫຼື ນອກສະຖານທີ່ ຕາມຄວາມເໝາະສົມເຊັ່ນ: ຮູບມ້າ, ຮູບນົກ, ຮູບແມວ, ຮູບໝາກມີ້, ຮູບໝາກມ່ວງ, ຮູບມີດ, ຮູບແມງມຸມ, ຮູບໝາກໂມ, ຮູບແມ່ນ້ຳ, ຮູບນາ...
- ຄູຈັດນັກຮຽນນັ່ງ ຫຼື ຢືນ ເປັນວົງວົນໃນຫ້ອງ ຫຼື ນອກສະຖານທີ່ ຕາມຄວາມເໝາະສົມ
- ຄູເອີ້ນນັກຮຽນຄົນທີ 1 ເຕັ້ນສອງຂາອອກມາເລືອກເອົາຮູບ ແລ້ວຍ່າງກັບໄປບ່ອນ
- ຄູເອີ້ນນັກຮຽນຄົນທີ 2 ເຕັ້ນຂາດຽວອອກມາເລືອກເອົາຮູບ ແລ້ວຍ່າງກັບໄປບ່ອນ
- ຄູເອີ້ນນັກຮຽນຄົນທີ 3 ອ້າປາກຍ່າງອອກມາເລືອກເອົາຮູບ ແລ້ວຍ່າງກັບໄປບ່ອນ
- ຄູເອີ້ນນັກຮຽນຄົນທີ 4 ເອົາມືຄ້ຳແອວຍ່າງອອກມາເລືອກເອົາຮູບ ແລ້ວຍ່າງກັບໄປບ່ອນ ແລະ ຜູ້ຕໍ່ໆໄປຈົນໝົດທຸກຄົນ.

• <u>ແອບເວົ້າເປັນປະໂຫຍກ</u>

- ຄູເລືອກຮູບມ້າແລ້ວເວົ້າວ່າ: ຢູ່ເຮືອນຂ້ອຍລ້ຽງມ້າ ຖາມ ທ້າວ ກ ຕໍ່ວ່າ: ເຮືອນເຈົ້າລ້ຽງຫຍັງ? ທ້າວ ກ ຕອບວ່າ ຢູ່ເຮືອນຂ້ອຍລ້ຽງແມວ, ທ້າວ ກ ຖາມຜູ້ຕໍ່ໄປວ່າ ຢູ່ເຮືອນເຈົ້າລ້ຽງຫຍັງ? ແລະ ຖາມຕໍ່ໆກັນໄປ ຫຼື ຖາມສະຫຼັບກັນໄປກໍໄດ້.
- ເມື່ອນັກຮຽນໄດ້ເວົ້າໝົດທຸກຄົນ ຄູເກັບຮູບນຳນັກຮຽນຄືນ ແລະ ບອກນັກຮຽນໄປປະຈຳບ່ອນ.

**ກິດຈະກຳ 5: ສົນທະນາບັດຮູບ ແລະ ບັດອັກສອນ**

-ຄູຍົກບັດຮູບ **ມ້າ, ແມວ...** ຂຶ້ນໃຫ້ນັກຮຽນເບິ່ງ ແລະ ຖາມນັກຮຽນວ່າ: ນີ້ແມ່ນຮູບຫຍັງ, ເຄີຍເຫັນບໍ່, ບ້ານນ້ອງມີບໍ່, ເພີ່ນລ້ຽງໄວ້ເຮັດຫຍັງ ຄຳວ່າ: ມ້າ ອອກສຽງພະຍັນຊະນະຫຍັງ(ມ)...ແລ້ວໄປສຽບໃສ່ຖົງບັດຄຳ

-ຄູຍົກບັດຮູບ **ນົກ...** ຂຶ້ນໃຫ້ນັກຮຽນເບິ່ງ ແລະ ຖາມນັກຮຽນວ່າ: ນີ້ແມ່ນຮູບຫຍັງ?, ເຄີຍເຫັນບໍ່?, ອາໄສຢູ່ໃສ?, ກິນຫຍັງເປັນອາຫານ?, ເຮືອນນ້ອງມີບໍ່?, ເຄີຍລ້ຽງບໍ່?, ລ້ຽງໄວ້ເຮັດຫຍັງ? ລ້ຽງແນວໃດ? ຄຳວ່າ: ນົກ ອອກສຽງພະຍັນຊະນະຫຍັງ...ແລ້ວໄປສຽບໃສ່ຖົງບັດຄຳ

-ຈາກນັ້ນຄູເອົາບັດອັກສອນຂຶ້ນມາແລ້ວຖາມນັກຮຽນວ່າ ນີ້ແມ່ນພະຍັນຊະນະຫຍັງ..ໂຕ **ມ** ໂຕ **ນ** ພານັກຮຽນເວົ້າແຮງໆຫຼາຍເທື່ອ ແລ້ວໄປສຽບໃສ່ກ້ອງຮູບ.

-ຈາກນັ້ນຄູຊີ້ໃສ່ຮູບ ແລະ ໃສ່ໂຕ **ມ ນ** ພານັກຮຽນອ່ານຢູ່ຖົງບັດຄຳ.

**ກິດຈະກຳ 6: ເລືອກບັດອັກສອນ**

- ຄູເອົາບັດອັກສອນວາງໄວ້ໂຕະຄູ ໂດຍປະສົມປະສານກັບພະຍັນຊະນະ ແລະ ສະຫຼະ ຫຼາຍໂຕ
- ໃຫ້ນັກຮຽນອອກໄປເລືອກ ພະຍັນຊະນະ ໂຕ **ມ ນ** ໄປຕິດໃສ່ກ້ອງຮູບໃນຖົງບັດຄຳແຕ່ລະຮູບ
- ນັກຮຽນຄົນໃດເລືອກບໍ່ຖືກຄູ ແລະ ໝູ່ໃນຫ້ອງຊ່ວຍ
- ນັກຮຽນຄົນໃດເລືອກຖືກ ຄູຕົບມືຊົມເຊີຍ

**ກິດຈະກຳ 7: ການສ້າງແຜນວາດຊ່ວຍຈື່**

- ຜ່ານໄປເຮົາຮຽນກ່ຽວກັບໂຕອັກສອນຫຍັງ/ນັກຮຽນບອກ
- ຄູຂຽນ ໂຕ ມ ແລະ ນ ເປັນຫົວຂໍ້ໃຫຍ່ ໃສ່ກະດານ
- ຄູຖາມນັກຮຽນວ່າ: ມີວັດຖຸສິ່ງຂອງ, ພືດ, ສັດ ຊະນິດໃດທີ່ມີຊື່ອອກສຽງພະຍັນຊະນະ ມ
- ນັກຮຽນເວົ້າ, ຄູຂຽນໃສ່ແຜນມະໂນພາບ
- ຫຼັງຈາກໄດ້ຕາມຄວາມເໝາະສົມແລ້ວຄູກໍພານັກຮຽນອ່ານຄືນ









**II. ຂັ້ນຕອນການສອນຂຽນ**

**ກິດຈະກຳ 1: ສາທິດການຂຽນອັກສອນ ມ ນ**

- ຄູສາທິດການຂຽນພະຍັນຊະນະ ມ ນ ໃສ່ກະດານໃຫ້ນັກຮຽນສັງເກດ ແລະ ອະທິບາຍວ່າ: ການຂຽນພະຍັນຊະນະຕ້ອງຂຽນແຕ່ຫົວຫາຫາງ.
- ຄູແນະນຳນັກຮຽນກ່າຍຫົວບົດໃສ່ປຶ້ມ
- ຄູຕິດຕາມການຂຽນຂອງນັກຮຽນ ແລະ ແນະນຳຊ່ອຍເຫຼືອນັກຮຽນຜູ້ຂຽນບໍ່ທັນໄດ້ດີໄປພ້ອມ

**ກິດຈະກຳ 2: ຝຶກນັກຮຽນຂຽນຢູ່ກະດານ**

- ຄູໃຫ້ນັກຮຽນອອກມາຂຽນຢູ່ກະດານເທື່ອລະຄົນ
- ຄູຕິດຕາມ ແລະ ຊ່ວຍແຫຼືອນັກຮຽນບາງຄົນ
- ຄູຊົມເຊີຍນັກຮຽນ

**ກິດຈະກຳ 3: ຝຶກເອົານິ້ວມືຂຽນພະຍັນຊະນະເທິງອາກາດ(ມື,ຫົວ,ກົ້ນ)**

- ຄູສາທິດການຂຽນອັກສອນເທິງອາກາດດ້ວຍມື,ຫົວ,ກົ້ນໃຫ້ນັກຮຽນເບິ່ງ
- ຄູ ແລະ ນັກຮຽນພ້ອມກັນຝຶກຂຽນ
- ຄູໃຫ້ນັກຮຽນຂຽນເອງໂດຍຄູອອກຄຳສັ່ງ
- ຄູພານັກຮຽນຕົບມືຊົມເຊີຍ

**ກິດຈະກຳ 4: ກໍ່ຕົວອັກສອນດ້ວຍກ້ອນຫີນ**

-ຄູຢາຍກ້ອນຫີນ ຫຼື ແກ່ນໝາກໄມ້ໃຫ້ນັກຮຽນແຕ່ລະໂຕະ
-ຄູອອກຄຳສັ່ງກໍ່ຕົວ ມ ນັກຮຽນແຂ່ງຂັນກັນກໍ່ ຖ້າແລ້ວໃຫ້ຍົກມືຂຶ້ນ ແລະ ສັ່ງກໍ່ໂຕອັກສອນຕໍ່ໄປ
-ຄູຕິດຕາມ ແລະ ຊົມເຊີຍຜົນງານນັກຮຽນທີ່ກໍ່ໄວ ແລະ ງາມ

**ກິດຈະກຳ 5: ການຂຽນເນື້ອໃນບົດ**

- ຄູຂຽນເນື້ອໃນບົດໃສ່ກະດານ ໂດຍສືບຕໍ່ຈາກຫົວບົດ

| | |
|---|---|
| ມ້າ | ນາ |
| ມ້າດີ | ນາປີ |

ນາມີປາ ມ້າຕາດີ

- ຄູແນະນຳນັກຮຽນກ່າຍໃສ່ປຶ້ມ
- ຄູຕິດຕາມການຂຽນຂອງນັກຮຽນ ແລະ ຊ່ວຍເລືອນັກຮຽນບາງຄົນ

**ກິດຈະກຳ6: ຫັດຂຽນງາມ**

-ຄູແຕ້ມເສັ້ນ ແລະ ຂຽນບົດຫັດຂຽນງາມໃສ່ກະດານ

-ຄູອະທິບາຍວິທີການຂຽນງາມໃຫ້ນັກຮຽນເຂົ້າໃຈ

-ຄູແນະນຳນັກຮຽນລິງມືຂຽນຫັດຂຽນງາມ

-ຄູຕິດຕາມການຂຽນຂອງນັກຮຽນ

-ຄູຊ່ວຍເຫຼືອນັກຮຽນບາງຄົນ

-ຄູໃຫ້ນັກຮຽນເກັບປຶ້ມມາກວດ ແລະ ໃຫ້ຄະແນນ

ມ ມ້າ ນ ນາ

**ໝາຍເຫດ:** ກິດຈະກຳນີ້ອາດນຳພານັກຮຽນຂຽນລັງຈາກໄດ້ຝຶກທັກສະການອ່ານແລ້ວ ເປັນການຂຽນກິດຈະກຳສຸດທ້າຍໃນບົດນີ້

**III. ຂັ້ນຕອນການສອນອ່ານ**

**ກິດຈະກຳ1: ການອ່ານເນື້ອໃນບົດ**

-ຄູອ່ານເປັນຕົວຢ່າງໃຫ້ນັກຮຽນຟັງ1-2ເທື່ອ

-ຄູໃຫ້ນັກຮຽນອ່ານຕາມຫຼັງຄູ

-ຄູນັກຮຽນອ່ານພ້ອມກັນ1-2ເທື່ອ

-ຄູຊີ້ໃຫ້ນັກຮຽນອ່ານພ້ອມກັນໝົດຫ້ອງດ້ວຍວິທີການຕ່າງໆ

-ຄູໃຫ້ນັກຮຽນແຕ່ລະຄົນພັດປ່ຽນກັນອອກມາອ່ານຕາມລຳດັບ

-ຄູຕິດຕາມການອ່ານຂອງນັກຮຽນ

**ຄຳຖາມ**

1. ຂັ້ນຕອນການສອນແບບເນັ້ນຟັງ-ເວົ້າມີຄືແນວໃດ?
2. ຂັ້ນຕອນການສອນແບບເນັ້ນການເຄື່ອນໄຫວມີຄືແນວໃດ?
3. ຂັ້ນຕອນການສອນແບບເນັ້ນການສື່ສານມີຄືແນວໃດ?

## 4. ແຕ່ງບົດສອນ, ວິເຄາະບົດສອນ

ບົດສອນ

ວິຊາພາສາລາວ ຊັ້ນ ປ.1

ບົດທີ 17 ເວລາ 4 ຊົ່ວໂມງ

ຫົວບົດ: ພະຍັນຊະນະ ສ, ຊ

ຈຸດປະສົງ:

- ເພື່ອໃຫ້ນັກຮຽນສາມາດບອກຊື່ສັດທີ່ລອຍໃນນໍ້າໄດ້
- ນັກຮຽນສາມາດສົນທະນາຕາມຮູບພາບແຕ່ລະຮູບໄດ້
- ນັກຮຽນບອກສິ່ງຕ່າງໆໃນຮູບໄດ້
- ນັກຮຽນສາມາດສັງເກດຮູບພາບຈາກວັດຖຸຈິງ ແລະ ຕອບຄໍາຖາມຂອງຄູໄດ້
- ນັກຮຽນອ່ານອອກສຽງ ສ, ຊ ໄດ້
- ນັກຮຽນອ່ານຟ້ອງສຽງຕາມສະຫຼະໄດ້
- ນັກຮຽນອ່ານຟ້ອງສຽງໃສ່ສະຫຼະແຕ່ລະຕົວໄດ້
- ນັກຮຽນອ່ານຜັນສຽງໃນຕາຕະລາງໄດ້
- ນັກຮຽນອ່ານຜັນສຽງຕາມວັນນະຍຸດແຕ່ລະຕົວໄດ້

ສື່ການສອນ

- ບັດຮູບ
- ບັດພະຍັນຊະນະ, ສະຫຼະ ແລະ ວັນນະຍຸດ
- ຮູບພາບ ຫຼື ວັດຖຸຈິງ

ການວັດ ແລະ ປະເມີນຜົນ

- ສັງເກດຈາກການຕອບຄໍາຖາມຂອງນັກຮຽນ
- ນັກຮຽນສົນທະນາຕາມຮູບພາບໄດ້
- ການຕອບຄໍາຖາມ ແລະ ການສົນທະນາ
- ການເບິ່ງຮູບພາບຕົວຈິງ ແລະ ຕອບຄໍາຖາມ
- ນັກຮຽນອ່ານອອກສຽງ ສ, ຊ ໄດ້
- ນັກຮຽນອ່ານຟ້ອງສຽງໄປຕາມສະຫຼະໄດ້
- ນັກຮຽນອ່ານຟ້ອງສຽງໃສ່ສະຫຼະແຕ່ລະຕົວໄດ້
- ການອ່ານຜັນສຽງຂອງນັກຮຽນໃນຕາຕະລາງ
- ນັກຮຽນອ່ານຜັນສຽງຕາມວັນນະຍຸດແຕ່ລະຕົວໄດ້
- ນັກຮຽນສົນທະນາອ່ານ, ຂຽນ

ກິດຈະກໍາການຮຽນ-ການສອນ

ຂັ້ນນໍາ

- ຈັດຕັ້ງຫ້ອງ
- ກວດກາຈໍານວນພົນມາ.......ຄົນ, ຂາດ..........ຄົນ
- ຄູຕັ້ງຄໍາຖາມ, ຖາມນັກຮຽນດັ່ງນີ້
    1. ພວກນ້ອງເຫັນໂຕຫຍັງແດ່ລອຍ ຫຼື ອາໄສຢູ່ໃນນໍ້າ?

ຂັ້ນສອນ

ພາກຟັງ-ເວົ້າ

1. ກິດຈະກໍາສົນທະນາຖາມ-ຕອບກ່ຽວກັບຮູບພາບ

- ຄູຍົກຮູບພາບ ( ບົດທີ 17 )ໜ້າທີ34ຮູບເບື້ອງລຸ່ມຂຶ້ນໃຫ້ນັກຮຽນເບິ່ງຄູຖາມນັກຮຽນໝົດຫ້ອງ, ແຖວ, ໂຕະ, ບຸກຄົນ; ຄູຊີ້ແຕ່ລະຮູບພ້ອມທັງຖາມນັກຮຽນວ່າ:

- ນັກຮຽນສັງເກດຮູບພາບຈາກຄູຍົກຂຶ້ນມາ
- ອັນນີ້ແມ່ນຮູບຫຍັງ?
- ນັກຮຽນຕອບຕາມຄວາມເຂົ້າໃຈວ່າ: ໂອ່ນຊາ, ຕະລູດ, ແມ່ຄ້າ, ໂຕປາ, ມ້າໝູນ, ຕົ້ນໄມ້, ຖຽງນາ.
- ຄູໃຫ້ອາສາສະໝັກ 1-2 ຄົນອອກມາຊີ້ແລ້ວສົນທະນາກັບໝູ່ໃນຫ້ອງ
- ນັກຮຽນສະໝັກ 1 – 2 ຄົນອອກມາຊີ້ແລ້ວສົນທະນາ
- ຄູເອົານັກຮຽນຜູ້ທີ່ຮຽນອ່ອນອອກມາຊີ້ ແລະ ເວົ້າຕາມຮູບ
- ນັກຮຽນຜູ້ທີ່ຮຽນອ່ອນອອກມາຊີ້ ແລະ ເວົ້າຕາມຮູບ

ການວັດຜົນ

- ຄູຖາມນັກຮຽນຄືນວ່າໃນຮູບເຫັນຫຍັງແດ່?
- ນັກຮຽນຕອບຄຳຖາມຂອງຄູ
- ຄູໃຫ້ນັກຮຽນອອກມາຈັບຄູ່ສົນທະນາປະມານ 2 – 3 ຄູ່
- ນັກຮຽນອອກມາຈັບຄູ່ຕາມທີ່ຄູບອກ

ພາກອ່ານ

ກິດຈະກຳການອ່ານຖອດສຽງ

ຕົວຢ່າງ: ການສອນອ່ານຖອດສຽງພະຍັນຊະນະ ສ, ຊ

- ຄູສາມາດເອົາວັດຖຸຈິງ ຫຼື ຮູບພາບກໍໄດ້
    1. ຄູຍົກ “ ເສື້ອ ” ທີ່ຄູກຽມມາແລ້ວຖາມນັກຮຽນວ່າ:
- ນັກຮຽນສັງເກດຮູບພາບທີ່ຄູຍົກຂຶ້ນ
- ອັນນີ້ແມ່ນຫຍັງ?
- ນັກຮຽນຕອບ: ອັນນີ້ແມ່ນຮູບເສື້ອ
- ຄູອ່ານໃຫ້ນັກຮຽນຟັງການອອກສຽງຄຳວ່າ: ເສື້ອ, ເສື້ອ, ເສື້ອ
- ນັກຮຽນຟັງການອ່ານອອກສຽງຄຳວ່າ: ເສື້ອ, ເສື້ອ, ເສື້ອ
- ເສື້ອ ອອກສຽງພະຍັນຊະນະຫຍັງ?
- ນັກຮຽນຕອບ: ເສື້ອ ອອກສຽງພະຍັນຊະນະ ສ
- ຄູຂຽນພະຍັນຊະນະ ສ ໃສ່ກະດານ
- ນັກຮຽນສັງເກດຄູຂຽນພະຍັນຊະນະ ສ ເທິງກະດານ
- ຄູອ່ານ ສ ນັກຮຽນອ່ານຕາມຈາກນັ້ນນັກຮຽນອ່ານ
- ນັກຮຽນອ່ານ ສ ຕາມຄູ
    2. ຄູຍົກຮູບ “ ຊ້າງ ” ທີ່ຄູກຽມມາແລ້ວຖາມນັກຮຽນວ່າ:
- ນັກຮຽນສັງເກດຮູບພາບທີ່ຄູຍົກຂຶ້ນ
- ອັນນີ້ແມ່ນຮູບຫຍັງ?
- ນັກຮຽນຕອບ: ອັນນີ້ແມ່ນຮູບ ຊ້າງ
- ຄູອ່ານໃຫ້ນັກຮຽນຟັງການອອກສຽງຄຳວ່າ ຊ້າງ, ຊ້າງ, ຊ້າງ
- ນັກຮຽນຟັງການອ່ານອອກສຽງຄຳວ່າ: ຊ້າງ, ຊ້າງ, ຊ້າງ
- ຊ້າງອອກສຽງພະຍັນຊະນະຫຍັງ?
- ນັກຮຽນຕອບ ຊ້າງ ອອກສຽງພະຍັນຊະນະ ຊ

- ຄູຂຽນພະຍັນຊະນະ ຊ ໃສ່ກະດານ
- ນັກຮຽນສັງເກດຄູຂຽນພະຍັນຊະນະ ຊ ເທິງກະດານ
- ຄູອ່ານ ຊ ນັກຮຽນອ່ານຕາມ ຈາກນັ້ນນັກຮຽນອ່ານ
- ນັກຮຽນອ່ານ ຊ ຕາມຄູ

3. ຄູອານ ສ, ຊ 1- 2 ເທື່ອ

- ນັກຮຽນຟັງຄູອ່ານ ສ, ຊ 1-2 ເທື່ອ

4. ຄູພານັກຮຽນອ່ານ ສ, ຊ 2 – 3 ເທື່ອ

- ນັກຮຽນອ່ານ ສ, ຊ 2 – 3 ເທື່ອ

5. ໃຫ້ນັກຮຽນອ່ານເປັນໂຕະ, ແຖວ ຫຼື ບຸກຄົນ

- ນັກຮຽນອ່ານເປັນແຖວ ຫຼື ບຸກຄົນຕາມຄູກຳນົດ

6. ຄູຊີ້ ສ, ຊ ໃຫ້ນັກຮຽນອ່ານເນັ້ນສຽງ ສ, ຊ 2 – 3 ເທື່ອ

- ນກຮຽນອ່ານເນັ້ນສຽງຕາມຄູຊີ້ 2- 3 ເທື່ອ

ການວັດຜົນ

- ຄູອ່ານອອກສຽງ ສ, ຊ ແລ້ວໃຫ້ນັກຮຽນອອກໄປຊີ້ພະຍັນຊະນະ ສ, ຊ
- ນັກຮຽນຊີ້ພະຍັນຊະນະ ສ, ຊ ຕາມຄູອ່ານ

ກິດຈະກຳການອ່ານຟ້ອງສຽງ

1. ຄູສາທິດການປະສົມພະຍັນຊະນະກັບສະຫຼະເຊັ່ນ:

( ສ ), ( ຊ ), ( xະ, xິ, xຸ, xູ )

ຕົວຢ່າງ:

ສ + xະ = ສະ, ສ + xິ = ສິ

ສ + xຸ = ສຸ, ສ + ໂx= ໂສ

ຊ + xະ = ຊະ, ຊ +xິ = ສິ

ຊ + xຸ = ຊຸ, ຊ+ ໂx= ໂຊ

2.ຄູຂຽນຄຳວ່າ: ສະ, ສິ, ສຸ, ໂສ, ຊະ, ຊິ, ຊຸ, ໂຊ ໃສ່ຕາຕະລາງ

| | xະ | xິ | xຸ | ໂx |
|---|---|---|---|---|
| ສ | ສະ | ສິ | ສຸ | ໂສ |
| ຊ | ຊະ | ຊິ | ຊຸ | ໂຊ |

- ນັກຮຽນສັງເກດຄູຂຽນ: ສະ, ສິ, ສຸ, ໂສ, ຊະ, ຊິ, ຊຸ, ໂຊໃສ່ຕາຕະລາງ

3.ຄູພານັກຮຽນອ່ານຟ້ອງສຽງ 2 – 3 ເທື່ອ

- ນັກຮຽນອ່ານຕາມຄູ 2 -3 ເທື່ອ

4.ໃຫ້ນັກຮຽນອ່ານເປັນກຸ່ມ ແລະ ບຸກຄົນ

- ນັກຮຽນອ່ານເປັນກຸ່ມ ແລະ ບຸກຄົນ

ການວັດຜົນ

- ສັງເກດການອ່ານພະຍັນຊະນະຟ້ອງໃສ່ສະຫຼະແຕ່ລະຕົວຂອງນັກຮຽນ
- ນັກຮຽນອ່ານຟ້ອງໃສ່ສະຫຼະແຕ່ລະຕົວຕາມຄູບອກ

ກິດຈະກຳການອ່ານຜັນສຽງ

1. ຄູຕິດເຈ້ຍໃຫຍ່ໃສ່ກະດານທີ່ຄູກຽມໄວ້ຖ້າບໍ່ມີຄູຂຽນຄໍາສັບທີ່ກຽມໄວ້ໃສ່ກະດານ

| | x◌່ | x◌້ | x◌໊ | x◌໋ |
|---|---|---|---|---|
| ກາ | ກ່າ | ກ້າ | ກ໊າ | ກ໋າ |
| ປີ | ປີ່ | ປີ້ | ປ໊າ | ປ໋າ |
| ໂດ | ໂດ່ | ໂດ້ | ໂດ໊ | ໂດ໋ |

2. ຄູພານັກຮຽນອ່ານຜັນສຽງ 2 -3 ເທື່ອ

- ນັກຮຽນອ່ານຜັນສຽງ 2 – 3 ເທື່ອ

3. ຄູໃຫ້ນັກຮຽນອ່ານເປັນກຸ່ມ ແລະ ບຸກຄົນ

- ນັກຮຽນອ່ານເປັນກຸ່ມ ແລະ ບຸກຄົນຕາມຄູບອກ

ການວັດຜົນ

- ຄູບົ່ງຕົວໃຫ້ນັກຮຽນອອກໄປອ່ານ 2 – 3 ເທື່ອ
- ນັກຮຽນອອກໄປອ່ານ 2 – 3 ເທື່ອຕາມຄູບອກ
- ສັງເກດການອ່ານຜັນສຽງໃສ່ອັນນະຍຸດແຕ່ລະຕົວ

ພາກຂຽນ

1. ການສອນທັດຂຽນງາມ

- ຄູໃຫ້ນັກຮຽນຕິດຕາມເບິ່ງການຂີດເສັ້ນແຖວຢູ່ກະດານ
- ນັກຮຽນສັງເກດ
- ຄູຂີດເສັ້ນໃຫຍ່ 4 ເສັ້ນ 3 ແຖວ

- ຄູຂີດ 3 ເສັ້ນນ້ອຍໃສ່ຫວ່າງຂອງເສັ້ນໃຫຍ່

- ຄູຂຽນເນື້ອໃນໃສ່ແຖວທີ2 ຂອງເສັ້ນໃຫຍ່, ຂຽນຊ້າໆເພື່ອໃຫ້ນັກຮຽນອເບິ່ງການຂຽນຕົວພະຍັນຊະນະມີຫາງຂຶ້ນເທິງໃຫ້ຂີດຍາວຂຶ້ນໄປ 1/ 2 ຂອງແຖວເທິງ, ຕົວພະຍັນຊະນະມີຫາງລົງລຸ່ມໃຫ້ຂີດຍາວລົງໄປ 1/ 2 ຂອງແຖວລຸ່ມ, ສະຫຼະທີ່ຢູ່ເບື້ອງລຸ່ມ ແລະ ເທິງໃຫ້ວາງໃສ່ຊິ່ກັບຕົວພະຍັນຊະນະແກນ, ຖ້າເປັນພະຍັນຊະນະປະສົມ ຫຼື ຕົວຄວບ ໃຫ້ໃສ່ສ່ວນຫຼັງຂອງມັນໂດຍໃຫ້ຫ່າງຈາກຕົວພະຍັນຊະນະນັ້ນໆ ປະມານ 1 / 4 ຂອງແຖວ
- ຄູແນະນໍາໃຫ້ນັກຮຽນວ່າຖ້າແຖວຍັງເຫຼືອແມ່ນໃຫ້ຈໍ້າເມັດໄວ້ ແລ້ວເລີ່ມຕົ້ນຂຽນໃໝ່ຈົນກວ່າສຸດແຖວ
- ຄູອ່ານທັດຂຽນງາມໃຫ້ນັກຮຽນຟັງ
- ຄູໃຫ້ນັກຮຽນລົງມືຂຽນທັດຂຽນງາມ ແລະ ຄູຕິດຕາມນັກຮຽນຜູ້ທີ່ຂຽນບໍ່ທັນໄດ້ດີ

- ນັກຮຽນລົງມືຂຽນ
- ຄູສະຫຼຸບກວດທັດຂຽນງາມ ແລະ ໃຫ້ຄະແນນ
- ຄູຍ້ອງຍໍຊົມເຊີຍນັກຮຽນຜູ້ທີ່ຂຽນໄດ້ດີ ແລະ ໃຫ້ຄໍາແນະນໍານັກຮຽນຜູ້ທີ່ຂຽນບໍ່ທັນໄດ້ດີ
- ນັກຮຽນຮັບຄໍາຍ້ອງຍໍຈາກຄູ

ການວັດຜົນ

- ກວດຈາກການຂຽນງາມຂອງນັກຮຽນ ( ໃຫ້ຄະແນນ )

ສະຫຼູບບົດຮຽນ

- ຄູສົນທະນາຮູບພາບຄືນ
- ນັກຮຽນສົນທະນາຕາມຮູບພາບ
- ຖອດສຽງຈາກຮູບ
- ນັກຮຽນ: ຖອດສຽງຈາກຮູບ
- ການອ່ານຟ້ອງສຽງ, ຜັນສຽງ
- ນັກຮຽນ: ອ່ານຟ້ອງສຽງ, ຜັນສຽງ
- ຄູໃຫ້ນັກຮຽນຂຽນ ສ, ຊ ຄືນ
- ນັກຮຽນຂຽນ ສ, ຊ ຄືນ

ວັນທີ.................................          ວັນທີ...............................

ຜູ້ອໍານວຍການໂຮງຮຽນ          ຄູປະຈໍາວິຊາ

ບົດສອນ

ວິຊາພາສາລາວ          ຊັ້ນປ2

ບົດທີ 2          ເວລາ 3 ຊົ່ວໂມງ

ຫົວບົດ: ຂ້ອຍໄປໂຮງຮຽນ

ຈຸດປະສົງ

- ເພື່ອໃຫ້ນັກຮຽນສາມາດອ່ານຄໍາສັບຄືນໄດ້ຢ່າງຖືກຕ້ອງ
- ຕອບຄໍາຖາມໄດ້ຢ່າງຖືກຕ້ອງແຈ່ມແຈ້ງດີ
- ສົນທະນາຕັ້ງຄໍາຖາມ ແລະ ຕອບຄໍາຖາມກ່ຽວກັບຮູບພາບໄດ້
- ອ່ານເນື້ອໃນບົດຮຽນ ແລະ ອະທິບາຍຄໍາສັບໄດ້ຖືກຕ້ອງ
- ສົນທະນາ ແລະ ຕອບຄໍາຖາມພາຍໃນກຸ່ມໄດ້
- ເຂົ້າໃຈບົດຮຽນໄດ້ຈາກການສະຫຼູບຂອງຄູ ແລະ ນັກຮຽນ

ເນື້ອໃນ

ເວົ້າເຖິງຄວາມດຸໝັ່ນໄປໂຮງຮຽນມີແຕ່ການຮຽນເທົ່ານັ້ນທີ່ຊ່ວຍໃຫ້ເປັນຄົນດີ

ສື່ການສອນ

- ບັດຄຳສັບ: ປ້າຍ, ຫ້ອງຮຽນ, ແປ້ນ, ໂຕະ, ເດີ່ນ...
- ຮູບພາບ ຫຼື ວັດຖຸຈິງກ່ຽວກັບໂຮງຮຽນເຊັ່ນ: ນັກຮຽນ, ນາຍຄູ, ຫ້ອງຮຽນ ແລະ ອື່ນໆທີ່ກ່ຽວຂ້ອງກັບ ບົດ.
- ບັດຄຳຖາມ

ການປະເມີນຜົນ

- ສັງເກດຈາກການອ່ານຄຳສັບປ້າຍ, ຫ້ອງ, ແປ້ນ, ໂຕະ, ເດີ່ນ...
- ສັງເກດຈາກການຕອບຄຳຖາມຂອງນັກຮຽນຖືກຕ້ອງແຈ່ມແຈ້ງ
- ສັງເກດການອ່ານເນື້ອໃນບົດ ແລະ ອະທິບາຍຄຳສັບຖືກຕ້ອງ
- ສັງເກດຈາກການສົນທະນາ ແລະ ຕອບຄຳຖາມພາຍໃນກຸ່ມ

ກິດຈະກຳການຮຽນ - ການສອນ

- ຂັ້ນນຳ

- ກວດກາຈຳນວນພົນມາ...ຂາດ...
- ທວນຄືນບົດຮຽນເກົ່າ
  ດ້ວຍການຂຽນຄຳສັບໃສ່ກະດານແລ້ວໃຫ້ນັກຮຽນອ່ານ
- ຄູໃຫ້ນັກຮຽນອ່ານຄຳສັບທີ່ຄູຂຽນໃສ່ກະດານລຸ່ມນີ້: ປ້າຍ, ຫ້ອງ, ແປ້ນ, ໂຕະ, ເດີ່ນ...
- ຄູຕິດຕາມການອອກສຽງຂອງນັກຮຽນ
- ລ້ຽວເຂົ້າສູ່ບົດຮຽນໃໝ່
- ຄູຕັ້ງຄຳຖາມ

  1. ພວກຫຼານໄປໂຮງຮຽນແຕ່ລະມື້ແນວໃດ? ແມ່ນໃຜໄປສົ່ງ?

- ນັກຮຽນຕອບ: ຫຼານຍ່າງໄປເອງ, ພໍ່, ແມ່ ຫຼື ອ້າຍ ແລະ ເອື້ອຍໄປສົ່ງ.

- ຂັ້ນສອນ

ກິດຈະກຳທີ1:

ສົນທະນາກ່ຽວກັບຮູບພາບ ( ບົດທີ 2 )

- ຄູໃຫ້ນັກຮຽນສັງເກດຮູບໃຫຍ່ແລ້ວຖາມນັກຮຽນວ່າ:
- ອັນນີ້ແມ່ນຮູບຫຍັງ?
- ນັກຮຽນຕອບ: ຮູບນັກຮຽນຫຼິ້ນ
- ນັກຮຽນເຫັນຫຍັງແດ່ໃນຮູບນີ້ໆ
- ນັກຮຽນຕອບ: ນັກຮຽນ, ກະດປີາ, ຕົ້ນໄມ້, ໂຮງຮຽນ
- ພວກຫຼານເປັນນັກຮຽນຄວນເຮັດແນວໃດ?
- ນັກຮຽນຕອບ: ໄປໂຮງຮຽນທຸກມື້, ດຸໝັ່ນຮຽນໜັງສື, ບໍ່ເປັນຄົນຂີ້ຄ້ານ...
- ຄູສະຫຼຸບຄືນໂດຍອີງໃສ່ຄຳຕອບຂອງນັກຮຽນ
- ນັກຮຽນຟັງ ແລະ ສະຫຼຸບຄືນ

ກິດຈະກຳ 2 ອ່ານເນື້ອໃນ

- ຄູອ່ານເນື້ອໃນບົດໃຫ້ນັກຮຽນຟັງ 1- 2 ເທື່ອ

- ຄູໃຫ້ນັກຮຽນອ່ານໝົດຫ້ອງ, ແຖວ, ໂຕະ, ບຸກຄົນ ຫຼື ໃຫ້ນັກຮຽນເກັ່ງນໍາພາອ່ານ
- ນັກຮຽນອ່ານໝົດຫ້ອງ, ແຖວ, ໂຕະ, ບຸກຄົນ ຫຼື ໃຫ້ນັກຮຽນເກັ່ງນໍາພາອ່ານ
- ຄູຂຽນຄໍາສັບໃສ່ກະດານ
- ຕົວຢ່າງ
- ສະອອນໃຈ: ດີໃຈ
- ສູ່ມື້: ທຸກໆມື້
- ຝູງຄົນ: ກຸ່ມຄົນ, ໝູ່ຄົນ
- ອະທິບາຍຄວາມໝາຍ ແລະ ພານັກຮຽນອ່ານ.
- ນັກຮຽນຕິດຕາມ ແລະ ຟັງຄູອະທິບາຍຄໍາສັບ
- ຄູຫ້ນັກຮຽນອ່ານພ້ອມກັນໝົດຫ້ອງ 1 – 2 ເທື່ອ
- ນັກຮຽນອ່ານພ້ອມກັນໝົດຫ້ອງ 1 – 2 ເທື່ອ
- ຄູໃຫ້ນັກຮຽນອ່ານເປັນບຸກຄົນຕາມຄວາມເໝາະສົມ
- ນັກຮຽນອ່ານ, ອະທິບາຍສັບ

ກິດຈະກໍາທີ3: ສົນທະນາຖາມ - ຕອບຄໍາຖາມ

- ຄູແບ່ງນັກຮຽນອອກເປັນ 4 ກຸ່ມ ຫຼື ຕາມຄວາມເໝາະສົມແລ້ວຄູຢາຍຄໍາຖາມໃຫ້ນັກຮຽນຕອບດັ່ງນີ້:
- ນັກຮຽນຈັດກຸ່ມຕາມຄວາມເໝາະສົມເພື່ອຄົ້ນຄວ້າຕອບຄໍາຖາມທີ່ຄູຖາມດັ່ງນີ້:

1. ຍາມເມື່ອຕາເວັນຂຶ້ນມາແສງຫຍັງສ່ອງ?
- ຍາມເມື່ອຕາເວັນຂຶ້ນມີແສງແດດສ່ອງ

2. ແຕ່ລະມື້ເຈົ້າໄປໃສ?
- ແຕ່ລະມື້ຂ້ອຍໄປໂຮງຮຽນ

3. ໃນອາທິດໜຶ່ງພວກເຈົ້າໄປໂຮງຮຽນຈັກວັນ? ຄືວັນໃດແດ່?
- ໃນອາທິດໜຶ່ງພວກນ້ອງໄປໂຮງຮຽນ 5 ວັນຄື: ວັນຈັນ, ວັນຄານ, ວັນພຸດ, ວັນພະຫັດ, ວັນສຸກ.

4. ນັກຮຽນທີ່ບໍ່ມັກໄປໂຮງຮຽນເປັນຄົນແນວໃດ?
- ນັກຮຽນທີ່ບໍ່ມັກໄປໂຮງຮຽນເປັນຄົນຂີ້ຄ້ານ, ໂລເລ, ຮຽນໜັງສືບໍ່ເກັ່ງ.
- ຫຼັງຈາກນັກຮຽນຕອບຄໍາຖາມແລ້ວຄູໃຫ້ແຕ່ລະກຸ່ມອ່ານຄໍາຕອບແລ້ວຄູສະຫຼຸບເນື້ອໃນຄໍາຕອບຂອງແຕ່ລະກຸ່ມ ແລະ ແນະນໍາຄໍາຕອບທີ່ຖືກຕ້ອງໃຫ້ແຕ່ລະກຸ່ມ ແລ້ວໃຫ້ 1 ຄະແນນໝົດທຸກກຸ່ມ

ຂັ້ນສະຫຼຸບ

- ຄູ ແລະ ນັກຮຽນພ້ອມກັນສະຫຼຸບດ້ວຍການໃຫ້ນັກຮຽນອ່ານເນື້ອໃນບົດກອນທີ່ດ້ຮຽນມາຈາກບົດຮຽນ 1-2 ເທື່ອເພື່ອຄວາມເຂົ້າໃຈທີ່ຊັດເຈນຂອງນັກຮຽນ
- ນັກຮຽນອ່ານເນື້ອໃນບົດກອນຄືນຕາມຄໍາແນະນໍາຂອງຄູປະມານ 1- 2 ເທື່ອ
- ສຸດທ້າຍຄູຍົກຮູບພາບແລ້ວຖາມວ່າ:
    1. ພວກຫຼານເຫັນຫຍັງແດ່ໃນຮູບພາບ? ( ວິທີນີ້ແມ່ນໃຊ້ແຜນວາດຊ່ວຍຈື່)
- ນັກຮຍນສັງເກດຮູບພາບທີ່ຄູຍົກຂຶ້ນແລ້ວຕອບ

ຂັ້ນຕັກເຕືອນ:

- ຄູຕັກເຕືອນນັກຮຽນເວລາເລີກຮຽນບໍ່ໃຫ້ຢອກກັນໄປຕາມທາງ, ບໍ່ໃຫ້ຖິ້ມຂີ້ເຫຍື່ອຊະຊາຍ, ເມື່ອຮອດເຮືອນໃຫ້ເຮັດວຽກຊ່ວຍພໍ່ແມ່, ຮຽນໜັງສື, ບໍ່ໃຫ້ໄປທ່ຽວຫຼິ້ນ

- ນັກຮຽນຟັງຄຳຕັກເຕືອນຂອງຄູແລ້ວປະຕິບັດ

ວຽກບ້ານ

- ຄູໃຫ້ນັກຮຽນທ່ອງຂຶ້ນໃຈບົດທ່ອງຢູ່ເຮືອນຫໍໄດ້ລ່ຽນໄຫຼດີ

ພວກຫຼານເຫັນຫຍັງແດ່ໃນຮູບພາບ

ສ້າງແຜນວດຊ່ວຍຈື່ດ້ວຍການເອົາຄຳຕອບຈາກນັກຮຽນ




**ວັນທີ.................................** **ວັນທີ...............................**

**ຜູ້ອຳນວຍການໂຮງຮຽນ** **ຄູປະຈຳວິຊາ**

ບົດສອນ

ວິຊາພາສາລາວ ຊັ້ນປ3

ບົດທີ 2 ເວລາ 2 ຊົ່ວໂມງ

ຫົວບົດ: ໂຮງຮຽນຂອງຂ້ອຍ

ຈຸດປະສົງ

- ເພື່ອໃຫ້ນັກຮຽນສາມາດຮູ້ວິທີຮັກສາປຶ້ມໄວ້ໃຫ້ສະອາດໄດ້
- ໃຫ້ນັກຮຽນຂຽນທວາຍຖືກຫຼັກໄວຍາກອນ ແລະ ເຂົ້າໃຈເນື້ອໃນບົດຮຽນໄດ້
- ໃຫ້ນັກຮຽນຕອບຄຳຖາມປາກເປົ່າໄດ້
- ນັກຮຽນສາມາດອ່ານບົດຮຽນໄດ້ຢ່າງລ່ຽນຫຼຽນ

ເນື້ອໃນ

ເວົ້າເຖິງທີ່ຕັ້ງຂອງໂຮງຮຽນ, ສະພາບຂອງໂຮງຮຽນ, ບໍລິເວນອ້ອມຮອບຂອງໂຮງຮຽນ ແລະ ສະພາບພາຍໃນເດີ່ນໂຮງຮຽນ.

ສື່ການສອນ

- ປຶ້ມຕຳລາຮຽນ ແລະ ຄູ່ມືປ3
- ເນື້ອໃນບົດອ່ານທີ່ຈະຂຽນທວາຍ
- ບັດຄຳຖາມ

ການວັດ ແລະ ປະເມີນຜົນ

- ສັງເກດຈາກການຕອບຄຳຖາມຂອງນັກຮຽນ
- ສັງເກດຈາກການຂຽນທວາຍ
- ສັງເກດຈາກການຕອບຄຳຖາມ

ກິດຈະກຳການຮຽນ-ການສອນ

ຂັ້ນນຳ

- ກວດກາຈຳນວນພົນ
- ຄູທວນຄືນບົດຮຽນເກົ່າຄູຕັ້ງຄຳຖາມແລ້ວໃຫ້ນັກຮຽນຕອບ 1-2 ຄົນຕາມຄວາມເໝາະສົມ
- ຄູຖາມນັກຮຽນວ່າ:ພວກຫຼານໄດ້ຮັກສາປຶ້ມແນວໃດ?
- ນັກຮຽນຕອບ: ຮັກສາປຶ້ມໃຫ້ສະອາດ, ບໍ່ໃຫ້ຂາດ ແລະ ເສຍຫາຍເມື່ອຮຽນແລ້ວຈະຮັກສາໄວ້ໃຫ້ນ້ອງໃນປີຕໍ່ໄປ.
- ຄູຕິດຕາມການຕອບຄຳຖາມຂອງນັກຮຽນ
- ສະຫຼຸບຄຳຕອບໃຫ້ນັກຮຽນ

ຂັ້ນສອນ

- ຄູອ່ານບົດຫັດອ່ານຕອນທີ່ຈະຂຽນທວາຍໃຫ້ນັກຮຽນຟັງ 1- 2 ເທື່ອແລ້ວໃຫ້ນັກຮຽນອ່ານພ້ອມກັນໝົດຫ້ອງ 1- 2 ເທື່ອ.
- ນັກຮຽນຕັ້ງໃຈຟັງຄູອ່ານ
- ນັກຮຽນອ່ານກອນຂຽນທວາຍພ້ອມກັນໝົດຫ້ອງ
- ຫຼັງຈາກນັ້ນຄູບອກໃຫ້ນັກຮຽນພັບປຶ້ມໄວ້ກອງໂຕະແລ້ວເອົາເຈ້ຍອອກມາຂຽນທວາຍ
- ນັກຮຽນມ້ຽນປຶ້ມ ແລະ ເອົາເຈ້ຍອອກມາຂຽນທວາຍ
- ຄູຈະອ່ານໃຫ້ນັກຮຽນຟັງ 3 ເທື່ອຄື:
- ນັກຮຽນຕັ້ງໃຈຟັງຄູອະທິບາຍ
- ເທື່ອທີ1 ຄູອ່ານໃໃຫ້ນັກຮຽນຟັງຢ່າງຈະແຈ້ງ ແລະ ຊັດເຈນ

- ເທື່ອທີ2 ຄູອ່ານໃຫ້ນັກຮຽນຂຽນ
- ເທື່ອທີ3 ຄູຈະໃຫ້ນັກຮຽນກວດຄືນ
- ຄູອ່ານເນື້ອໃນໃຫ້ນັກຮຽນຂຽນທວາຍ
- ຄູບອກໃຫ້ນັກຮຽນເອົາເຈ້ຍຂຽນທວາຍມາສົ່ງ ແລ້ວເລືອກເອົາບົດຕົວຢ່າງມາໜຶ່ງບົດເພື່ອກວດ ແລະ ອະທິບາຍຄຳສັບທີ່ຍາກໃຫ້ນັກຮຽນຟັງເຊັ່ນ:
- ມໍ່ : ໃກ້, ບໍ່ໄກ
- ເຫຼັກໜາມ: ລວດໜາມໝາກຈັບ
- ຄູຖາມກ່ຽວກັບເນື້ອໃນບົດຂຽນທວາຍໃຫ້ນັກຮຽນຕອບຄຳຖາມປາກເປົ່າເປັນບຸກຄົນຕາມຄວາມເໝາະສົມດັ່ງນີ້:

1. ໂຮງຮຽນຂອງເຈົ້າຕິດກັບບ້ານໃດ?

- ນັກຮຽນຕອບ: ໂຮງຮຽນຂອງຂ້ອຍຢູ່ລະຫວ່າງກາງບ້ານເໜືອ ແລະ ໃຕ້

2.ລັກສະນະຂອງໂຮງຮຽນເຈົ້າເປັນຄືແນວໃດ?

- ໂຮງຮຽນຂ້ອຍເປັນຮູບສີ່ແຈສາກ, ຫຼັງໃຫຍ່, ມຸງສັງກະສີ...

3.ຮົ້ວຂອງໂຮງຮຽນເຈົ້າເປັນແນວໃດ?

- ຮົ້ວຂອງໂຮງຮຽນທຸກດ້ານອ້ອມດ້ວຍເຫຼັກໜາມ

ຂັ້ນສະຫຼຸບ

- ຄູ ແລະ ນັກຮຽນພ້ອມກັນສະຫຼຸບບົດຮຽນຄືນດ້ວຍການໃຫ້ນັກຮຽນອ່ານເນື້ອໃນບົດຮຽນທີ່ໄດ້ຮຽນມາ ປະມານ1-2 ເທື່ອເພື່ອຄວາມເຂົ້າໃຈທີ່ຊັດເຈນຂອງນັກຮຽນ. ( ຄູເອົາແຜນວາດຊ່ວຍຈື່ໃຫ້ນັກຮຽນເບິ່ງຫຼັງຈາກອ່ານບົດຮຽນແລ້ວ)
- ນັກຮຽນອ່ານ, ຟັງ ແລະ ສະຫຼຸບບົດຮຽນຄືນຮ່ວມກັບຄູ
- ສັງເກດ ແລະ ຕິດຕາມແຜນວາດຊ່ວຍຈື່ທີ່ຄູສະເໜີ

ຂັ້ນຕັກເຕືອນ

- ເວລາມາໂຮງຮຽນຕ້ອງໃຫ້ທັນໂມງເວລາເຂົ້າຮຽນ, ເມື່ອຮອດເຮືອນໃຫ້ຊ່ວຍວຽກພໍ່ແມ່, ຮຽນໜັງສື ແລະ ບົວລະບັດຮັກສາອຸປະກອນການຮຽນໃຫ້ສະອາດຈົບງາມ
- ນັກຮຽນ ຟັງ ແລະ ປະຕິບັດຕາມຄຳຕັກເຕືອນຂອງຄູ

ວຽກບ້ານ

- ຄູໃຫ້ນັກຮຽນທ່ອງຂຶ້ນໃຈບົດທ່ອງຢູ່ບ້ານໃຫ້ລ່ຽນໄຫຼດີ
- ນັກຮຽນຟັງ ແລະ ປະຕິບັດຕາມຄຳມອບໝາຍຂອງຄູ

**ວັນທີ.................................** **ວັນທີ...............................**

**ຜູ້ອຳນວຍການໂຮງຮຽນ** **ຄູປະຈຳວິຊາ**

ບົດສອນ

ວິຊາພາສາລາວ　　　　　　　　　　　　　　　　　　　　ເວລາ 1 ຊົ່ວໂມງ

ບົດທີ 39

ຫົວບົດ: ຍາມເຮັດນາປີ

I.ຈຸດປະສົງ

- ໃຫ້ນັກຮຽນຂຽນທວາຍຕາມເນື້ອໃນບົດບາງຕອນ ແລະ ຕອບຄຳຖາມກັບບົດຂຽນທວາຍໄດ້

II.ເນື້ອໃນຕົ້ນຕໍ

ຊາວນາພາກັນຫວ່ານກ້າໄວ້ໃຫ້ພຽງພໍຕາມເນື້ອທີ່ດິນຂອງໃຜລາວ. ກ່ອນຈະຄາດນາເພິ່ນໄຖຮຸດນາປະໄວ້ ພໍກ້າໃຫຍ່ໄດ້ເດືອນໜຶ່ງຈຶ່ງຫຼົກໄປດຳໃສ່ນາທີ່ໄຖ ແລະ ຄາດດີແລ້ວ

III. ສື່ການສອນ

- ບັດຄຳຖາມ

IV. ປະເມີນຜົນ

- ສັງເກດຈາກການຕອບຄຳຖາມ
- ສັງເກດຈາກການຄົ້ນຄວ້າບົດຮຽນ
- ສັງເກດຈາກບົດຂຽນທວາຍ

V. ກິດຈະກຳການຮຽນ-ການສອນ

➢ ຂັ້ນນຳເຂົ້າສູ່ບົດຮຽນ　( ເວລາ 5 ນາທີ )

- ຄູ ແລະ ນັກຮຽນທຳຄວາມເຄົາລົບເຊິ່ງກັນ ແລະ ກັນ
- ຄູກວດກາຈຳນວນພົນເຕັມ.....ຄົນ, ຂາດຄົນ
- • ຄູໄດ້ມີການທົບທວນຄືນບົດຮຽນເກົ່າ
- ຄູຕັ້ງຄຳຖາມ :
    1. ຍາມເຮັດນາປີເລີ່ມແຕ່ເດືອນໃດຫາເດືອນໃດ?
- ໃຫ້ນັກຮຽນ 2-3 ຄົນຕອບ
- ຄູຍ້ອງຍໍ
- ຜ່ານການຕອບຂອງນັກຮຽນຄູສະຫຼຸບຄືນ.

➢ ຂັ້ນສອນບົດໃໝ່

- • ກິດຈະກຳທີ1 ພາກຂຽນທວາຍ ( 25ນາທີ )
- ຄູແນະນຳນັກຮຽນອ່ານບົດຫັດອ່ານທີ່ຈະຂຽນທວາຍ ເລີ່ມແຕ່ຊາວນາຈົນຮອດຄາດດີແລ້ວ
- ຄູອ່ານເນື້ອໃນບົດຮຽນທີ່ຈະຂຽນທວາຍໃຫ້ນັກຮຽນຟັງ 1-2
- ຄູແນະນຳກ່ອນການຂຽນ
- ຄູແນະນຳໃຫ້ນັກຮຽນຂຽນໃສ່ປຶ້ມຂອງໃຜລາວ
- ເມື່ອນັກຮຽນຂຽນແລ້ວຄູຖາມກ່ຽວກັບເນື້ອໃນບົດຂຽນທວາຍດັ່ງນີ້:

1. ກ່ອນຈະດຳນາຊາວນາເຮັດຫຍັງ?
2. ຕົ້ນກ້າໃຫຍ່ເທົ່າໃດຈິ່ງຫຼົກໄປດຳໃສ່ນາໄດ້

- ຄູແນະນຳນັກຮຽນຕອບຄຳຖາມເປັນລາຍບຸກຄົນ
- ນັກຮຽນຕອບ
- ນັກຮຽນຕອບຖືກຄູຍ້ອງຍໍ, ຖ້ານັກຮຽນຕອບຜິດຄູແນະນຳຕື່ມ

➢ຂັ້ນສະຫຼຸບ ( ເວລາ 5 ນາທີ )

- ຄູ ແລະ ນັກຮຽນພ້ອມກັນສະຫຼຸບຄືນເນື້ອໃນບົດຂຽນທວາຍ.
- ໃຫ້ນັກຮຽນເວົ້າຄືນກ່ຽວກັບເນື້ອໃນບົດຂຽນທວາຍ
- ຄູຖາມຄວາມຂ້ອງໃຈຂອງນັກຮຽນ

➢ຂັ້ນວັດຜົນ ( ເວລາ 15 ນາທີ)

- ຄູກວດກາດ້ວຍການຂຽນທວາຍດ້ວຍຄຳສັບຊອກກິນ, ຊອກຫາ, ເອົາໃຈໃສ່, ເສືອ, ຮ້ອງໃສ່, ສິດຊິ່ນ, ສ່ວນສ່ຽວ, ສອງສ່ຽວ
- ນຳເອົາບົດທົດສອບມາກວດພ້ອມໃຫ້ຄະແນນ

➢ ຕັກເຕືອນ -ມອບວຽກບ້ານ

- ພວກນ້ອງພະຍາຍາມຮໍ່າຮຽນຕື່ມ ແລະ ຟັງຄຳອະທິບາຍຂອງຄູໃນເວລາຮຽນ.
- ເວລາພວກນ້ອງເມືອເຮືອນຄວນເບິ່ງບົດຮຽນຕື່ມອີກ ແລະ ຊ່ວຍເຫຼືອວຽກພໍ່ແມ່.

**ວັນທີ................................** **ວັນທີ..............................**

**ຜູ້ອຳນວຍການໂຮງຮຽນ** **ຄູປະຈຳວິຊາ**

ບົດສອນ

ວິຊາ: ພາສາລາວ ຊັ້ນຮຽນ ປ3

ບົດທີ: 42 ( ຕໍ່ ) ເວລາ 45 ນາທີ

ຫົວບົດ: ສ ປ ປ ລາວ

I. ຈຸດປະສົງ
   - ໃຫ້ນັກຮຽນສາມາດອ່ານອອກສຽງຄໍາສັບໄດ້ຢ່າງຖືກຕ້ອງ
   - ໃຫ້ສາມາດຈໍາແນກອັນໃດແມ່ນຄໍາແລະ ວະລີໄດ້

II. ເນື້ອໃນ
   - ອ່ານເປັນຄໍາ ແລະ ວະລີ

III. ສື່ການຮຽນ - ການສອນ
   - ປື້ມແບບຮຽນ ແລະ ຄູ່ມືຄູ ພາສາລາວ ປ 3
   - ຖົງບັດຄໍາ
   - ບັດຄໍາສັບ( ແຂວງ, ເມືອງ, ບ້ານ, ຫົນທາງ, ຫຍຸ້ງຍາກ, ສູງສຸດ, ອັນດີງາມ, ອາຊີບ,ສະຫົງບສຸກ )

IV. ປະເມີນຜົນ
   - ສັງເກດການອ່ານອອກສຽງຂອງນັກຮຽນ
   - ສັງເກດການອອກກະດານຂອງນັກຮຽນ
   - ສັງເກດຄວາມເຂົ້າໃຈຂອງນັກຮຽນ

V. ກິດຈະກໍາການຮຽນ - ການສອນ

**+ ຂັ້ນນໍາ:**
   - ຄູ ແລະ ນັກຮຽນທໍາຄວາມເຄົາລົບ
   - ກວດກາຈໍານວນຄົນຂາດ. ເຕັມ, ຂາດ
   - ທວນຄືນບົດຮຽນເກົ່າ
   - ຄູຕັ້ງຄໍາຖາມ
     1. ສ ປ ປ ລາວ ຫຍໍ້ມາຈາກຄໍາໃດ?
     2. ປະຊາຊົນລາວເຮົາສ່ວນຫຼາຍມີອາຊີບເຮັດຫຍັງ?
   - ນັກຮຽນຕອບຄໍາຖາມ

- ຄູສະຫຼຸບຄືນຄຳຕອບຂອງນັກຮຽນ

**+ ຂັ້ນສອນ:**

- ຄູສະເໜີຫົວຂໍ້ທີ່ຈະສອນ
- ຄູຂຽນຫົວຂໍ້ໃສ່ກະດານ
- ບົດທີ: 42 ຫົວບົດ: ສ .ປ. ປ. ລາວ
- ພາກອ່ານເປັນຄຳ ແລະ ວະລີ
- ອ່ານເປັນຄຳ ແລະ ວະລີ
- ຄູຫ້ອຍຖົງບັດຄຳໃສ່ກະດານ
- ຄູເອົາບັດຄຳສັບສຽບໃສ່ຖົງບັດຄຳ
- ຄູໃຫ້ນັກຮຽນອາສາສະໝັກອ່ານກ່ອນ
- ຄູອ່ານຄຳສັບໃຫ້ນັກຮຽນຟັງ 2 – 3 ເທື່ອ
- ຄູໃຫ້ນັກຮຽນອ່ານຕາມຫຼັງຄູ 2 – 3 ເທື່ອ
- ຄູໃຫ້ນັກຮຽນອອກມາອ່ານບັດຄຳສັບຢູ່ກະດານ
- ຄູຊີ້ໃສ່ບັດຄຳສັບໃຫ້ນັກຮຽນອ່ານ 2 – 3 ເທື່ອ
- ຄູເອີ້ນຊື່ນັກຮຽນ ຫຼື ນັກຮຽນອາສາສະໝັກອອກມາເລືອກເອົາຄຳສັບຢູ່ໜ້າໂຕະຄູ ແລ້ວຍົກໃຫ້ໝູ່ເບິ່ງ ແລະ ອ່ານໃຫ້ໝູ່ຟັງພ້ອມ ແລ້ວສຽບໃສາຖົງບັດຄຳ
- ຫຼັງຈາກນັ້ນຄູແນະນຳໃຫ້ນັກຮຽນຮູ້ຄຳສັບອັນໃດແມ່ນຄຳ ແລະ ອັນໃດແມ່ນວະລີ
- ຄຳນາມ: ບ້ານ, ເມືອງ, ແຂວງ.
- ວະລີ: ສະດວກ, ຫົນທາງ, ຫຍຸ້ງຍາກ, ສູງສຸດ, ອັນດີງາມ ແລະ ອາຊີບ
- ຄູ ແລະ ນັກຮຽນສະຫຼຸບການອ່ານຂອງນັກຮຽນແຕ່ລະຄົນ

**+ ຂັ້ນສະຫຼຸບ**

- ຄູສະຫຼຸບບົດຮຽນຄືນທີ່ຮຽນມາ
- ການອ່ານອອກສຽງ, ຄວາມເຂົ້າໃຈໃນການຈຳແນກ, ຄຳ ແລະ ວະລີ
- ຄູຖາມພວກຫຼານເຂົ້າໃຈບໍກັບບົດຮຽນທີ່ຮຽນມາ

**+ ຂັ້ນວັດ ຜົນ**

- ທົດສອບ
- ຄູໃຫ້ນັກຮຽນເປັນຄຳ ແລະ ວະລີເປັນລາຍບຸກຄົນ
- ຄູຕິດຕາມການອ່ານພ້ອມໃຫ້ຄະແນນນັກຮຽນແຕ່ລະຄົນ

\+ ຕັກເຕືອນ ແລະ ມອບວຽກບ້ານ

- ຄູແນະນຳນັກເມືອເຮືອນຊ່ວຍວຽກພໍ່ແມ່
- ແນະນຳໃຫ້ອອ່ານບົດຮຽນຄືນ ແລະ ອ່ານບົດຕໍ່ໄປ

**ວັນທີ................................** **ວັນທີ..............................**

**ຜູ້ອຳນວຍການໂຮງຮຽນ** **ຄູປະຈຳວິຊາ**

ບົດສອນ

ວິຊາພາສາລາວ ເວລາ 3 ຊົ່ວໂມງ

ບົດທີ 30

ຫົວບົດ: ນ້ຳໃຈອັນຊາດ

I.ຈຸດປະສົງ

- ໃຫ້ນັກຮຽນສາມາດອ່ານ ແລະ ສັງເກດຄຳສຳຜັດລະຫວ່າງແຖວຂອງເນື້ອໃນກາບກອນໄດ້
- ໃຫ້ນັກຮຽນຄັດຄຳສຳຜັດໃນແຕ່ລະແຖວຂອງບົດກາບກອນແລ້ວກ່າຍໃສ່ປຶ້ມຂຽນຂອງຕົນໄດ້

II.ເນື້ອໃນຕົ້ນຕໍ

ເວົ້າເຖິງຜູ້ຕວະລາຍຈ່າຍ ແລະ ເນລະຄຸນ( ລືມບຸນຄຸນ)ຍ່ອມໄດ້ຮັບໂທດກຳເປັນສິ່ງຕອບແທນ.

III. ສື່ການສອນ

- ບັດຄຳຖາມ
- ຮູບພາບ
- ບົດກາບກອນ

IV. ປະເມີນຜົນ

- ສັງເກດຈາກຄວາມສົນໃຈຂອງນັກຮຽນແຕ່ລະຄົນ
- ສັງເກດຈາກການຄົ້ນຄວ້າໃນແຕ່ລະກຸ່ມ
- ສັງເກດຈາກການລາຍງານຂອງນັກຮຽນແຕ່ລະກຸ່ມ
- ສັງເກດຈາກການອ່ານ
- ສັງເກດການຄັດຄຳສຳພັດລະຫວ່າງແຖວ ຂອງເນື້ອໃນກາບກ່ອນ.

V. ກິດຈະກຳການຮຽນ-ການສອນ

➢ **ຂັ້ນນຳເຂົ້າສູ່ບົດຮຽນ ( ເວລາ 10ນາທີ )**

- ຄູ ແລະ ນັກຮຽນທຳຄວາມເຄົາລົບເຊິ່ງກັນ ແລະ ກັນ
- ຄູກວດກາຈຳນວນພົນເຕັມ.....ຄົນ, ຂາດຄົນ

• ຄູໄດ້ມີການທົບທວນຄືນບົດຮຽນເກົ່າ

- ຄູຕັ້ງຄຳຖາມ :
  1. ວັດພູຕັ້ງຢູ່ທີ່ໃດຂອງເມືອງປາກເຊ?
- ໃຫ້ນັກຮຽນ 2-3 ຄົນຕອບ
- ຄູຍ້ອງຍໍ
- ຜ່ານການຕອບຂອງນັກຮຽນຄູສະຫຼຸບຄືນ.
- ລ້ຽວເຂົ້າສູ່ບົດຮຽນໃໝ່
- ຄູຍົກຮູບພາບທະຫານເດີນສວນສະໜາມໃຫ້ນັກນຮຽນສັງເກດ

➢ **ຂັ້ນສອນບົດໃໝ່**

- **ກິດຈະກຳທີ1ພາກຟັງ - ເວົ້າ**
- ຄູອະທິບາຍຄຳສຳຜັດໃນກາບກອນ
- ການສຳຜັດນອກ
- ຄູຕັ້ງຄຳຖາມ
  1. ຄຳສຳຜັດໃນແມ່ນສຳຜັດແນວໃດ?
  2. ສຳຜັດນອກແມ່ນສຳຜັດແນວໃດ?
- ຄູແນະນຳນັກຮຽນຕອບຄຳຖາມ
- ນັກຮຽນຕອບ
- ຄູສະຫຼຸບຄືນຄຳຕອບຂອງນັກຮຽນ
- ນັກຮຽນຕອບຖືກຄູຍ້ອງຍໍ, ຕອບຜິດແນະນຳຕື່ມ
- ຄູແນະນຳນັກຮຽນຈົດເອົາບົດຮຽນ
- **ກິດຈະກຳທີ 2 ພາກອ່ານ -ຂຽນ**
- ຄູໃຫ້ນັກຮຽນອ່ານໃນໃຈເປັນບຸກຄົນ,ພາຍຫຼັງນັກຮຽນອ່ານແລ້ວ ຄູໃຫ້ນັກຮຽນເວົ້າຄືນກ່ຽວກັບເນື້ອໃນຕົ້ນຕໍຂອງເລື່ອງ
- ຄູໃຫ້ນັກຮຽນອ່ານຮ່ວມກັນໂດຍເນັ້ນໃຫ້ນັກຮຽນເປົ້າໝາຍມີສ່ວນຮ່ວມຫຼາຍ
- ຄູອະທິບາຍຄຳສັບ ແລະ ຄວາມໝາຍຂອງກາບກອນທີ່ນັກຮຽນບໍ່ເຂົ້າໃຈ
- ຄູໄດ້ສົນທະນາຕອບຖາມຕາມເນື້ອໃນຂອງບົດຮຽນ
- ຄູຕັ້ງຄຳຖາມ
  1. ເໝືອນດັ່ງຕົກກອງໄຟທົ່ວແດນດິນດ້າວມີຄວາມໝາຍແນວໃດ?
  2. ຄຳວ່າ: ບໍ່ຍອມເປັນຂ້ອຍຂ້າມານຮ້າຍຕ່າງແດນມີຄວາມໝາຍແນວໃດ?
  3. ຄຳວ່າ: ປາຕົກຂ້ອນຫຼອນຊຶມນ້ຳໃໝ່ມີຄວາມໝາຍວ່າແນວໃດ?
  4. ຄຳວ່າ: ເປັນວັນແປງລາວໃຫ້ເປັນເມືອງເອກະລາດມີຄວາມໝາຍວ່າແນວໃດ?
  5. ຄຳວ່າ: ຮ້ອງປ່າວໃຫ້ໂລກຮູ້ວ່າລາວແພ້ໝູ່ມານມີຄວາມໝາຍວ່າແນວໃດ?
- ຄູໃຫ້ນັກຮຽນຕອບໂດຍເນັ້ນໃສ່ນັກຮຽນເປົ້າໝາຍ
- ຄູຍ້ອງຍໍຊົມເຊີຍ
- ຄູໄດ້ສົນທະນາສັງເກດການຕອບຄຳຖາມ
- ຄູໄດ້ມີຄຳຄິດຄຳເຫັນຕື່ມຕໍ່ການປະກອບຂອງນັກຮຽນທີ່ເຫັນວ່າບາງເນື້ອໃນທີ່ເຫັນວ່າບໍ່ທັນສົມບູນ.
- **ກິດຈະກຳທີ3 ( ເວລາ 90 ນາທີ )**

ຄູໃຫ້ນັກຮຽນຄົ້ນຄວ້າຄຳຕອບເປັນກຸ່ມໂດຍຄູແບ່ງນັກຮຽນອອກເປັນ 5 ກຸ່ມ, ກຸ່ມ 4 – 5 ຄົນ.

- ຄູຢາຍເນື້ອໃນບົດກອນໃຫ້ນັກຮຽນແຕ່ລະກຸ່ມໂດຍແນະນຳໃຫ້ນັກຮຽນຈຳແນກຄຳສຳຜັດແລ້ວຂຽນຄຳຕອບໃສ່ເຈ້ຍ.

**ກຸ່ມທີ1**

1. ຈົ່ງຄັດຄຳສຳຜັດໃນແຕ່ລະແຖວຂອງບົດກາບກອນໃນຫົວບົດ: ນໍ້າໃຈອັນຊາດ

**ກຸ່ມທີ2**

1. ຈົ່ງຄັດຄຳສຳຜັດໃນແຕ່ລະແຖວຂອງບົດກາບກອນໃນຫົວບົດ: ແຜ່ນດິນລາວ

**ກຸ່ມທີ3**

1. ຈົ່ງຄັດຄຳສຳຜັດໃນແຕ່ລະແຖວຂອງບົດກາບກອນໃນຫົວບົດ:ຜູ້ໃຫ້ແສງສະຫວ່າງ

**ກຸ່ມທີ4**

1. ຈົ່ງຄັດຄຳສຳຜັດໃນແຕ່ລະແຖວຂອງບົດກາບກອນໃນຫົວບົດ: ປ່າດົງ

**ກຸ່ມທີ5**

1. ຈົ່ງຄັດຄຳສຳຜັດໃນແຕ່ລະແຖວຂອງບົດກາບກອນໃນຫົວບົດ: ໄມ້ປ່ອງ

- ຄູແນະນຳໃຫ້ນັກຮຽນແຕ່ລະກຸ່ມຄົ້ນຄວ້າ
- ແນະນຳໃຫ້ຕ່າງໜ້າກຸ່ມຂຶ້ນມາລາຍງາຍ
- ແນະນຳນັກຮຽນກຸ່ມອື່ນຕິດຕາມ
- ຄູຕິດຕາມການລາຍງານຂອງນັກຮຽນແຕ່ລະກຸ່ມ

➢ **ຂັ້ນສະຫຼຸບ ( ເວລາ 5 ນາທີ )**

- ຄູ ແລະ ນັກຮຽນພ້ອມກັນສະຫຼຸບຄືນເນື້ອໃນບົດຮຽນກ່ຽວກັບເນື້ອໃນບົດຮຽນ.
- ໃຫ້ນັກຮຽນກຸ່ມເປົ້າໝາຍເວົ້າຄືນກ່ຽວກັບການສຳຜັດກາບກອນ
- ຄູຖາມຄວາມຂ້ອງໃຈຂອງນັກຮຽນ ( ຖ້າມີ )ຄູໃຫ້ນັກຮຽນຈົດເອົາເນື້ອໃສ່ປຶ້ມຂອງໃຜລາວ

➢ **ຂັ້ນວັດຜົນ ( ເວລາ 15 ນາທີ)**

ຄູກວດກາດ້ວຍຄຳຖາມ

1. ຈົ່ງຄັດຄຳສຳຜັດໃນແຕ່ລະແຖວຂອງບົດກາບກອນໃນຫົວບົດ ນໍ້າໃຈອັນຊາດ

- ນຳເອົາບົດທົດສອບມາກວດພ້ອມໃຫ້ຄະແນນ

➢ **<u>ຕັກເຕືອນ -ມອບວຽກບ້ານ</u>**

- ພວກນ້ອງພະຍາຍາມຮໍ່າຮຽນຕື່ມ ແລະ ຟັງຄຳອະທິບາຍຂອງຄູໃນເວລາຮຽນ.
- ເວລາພວກນ້ອງເມືອເຮືອນຄວນເບິ່ງບົດຮຽນຕື່ມອີກ ແລະ ຊ່ວຍເຫຼືອວຽກພໍ່ແມ່.

ວັນທີ....................................... ວັນທີ............................

ຜູ້ອຳນວຍການໂຮງຮຽນ ຄູປະຈຳວິຊາ

- ຄູຢາຍໃຫ້ນັກຮຽນຄູແນະນຳໃຫ້ນັກຮຽນອ່ານ ແລະ ຈົດອອກບ່ອນທີ່ສຳຜັດ

**ນໍ້າໃຈອັນຊາດ**

**ຫັດອ່ານ**

ວັນປະເສີດເລີດລ້ຳ ໂລກສັ່ນດິນສະເທືອນ
ເດືອນທັນວາທີສອງ ຮຸ່ງແສງໃສ່ແຈ້ງ
ມັນເປັນວັນລາວພ້ອມ ສະຫຼອງໄຊຄັ້ງໃຫ່ຍ
ບໍ່ຍອມເປັນຂ້ອຍຂ້າ ມານຮ້າຍຕ່າງແດນ.
ຫຼາຍສິບປີຄັບແຄ້ນ ແໜ້ນອັ່ງໃນອົກ
ເໜືອນດັ່ງຕົກກອງໄຟ ທົ່ວແດນແສນເສົ້າ
ລາວຮ່ວມແຮງກັນເຂົ້າ ສາມັກຄີກວ້າງໃຫ່ຍ
ສ. ປ. ປ. ລາວ ປະກາດໄວ້ ບໍ່ຍອມຂື້ນແກ່ໃຜ.
ຊາດລາວປະກາດໃຫ້ ຮູ້ທົ່ວໂລກາ
ສອງທັນວາມີໄຊ ຜ່ອນຄາຍຫາຍຮ້ອນ
ປຽບດັ່ງປາຕົກຂ້ອນ ຫຼອນຊີມນ້ຳໃໝ່
ບໍ່ວ່າເໜືອ ແລະ ໃຕ້ ສະຫຼອງພ້ອມພໍ່າກັນ.
ປວງປະຊາຍຶດໝັ້ນ ຈຳຈື່ໃນໃຈ
ຖືວ່າເປັນວັນໄຊ ລືກງາມຍາມແຈ້ງ
ເປັນວັນແປງລາວໃຫ້ ເປັນເມືອງເອກະລາດ
ຄວາມສະຫຼາດອົງອາດພ້ອມ ວ່າລາວກ້າເກັ່ງຫານ.
ລາວເຮົາທົ່ວປະເທດບ້ານ ກ້ອງສະໜັ່ນໄຊໂຍ
ຊູຄັນທຸງໂບຍສະບັດ ແກ່ວງໄກວລົມຕ້ອງ
ມອງເບິ່ງຕາມເຮືອນຮ້ານ ທຸງປິວງາມຄ່ອງ
ຮ້ອງປ່ວງໃຫ້ໂລກຮູ້ ວ່າລາວແພ້ໝູ່ມານ ແທ້ໄດ.

- ຄູແນະນຳໃຫ້ນັກຮຽນອ່ານ ແລະ ຈົດອອກບ່ອນທີ່ສຳຜັດ

**ແຜ່ນດິນລາວ**

**ຫັດອ່ານ**

ຮຽນໃຫ້ຈຳຈື່ໝັ້ນ ທ້ອງຖິ່ນດິນລາວ
ເປັນຮູບຍາວລີງໄປ ຈາກເໜືອຖືງໃຕ້
ຕອນເໜືອເປັນດິນກວ້າງ ຕອນກາງພັດແຄບແດ່
ຫຍັບລົງໄປເຂດໃຕ້ ດິນພັດກວ້າງກວ່າກາງ
ບໍລະພາເບື້ອງນັ້ນ ສາຍພືດພູຫຼວງ
ເປັນດິນແດນບອກໝາຍ ຫວຽດລາວຄາວເຍີ້ນ
ມີພູຜາຫຼາຍຊັ້ນ ອາລັນຍາວຍ່ານ
ຕິດຕໍ່ຖານຖິ່ນຖ້ອນ ເຖິງຄ້າຍຂ່ວງເຮົາ
ທິດເໜືອລາວຈອດຈໍ້າ ຈຳເຂດແດນຈີນ
ຕາເວັນຕົກຕິດໄທ ບໍ່ຫ່າງໄກຈາກມຽນມາ
ລົງໄປຫາທາງທິດໃຕ້ ດິນລາວເຊື່ອມຕໍ່
ກຳພູເຈຍເພື່ອນບ້ານ ມາແທ້ແຕ່ນານ ນັ້ນແລ້ວ

ແຜ່ນດິນລາວເຮົາຢັ້ງ ຕັ້ງຢູ່ໃນອາຊີ
ທາງເບື້ອງອາຄະເນທິດ ປ່າດົງດອນກວ້າງ
ຕັ້ງແຕ່ເໜືອຮອດໃຕ້ ທັນທ້າວຊື່ນຊົມ ແທ້ດາຍ.

ຄູແນະນຳໃຫ້ນັກຮຽນອ່ານ ແລະ ຈົດອອກບ່ອນທີ່ສຳຜັດ

**ຜູ້ໃຫ້ແສງສະຫວ່າງ**

**ຫັດອ່ານ**

ຄາວທີ່ເຮົາຍັງນ້ອຍ ບໍ່ຮູ້ຮ່ອມດຽງສາ
ຍາມເມື່ອ ເຮົາເກີດມາ ພໍ່, ແມ່ພຽນຖະໜອມລ້ຽງ
ບໍ່ໃຫ້ເຄືອງແຄນຮ້ອນ ອັນໃດຈັກຢ່າງ
ຈົນຍ່າງເດີນແລ່ນຫຼິ້ນ ຈະເລີນກ້າໃຫ່ຍມາ
ພໍ່, ແມ່ເຝິກແອບໃຫ້ ຮຽນປາກພາສາ
ນຳພາໄປໂຮງຮຽນ ບ່ອນເພິ່ນສອນຄວາມຮູ້
ຄູສິດສອນໃຫ້ ວິຊາການຕ່າງໆ
ທັງຊ່າງຂຽນຊ່າງແຕ້ມ ສອນໃຫ້ຄູ່ຊູ່ແນວ
ບົດຮຽນໃນທຸກດ້ານ ມີມາກເຫຼືອຫຼາຍ
ອັນຕະລາຍມານໂຈນ ໃຫ້ຊ່ວຍກັນພັນຂ້າ
ເຮົາຕ້ອງພາກັນຕ້ານ ຕີສັດຕູໃຫ້ມັນພ່າຍ
ເຂົ້າທຳລາຍຜ່າມ້າງ ດັບກ້ຽງພວກໝູ່ມານ
ຄູອາຈານສອນໃຫ້ ນ້ອຍໜຸ່ມຄືນລາວ
ຊາວໜຸ່ມທັງຍິງຊາຍ ຮ່ວມແຮງຮຽງໜ້າ
ຈົ່ງຮີບພາກັນສ້າງ ເມືອງລາວໃຫ້ເຮືອງຮຸ່ງ
ອະນາຄົດພາກໜ້າ ໃຫ້ຄືນຍ້ອງຊາດລາວ ແທ້ນາ.

- ຄູແນະນຳໃຫ້ນັກຮຽນອ່ານ ແລະ ຈົດອອກບ່ອນທີ່ສຳຜັດ

**ປ່າດົງ**

**ຫັດອ່ານ**

ດິນແດນດ້າວ ລາວເຮົາທັງປະເທດ
ມີເຂດຂົງປ່າໄມ້ ໄພກວ້າງແໜ້ນໜາ
ແລດູພູຜາຂັ້ນ ເຂົາຊັ້ນຊ້ອນຊໍ່
ດົງແດນອິນມໍ່ໃກ້ ມີໄມ້ມາກມູນ
ປຸນດັ່ງຄືນແປງສ້າງ ອຸທິຍານສວນສະອາດ
ເດຍລະດາດໄມ້ ລຳດົ້ສໄຂ່ວຂຶນ
ມີໝູ່ຍູງຍາງໄມ້ ແດງດຳແດນຂາວ
ບົກບາກຈົກຮັງເປືອຍ ຊາດກຸງພຸງຊໍ້
ມີທັງແປກກໍ່ຮົ້ງ ແຕ້ຂ່າຍົມຜາ

ມັນປາທັງຈອງຈານ ແຜ່ເຕັມໄພກວ້າງ
ໄມ້ໄຜ່ໄລ່ຮີກເຮ້ຍ ບົງຊາງພາງຊອດ
ຕະຫຼອດໜິດໝູ່ໄມ້ ມີສຽງສູ່ແນວ
ປ່າດົງພົງໄພກວ້າງ ເປັນຂ່ວງຫາກິນ
ໄມ້ຫາກເປັນສິນຊັບ ຄ່າຄຸນຫຼາຍລົ້ນ
ຄົນເຮົາຂົນມາສ້າງ ເຮືອນຊານບ້ານຊ່ອງ
ສາລະພັດຂອງເຄື່ອງໃຊ້ ໄຖລໍ້ລົດກວຽນ
ເອົາເຮັດຫຼືວຟືນໄຕ້ ດັງໄຟບໍ່ຂາດຊວ່ງ
ຫຼວງຫຼາຍເຫຼືອປະໂຫຍດໄມ້ ເຮົາໃຊ້ຢູ່ສູ່ວັນ
ດົງດອນເປັນຂອງຂັ້ນ ຕັດຝົນໄວ້ກັບທີ່
ໃຫ້ດິນດີຊຸ່ມເລື້ອຍ ຜົນໄມ້ຈິ່ງງອກງາມ
ຮາກໄມ້ທຳການຫ້າມ ດິນເພພັງເຈື່ອນ
ທັງເປັນຄູເຂື່ອນກັ້ນ ກັນນ້ຳເຊາະພູ
ຍາມເມື່ອເຮົາຮູ້ແລ້ວ ຄຸນປະໂຫຍດໄພສານ
ຈິ່ງພາກັນປົກປັກ ຊ່ວຍກັນໄວ້ຮັກສາ
ຢ່າໄດ້ຈັງໄຮດີ້ ຈູດເລົາເຜົາປ່າ
ຫາປະໂຫຍດບໍ່ໄດ້ ຝູງໄມ້ຈະວອດວາຍ
ການຖາກຖາງປ່າໄມ້ ສ້າງໄຮ່ກະທຳສວນ
ໃຫ້ຄິດຫວນເຫັນຄັກ ບ່ອນຄວນທຳສ້າງ
ຈິ່ງພາກັນຫາທາງເວັ້ນ ທຳລາຍດົງປ່າ
ຍ້ອນວ່າຄຸນປ່າໄມ້ ຫຼາຍລົ້ນດັ່ງຈາ ແທ້ແລ້ວ.

- ຄູແນະນຳໃຫ້ນັກຮຽນອ່ານ ແລະ ຈົດອອກບ່ອນທີ່ສຳຜັດ

## ໄມ້ປ່ອງ

**ທັດອ່ານ**

ໃນຖິ່ນຖານບ້ານເກີດຂ້ອຍ ກໍໄຜ່ດົກໜາ
ລ້ວນແຕ່ເປັນລາຄາ ມີປະໂຫຍດ
ມີທັງກໍໄມ້ໂຈດ ໄມ້ໄຜ່ໄມ້ຊາງ
ມີທັງໄມ້ພາງ ໄມ້ພຸງໄມ້ເຮ້ຍ
ມີທັງໄມ້ເປັນເຈ້ຍ ເຮັດບັ້ງເຂົ້າຫຼາມ
ແໜງມັນແຕກເປັນໜາມ ເອີ້ນໄມ້ໄຜ່ບ້ານ
ລຳຂຽວເຫຼືອງເປັນກ່ານ ເອີ້ນໄມ້ຊາງຄຳ
ສຸມໜຶ່ງມີຫຼາຍລຳ ລຽນກັນນ້ອຍໃຫ່ຍ
ເວົ້າເຖິງຊາດໄມ້ໄຜ່ ກໍຍັງມີຫຼາຍ
ຄຸນປະໂຫຍດມາກມາຍ ເຮັດຫຍັງກໍ່ໄດ້
ແລ້ວແຕ່ຜູ້ຊິໃຊ້ ຕົກແຕ່ງແປງປຸນ

ໃຫ້ມັນເກີດເປັນຄຸນ ຕາມຄວາມມຸ້ງມາດ
ຮົ່ມໄມ້ໄຜ່ຍັງອາດ ໃຫ້ຄວາມຮົ່ມເຢັນ
ແກ້ຜູ້ຖືກຍາມເຂັນ ຍາມຮ້ອນເຂົ້າເພິ່ງ
ລົມພັດມາແນມເບິ່ງ ມັນຮຸກສີກັນ
ດັ່ງເປັນສຽງນີ້ນັ້ນ ສຽງຊໍ່ສຽງປີ່
ກໍໄຜ່ມີທຸກທີ່ ທົ່ວແຄວ້ນແດນລາວ.

ບົດສອນ

ວິຊາພາສາລາວ ເວລາ 2 ຊົ່ວໂມງ

ບົດທີ 20 ( ຕໍ່ )

ຫົວບົດ: ສາມສະອາດ

I.ຈຸດປະສົງ

- ໃຫ້ນັກຮຽນສາມາດບອກຄວາມໝາຍຄໍາສໍາຜັດກາບກອນໄດ້
- ໃຫ້ນັກຮຽນຫາຫາຄໍາສໍາຜັດມາຕໍ່ກັນ ແລະ ຕີຄວາມໝາຍ
- ໃຫ້ນັກຮຽນສາມາດທ່ອງຂຶ້ນໃຈກາບກອນ " ສາມສະອາດ"ໄດ້

II.ເນື້ອໃນຕົ້ນຕໍ

- ເວົ້າເຖິງການອະນາໄມເຮືອນ, ການມ້ຽນມັດເຮືອນ, ບໍ່ກິນອາຫານດິບ, ອາຫານບູດເນົ່າ, ດື່ມນໍ້າທີ່ຕົ້ມສຸກແລ້ວ.

III. ສື່ການສອນ

- ບົດກາບກອນ

IV. ປະເມີນຜົນ

- ສັງເກດຈາກຄວາມສົນໃຈຂອງນັກຮຽນແຕ່ລະຄົນ
- ສັງເກດຈາກການອ່ານ
- ສັງເກດການຄັດຄໍາສໍາພັດລະຫວ່າງແຖວ ຂອງເນື້ອໃນກາບກ່ອນ.
- ສັງເກດຈາກທ່ອງຂຶ້ນໃຈກາບກອນ " ສາມສະອາດ"

V. ກິດຈະກໍາການຮຽນ-ການສອນ

➢ **ຂັ້ນນໍາເຂົ້າສູ່ບົດຮຽນ ( ເວລາ 10 ນາທີ )**

- ຄູ ແລະ ນັກຮຽນທໍາຄວາມເຄົາລົບເຊິ່ງກັນ ແລະ ກັນ
- ຄູກວດກາຈໍານວນພົນເຕັມ.....ຄົນ, ຂາດຄົນ

• ຄູໄດ້ມີການທົບທວນຄືນບົດຮຽນເກົ່າ

- ຄູຕັ້ງຄໍາຖາມ :

1. ຖ້ານັກຮຽນປະຕິບັດສາມສະອາດໄດ້ຈະມີຜົນແນວໃດ?

- ໃຫ້ນັກຮຽນ 2-3 ຄົນຕອບ
- ຄູຍ້ອງຍໍ
- ຜ່ານການຕອບຂອງນັກຮຽນຄູສະຫຼຸບຄືນ.

➢ **ຂັ້ນສອນບົດໃໝ່**

• **ກິດຈະກໍາທີ1 ພາກໄວຍາກອນ ( 20 ນາທີ )**

- ຄູອະທິບາຍຄໍາສໍາຜັດໃນກາບກອນ

  ຄໍາຖາມ:

  1. ຈົ່ງບອກຄວາມໝາຍຄໍາສໍາຜັດກາບກອນ

- ນັກຮຽນຕອບ
- ຄູສະຫຼຸບຄໍາຕອບຂອງນັກຮຽນ
- ຄູໃຫ້ນັກຮຽນຫານຄໍາສໍາຜັດມາຕໍ່ໃຫ້ສໍາຜັດກັນ
- ຄູແນະນໍາໃຫ້ນັກຮຽນອ່ານໃຫ້ໝູ່ຟັງ
- ຄູສະຫຼຸບຄໍາຕອບຂອງນັກຮຽນ
- ຄູແນະນໍາໃຫ້ນັກຮຽນຂຽນເນື້ອໃນໃສ່ປຶ້ມແບບຮຽນ

- **ກິດຈະກໍາທີ 2 ທ່ອງຂຶ້ນໃຈ ( 40 ນາທີ )**

- ຄູກໍານົດເນື້ອໃນໃຫ້ນັກຮຽນອ່ານເພື່ອຈື່ໄດ້ກັບປາກ
- ຄູແນະນໍາການເລົ່າທີ່ຖືກຕ້ອງ

  \+ ເລົ່າໃຫ້ສຸດແຖວໂດຍມີການພັກສຽງລະຫວ່າງຕອນກັບຕອນ

- ຄູແນະນໍານັກຂຶ້ນເລົ່າກາບກອນ
- ຄູໃຫ້ນັກຮຽນອອກມາອ່ານຕໍ່ໆກັນ
- ຄູສະຫຼຸບການເລົ່າຂອງນັກຮຽນ

➢**ຂັ້ນສະຫຼຸບ ( ເວລາ 5 ນາທີ )**

- ຄູ ແລະ ນັກຮຽນພ້ອມກັນສະຫຼຸບຄືນເນື້ອໃນບົດຮຽນກ່ຽວກັບເນື້ອໃນບົດຮຽນ.
- ໃຫ້ນັກຮຽນເວົ້າຄືນກ່ຽວກັບການສໍາຜັດກາບກອນ
- ຄູຖາມຄວາມຂ້ອງໃຈຂອງນັກຮຽນ ( ຖ້າມີ )ຄູໃຫ້ນັກຮຽນຈົດເອົາເນື້ອໃສ່ປຶ້ມຂອງໃຜລາວ

➢**ຂັ້ນວັດຜົນ ( ເວລາ 15 ນາທີ)**

ຄູກວດກາດ້ວຍຄໍາຖາມ

1. ຈົ່ງຄັດຄໍາສໍາຜັດໃນແຕ່ລະແຖວຂອງບົດກາບກອນໃນຫົວບົດ ນໍ້າໃຈວັນຊາດ

- ນໍາເອົາບົດທົດສອບມາກວດພ້ອມໃຫ້ຄະແນນ

➢ **<u>ຕັກເຕືອນ -ມອບວຽກບ້ານ</u>**

- ພວກນ້ອງພະຍາຍາມຮໍ່າຮຽນຕື່ມ ແລະ ຟັງຄໍາອະທິບາຍຂອງຄູໃນເວລາຮຽນ.
- ເວລາພວກນ້ອງເມືອເຮືອນຄວນເບິ່ງບົດຮຽນຕື່ມອີກ ແລະ ຊ່ວຍເຫຼືອວຽກພໍ່ແມ່.

ວັນທີ.......................... ວັນທີ.............................

ຜູ້ອໍານວຍການໂຮງຮຽນ ຄູປະຈໍາວິຊາ

ບົດສອນ

ວິຊາ: ພາສາລາວ

ບົດທີ: 41 ຫ້ອງປ 2

ຫົວບົດ: ສາມັກຄີ ແລະ ຊ່ວຍເຫຼືອກັນ ເວລາ 5 ຊົ່ວໂມງ

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນ - ການສອນ | | ສື່ການຮຽນ - ການສອນ | ເວລາ | ປະເມີນຜົນ |
|---|---|---|---|---|---|---|
| | | ກິດຈະກຳຂອງຄູ | ກິດຈະກຳຂອງນັກຮຽນ | | | |
| -ໃຫ້ນັກຮຽນສາມາດຈື່ຈຳບົດຮຽນເກົ່າໄດ້ | ທ່ອງຂຶ້ນໃຈບົດທີ: 40 ມົດງ່າມສະຫຼາດ | **ຂັ້ນນຳ:**<br>ຄູ ແລະ ນັກຮຽນທຳຄວາມເຄົາລົບ<br>ກວດກາຈຳນວນພົນ<br>ສະເໜີແຂກເຂົ້າຮ່ວມ ( ຖ້າມີ )<br>ສະເໜີຊື່ ແລະ ຈຸດພິເສດຕົນເອງ<br>**+ ທວນຄືນບົດຮຽນເກົ່າ**<br>ໃຫ້ນັກຮຽນ 1 – 2 ຄົນອອກເລົ່າທ່ອງຂຶ້ນໃຈບົດທີ: 40 ມົດງ່າມສະຫຼາດ<br>ຖ້ານັກຮຽນຄົນໃດເລົ່າໄດ້ດີຄູຍ້ອງຍໍ, ຖ້າຍັງໃຫ້ແນະນຳຕື່ມ<br>+ ລ້ຽວເຂົ້າສູ່ບົດຮຽນໃໝ່<br>ຄູຖາມນັກຮຽນວ່າ:<br>ເວລາເຫັນໝູ່ເພື່ອນພົບຄວາມຫຍຸ້ງຍາກເຮົາຈະເຮັດແນວໃດ?<br>+ ຄູພາມາຮຽນບົດທີ: 41 ສາມັກຄີ ແລະ ຊ່ວຍເຫຼືອກັນ | ນັກຮຽນເຄົາລົບຄູ<br>ນັກຮຽນລຸກຂຶ້ນລາຍງານຄົນຂາດ<br><br>ນັກຮຽນເລົ່າທ່ອງຂຶ້ນໃຈບົດທີ: 40<br><br>ນັກຮຽນຕອບ<br>ຊ່ວຍເຫຼືອໝູ່ເພື່ອນ | | 10′ | ສັງເກດຈາກການເລົ່າບົດທ່ອງຂອງນັກຮຽນ |

| | | | | | | |
|---|---|---|---|---|---|---|
| ໃຫ້ນັກຮຽນ<br>ສາມາດຟັງ<br>ການເລົ່າເລື່ອງ<br>ແລະ ເລົ່າ<br>ເລື່ອງດ້ວຍ<br>ຕົນເອງໄດ້.<br><br>ໃຫ້ນັກຮຽນ<br>ສາມາດ<br>ຕອບຄໍາຖາມ<br>ໄດ້ດ້ວຍຕົນ<br>ເອງ | <u>ວິຊາ: ພາສາລາວ</u><br><u>ບົດທີ: 41</u><br><u>ສາມັກຄີ ແລະ ຊ່ວຍເຫຼືອກັນ</u> | **ຂັ້ນສອນ**: ຄູຂຽນຫົວບົດໃສ່ກະດານ.<br>ຄູເລົ່າເລື່ອງບົດທີ: 41 ໃຫ້ນັກຮຽນຟັງ ພ້ອມ<br>ອະທິບາຍບົດເລື່ອງ.<br>ຄູໃຫ້ນັກຮຽນ 3 – 4 ຄົນເລົ່າເລື່ອງກ່ຽວກັບໝູ່ທີ່<br>ຮັກແພງຂອງຕົນສູ່ໝູ່ຟັງ<br>ຖ້າຄົນໃດເລົ່າໄດ້ດີ ຄູຍ້ອງຍໍ<br>+ ຄູອ່ານເລື່ອງບົດທີ: 41 ໃຫ້ນັກຮຽນຟັງ<br>ຄູຖາມຕັ້ງຄໍາຖາມ<br>ໄກ່ ແລະ ໝາຊວນກັນໄປໃສ?<br>ເມື່ອກັບເຮືອນບໍ່ໄດ້ພວກເຂົາເຮັດແນວໃດ?<br>ຍ້ອນຫຍັງເຫງັນຈຶ່ງບໍ່ໄດ້ກິນໄກ່?<br>ໃຫ້ນັກຮຽນຕອບເທື່ອລະຂໍ້<br>ນັກຮຽນຄົນໃດເລົ່າໄດ້ດີ ຄູຍ້ອງຍໍ ( ຖ້າຕອບຜິດ<br>ຄູແນະນໍາຕື່ມ ) ພ້ອມອະທິບາຍຄືນຄວາມ<br>ສາມັກຄີ ແລະ ຊ່ວຍເຫຼືອກັນ | ນັກຮຽນຟັງການເລົ່າເລື່ອງ<br>ຈາກຄູ<br>ນັກຮຽນເລົ່າເລື່ອງທີ່ເປັນຈິງ<br>ຈາກຊີວິດຂອງຕົນເອງ<br><br><br>ນັກຮຽນຕອບ<br>ໄກ່ ແລະ ໝາຊວນກັນໄປຫາ<br>ກິນຢູ່ປ່າ<br>ເມື່ອກັບເຮືອນບໍ່ໄດ້ພວກເຂົາ<br>ຊອກຫາບ່ອນນອນໃນປ່າ<br>ຍ້ອນໄກ່ ແລະ ໝາສາມັກຄີ<br>ແລະ ຊ່ວຍເຫຼືອກັນ | | 30′ | ສັງເກດຈາກ<br>ຄວາມສົນໃຈ<br>ໃນການຟັງ<br>ການເລົ່າເລື່ອງ<br>ແລະ ເລົ່າ<br>ເລື່ອງດ້ວຍຕົນ<br>ເອງ<br>ສັງເກດການ<br>ຕອບຄໍາຖາມ<br>ຂອງນັກຮຽນ |
| ໃຫ້ນັກຮຽນ<br>ສາມາດຈໍາ<br>ແນກ<br>ພະຍັນຊະນະ<br>ສ, ຊ ແລະ<br>ສາມາດ<br>ອ່ານຄໍາໃໝ່<br>ໄດ້. | ອ່ານບັດ ພະຍັນຊະນະ<br>ສ, ຊ<br><br><br><br><u>ຄໍາໃໝ່</u><br>ເສືອ, ຊ້າງ, ສິດຊິ່ນ, ສ່ວນ<br>ສ່ຽວ, ຮ້ອງໃສ່, ເອົາໃຈໃສ່, | <u>**ພາກອ່ານ:**</u><br>- ຄູເອົາບັດ ສ, ຊ ຂຶ້ນມາພານັກຮຽນອ່ານ 3 – 5 ເທື່ອ<br>- ຄູພານັກຮຽນອ່ານ 2 – 3 ເທື່ອ<br>- ຄູພານັກຮຽນຈໍາແນກຄວາມແຕກຕ່າງ ລະຫວ່າງອອກສຽງ ສ, ຊ<br>**+ ອ່ານບັດຄໍາໃໝ່**<br>- ຄູເອົາບັດຄໍາສຽບໃສ່ຖົງບັດຄໍາ<br>- ຄູພານັກຮຽນອ່ານ 1 – 2 ເທື່ອ | - ນັກຮຽນອ່ານບັດ ພະຍັນຊະນະ ສ, ຊ<br><br><br><br>- ນັກຮຽນອ່ານບັດຄໍາ ຕາມຫຼັງຄູ | ບັດ<br>ພະຍັນຊະ<br>ນະ ສ, ຊ<br><br><br>ບັດຄໍາ<br>ໃໝ່ 11<br>ບັດ | 30′ | ສັງເກດຈາກ<br>ການອ່ານຄໍາໃ<br>ໝ່ຂອງ<br>ນັກຮຽນ |

| | | | | | | |
|---|---|---|---|---|---|---|
| ໃຫ້ນັກຮຽນສາມາດອ່ານເນື້ອໃນບົດຮຽນບາງຕອນໄດ້. | ສອງສ່ຽວ, ຊອກກິນ, ຊ່ວຍເຫຼືອ, ຊອກຫາ, ຊວນກັນ.<br><br>ເນື້ອໃນ<br>.ສັກຢາ, ຊັກຢາ, ສ່ວນສ່ຽວ ສິດຊິ່ນ, ສອງສ່ຽວ, ຮ້ອງໃສ່ ເສືອ, ເອົາໃຈໃສ່, ຊອກກິນ ຊອກຫາ, ຊ້າງ, ຊວນກັນ ຊ່ວຍເຫຼືອ.<br>............................<br>............................ຈຶ່ງພົ້ນຈາກອັນຕະລາຍໄດ້ | - ໃຫ້ນັກຮຽນອອກອ່ານເທື່ອລະຄົນ<br>- ຖ້ານັກຮຽນຄົນໃດອ່ານໄດ້ດີ ແລະ ຖືກຕ້ອງຄູຍ້ອງຍໍ ( ຖ້າຍັງ ຄູແນະນຳຕື່ມ ) ພ້ອມອ່ານໃຫ້ນັກຮຽນຟັງຕື່ມອີກ.<br>**+ <u>ອ່ານເນື້ອໃນ:</u>**<br>- ຄູອ່ານເນື້ອໃນໃຫ້ນັກຮຽນຟັງ 1 – 2 ເທື່ອ<br>- ຄູໃຫ້ນັກຮຽນອ່ານຕາມຫຼັງ 1 – 2 ເທື່ອ<br>- ໃຫ້ນັກຮຽນອອກອ່ານເນື້ອໃນເປັນບຸກຄົນ ໂດຍອ່ານເປັນຕອນ<br>- ຖ້ານັກຮຽນຄົນໃດອ່ານໄດ້ດີຄູຍ້ອງຍໍ | - ນັກຮຽນອອກອ່ານດ້ວຍຕົນເອງ<br><br>- ນັກຮຽນອ່ານເນື້ອໃນຕາມຫຼັງຄູ<br><br>- ນັກຮຽນອ່ານເນື້ອໃນບາງຕອນດ້ວຍຕົນເອງ | | 35′ | ສັງເກດການອ່ານເນື້ອໃນບົດຮຽນຂອງນັກຮຽນ |
| ໃຫ້ນັກຮຽນສາມາດຂຽນຄຳໃໝ່ດ້ວຍຕົນເອງໄດ້.<br><br>ໃຫ້ນັກຮຽນສາມາດ | ຂຽນຄຳໃໝ່ | <u>ພາກຂຽນ</u>:<br>- ຄູອ່ານຄຳໃໝ່ໃຫ້ນັກຮຽນຟັງ 1 – 2 ເທື່ອ<br>ນັກຮຽນອອກຂຽນຢູ່ກະດານໂດຍຄູອ່ານຄຳວ່າ: ເສືອ, ຊ້າງ, ສິດຊິ່ນ, ສ່ວນສ່ຽວ, ຮ້ອງໃສ່, ເອົາໃຈໃສ່, ສອງສ່ຽວ, ຊອກກິນ, ຊ່ວຍເຫຼືອ, ຊອກຫາ, ຊວນກັນ.<br>- ຖ້ານັກຮຽນຂຽນຖືກຄູຍ້ອງຍໍ ( ຖ້າຜິດຄູແນະນຳ ) | - ນັກຮຽນຂຽນຄຳໃໝ່ຢູ່ກະດານ<br><br>- ນັກຮຽນອອກມາຂຽນຄຳທີ່ມີ ສ, ຊ | ເຈ້ຍແຜນໃຫຍ່, | 30′<br><br>20′ | ສັງເກດການຂຽນຂອງນັກຮຽນແຕ່ລະຄົນ<br><br>ສັງເກດຈາກການຂຽນຄຳມີ |

| | | | | | | |
|---|---|---|---|---|---|---|
| ຊອກຄຳທີ່ມີ ສ, ຊ ຂຽນໃສ່ແຜນວາດໄດ້<br><br>ໃຫ້ນັກຮຽນສາມາດຂຽນບົດຮຽນໃສ່ປຶ້ມຂຽນຂອງຕົນສະອາດ ແລະ ສວຍງາມ<br>ໃຫ້ນັກຮຽນສາມາດຂຽນທວາຍຕາມເນື້ອໃນຂອງບາງຕອນໄດ້ | <u>ແຜນວາດ</u><br><br><br><br><br>- ຂຽນທວາຍເລີ່ມແຕ່ " ໝາເຂົ້າໄປ ຈົນເຖິງ ທັນທີ " | ❖ ຄູຕິດແຜນວາດໃສ່ກະດານຄຳວ່າ: ສ, ຊ ມີຫຍັງແດ່?<br>- ໃຫ້ນັກຮຽນອອກມາຂຽນຄຳທີ່ມີ ສ, ຊ ໃສ່ແຜນວາດ<br>- ຄູຕິດຕາມການຂຽນໃສ່ແຜນວາດຂອງນັກຮຽນ<br>- ຖ້ານັກຮຽນຂຽນໄດ້ຖືກຕ້ອງຄູຍ້ອງຍໍຊົມເຊີຍ<br>**+ <u>ຂຽນເນື້ອໃນ</u>**<br>- ໃຫ້ນັກຮຽນຂຽນເນື້ອໃນບົດຮຽນໃສ່ປຶ້ມຂຽນ<br>- ຄູຕິດຕາມການຂຽນຂອງນັກຮຽນແຕ່ລະຄົນ<br>❖ **<u>ພາກຂຽນທວາຍ</u>**<br>- ຄູອ່ານເນື້ອໃນບາງຕອນຂຽນທວາຍໃຫ້ນັກຮຽນຟັງ 1 – 2 ເທື່ອ. ພ້ອມອະທິບາຍຄຳສັບ<br>- ຄູອ່ານໃຫ້ນັກຮຽນລົງມືປະຕິບັດຂຽນທວາຍ<br>- ຄູກວດການຂຽນທວາຍໃຫຄະແນນກັບຫ້ອງ. ນັກຮຽນຂຽນໄດ້ດີຖືກຕ້ອງຄູຍ້ອງຍໍ ແລະ ຖ້ານັກຮຽນຂຽນບໍ່ທັນໄດ້ດີ ຄູແນະນຳຕື່ມ ການຂຽນໃຫ້ຖືກຕາມຫຼັກໄວຍາກອນ | ໃສ່ແຜນວາດຢູ່ກະດານ<br><br>- ນັກຮຽນຂຽນບົດຮຽນປຶ້ມຂຽນ | ເຝິກ<br><br>ຄູມືພາສາລາວ ປ2<br>ແບບຮຽນພາສາລາວ ປ2 | 30′<br><br>30′ | ມີ ສ, ຊ ໃສ່ແຜນວາດ<br><br>ສັງເກດການຂຽນເນື້ອໃນບົດຮຽນ<br><br>ສັງເກດການຂຽນທວາຍຂອງນັກຮຽນ |

| | | | | | | |
|---|---|---|---|---|---|---|
| | | 3. **<u>ສະຫຼຸບ</u>**:<br>- ຄູ ແລະ ນັກຮຽນພ້ອມກັນສະຫຼຸບບົດຮຽນທີ່ຜ່ານມາໃນບົດທີ: 41 | | | 10′ | |
| | | 4. **<u>ວັດປະເມີນ</u>:**<br>- ຄູເອີ້ນນັກຮຽນ 3 – 4 ຄົນ ອອກມາຂຽນຄໍາສັບແຂ່ງກັນຄໍາວ່າ: ຊ່ວຍເຫຼືອກັນ, ສອງສ່ຽວ, ຊວນ, ເອົາໃຈໃສ່.<br>**+ ຕັກເຕືອນ ແລະ ວຽກບ້ານ**<br>- ໃຫ້ນັກທຸກຄົນເວລາກັບເມືອເຮືອນໃຫ້ ຊ່ວຍວຽກ<br>**+ ມອບວຽກບ້ານ**<br>- ໃຫ້ນັກຮຽນຂຽນຄໍາທີ່ມີ ສ, ຊ ໃຫ້ໄດ້ຢ່າງລະ 10 ຄໍາ | | | | |

ວັນທີ........./........../...........  ວັນທີ........./........../...........  ວັນທີ........./........../...........

ອໍານວຍການໂຮງຮຽນ  ວິຊາການໂຮງຮຽນ  ຄູປະຈໍາວິຊາ

ບົດສອນ

ວິຊາພາສາລາວ ຊັ້ນປ1

ບົດທີ: 35 ເວລາ 4 ຊົ່ວໂມງ

ຫົວບົດ: ພະຍັນຊະນະ ພ ຟ ວັນທີ..../..../....

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນ - ການສອນ | | ເວລາ | ການສື່ສານ | ປະເມີນຜົນ |
|---|---|---|---|---|---|---|
| | | ກິດຈະກຳຂອງຄູ | ກິດຈະກຳຂອງນັກຮຽນ | | | |
| -ເພື່ອໃຫ້ນັກຮຽນຈື່ບົດຮຽນເກົ່າໄດ້ດີ | ບັດ<br>ພະຍັນຊະນະ | + ຂັ້ນສອນ:<br>ຄູທຳຄວາມເຄົາລົບນັກຮຽນ<br>ຄູກວດກາຈຳນວນພົນເຕັມ... ຄົນ, ຂາດ.........ຄົນ.<br>ສະເໜີແຂກເຂົ້າຮ່ວມ( ຖ້າມີ )<br>+ ທວນຄືນບົດຮຽນເກົ່າ:<br>-ຄູຍົກບັດຄາສັບ ເຊີ, ເຜີ ຂຶ້ນໃຫ້ນັກຮຽນອ່ານ<br>-ຄູເລັງໃສ່ນັກຮຽນທີ່ເປັນເປົ້າໝາຍ<br>-ສະຫຼູບການຂຽນຂອງນັກຮຽນຟັງ ( ຖືກຄູຍ້ອງຍໍ - ຜິດຄູແນະນຳ )<br>+ ລ້ຽວເຂົ້າສູ່ບົດຮຽນໃໝ່:<br>ຄູຖາມນັກຮຽນວ່າ: ໃນການຖາມແມ່ນເລັງໃສ່ນັກຮຽນກຸ່ມເປົ້າໝາຍ<br>ພວກຫຼານເຄີຍເຫັນໝາກກາເຟບໍ?<br>ໝາກກາເຟປະກອບດ້ວຍພະຍັນຊະນະຫຍັງ? | ນັກຮຽນເຄົາລົບຄູ<br>ນັກຮຽນລຸກຂຶ້ນລາຍງານຄົນຂາດ<br>ນັກຮຽນນັ່ງຟັງ<br>ນັກຮຽນອອກມາຂຽນສະຫຼະ<br>ນັກຮຽນຕອບ<br>ນັກຮຽນຕອບ | 10′ | ບັດຄຳຖາມ<br>ບັດພະຍັນຊະນະ | ສັງເກດຈາກການຕອບຄຳຖາມຂອງນັກຮຽນ |

| | | | | | | |
|---|---|---|---|---|---|---|
| | | ຊົ່ວໂມງນີ້ຄູພາພວກຫຼານຮຽນກ່ຽວກັບພະຍັນຊະນະ ພ,ຟ | | | | ສັງເກດການ ຕອບຄຳຖາມ |
| ໃຫ້ນັກຮຽນ ບອກຊື່ຮູບຕ່າງໆ ແລະ ເວົ້າ, ຕອບຄຳຖາມໄດ້ | ວິຊາພາສາລາວ ບົດທີ 35 ພ, ຟ | + ຂັ້ນສອນ:<br>ຄູແບ່ງກະດານອອກເປັນສອງສ່ວນເທົ່າກັນ<br>ຄູຂຽນຫົວບົດໃສ້ກະດານ.<br><u>ກິດຈະກຳ</u>: 1 ສົນທະນາກ່ຽວກັບຮູບພາບ, ໃນການສົນທະນາຄູໄດ້ເລັ່ງໃສ່ນັກຮຽນກຸ່ມເປົ້າໝາຍໃຫ້ມີສ່ວນຮ່ວມຫຼາຍ<br>ຄູຍົກຮູບພາບໃຫ້ນັກຮຽນສັງເກດ<br>ຄູຖາມນັກຮຽນວ່າ: ນີ້ແມ່ນຮູບຫຍັງ?<br>-ຢູ່ເທິງພູມີຫຍັງ?<br>-ເພິ່ນໃຊ້ການເຟເຮັດຫຍັງ?<br>-ຄູແນະນຳນັກຮຽນເວົ້າເປັນປະໂຫຍກ<br>ຄູສະຫຼຸບຄືນຕໍ່ກັບຄຳຕອບ | ນັກຮຽນສັງເກດຮູບພາບ<br><br>ນັກຮຽນຕອບ<br><br>ນັກຮຽນຕອບ | 45′ | ຮູບ ພາບ | ສັງເກດການ ຕອບຄຳຖາມ ຂອງນັກຮຽນ |
| ເພື່ອໃຫ້ນັກຮຽນ ອ່ານອອກສຽງ ພະຍັນຊະນະຜ ຟ ແລະ ເວົ້າຄຳສັບອື່ນທີ່ມີ ພະຍັນຊະນະຜ ຟ ໄດ້ | | <u>ກິດຈະກຳ</u>: 2 ເຝິກອ່ານຄຳສັບ<br>ຄູແນະນຳໃຫ້ນັກຮຽນເບິ່ງເນື້ອໃນບົດຫັດອ່ານ<br>ຄູອ່ານເນື້ອໃນໃຫ້ນັກຮຽນຟັງ 1 – 2 ເທື່ອ<br>ຄູພານັກຮຽນອ່ານ 2 – 3 ເທື່ອ<br>ຄູແນະນຳໃຫ້ນັກຮຽນອ່ານເປັນກຸ່ມ<br>ຄູໃຫ້ນັກຮຽນອ່ານເປັນບຸກຄົນ<br>ຄູຕິດຕາມການອ່ານຂອງນັກຮຽນ<br>ຄູໃຫ້ນັກຮຽນກຸ່ມເປົ້າໝາຍຕອບ | ນັກຮຽນຟັງຕິດຕາມການອ່ານຂອງຄູ<br><br>ນັກຮຽນອ່ານຕາມຫຼັງຄູ<br><br>ນັກຮຽນອ່ານ<br><br>ນັກຮຽນຕອບ | 45′ | | ສັງເກດການ ຕັ້ງໃຈຟັງຂອງ ນັກຮຽນ |

| | | | | | | |
|---|---|---|---|---|---|---|
| | ພ , ຟ ແລະ ຄຳສັບ ພູຝາ, ກາເຟ, ພໍດີ, ສີຟ້າ, ໄຟ, ຟອຍ ແພ | -ຄູຍົກບັດພະຍັນຊະນະ ພ, ຟ ໃຫ້ນັກຮຽນອ່ານ<br><br>-ຄູຍົກບັດຄຳສັບເທື່ອລະຄຳສັບຜັນປ່ຽນກັນເຊັ່ນ ພູຝາ , ກາເຟ, ພໍດີ, ສີຟ້າ, ໄຟ, ຟອຍ, ແພ<br>-ຄູໃຫ້ນັກຮຽນອ່ານໂດຍເນັ້ນໃສ່ນັກຮຽນກຸ່ມເປົ້າໝາຍ ພ້ອມທັງຕິດຕາມການອ່ານຂອງນັກຮຽນແຕ່ລະຄົນ<br>-ຄູສະຫຼຸບຄືນດ້ວຍການຖາມວ່າ: ພູຝາ, ກາເຟ, ພໍດີ, ສີຟ້າ, ໄຟ, ຟອຍ ມີສຽງສະຫຼະຫຍັງ ແລະ ພະຍັນຊະນະຫຍັງ ຄວາມໝາຍຕ່າງກັນແນວໃດ?<br>ຄູຕິດຕາມຊ່ວຍເຫຼືອນັກຮຽນກຸ່ມເປົ້າໝາຍ ແລະ ນັກຮຽນຄົນອື່ນ | -ນັກຮຽນອ່ານ<br>-ນັກຮຽນອ່ານ<br><br>ນັກຮຽນຂຽນໃສ່ປຶ້ມຂອງຕົນເອງ | 45′ | ບັດພະຍັນຊະນະ<br><br>ບັດຄຳສັບ | ສັງເກດຈາກການອ່ານ ແລະ ຕອບຄຳຖາມ |
| ໃຫ້ນັກຮຽນບອກຊື່ຕ່າງໆ ແລະ ຖອດສຽງສະຫຼະ, ພະຍັນຊະນະ ແລະ ວັນລະຍຸດຈາກຊື່ຮູບບັດໄດ້ | ພູຝາ, ກາເຟ, ພໍດີ, ສີຟ້າ | ກິດຈະກຳທີ: 4 ເຝິກເວົ້າກ່ຽວກັບຮູບພາບ<br>ຄູຍົກຮູບພາບໃຫ້ນັກຮຽນສັງເກດ ໃນແຕ່ລະຮູບ<br>ຄູຖາມນັກຮຽນວ່າ: ອັນນີ້ແມ່ນຮູບຫຍັງ?<br>ຄູແນະນຳໃຫ້ນັກຮຽນຕອບຕາມຄວາມເຂົ້າໃຈ<br>ຄູຕິດຕາມການຕອບຂອງນັກຮຽນ<br>ຄູສະຫຼຸບຄືນກ່ຽວກັບການເວົ້າຂອງນັກຮຽນ<br>ເຝິກອ່ານຂໍ້ຄວາມ<br>ຄູແນະນຳໃຫ້ນັກຮຽນເບິ່ງເນື້ອໃນທັດອ່ານ<br>ກ່ອນການອ່ານຄູໄດ້ມີການແນະນຳຄື: ການອ່ານພະຍັນຊະນະ ພ , ຟ ແລະ ຄຳສັບ ພູຝາ, ກາເຟ, ພໍດີ, ສີຟ້າ, ໄຟ, ຟອຍ ແພ ແຕ່ລະຄຳຕ້ອງອອກສຽງພ້ອມກັນໃຫ້ແຈ່ມແຈ້ງ | ນັກຮຽນສັງເກດ<br>ນັກຮຽນຕອບ<br><br>ນັກຮຽນຕິດຕາມ<br>ນັກຮຽນອອກມາອ່ານ | 45′ | ຮູບພາບ<br><br>ບັດຄຳສັບ | ສັງເກດຈາກການບອກຊື່ຮູບ ແລະ ການຖອດສຽງພະຍັນຊະນະພ, ຟ<br><br>ສັງເກດຈາກການອ່ານຂອງນັກຮຽນ |

| | | | | | | |
|---|---|---|---|---|---|---|
| ໃຫ້ນັກຮຽນອ່ານແຕ່ລະຄຳ ອອກສຽງ ພະຍັນຊະນະພ ,ຟ ໄດ້ | | ການອ່ານຂໍ້ຄວາມຕ້ອງປີງສຽງຖືກຕ້ອງຕາມວັກຕອນ<br>ຄູອ່ານໃຫ້ນັກຮຽນຟັງ<br>ຄູໃຫ້ນັກຮຽນອ່ານ<br>ຄູໃຫ້ນັກຮຽນອອກມາອ່ານເປັນລາຍບຸກຄົນຢູ່ກະດານ<br>ຄູໃຫ້ນັກຮຽນກຸ່ມເປົ້າໝາຍອອກມາອ່ານ<br>ຄູຕິດຕາມການອ່ານຂອງນັກຮຽນແຕ່ລະຄົນ<br>ຄູສະຫຼຸບການອ່ານຂອງນັກຮຽນ | ນັກຮຽນສັງເກດ<br><br><br>ນັກຮຽນລົງມືປະຕິບັດ | | | ແຕ່ລະຄົນ ອອກສຽງ ພະຍັນຊະນະພ, ຟຖືກ ຫຼື ບໍ |
| ໃຫ້ນັກຮຽນ ບອກຊື່ຮູບທີ່ຕົນເອງແຕ້ມ ໃຫ້ໝູ່ເພື່ອນໃນຫ້ອງຟັງໄດ້ | | <u>ກິດຈະກຳທີ</u>: 5 ແຕ້ມຮູບ ແລະ ເວົ້າຄືນຕາມຮູບແຕ້ມ<br>ຄູແນະນຳໃຫ້ນັກຮຽນເບິ່ງຮູບທ້າຍບົດຮຽນ<br>ສົນທະນາກັບນັກຮຽນກ່ຽວກັບຮູບໂດຍເນັ້ນໃສ່ພະຍັນຊະນະ ພ, ຟ<br>ຄູແນະນຳໃຫ້ນັກຮຽນແຕ້ມຮູບຕາມໃຈໂດຍເນັ້ນໃສ່ພະຍັນຊະນະ ພ, ຟ<br>ຫຼັງຈາກນັກຮຽນແຕ້ມສຳເລັດ<br>ຄູໃຫ້ນັກຮຽນອອກມາສະເໜີຊື່ຕົນເອງ ແລະ ເວົ້າກ່ຽວກັບຮູບທີ່ຕົນເອງແຕ້ມຢູ່ກະດານ<br>ຄູຖາມນັກຮຽນກຸ່ມເປົ້າໝາຍຄຳວ່າ:<br>ແພ ມີສຽງພະຍັນຊະນະຫຍັງ? ສະຫຼະຫຍັງ?<br>ກາເຟ ມີສຽງພະຍັນຊະນະຫຍັງ?ສະລະຫຍັງ?<br>ຄູຕິດຕາມການເວົ້າ ແລະ ການຕອບຂອງນັກຮຽນ<br>ຄູສະຫຼຸບຄືນ | ນັກຮຽນອອກມາລາຍງານ<br><br>ນັກຮຽນຕອບ<br><br>ນັກຮຽນຕິດຕາມ | 45′ | | ສັງເກດຈາກການບອກສື່ຄວາມໝາຍຂອງການແຕ້ມ |
| | | + <u>ສະຫຼຸບ</u>:<br>ຄູ ແລະ ນັກຮຽນພ້ອມກັນສະຫຼຸບບົດຮຽນທີ່ຜ່ານມາ | | | | |

| | | | | | | |
|---|---|---|---|---|---|---|
| ເພື່ອໃຫ້ນັກຮຽນມີບົດຮຽນໃນປຶ້ມຂຽນຂອງໃຜລາວ | | ຄູແນະນຳໃຫ້ນັກຮຽນຈົດເອົາບົດຮຽນໃສ່ປຶ້ມຂຽນ | ນັກຮຽນຈົດເອົາບົດຮຽນ | 10′ | | ສັງເກດນັກຮຽນ |
| ຢາກໃຫ້ນັກຮຽນສາມາດຈື່ບົດຮຽນໄດ້ | | + <u>ວັດປະເມີນ</u>:<br>ຄູໃຫ້ນັກຮຽນກຸ່ມເປົ້າໝາຍອອກມາເລືອກຄຳສັບທີ່ວ່າ: ພູຝາ, ກາເຟ , ຟອຍ, ໄຟ, ແພ ,ສີຟ້າ, ພໍດີ ຕິດໃສ່ກະດານພ້ອມທັງອ່ານໃຫ້ໝູ່ໃນຫ້ອງຟັງການອ່ານອອກສຽງພະຍັນຊະນະ ພ, ຟ ໃຫ້ຖືກຕ້ອງ ແລະ ແຈ່ມແຈ້ງ ( ຖືກຍ້ອງຍໍ - ຜິດຄູແນະນຳຕື່ມ). | -ຄູໃຫ້ນັກຮຽນກຸ່ມເປົ້າໝາຍອອກມາອ່ານ | 10′ | ບັດຄຳ | ສັງເກດການອ່ານຂອງນັກຮຽນ |

ວັນທີ........./........../...........
ອຳນວຍການໂຮງຮຽນ

ວັນທີ........./........../...........
ວິຊາການໂຮງຮຽນ

ວັນທີ.... ...../........../...........
ຄູປະຈຳວິຊາ

ບົດສອນ

ວິຊາພາສາລາວ ຊັ້ນຫ້ອງ

ບົດທີ: 34 ເວລາ 2 ຊົ່ວໂມງ

ຫົວບົດ: ສະຫຼະ ເxິ ເxິ

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນ - ການສອນ | | ເວລາ | ການສື່ສານ | ປະເມີນຜົນ |
|---|---|---|---|---|---|---|
| | | ກິດຈະກຳຂອງຄູ | ກິດຈະກຳຂອງນັກຮຽນ | | | |
| -ເພື່ອໃຫ້ນັກຮຽນຈື່ບົດຮຽນເກົ່າໄດ້ດີ | ບັດສະຫຼະ | + ຂັ້ນສອນ:<br>ຄູທຳຄວາມເຄົາລົບນັກຮຽນ<br>ຄູກວດກາຈຳນວນພົນເຕັມ...ຄົນຂາດຂອງນັກຮຽນ, ຂາດ...ຄົນ.<br>ສະເໜີແຂກເຂົ້າຮ່ວມ( ຖ້າມີ )<br>+ ທວນຄືນບົດຮຽນເກົ່າ:<br>-ຄູຍົກບັດຄຳສັບ ໄກ່ຜູ້, ປາຝາ ໃຫ້ນັກຮຽນອ່ານສະຫຼຸບການຂຽນຂອງນັກຮຽນຟັງ ( ຖືກຄູຍ້ອງຍໍ - ຜິດຄູແນະນຳ )<br>+ ລ້ຽວເຂົ້າສູ່ບົດຮຽນໃໝ່:<br>ຄູຖາມນັກຮຽນວ່າ: ພວກຫຼານເຄີຍກິນເຜີບໍ? | ນັກຮຽນເຄົາລົບຄູ<br>ນັກຮຽນລຸກຂຶ້ນລາຍງານຄົນຂາດ<br>ນັກຮຽນນັ່ງຟັງ<br>ນັກຮຽນອອກມາຂຽນສະຫຼະ<br>ນັກຮຽນຕອບ<br>ນັກຮຽນຕອບ | 10′ | ບັດຄຳຖາມ | ສັງເກດຈາກການຂຽນຕົວຈິງຂອງນັກຮຽນ |
| | | ກິນເຝີ ອອກສຽງພະຍັນຊະນະຕົວຫຍັງ?<br>ຊົ່ວໂມງນີ້ຄູພາພວກຫຼານຮຽນກ່ຽວກັບສະຫຼະ ເxິ ເxິ | ນັກຮຽນຕອບ<br>ນັກຮຽນຕອບ | | ບັດຄຳສັບ | ສັງເກດການຕອບຄຳຖາມ |

| | | | | | | |
|---|---|---|---|---|---|---|
| ໃຫ້ນັກຮຽນ<br>ບອກຊື່ຮູບຕ່າງໆ<br>ແລະ ເວົ້າ,<br>ຕອບຄຳຖາມໄດ້<br>ເວົ້າຄຳອື່ນທີ່ມີ<br>ສຽງ ສະຫຼະ ເxິ<br>ເxິ | ວິຊາພາສາລາວ<br>ບົດທີ 34<br>ສະຫຼະ ເxິ ເx<br>ິ | + ຂັ້ນສອນ:<br>ຄູແບ່ງກະດານອອກເປັນສອງສ່ວນເທົ່າກັນ<br>ຄູຂຽນຫົວບົດໃສ້ກະດານ.<br><u>ກິດຈະກຳ</u>: 1 ສົນທະນາກ່ຽວກັບຮູບພາບ, ໃນການ<br>ສົນທະນາຄູໄດ້ເລັງໃສ່ໃຫ້ນັກຮຽນມີສ່ວນຮ່ວມຫຼາຍ<br>ຄູຍົກຮູບພາບໃຫ້ນັກຮຽນສັງເກດ<br>ຄູຖາມນັກຮຽນວ່າ: ນີ້ແມ່ນຫຍັງ?<br>-ລາວເຮັດຫຍັງ? ເຈົ້າເຫັນຫຍັງແດ່?<br>- ເພິ່ນຂາຍເຝີຢູ່ໃສ?<br>ຄູແນະນຳໃຫ້ນັກຮຽນວ່າການຕອບຄຳຖາມຕ້ອງເວົ້າ<br>ເປັນປະໂຫຍກ<br>ຄູສະຫຼຸບຄືນຕໍ່ກັບຄຳຕອບ | ນັກຮຽນສັງເກດຮູບພາບ<br><br>ນັກຮຽນຕອບ<br><br>ນັກຮຽນຕອບ<br><br>ນັກຮຽນຕອບ | 45′ | ບັດຄຳ | ສັງເກດການ<br>ຕອບຄຳຖາມ<br>ຂອງນັກຮຽນ |
| ເພື່ອໃຫ້ນັກຮຽນ<br>ອ່ານອອກສຽງຄຳ<br>ສັບຖືກຕ້ອງ | ເຊີ, ເຝີ, ຂີ້ເຮີ,<br>ເຜີໂຕ | <u>ກິດຈະກຳ</u>: 2 ເຝິກອ່ານຄຳສັບ<br>-ຄູແນະນຳໃຫ້ນັກຮຽນເບິ່ງເນື້ອໃນບົດຫັດອ່ານ<br>-ຄູອ່ານເນື້ອໃນໃຫ້ນັກຮຽນຟັງ 1 – 2 ເທື່ອ<br>-ຄູພານັກຮຽນອ່ານ 2 – 3 ເທື່ອ<br>-ຄູໃຫ້ນັກຮຽນອ່ານເປັນບຸກຄົນ<br>-ຄູຕິດຕາມການອ່ານຂອງນັກຮຽນ<br>-ຄູໃຫ້ນັກຮຽນຕອບ<br>-ຄູສະຫຼຸບດ້ວຍການຖາມວ່າ<br>ເຊີ, ເຝີ, ຂີ້ເຮີ, ເຜີໂຕ ມີສຽງ ແລະ ຄວາມໝາຍຕ່າງ<br>ກັນບໍ?ຕ່າງກັນແນວໃດ? | ນັກຮຽນຟັງຕິດຕາມການອ່ານຂອງຄູ<br><br>ນັກຮຽນອ່ານຕາມຫຼັງຄູ<br><br>ນັກຮຽນອ່ານ<br><br>ນັກຮຽນຕອບ | 45′ | ບັດຄຳ<br>ສັບ | ສັງເກດຈາກການ<br>ເວົ້າຂອງນັກຮຽນ<br><br>ສັງເກດການ<br>ຕັ້ງໃຈຟັງ |

| | | | | | | |
|---|---|---|---|---|---|---|
| ເພື່ອໃຫ້ນັກຮຽນມີບົດຮຽນໃນປຶ້ມຂຽນຂອງໃຜລາວ | | + <u>ສະຫຼຸບ</u>:<br>ຄູ ແລະ ນັກຮຽນພ້ອມກັນສະຫຼຸບບົດຮຽນທີ່ຜ່ານມາ<br>ຄູແນະນຳໃຫ້ນັກຮຽນຈົດເອົາບົດຮຽນໃສ່ປຶ້ມຂຽນ | ນັກຮຽນຈົດເອົາບົດຮຽນ | 10 ນາທີ | | ສັງເກດນັກຮຽນຄວາມສົນໃຈຂອງນັກຮຽນ |
| | | + <u>ວັດປະເມີນ</u>:<br>-ຄູໃຫ້ນັກຮຽນອອກມາເລືອກຄຳສັບທີ່ວ່າ: ເຊີ, ເຝີ, ພູ ຝາ, ກາເຟ, ພໍດີ, ສີຟ້າ, ໄຟ, ຟອຍ , ພ້າ<br>ຕິດໃສ່ກະດານພ້ອມທັງອ່ານໃຫ້ໝູ່ໃນຫ້ອງຟັງ ການອ່ານອອກສຽງພະຍັນຊະນະໃຫ້ຖືກຕ້ອງ ແລະ ແຈ່ມແຈ້ງ ( ຖືກຍ້ອງຍໍ - ຜິດຄູແນະນຳຕື່ມ).<br>- ຕັກເຕືອນ-ມອບວຽກບ້ານ<br>- ຄູແນະນຳນັກຮຽນອ່ານເນື້ອໃນບົດຮຽນ | | 10 ນາທີ | | |

ວັນທີ………/………./……….. ວັນທີ………/………./……….. ວັນທີ…. …../………./………..

ອຳນວຍການໂຮງຮຽນ ວິຊາການໂຮງຮຽນ ຄູປະຈຳວິຊາ

ບົດສອນ: ວິຊາ ພາສາລາວ ປ.2

| ຂໍ້ມູນທົ່ວໄປ: | | | |
|---|---|---|---|
| ຊື່ຄູສອນ:<br>................................ | ຊື່ໂຮງຮຽນ: .................................. | ວິຊາ: ພາສາວລາວ | ຊັ້ນຮຽນ: ປ.2 |
| ບົດທີ: 12 | ເໜືອ ທີ່ມີຕົວສະກົດ ແລະ ໄ◌້ , ◌ໍ, ໆ | ວັນທີ……/……./ ຫາ<br>…../…./….<br>ເວລາ:……………….. | ຈຳນວນນັກຮຽນທີ່ຕ້ອງຝຶກເວົ້າພາສາລາວ:<br>………ຄົນ; ຍິງ…….ຄົນ. |

I. ຈຸດປະສົງ:

.

1. ຈຳແນກ ແລະ ບອກສຽງຂອງສະຫຼະ ເໜືອ ທີ່ມີຕົວສະກົດຄຳສັບທີ່ມີໄມ້ຕີ, ໄມ້ຈັດຕະວາ (ໄ◌້ ◌ໍ) ໝາຍຊ້ຳ (ໆ). ( ຊົ່ວໂມງ: 1-6 ແລະ 9-10 )
2. ຄາດເດົາຄຳສັບໃນບົດເລື່ອງກ່ອນການອ່ານ. ( ຊົ່ວໂມງ: 5-6 ).
3. ຈັດລຽງຄຳສັບໃຫ້ເປັນປະໂຫຍກຄຳຕອບໄດ້. ( ຊົ່ວໂມງ: 3-4 ແລະ 7-8 ).
4. ບອກຊື່ຮູບພາບ ແລະ ພັນລະນາຕາມຮູບພາບໄດ້. ( ຊົ່ວໂມງ: 5-6 ).
5. ອ່ານປະໂຫຍກສັ້ນມີຄຳສັບທີ່ມີສຽງສະຫຼະ ເໜືອ ທີ່ມີຕົວສະກົດ ແລະ ຄຳສັບມີສຽງໄມ້ຕີ, ໄມ້ຈັດຕະວາ (ໄ◌້ ◌ໍ), ໝາຍຊ້ຳ (ໆ). ( ຊົ່ວໂມງ: 1-2ແລະ7-8 ).
6. ອ່ານບົດເລື່ອງໄດ້ຢ່າງຖືກຕ້ອງ, ຖາມ ແລະ ຕອບຄຳຖາມເພື່ອກວດຄວາມເຂົ້າໃຈກ່ຽວກັບບົດອ່ານ. ( ຊົ່ວໂມງ: 1-10 ).
7. ຂຽນບົດພັນລະນາສັ້ນກ່ຽວກັບບ້ານຂອງເຂົາເຈົ້າ. ( ຊົ່ວໂມງ: 5-6 ແລະ 9-10 ).
8. ຂຽນທວາຍໄດ້ຖືກຕ້ອງຕາມຫຼັກໄວຍາກອນ. ( ຊົ່ວໂມງ: 9-10 ).

| II. ການວັດ ແລະ ປະເມີນຜົນການຮຽນ: | |
|---|---|
| ການປະເມີນເພື່ອປັບປຸງການຮຽນ:<br>- ສັງເກດການອອກສຽງຢ່າງຖືກຕ້ອງຂອງນັກຮຽນໃນກິດຈະກຳທີ( 2-3 )ຊົ່ວໂມງທີ 1-2. | ການປະເມີນເພື່ອສະຫຼຸບຜົນການຮຽນໂດຍນຳໃຊ້ເກນການໃຫ້ຄະແນນ:<br>1. ຟັງ ແລະ ເວົ້າ: ໃຊ້ເກນການໃຫ້ຄະແນນຂໍ້ທີ 18 ຢູ່ຊົ່ວໂມງທີ 7.<br>2. ສຽງ ແລະ ຕົວອັກສອນ: ໃຊ້ເກນການໃຫ້ຄະແນນຂໍ້ທີ 2 ຢູ່ຊົ່ວໂມງທີ 3.<br>3. ອ່ານ: ໃຊ້ເກນການໃຫ້ຄະແນນຂໍ້ທີ 5, 6 ຢູ່ຊົ່ວໂມງທີ 7 ແລະ 9.<br>4. ຂຽນ: ໃຊ້ເກນການໃຫ້ຄະແນນຂໍ້ທີ 10, 13 ຢູ່ຊົ່ວໂມງທີ 8  ແລະ 9.<br>5. ນິທານ: ໃຊ້ເກນການໃຫ້ຄະແນນຂໍ້ທີ 25 ຢູ່ຊົ່ວໂມງທີ 6. |

| | |
|---|---|
| - ສັງເກດການຂຽນຂອງຕ້ອງຂອງນັກຮຽນໃນກິດຈະກຳທີ( 4ແລະ9 )ຊົ່ວໂມງທີ 1-2 ແລະ 3-4.<br>- ສັງເກດການຕອບຄຳຖາມ, ການຂຽນບົດຮຽນ, ການຫຼິ້ນເກມ, ເລົ່ານິທານ ແລະ ອ່ານເສີມຂອງນັກຮຽນ. | |

| |
|---|
| ເນື້ອໃນຕົ້ນຕໍ່ຂອງບົດຮຽນ:<br>1. ຄຳສັບມີສຽງສະຫຼະ ເອືອ ທີ່ມີຕົວສະກົດ, ຄຳສັບທີ່ມີສຽງວັນນະຍຸດ xົ, xໍ ແລະ ເຄື່ອງໝາຍ ໆ( ຊົ່ວໂມງ 1-10).<br>- ຄຳສັບມີສຽງສະຫຼະ ເອືອ ທີ່ມີຕົວສະກົດ: **ເຟືອງ, ເຜືອກ, ເລືອດ, ເຮືອນ, ເຫຼື້ອມ**...( ຊົ່ວໂມງ 3-4 ) ກິດຈະກຳທີ 6-8 ແລະ ( ຊົ່ວໂມງ 5-6 )ກິດຈະກຳ 11, .<br>- ຄຳສັບທີ່ມີສຽງວັນນະຍຸດ xົ, xໍ ແລະ ເຄື່ອງໝາຍ ໆ: **ກະປ໋ອງ, ກົບຮ້ອງ ອົບໆ, ໄວໆ, ກ່ອກໆ, ດັງ ກົບໆ, ດິນ ບໍ່ອກ**. (ໃນບົດຮຽນ) ( ຊົ່ວໂມງ 3-4 )ກິດຈະກຳທີ 6-8.<br>2. ຄຳສັບກ່ຽວກັບການພັນລະນາບ້ານ: **ດິນໜຽວ, ຢູ່ໃກ້, ຢູ່ທາງກາງ, ຢູ່ກົງກັນຂ້າມ, ຢູ່ທາງຫຼັງ, ຢູ່ແຄມ, ຫ້ອງການບ້ານ, ໂຮງໝໍ, ໄຟຟ້າ**... ( ຊົ່ວໂມງ 5-6( ກິດຈະກຳທີ 11-12 ) ແລະ 7-8 )ກິດຈະກຳທີ 13-14.<br>3. ການອ່ານປຶ້ມນິທານ ແລະ ປຶ້ມອ່ານເສີມ. ( ຊົ່ວໂມງ 5-6 ) ແລະ ( ຊົ່ວໂມງ 9-10 ). |
| IV. ສື່ການຮຽນ-ການສອນ:<br>1. ປຶ້ມແບບຮຽນ, ປຶ້ມຄູ່ມືຄູ ແລະ ເຈ້ຍ.<br>2. ກ້ອນຫີນນ້ອຍ ແລະ ແກ່ນໝາກໄມ້ທີ່ເປັນເມັດນ້ອຍ.<br>3. ເຊືອກເສັ້ນນ້ອຍ ຫຼື ໄມ້ທີ່ສະອາດ ສຳລັບກິດຈະກຳຈັບຄູ່.<br>4. ແຜ່ນພູມຕົວອັກສອນລາວ, ແຜ່ນພັບອື່ນໆທີ່ມີບົດເລື່ອງ ແລະ ຮູບພາບຕ່າງໆ.<br>5. ຊຸດບັດພະຍັນຊະນະ, ສະຫຼະ, ວັນນະຍຸດ ຂະໜາດໃຫຍ່ ແລະ ຂະໜາດນ້ອຍທີ່ໃຊ້ໃນກິດຈະກຳຕ່າງໆ.<br>6. ປຶ້ມນິທານ ແລະ ປຶ້ມອ່ານເສີມ. |

| |
|---|
| ການຊ່ວຍເຫຼືອນັກຮຽນທີ່ຕ້ອງການຝຶກເວົ້າພາສາລາວ:<br>ຂ້າພະເຈົ້າ ຈະໃຊ້ເວລາໃນການສອນການອອກສຽງຫຼາຍຂຶ້ນໂດຍສະເພາະໃນກິດຈະກໍາທີ 1-3, ກິດຈະກໍາທີ 6-8, ໃນກິດຈະກໍາທີ 11 ຈະໃຊ້ນັກຮຽນທີ່ສາມາດເວົ້າອອກສຽງໄດ້ໃນການຝຶກສອນໃນກຸ້ມເພື່ອຊ່ວຍເຫຼືອກັນ ແລະ ຂ້າພະເຈົ້າຈະສອນນັກຮຽນໃນການອອກສຽງທີຍາກ ແລະ ຄໍາສັບໃໝ່ໃຫ້ເຂົາເຈົ້າ ໂດຍການຝຶກເວົ້າຫຼາຍໆເທື່ອໃນການສອນແຕ່ລະກິດຈະກໍາ ແລະ ສໍາລັບການອ່ານປື້ມນິທານ, ອ່ານເສີມແມ່ນຈະໄດ້ໃຫ້ນັກຮຽນອ່ານເປັນກຸ່ມ ແລະ ຈະໃຫ້ນັກຮຽນທີສາມາອ່ານໄດ້ອ່ານສູ່ກັນຟັງ ແລະ ຝຶກອ່ານໄປພ້ອມກັນ. |
| V. ກິດຈະກໍາການຮຽນ-ການສອນ:<br>**ຊົ່ວໂມງທີ 1-2:** |

| ຂັ້ນຕອນການສນ: | ເວລາ( ນາທີ ) | ກິດຈະກໍາການສອນ |
|---|---|---|
| 1. ຂັ້ນນໍາເຂົ້າສູ່ບົດຮຽນ: | 10 ນາທີ | - ຕິດຕາມຂັ້ນຕອນທີ່ຢູ່ໃນປື້ມຄູ່ມືຄູໃນໜ້າທີ( 152 )ສໍາລັບການຮ້ອງເພງ ແລະ ຫຼິ້ນເກມ( ທວາຍຄໍາສັບໃນຄູ່ມືຄູໜ້າທີ 129 ), ເພື່ອທົບທວນບົດຮຽນໃນບົດທີຜ່ານມາ. |
| 2. ຂັ້ນຈັດກິດຈະກໍາການຮຽນ: | 40 ນາທີ | - ກິດຈະກໍາ 1-2 ແລະ 4( ຂັ້ນຕອນການສອນແມ່ນໃນປື້ມຄູ່ມືຄູໜ້າທີ145 ແລະ ແບບຮຽນໜ້າທີ 83-84).<br>- ຄູທົດສອບຄືນຄວາມເຂົ້າໃຈກ່ຽວກັບການອອກສຽງ ເxຍ,xົວ ທີ່ມີຕົວສະກົດ ຕາມຮູບພາບໃນປື້ມແບບຮຽນ ເພື່ອໃຫ້ນັກຮຽນສາມາດອອກສຽງໄດ້ຢ່າງຖືກຕ້ອງ ກ່ອນຈະຮຽນໃນກິດຈະກໍາໃໝ່; ກິດຈະກໍາທີ 4 ແມ່ນໃຫ້ນັກຮຽນແຕ່ລະຄົນຂຽນຫັດຂຽນງາມເຂົ້າໃນປື້ມຂຽນຂອງຕົນ.. |
| 3. ຂັ້ນຝຶກປະຕິບັດ ແລະນໍາໃຊ້: | 20 ນາທີ | - ກິດຈະກໍາ 3 ແລະ 5( ຂັ້ນຕອນການສອນແມ່ນໃນປື້ມຄູ່ມືຄູໜ້າທີ 145-ແລະ ແບບຮຽນໜ້າທີ 83-84 ).<br>- ທົດສອບຄືນຄວາມເຂົ້າໃຈກ່ຽວກັບການອ່ານ ແລະ ບອກຄໍາສັບທີ່ມີສຽງ ທີ່ມີຕົວສະກົດ ຕາມຮູບພາບໃນປື້ມແບບຮຽນ ເພື່ອໃຫ້ນັກຮຽນສາມາດອ່ານອອກສຽງ, ບອກຄໍາສັບທີ່ມີສຽງ ເxຍ,ໄດ້ຢ່າງຖືກຕ້ອງ; ກິດຈະກໍາທີ 5 ແມ່ນໃຫ້ນັກຮຽນຍິງ ແລະ ຊາຍສາມາດອ່ານ ແລະ ຊອກຄໍາສັບທີ່ອອກສຽງ ເxຍ ໂດຍນໍາໃຊ້ເກມ ຍາດຄໍາສັບ ແລະ ຊ່ວຍນັກຮຽນຊິນເຜີ່າໃນການຟັອງສຽງ. |
| 4. ຂັ້ນສະຫຼຸບ: | 5 ນາທີ | ຂັ້ນຕອນຂອງການສະຫຼຸບແມ່ນຢູ່ໃນປື້ມຄູ່ມືຄູໜ້າທີ 123. |
| **ຊົ່ວໂມງທີ 3-4:** | | |

| | | |
|---|---|---|
| 1. ຂັ້ນນຳເຂົ້າສູ່ບົດຮຽນ: | 5 ນາທີ | - ຂັ້ນຕອນການສອນທີ່ຢູ່ໃນປື້ມຄູ່ມືຄູໃນໜ້າທີ( 145 )ສຳລັບການຮ້ອງເພງ ປະກອບທ່າທາງ ແລະ ທົດສອບຄືນໃນການອ່ານອອກສຽງ ເxຍ, xົວ ໂດຍຄູເປັນຜູ້ຄັດເລືອກຄຳສັບໃຫ້ນັກຮຽນອ່ານ. |
